ປວັດ
ພຣະທາດເຈດີ-ວັດສຳຄັນ
ແລະ
ພຣະຄຣູຍອດແກ້ວໂພນສະເມັກ

ຈັດພິມໂດຍ

ກະຊວງທັມມະການ

໒໕໑໗ - ໑໙໗໔

ປວັດ

ພຣະທາດເຈດີ - ວັດສຳຄັນ

ແລະ

ພຣະຄຣູຍອດແກ້ວໂພນສະເມັກ

ຈັດພິມໂດຍ

ກະຊວງທັມມະການ

ຄຳນຳ

ບູຮານວັດຖຸ ບູຮານສະຖານ ແລະປູຊະນີຍະສະຖານທີ່ສຳຄັນ ໆ ໃນປະເທດລາວ ຫລືທີ່ໄດ້ສ້າງສາບຸຣະນະໂດຍສີມືຂອງບັນພະບຸຣຸດລາວນັ້ນ ປາກົດວ່າມີຢູ່ເປັນອັນມາກ ແຕ່ຍັງບໍ່ທັນເປັນທີ່ຮູ້ຈັກກັນແຜ່ຫລາຍ ທັງນີ້ເນື່ອງຈາກເຮົາບໍ່ໄດ້ຈັດພິມປວັດເຣື່ອງຣາວ ຄວາມເປັນມາຂອງສິ່ງເຫລົ່ານີ້ອອກເຜີຍແຜ່ເທົ່າທີ່ຄວນ.

ໃນບັນດາບູຮານສະຖານເຫລົ່ານີ້ ພຣະທາດຫລວງ ຫລືພຣະເຈດີໂລກະຈຸລາມະນີ ນັບວ່າເປັນປູຊະນີຍະສະຖານທີ່ສຳຄັນ ແລະມີຊື່ສຽງທີ່ສຸດໃນປະເທດລາວ ທາງຣາຊການໄດ້ທຳບຸນສເລີມສລອງເປັນການຄຶກຄື້ນມະໂຫລານທຸກ ໆ ປີ. ປະຊາຊົນທັງຊາວລາວແລະຊາວຕ່າງປະເທດ ໄດ້ຫລັ່ງໄຫລມາຮ່ວມໃນງານບຸນນີ້ຢ່າງຫລວງຫລາຍ ພຣະບາດສົມເດັດພຣະເຈົ້າມະຫາຊີວິດໄດ້ສະເດັດມາປະທັບເປັນອົງປະມຸກໃນງານບຸນນີ້ຕລອດມາທຸກຣຊການ ນັບເປັນບຸນປວັດສາດທີ່ຍິ່ງໃຫຍ່ທີ່ສຸດໃນປະເທດ.

ໂດຍສະເພາະໃນປີນີ້ ບຸນນະມັສການພຣະທາດຫລວງຍິ່ງມີຄວາມໝາຍສຳຄັນກວ່າທຸກປີທີ່ຜ່ານມາ ທັງນີ້ ເນື່ອງຈາກປີນີ້ເປັນປີເຣີ່ມສັກຣາດໃໝ່ແຫ່ງສັນຕິພາບ ປະເທດລາວຊຶ່ງໄດ້ປະສົບພັຍສົງຄາມມາຊ້ຳນານແລ້ວນັ້ນ ຫາກໍ່ຈະໄດ້ມີໂອກາດໄດ້ຊື່ນຊົມກັບສັນຕິພາບແລະຄວາມສງົບສຸກໃນປີນີ້ ພີ່ນ້ອງລາວກຳລັງຊາບຊຶ້ງດີໃຈໃນບາດກ້າວໃໝ່ແຫ່ງປວັດສາດອັນສຳຄັນນີ້ ຕໍ່ໄປກໍຈະໄດ້ພ້ອມພຽງກັນສ້າງສາພັທນາປະເທດໃຫ້ຮຸ່ງເຮືອງສີວິໄລຕໍ່ໄປ.

ເພື່ອເປັນນິມິດເຄື່ອງໝາຍໃນຍຸກເຣີ່ມຕົ້ນແຫ່ງສັກຣາດໃໝ່ ແລະເພື່ອເຜີຍແຜ່ກຽດຕິຄຸນທາງສະຖາປັຕຍະກັມບູຮານຊຶ່ງບັນພະບຸຣຸດລາວໄດ້ສ້າງໄວ້ ເປັນມໍຣະດົກທາງວັທນະທັມເປັນເວລາຫລາຍສັຕວັດມາແລ້ວນັ້ນ ຂ້າພະເຈົ້າ ໃນນາມຣັຖມົນຕີວ່າການກະຊວງທັມມະການ ຈຶ່ງໄດ້ສັ່ງໃຫ້ກົມບູຮານຄະດີ ຊຶ່ງມີໜ້າທີ່ກຳກັບໃນເຣື່ອງບູຮານວັດຖຸສະຖານແລະວັທນະທັມອັນເກົ່າແກ່ຂອງຊາດ ໄດ້ຈັດການຄົ້ນຄວ້າຮຽບຮຽງປວັດພຣະທາດເຈດີແລະວັດວາອາຣາມທີ່ສຳຄັນ ໆ ພິມອອກເຜີຍແຜ່ໃນງານບຸນນະມັສການພຣະທາດຫລວງປີນີ້.

ນອກຈາກປວັດບູຣານສະຖານດັ່ງກ່າວແລ້ວ ຍັງໄດ້ຈັດໃຫ້ຄົ້ນຄວ້າທ້ອນໂຮມເອົາປວັດພຣະເຖຣະອົງສຳຄັນໃນອະດີດອີກອົງນຶ່ງມາຮວມພິມໄວ້ດ້ວຍ ພຣະເຖຣະອົງນີ້ ກໍຄືທ່ານພຣະຄຣູໂພນສະເມັກ ຫລືຍາຄຣູຂີ້ຫອມ ຊຶ່ງເປັນພຣະເຖຣະທີ່ມີຊື່ສຽງໂດ່ງດັງທັງໃນອະດີດແລະປັດຈຸບັນ ພຣະເຖຣະອົງນີ້ ນອກຈາກຈະມີບຸນຍານຸພາບເປັນທີ່ໜ້າອັສຈັນໃນທາງສາສນາແລ້ວ ຍັງມີບົດບາດສຳຄັນໃນການທຳນຸບຳຣຸງປະເທດຊາດບ້ານເມືອງອີກດ້ວຍດັ່ງທ່ານຈະໄດ້ຊາບລາຍລະອຽດຈາກປວັດຂອງທ່ານໃນປຶ້ມຫົວນີ້ແລ້ວ

ຫລັງຈາກໄດ້ປຶກສາຕົກລົງກັນແລ້ວ ທ່ານມະຫາແກ່ນຈັນທນ໌ ທີຣະກຸລ ອະທິບໍດີກົມບູຣານຄະດີ ຜູ້ຮັບຜິດຊອບໃນເຣື່ອງນີ້ ກໍໄດ້ຈັດປະຊຸມມອບໝາຍໃຫ້ທ່ານຜູ້ຊົງຄຸນວຸດທິໄປຈັດການຄົ້ນຄວ້າຮຽບຮຽງຂຶ້ນເທົ່າທີ່ໂອກາດແລະຫລັກຖານຕ່າງໆຈະອຳນວຍໃຫ້.

ການຮຽບຮຽງປວັດທາງບູຣານຄະດີນັ້ນ ຈຳເປັນຕ້ອງໃຊ້ເວລາຄົ້ນຄວ້າສືບສວນແລະພິຈາຣະນາໄຕ່ຕອງຢ່າງລະອຽດຖີ່ຖ້ວນຈຶ່ງຈະຖືກຕ້ອງສົມບູນໄດ້ ແຕ່ເນື່ອງຈາກການເຮັດປຶ້ມຫົວນີ້ ມີເວລານ້ອຍ ເຈົ້າໜ້າທີ່ຜູ້ຈັດທຳຕ້ອງຮີບເຣັ່ງຄົ້ນຄວ້າຮຽບຮຽງຢ່າງກະທັນຫັນ ຈຶ່ງອາດຈະມີຂໍ້ຂາດຕົກບົກພ່ອງຢູ່ເປັນອັນມາກ ສະນັ້ນຫາກທ່ານຜູ້ໃດໄດ້ພົບເຫັນຂໍ້ບົກພ່ອງໃດໆ ກໍຂໍໄດ້ໂຜດໃຫ້ອະພັຍ ແລະຂໍໄດ້ກະຣຸນາໃຫ້ຄຳແນະນຳອັນຈະເປັນປໂຍດແກ່ການຮຽບຮຽງປຶ້ມຫົວນີ້ໃນການຕໍ່ໄປກໍຈະເປັນພຣະຄຸນຢ່າງສູງ ແຕ່ຖ້າຫາກວ່າຈະມີຄຸນຄວາມດີໃດໆ ອັນເກີດຈາກປຶ້ມຫົວນີ້ແລ້ວ ຂ້າພະເຈົ້າຂໍນ້ອມອຸທິດແດ່ດວງວິນຍານຂອງບັນພະບຸຣຸດລາວຜູ້ຮັກຊາດແລະກ້າຫານ ທີ່ໄດ້ອຸສາພຍາຍາມສ້າງວັທນະທັມທາງວັດຖຸແລະທາງຈິດໃຈໄວ້ໃຫ້ເປັນມໍຣະດົກອັນລ້ຳຄ່າແກ່ລູກລາວຫລານລາວສືບມາຈົນເຖິງທຸກວັນນີ້.

ອັນນຶ່ງ ຂ້າພະເຈົ້າຂໍສະແດງຄວາມຊົມເຊີຍທ່ານອະທິບໍດີກົມບູຣານຄະດີ ຕລອດເຖິງເຈົ້າໜ້າທີ່ຜູ້ຄົ້ນຄວ້າຮຽບຮຽງທຸກຄົນ ທີ່ມີສ່ວນເຮັດໃຫ້ປຶ້ມຫົວນີ້ສຳເຣັດເປັນເຫລັ້ມຂຶ້ນມາໄດ້ໂດຍສົມບູນ ແລະຂໍຂອບໃຈຕໍ່ມູນນິທິອາຊີປະຈຳລາວ ທີ່ໄດ້ໃຫ້ການຊ່ວຍເຫລືອເຣື່ອງທຶນຊັບໃນການພິມປຶ້ມຫົວນີ້ໄວ້ນະໂອກາດນີ້ດ້ວຍ.

ວຽງຈັນ, ວັນທີ 12 ຕຸລາ 1974

ຣັຖມົນຕຣີວ່າການກະຊວງທັມມະການ

ມະຫາກຸ ສຸວັນນະເມທີ

ລຳດັບເຣື່ອງ

		ໜ້າ
1.	ປະວັດພຣະທາດຫລວງ	1
2.	ປະວັດພຣະທາດສີໂຄຕບອງ	11
3.	ປະວັດພຣະທາດອິງຮັງ	16
4.	ປະວັດພຣະທາດໂພ່ນ	19
5.	ປະວັດພຣະທາດພນົມ	21
6.	ປະວັດວັດຫໍພຣະແກ້ວ	26
7.	ປະວັດວັດສີສະເກດ	34
8.	ປະວັດວັດສີເມືອງ	46
9.	ປະວັດວັດອິນແປງ	52
10.	ປະວັດວັດອົງຕື້	56
11.	ປະວັດວັດເພັຍວັດແລະວັດຈັນ	60
12.	ປະວັດພຣະຄູໂພນສະເມັກ	64

ພຣະທາດຫລວງ ວຽງຈັນ

ພຣະທາດຫລວງ ວຽງຈັນ

ໂດຍ ຄຳ ຈຳປາແກ້ວມະນີ

ພຣະທາດຫລວງ ເປັນເຈດີທີ່ໃຫຍ່ແລະຈົບງາມທີ່ສຸດ ໃນພຣະຣາຊອານາຈັກລາວ. ສະຖາປັຕຍະກັມແບບທາດຫລວງນີ້ ເປັນສິລປະກັມລາວບູຮານໂດຍແທ້ ເພາະໄດ້ບັນຈຸສິລປະກັມລາວບູຮານໄວ້ຢ່າງຄົບຖ້ວນ ເປັນເໝືອນແວ່ນແຍງໃຫ້ເຮົາເຫັນແບບການກໍ່ສ້າງ ໃນສມັຍເມື່ອ 400 ປີລ່ວງແລ້ວເປັນຢ່າງດີ ນອກນີ້ ຍັງທຳໃຫ້ເຮົາເຂົ້າໃຈຣະບົບການຢູ່ອາສັຍ ໂດຍສະເພາະລັກສນະເມືອງຂອງລາວສມັຍລ້ານຊ້າງ ແລະອັກຂຣະວິທີໃນສມັຍ 400 ປີລ່ວງມາແລ້ວນັ້ນດ້ວຍ.

ພຣະທາດຫລວງ ເປັນບ່ອນທ້ອນໂຮມຈິດໃຈຂອງຄົນລາວທົ່ວປະເທດ ທຸກໆປີປະຊາຊົນລາວທົ່ວທຸກແຫ່ງຈະໄດ້ມາເຕົ້າໂຮມກັນ ເພື່ອສແດງທານບຸນແລະຄວາມມ່ວນຊື່ນ ຈາກບຸນສເລີມສລອງປະຈຳປີ ລະຫວ່າງເດືອນ 12 ເພັງ ເພາະໃນການເຮັດບຸນພຣະທາດຫລວງ ຖືວ່າເປັນປາງບຸນຂອງຫລວງຫລືຂອງຊາດ.

ພຣະທາດອົງນີ້ ຕັ້ງຢູ່ຊານນະຄອນດ້ານຕາເວັນອອກ ຫ່າງຈາກຈຸດສູນກາງທຸຣະກິດການຄ້າ ຂອງນະຄອນຫລວງວຽງຈັນ ປະມານ 4 ກິໂລແມັດ, ເທິງຈ້າຍໂພນໃຫຍ່ ທີ່ໝູ່ບ້ານອັນມີຊື່ວ່າບ້ານທາດຫລວງດຽວນີ້.

ປວັດພຣະທາດຫລວງທາງບູຮານຄະດີ
(ປະມານຄຣິດສັດວັດທີ 6–13)

ເຣື່ອງຣາວຄວາມເປັນມາຂອງພຣະທາດຫລວງນີ້ ມີສ່ວນພົວພັນກັບພຣະທາດພນົມ ແລະພຣະທາດອື່ນໆ ທີ່ສ້າງຂຶ້ນໂດຍຊ່າງລາວບູຮານ ມີຫລັກຖານມາຈາກບ່ອນດຽວກັນ ຄືໜັງສືອຸຣັງຄະທາດ ຫລືອຸຣັງຄະນິທານ ຊຶ່ງເປັນນິທານບູຮານຄະດີຂອງລາວເຣື່ອງນຶ່ງ.

ຕາມໜັງສືອຸຣັງຄະທາດເລົ່າວ່າ ທີ່ຕັ້ງພຣະທາດຫລວງນີ້ ເປັນບ່ອນປະດິສຖານເສົາຫີນຂອງພຣະເຈົ້າອະໂສກມະຫາຣາດ ແຫ່ງປະເທດອິນເດັຽ ເສົາຫີນນີ້ໄດ້ບັນຈຸໄວ້ຊຶ່ງພຣະສາຣີຣິກະທາດຂອງ

ພຣະພຸທເຈົ້າ ທີ່ມີໃນພົງສີອຸຣັງຄະທາດເອີ້ນວ່າ ພອງດັນແທເສືອມ້າ ນອກຈາກນີ້ ຍັງໄດ້ພັນນະນາເຣື່ອງຣາວວ່າ ພຣະພຸທເຈົ້າ ໄດ້ສະເດັດມາຢ້ຽມຢາມສະຖານທີ່ສຳຄັນຕ່າງ ໆ ແລະໄດ້ພຍາກອນທວາຍໄວ້ ຄົງຈະເປັນອຸບາຍຍ່າງນຶ່ງຂອງນັກປຣາດລາວບູຮານ ເພື່ອຊັກຈູງຄວາມເຊື່ອຖືຂອງປະຊາຊົນໃຫ້ເຫັນຄວາມສຳຄັນ ຂອງປູຊະນີຍະສະຖານເຫລົ່ານີ້.

ເຖິງຍ່າງໃດກໍຕາມ ຫລັກຖານທາງບູຮານະຄະດີ ດັ່ງລັກສນະພຣະພຸທຮູບຫີນຈາກທ່າລາດ ພ້ອມດ້ວຍສີລາເລກລາວບູຮານແຜ່ນນຶ່ງ ແລະສິລປະກັມອື່ນ ໆ ພໍສັນນິຖານໄດ້ວ່າ ຍ່າງໜ້ອຍພຣະ–ທາດຫລວງຊຶ່ງຍັງເປັນເສົາຫີນຢູ່ນັ້ນ ຄົງສ້າງຂຶ້ນໃນປະມານສັຕວັດທີ 6 ແຫ່ງຄ.ສ. ຄືສ້າງຂຶ້ນໃນສມັຍອານາຈັກສີໂຄຕບອງ ຫລືສມັຍກ່ອນຂເມນບູຮານ ຈະມີອຳນາດແຜ່ເຂົ້າມາຄອບຄອງແຜ່ນດິນພຣະ–ຣາຊອານາຈັກລາວ ແລະດິນລາວສ່ວນອື່ນ ໆ ດັ່ງນັ້ນ ໃນພົງສີອຸຣັງຄະທາດຈຶ່ງໄດ້ກ່າວວ່າ ພຍາບຸຣິຈັນຜູ້ສ້າງນະຄອນວຽງຈັນ ໄດ້ຮັບຄຳບອກເລົ່າຈາກພຣະເຖຣະຊາວອິນເດັຽວ່າ ທີ່ນີ້ເປັນສະຖານທີ່ສັກສິດ ບ່ອນບັນຈຸພຣະສາຣີຣິກະທາດຂອງພຣະພຸທເຈົ້າທັງຫລາຍ. ສມັຍນັ້ນ ນະຄອນວຽງຈັນເປັນເມືອງຂຶ້ນຂອງເມືອງສີໂຄຕບອງ ຫລືມະຣຸກຂະນະຄອນ (ທ່າແຂກເກົ່າ).

ເມື່ອຄາວສົມເດັດພຣະໄຊຍະເຊດຖາທິຣາດທີ 1 ໄດ້ຍ້າຍເມືອງຫລວງມາຈາກເມືອງທອງ (ຫລວງພຣະບາງ) ມາຕັ້ງວຽງຈັນແທນ ກໍໄດ້ສ້າງເຈດີໃຫຍ່ກວມເສົາຫີນນີ້. ເສົາຫີນທີ່ສົມເດັດພຣະໄຊຍະເຊດຖາທິຣາດຈຶ່ງກໍ່ກວມນີ້ ຄົງແມ່ນພຍາບຸຣິຈັນສ້າງຂຶ້ນ ບັນຈຸພຣະບໍຣົມທາດຂອງພຣະພຸທເຈົ້າຕາມຍ່າງພຣະເຈົ້າອະໂສກມະຫາຣາດແຫ່ງອິນເດັຽ ເຮົາຈະດຶງອາຍຸຂອງພຣະທາດຫລວງ ຂຶ້ນໄປຮອດ 250 ປີ ກ່ອນຄຣິຕສັກຣາດນັ້ນຄົງເປັນໄປບໍ່ໄດ້ ເພາະຕອນນັ້ນ ພຣະພຸທສາສນາແລະວັທນະທັມອິນ–ເດັຽອື່ນ ໆ ຍັງບໍ່ທັນຕັ້ງໝັ້ນຄົງໃນດິນແດນຕອນນີ້ເທື່ອ.

ຄັນຮອດສັຕວັດທີ 6 ແຫ່ງຄ.ສ. ອຳນາດຂເມນບູຮານ ໄດ້ແຜ່ເຂົ້າມາຄອບຄອງດິນແດນຕອນນີ້ ໂດຍມີສູນກາງປົກຄອງຢູ່ທີ່ເມືອງຊາຍຟອງ ຫລື *ໄຊຍະວໍຣະມັນປຸຣະ* ທີ່ນີ້ເພິ່ນໄດ້ຄົ້ນພົບປະຕິມາກັມຮູບໂຄຣົບ ສີມີຂອມຍ່າງຫລວງຫລາຍ ຍ່າງອະນຸສາວະຣີພຣະເຈົ້າໄຊຍະວໍຣະມັນທີ 7 (ຄ.ສ. 1181–1219) ດຽວນີ້ ປະດິສຖານຢູ່ທີ່ວິຫານນ້ອຍ ຂ້າງພຣະທາດຫລວງເບື້ອງເໜືອນີ້ເອງ.

ນອກຈາກນີ້ ກໍແມ່ນພຣະພຸທຮູບຫີນຖ້ຳວັງຊ້າງ ເມືອງໂພນໂຮງ ສັກຣາດບອກວ່າສ້າງຂຶ້ນປະມານ ຄ.ສ. 1002 ໃນຣັຊການຂອງພຣະເຈົ້າສຸຣິຍະວໍຣະມັນທີ 1. ທີ່ໜ້າສົນໃຈທີ່ສຸດກໍແມ່ນສີລາ–ເລກ ເຣື່ອງສ້າງໂຮງພຍາບານທີ່ຊາຍຟອງ ໃນຣັຊການຂອງພຣະເຈົ້າໄຊຍະວໍຣະມັນທີ 7 ຫລັກຖານນີ້ສະແດງວ່າ ວຽງຈັນໄດ້ມອບຄວາມເປັນໃຫຍ່ໃຫ້ແກ່ຊາຍຟອງ ເຣີ່ມແຕ່ທ້າຍສັຕວັດທີ 9 ແຫ່ງ ຄ.ສ.

ແຕ່ວ່າເຣື່ອງຣາວພຣະທາດຫລວງ ບໍ່ມີຫລັກຖານໃດກ່າວໄວ້ໃຫ້ແຈ່ມແຈ້ງ ໃນສມັຍຂເມນບູຮານມີອຳນາດນັ້ນ ມີແຕ່ບອກເລົ່າສືບໆ ກັນລົງມາຈົນຮອດສັຕວັດທີ 14 ສມັຍທີ່ລາວອານາຈັກລ້ານຊ້າງມີອຳ–ນາດຂຶ້ນແທນຂເມນບູຮານ ພຣະມະຫາປາສມັນຕະເຖຣະ ຫົວໜ້າທັມມະທູດຂເມນ ໄດ້ເດີນທາງມາເຜີຍແຜ່ພຣະພຸທສາສນາ ນິກາຍເຖຣະວາດສາຍລັງກາ ເມື່ອ ຄ.ສ. 1359 ໃນຣັຊການພຍາຟ້າງູ່ມ ລະຫວ່າງພັກຢູ່ວຽງຈັນ ທ່ານກ່ອວ່າ:

"ອັນທີ່ປາກປາສັກທັ້ນ ເຈົ້າຣັດສີທັງຫລາຍ ໄດ້ໝາຍຫລັກໄມ້ຈັນໄວ້ທີ່ນີ້ແລ *ອັນທີ່ສະໂພນສູງ ເບື້ອງຕາເວັນອອກຂ້າງໜອງກະແດນມາກ້ຳຕາເວັນຕົກ ເຈົ້າຣັດສີເອົາຫລັກຫີນອັນນຶ່ງເປັນສີ່ລ່ຽມໝາຍໄວ້ ແຕ່ທາດພຣະເຈົ້າທັງສີ່ພຸ້ນມາ*".

ເນື້ອຄວາມທີ່ກ່າວມານີ້ ມີຜາກົດໃນນິທານຂຸນບຸຣົມ ສະບັບພຣະມະຫາເທພຫລວງ ອົງທັມມະເສນາ ໃນຣັຊການພຍາວິຊູນ (ຄ.ສ. 1500–1520).

ໃນໜັງສືອຸຣັງຄະທາດ ກໍ່ມີເນື້ອຄວາມທຳນອງດຽວກັນວ່າເປັນເສົາຫີນ "ໝາຍເອົາແຕ່ພຣະທາດຂອງພຣະເຈົ້າທັງ 4 ຕົນພຸ້ນ ເປັນຕົ້ນວ່າ ພຣະກຸກກຸສັນໂທ, ພຣະໂກນາຄົມ, ພຣະກັສປະເຈົ້າ ມາໃສ່ສິ່ງດຳຕົວນຶ່ງ ອະທິດຖານທາດຈຶ່ງເອົາຫລັກຫີນໝາຍໄວ້ ອັນນີ້ຫາກເປັນພຣະພຸທເຈົ້າທັງ 4 ພຣະອົງດີຫລີແລ" ຄຳວ່າເສົາຫີນໝາຍໄວ້ນັ້ນ ຄົງແມ່ນເສົາຫີນທີ່ສົມເດັດພຣະໄຊຍະເຊດຖາທິຣາດ ໄດ້ສ້າງທາດໃຫຍ່ກໍ່ກອມໄວ້ເປັນພຣະທາດຫລວງປັດຈຸບັນ.

ພຣະທາດຫລວງທາງປວັດສາດ
(ຄ.ສ. 1566–1873)

ຫ້າມຈຳໜ່າຍ

ພຣະທາດຫລວງຜາກົດຫລັກຖານແຈ້ງຄັກ ເຣີ່ມຕົ້ນແຕ່ສັຕວັດທີ 16 ກ່າວຄື ໃນຣັຊການຂອງສົມເດັດພຣະໄຊຍະເຊດຖາທິຣາດນີ້ເອງ ເນື້ອຄວາມສີລາເລກບອກໄວ້ວ່າ ສົມເດັດພຣະໄຊຍະ–ເຊດຖາທິຣາດໄດ້ຊົງສ້າງຂຶ້ນ ເມື່ອຈຸລສັກຣາດ 928 (ຄ.ສ. 1566) ຫລັງຈາກສະຖາປະນາວຽງຈັນເປັນເມືອງຫລວງ 6 ປີ.

ເຫດທີ່ຊົງສ້າງພຣະທາດຫລວງ

ສາເຫດທີ່ສົມເດັດພຣະໄຊຍະເຊດຖາທິຣາດຊົງສ້າງພຣະທາດຫລວງນີ້ ພໍສັນນິດຖານໄດ້ດັ່ງນີ້:

1. ຊົງປາຖນາຢາກໃຫ້ນະຄອນຫລວງຂອງພຣະອົງ ມີປູຊະນີຍະສະຖານອັນຍິ່ງໃຫຍ່ ແລະ

ເປັນມິ່ງຂວັນຂອງນະຄອນຫລວງ ເໝືອນເຈດີຫລວງແຫ່ງນະຄອນຊຽງໃໝ່.

2. ຊົງປາຖນາຢາກອຸປຖັມບຳຣຸງພຣະພຸທສາສນາ ຕາມຢ່າງພຣະເຈົ້າຕິໂລກຣາດ ແຫ່ງນະຄອນຊຽງໃໝ່ ຫລືເໝືອນພຣະເຈົ້າອະໂສກມະຫາຣາດແຫ່ງອິນເດັຽ.

3. ຊົງປາຖນາເປັນພຣະໂພທິສັດ ເພື່ອຕັສຮູ້ເປັນພຣະພຸທເຈົ້າໃນອະນາຄົດ.

4. ຊົງປາຖນາຢາກໃຫ້ມີປາງບຸນປະຈຳປີ ເພື່ອເປັນນະໂຍບາຍເບິ່ງນ້ຳໃຈຂອງເຈົ້າຄອງນະຄອນຕ່າງໆ ວ່າຜູ້ໃດຄົດແລະຊື່ສັດຕໍ່ພຣະອົງ ແທນພິທີລ້ຽງຜີຟ້າຜີແຖນແຕ່ກ່ອນ ຊຶ່ງພຍາຟ້າງຸ່ມແລະກະສັດອົງອື່ນໆ ເຄີຍກະທຳມາເປັນປະຈຳ.

5. ຊົງປາຖນາຢາກໃຫ້ປະຊາຣາສດອນ ຈາກທຸກສ່ວນໃນອານາຈັກຂອງພຣະອົງ ມາເຕົ້າໂຮມສແດງບຸນແລະຄວາມມ່ອນຊື່ນຮ່ອມກັນ ຈະໄດ້ຮັກແພງແລະເຂົ້າໃຈກັນດີຂຶ້ນ ເພື່ອອານາຈັກຂອງພຣະອົງຈະໄດ້ເປັນປຶກແຜ່ນແໜ້ນໜາ.

ດັ່ງນັ້ນ ຈຶ່ງໄດ້ຊົງພິຈາຣະນາເຫັນວ່າ ຫລັກຫີນຂ້າງທິດຕາເວັນອອກຂອງພຣະນະຄອນ ຄື ພຣະທາດຫລວງປັດຈຸບັນ ເປັນບ່ອນສຳຄັນທາງພຣະພຸທສາສນາມາແຕ່ເກົ່າກ່ອນ ແລະເປັນບ່ອນບັນຈຸພຣະສາຣີຣິກະທາດຂອງພຣະພຸທເຈົ້າ ຈຶ່ງໄດ້ພາໄພ່ພົນສ້າງເຈດີໃຫຍ່ກວມຫລັກຫີນນັ້ນຂຶ້ນ ໂດຍໃຫ້ເຈດີນັ້ນມີຣູບຮ່າງເໝືອນສະຖູບສານຈີ ແຫ່ງເມືອງເວທິສະປະເທດອິນເດັຽ ແຕ່ປະດັບຕົກແຕ່ງດ້ວຍສິລປະກັມລາວລ້ວນ ເນື່ອງຈາກພຣະອົງຊົງປາຖນາໂພທິຍານ ຈຶ່ງໄດ້ມີແນວຄິດສ້າງທາດນ້ອຍຮອດ 30 ໜ່ວຍເປັນບໍຣິວານ ຊຶ່ງໝາຍເຖິງພຣະປາຣະມີ 30 ທັດ. ພາຍໃນພຣະທາດນ້ອຍໆເຫລົ່ານີ້ ໄດ້ເອົາຄຳຫລໍ່ເປັນອົງທາດນ້ອຍອີກ ມີຈຳນວນເທົ່າກັນ ມີນ້ຳໜັກໜ່ວຍລະ 4 ບາດ ບັນຈຸໄວ້ພາຍໃນພຣະທາດນ້ອຍເຫລົ່ານັ້ນ ແລະມີລານຄຳຮອງຮັບພຣະທາດຄຳນ້ອຍໆ ນັ້ນອີກຕື່ມ ລານຄຳນີ້ຈາຣຶກຫົວໃຈພຣະທັມ ຫລືຫົວໃຈອະຣິຍະສັດ 4 ຄື: "ເຍ ທັມມາ ເຫຕຸປປະພະວາ ເຕສັງ ເຫຕຸງ ຕະຖາຄະໂຕ ເຕ ສັນຈະ ໂຍ ນິໂຣໂທ ຈະ ເອວັງ ອາທີ ມະຫາສະມະໂນ" ແລະໄດ້ຈາຣຶກຊື່ພ້ອມທັງປີສ້າງໄວ້ທີ່ແຜ່ນຫີນດ້ວຍ.

ເມື່ອສ້າງເສັດແລ້ວໄດ້ຖວາຍພຣະນາມວ່າ "ເຈດີໂລກະຈຸລາມະນີ" ໝາຍຄວາມວ່າ ເຈດີເກດແກ້ວໃນໂລກມະນຸດ ຫລືໝາຍຄວາມວ່າເຈດີແກ້ວຍອດໂລກ ດັ່ງພາກົດໃນສິລາເລກນັ້ນ ເນື່ອງຈາກພຣະທາດອົງນີ້ ເປັນຂອງແຜ່ນດິນຫລືຂອງຫລວງ ແລະກໍເປັນທາດໃຫຍ່ດ້ວຍ ປະຊາຊົນຈຶ່ງເອີ້ນວ່າພຣະທາດຫລວງ ເຫດວ່າພຣະທາດຫລວງທີ່ຫລວງພຣະບາງກໍມີ ຈຶ່ງໄດ້ນາມວ່າທາດຫລວງວຽງຈັນ. ພຣະອົງໄດ້ຈັດປາງບຸນສເລີມສລອງທຸກໆປີ ເລີຍກາຍເປັນປະເພນີ ທີ່ພຣະເຈົ້າແຜ່ນດິນອົງຕໍ່ໆມາ ປະຕິບັດຕາມຕລອດຈົນຮອດສມັຍປັດຈຸບັນນີ້.

ພຣະທາດຫລວງວຽງຈັນ ຜາກົດໄປຮອດນານາປະເທດທີ່ຢູ່ຫ່າງໄກ ໃນຣັຊການຂອງສົມເດັດພຣະເຈົ້າສຸຣິຍະວົງສາທັມມິກະຣາດ ພຣະມະຫາກະສັດຜູ້ຍິ່ງໃຫຍ່ອົງສຸດທ້າຍຂອງອານາຈັກລ້ານຊ້າງ ດັ່ງຜາກົດໃນຂໍ້ບັນທຶກຂອງທ່ານ ວຸສຕັອບ ຣາຊທູດຂອງຂ້າຫລວງໃຫຍ່ປະເທດຮໍລັນດາ ປະຈຳດອນຈະວາ ປະເທດອິນດູເນເຊັຽ ທ່ານຜູ້ນີ້ໄດ້ມາຍັງຣາຊສຳນັກ ຂອງສົມເດັດພຣະເຈົ້າສຸຣິຍະວົງສາທັມມິ–ກະຣາດ ຂໍ້ບັນທຶກລົງວັນທີ 16 ເດືອນໂນວອມ 1641 ມີໃຈຄວາມຕອນນຶ່ງທີ່ກ່ຽວກັບທາດຫລວງວ່າ:

"ພວກເຮົາຖືກພາໄປເຝົ້າພຣະເຈົ້າແຜ່ນດິນ ເພື່ອຖວາຍສານໃນສະຖານແຫ່ງນຶ່ງ ຫ່າງຈາກນະຄອນປະມານນຶ່ງສ່ວນສີ່ຂອງໄມ ຯລຯ ພວກເຮົາໄດ້ເຂົ້າເຝົ້າພຣະອົງທີ່ພະລານກວ້າງໃຫຍ່ ຊຶ່ງພາຍໃນພະລານນີ້ ມີອະນຸສາວະຣີໃຫຍ່ສູງພ່ອຍນຶ່ງ ມີກຳແພງຫີນອັນປະດັບດ້ວຍໃບສີມາແອດລ້ອມ ອະນຸສາວະຣີແຫ່ງນີ້ ໂອບດ້ວຍແຜ່ນຄຳ ມີສີເຫລືອງງາມຕາ ແຜ່ນຄຳນີ້ຈະຕ້ອງມີຄ່າຮອດ 1000 ຫຣຽນຄຳ (ປອນ) ປະຊາຊົນຕ່າງກໍຖືດອກໄມ້ທູບທຽນ ເຂົ້າໄປບູຊາສະຖານທີ່ສັກສິດແຫ່ງນີ້ ບໍ່ມີຜູ້ໃດເຂົ້າໄປໂດຍມືເປົ່າເລີຍ ຯລຯ.

ພຣະທາດຫລວງໃນສມັຍຫລັງຈາກ ສົມເດັດພຣະເຈົ້າສຸຣິຍະວົງສາທັມມິກະຣາດ

ແມ່ນວ່າຈະບໍ່ມີຫລັກຖານຜາກົດ ແຕ່ກໍເຂົ້າໃຈວ່າ ພຣະມະຫາກະສັດທຸກໆພຣະອົງ ຜູ້ຄອງອານາຈັກລ້ານຊ້າງວຽງຈັນ ແລະປະຊາຣາສດອນ ຍັງເອົາໃຈໃສ່ບົວຣະບັດຮັກສາ ພ້ອມທັງຈັດປາງບຸນຫລວງສເລີມສລອງປະຈຳປີ. ໂດຍສະເພາະໃນຣັຊການຂອງ ສົມເດັດພຣະໄຊຍະເຊດຖາທິຣາດທີ 3 (ພຣະເຈົ້າອະນຸ) ແລ້ວຄົງຈະມີປາງບຸນສເລີມສລອງເປັນພິເສດ ເພື່ອປຸກໃຈປະຊາຣາສດອນ ໃຫ້ເປັນນ້ຳນຶ່ງໃຈດຽວໃນການກູ້ເອກຣາດ ຈາກຄວາມເປັນເມືອງຂຶ້ນຂອງອານາຈັກສຍາມ. (ຄ.ສ. 1804 –1829) ພົ້ນຣັຊການນີ້ ວຽງຈັນກໍເສົ້າສູນ ບ້ານເມືອງຖືກທຳລາຍໂດຍການຈູດເຜົາຈາກຂ້າເສິກ ພຣະທາດຫລວງກໍຖືກປະປ່ອຍໄວ້ຕາມຍະຖາກັມ ບໍ່ມີຜູ້ໃດເອົາໃຈໃສບົວຣະບັດຮັກສາ. ພຣະທາດອົງນີ້ກໍຜຸພັງໄປເອງໂດຍທັມມະຊາດ ມີເຄືອໄມ້ແລະຕົ້ນໄມ້ເກີດປົກຄຸມ ພະລານອ້ອມພຣະທາດກໍຮົກເຮື້ອກາຍເປັນປ່າຊ້າງດົງເສືອ ດັ່ງຈະເຫັນໄດ້ຈາກຂໍ້ບັນທຶກຂອງທ່ານດູ ດຣາ ເດີ ລາແກ ຫົວໜ້າຄນະສຳສຳຣວດຊາວຝຣັ່ງເສດ ໄດ້ມາຢ້ຽມຢາມນະຄອນຮ້າງວຽງຈັນ ເມື່ອປີ ຄ.ສ. 1867 ລຸນຫລັງວຽງຈັນຖືກເຜົາຜານພຽງ 35 ປີ ກ່ຽວກັບສະພາບຂອງພຣະທາດຫລວງ ທ່ານໄດ້ກ່າວວ່າ:

"ມີແລວທາງກວ້າງແລະຊື່ເສັ້ນນຶ່ງ ຊຶ່ງປົກຄຸມໄປດ້ວຍຕົ້ນໄມ້ ຕັດຜ່ານທົ່ງທີ່ເຕັມໄປດ້ວຍ

ບອກພອງໄປຫາປະຕູໃຫຍ່, ເຂົ້າໃຈວ່າຄົງຈະແມ່ນຄູເມືອງມາແຕ່ກ່ອນ, ຍັງມີທາງອີກເສັ້ນນຶ່ງປູດ້ວຍຫີນແລະຊາຍ ມີແຕ່ກໍໄຜ່ເກີດເຕັມເລາະໄປຕາມຄູນັ້ນ ທຸກ ໆ ກ້າວພວກເຮົາໄດ້ພົບຮ່ອງຮອຍ (ຊາກ) ຂອງກຳແພງຫລາຍແຫ່ງ ເຂົ້າໃຈວ່າເປັນວັດຮ້າງ ໃນຂນະທີ່ຜ່ານໄປໄດ້ພົບທາດໜ່ອຍນ້ອຍ ໆ ຫລາຍບ່ອນ. ພວກເຮົາຍ່າງໄປເລື້ອຍ ໆ ຈົນຮອດອະນຸສາວະຣີໃຫຍ່ໜ່ອຍນຶ່ງ ຊຶ່ງເປັນສະຖາປັດຕຍະກັມຊັ້ນຍອດຂອງລາວ ເຖິງແມ່ນຈະບໍ່ພົ້ນຄົງຫລືບໍ່ສງ່າໂອ່ໂຖງ ແຕ່ກໍບໍ່ມີໃຜຫານປະຕິເສດຄວາມງາມອັນອ່ອນຊ້ອຍຂອງມັນໄດ້. ອະນຸສາວະຣີນີ້ມີພຽງແຫ່ງດຽວ ທີ່ບໍ່ໄດ້ຖືກທຳລາຍຈູດເຜົາໂດຍກອງທັບສຍາມ. ກຳແພງສອງຊັ້ນເບື້ອງລຸ່ມ ຜາກົດວ່າບໍ່ເປັນທີ່ໜ້າສົນໃຈ. ແຕ່ວ່າກຳແພງຊັ້ນສາມນັ້ນ ປະດັບຕົກແຕ່ງດ້ວຍລິງລາຍຮວດດອກໄມ້ກຳລັງບານ ຊຶ່ງມີຮູບຮ່າງເໝືອນປາກໝໍ້, ລິງລາຍດອກໄມ້ນີ້ໄດ້ໂອບອ້ອມເຕົ້າອະນຸສາວະຣີໄວ້. ລາຍຮວດດອກໄມ້ເຫລົ່ານີ້ ມີລັກສນະເໝືອນກາບດອກບົວຫລວງ ເບິ່ງຄືດອກບົວແທ້ ມີປ້ອມນ້ອຍ ໆ ຫລາຍໜ່ອຍຕັ້ງຢູ່ເທິງແທ່ນອັນແໜ້ນໜາ ຊຶ່ງເຕັມໄປດ້ວຍລາຍຈາຣຶກ.

ປ້ອມນ້ອຍ ໆ (ທາດນ້ອຍ) ມີຮອດ 32 ໜ່ອຍ ທີ່ຕັ້ງຢູ່ຕິດກັບແທ່ນອັນແໜ້ນໜານັ້ນ ເໝືອນກັບວ່າກຳລັງພຸດເປັນຊໍ່ຟ້າຂຶ້ນມາ. ພວກເຮົາບໍ່ສາມາດຈະຊົມໃຫ້ຕລອດໄດ້, ຍອດອະນຸສາວະຣີນັ້ນພຸ່ງຂຶ້ນແທງຟ້າ ເໝືອນກັບຊໍ່ດອກໄມ້ທີ່ຊູອອກຈາກກ້ານໃບໄມ້ໃຫຍ່ ຍອດອະນຸສາວະຣີນີ້ສ້ອຍແລະແຫລມຂຶ້ນໄປເທິງ ມີຄວາມງົດງາມເປັນພິເສດ, ຖ້າຈະພັນນະນາໄປກໍຍືດຍາວ ເຖິງຢ່າງໃດກໍຕາມຍອດອະນຸສາວະຣີແລະປ້ອມນ້ອຍ ໆ ນັ້ນ (ຍອດພຣະທາດໃຫຍ່ແລະທາດນ້ອຍ) ໄດ້ພຸ່ງຂຶ້ນສູງພົ້ນຕົ້ນໝາກຕົ້ນພ້າວ ແລະມີກະດິ່ງຢູ່ພາຍໃຕ້ຮົ່ມຕົ້ນໄມ້ທັງຫລາຍ.

ທ່ານຟຣັງຊິດ ການິເອ ສະມາຊິກຄະນະສຳຣວດດຽວກັນ ໄດ້ບັນທຶກ ກ່ຽວກັບພຣະທາດຫລວງ ດັ່ງນີ້ :

"ພວກເຮົາໃຊ້ເວລາປະມານ 45 ນາທີ ກໍມາຮອດອະນຸສາວະຣີ ຊຶ່ງເປັນວິຫານທີ່ມີຊື່ສຽງທີ່ສຸດແຫ່ງນຶ່ງຂອງເມືອງລາວ ແທ່ນທີ່ຕັ້ງຂອງອະນຸສາວະຣີໜ່ອຍກາງ (ທາດໃຫຍ່) ເປັນຮູບ 4 ລ່ຽມ ຍອດອະນຸສາວະຣີນັ້ນ ກົມເໝືອນກັບອະນຸສາວະຣີອື່ນ ໆ ທີ່ໄດ້ເຫັນໃນປະເທດຂເມນ, ແທ່ນອະນຸສາ–ວະຣີມີສອງຖານຕັ້ງຊ້ອນກັນ ທີ່ຖານເທິງມີທີ່ຄອຍນ້ອຍ ໆ (ທາດນ້ອຍ) ແວດລ້ອມເຕົ້າອະນຸສາວະຣີ 28 ໜ່ອຍ ທີ່ຖານມີບັນໄດຂຶ້ນສອງຂ້າງ ຄືດ້ານເໜືອແລະດ້ານໃຕ້ ທີ່ຖານລຸ່ມເບື້ອງຕາເວັນອອກມີຫໍສງ່າງາມຫລັງນຶ່ງ ປຸກກອນອະນຸສາວະຣີນ້ອຍໜ່ອຍນຶ່ງ ສູງ 3 ຫລື 4 ແມັດ ຊາວບ້ານບອກວ່າອະນຸ–

ສາວະຣີພ່ອຍນີ້ ເປັນປູຊະນີຍະສະຖານທີ່ແທ້ຈິງ ຟອກດ້ວຍຄຳປືວ ຜູ້ວ່າຣາຊການເມືອງພອງຄາຍຄົນປັດຈຸບັນ ໄດ້ມີສ່ວນຮັບຜິດຊອບໃນການສ້ອມແປງ ອະນຸສາວະຣີພ່ອຍໃຫຍ່ຂຶ້ນໃໝ່ ໂດຍໃຊ້ຈ່າຍເງິນຫລາຍກວ່າ 1000 ແພັນ (70 ເຖິງ 80 ພັນຟຣັງຝຣັ່ງເສດ).

ມີພະລານກວ້າງອ້ອມຮອບຕີນອະນຸສາວະຣີ ແລະມີກະໄດອອກທັງ 4 ດ້ານ. ມີກະດີສົງຫລາຍຫລັງອ້ອມເດີ່ນທາດນອກອະນຸສາວະຣີ. ພຣະສົງຜູ້ຈຳພັນສາທີ່ນີ້ເອງ ເປັນຜູ້ປົວຣະບັດຮັກສາອະນຸສາວະຣີແຫ່ງນີ້ ແລະວັດອື່ນ ໆ ດ້ວຍ.

ເບື້ອງຂວາທາງປະຕູອອກທິດຕາເວັນອອກ ມີສິລາເລກຫລັກນຶ່ງ ບອກເຣື່ອງຣາວຂອງການສ້າງອະນຸສາວະຣີແຫ່ງນີ້ ໃນຕົ້ນສັຕວັດທີ 16.

ໃນປີ ຄ.ສ. 1873 ພວກໂຈນຫໍ້ຈາກຢູນານປະເທດຈີນ ໄດ້ເຂົ້າມາມ້າງເພພຣະທາດຫລວງອີກ ພວກເຂົາໄດ້ຊອກຂົນເອົາຂອງມີຄ່າໄປໝົດ ພຣະທາດຫລວງກໍໄດ້ຮັບຄວາມເສັຽຫາຍລົງຕື່ມ.

ພຣະທາດຫລວງໃນສມັຍຝຣັ່ງເສດ

(ຄ.ສ. 1893–1949)

ພຣະຣາຊອານາຈັກລາວ ໄດ້ຕົກເປັນເມືອງຂຶ້ນຂອງຝຣັ່ງເສດ ເຣີ່ມແຕ່ປີ ຄ.ສ. 1893 ຄັນຝຣັ່ງເສດໄດ້ປົກຄອງເມືອງລາວແລ້ວ ຣາຊການຝຣັ່ງເສດກໍໄດ້ຄົ້ນຄວ້າຫາບູຣານວັດຖຸ ແລະບູຣານສະຖານທີ່ວອີນດູຈີນຝຣັ່ງເສດ.

ສຳລັບເມືອງລາວໃນປີ ຄ.ສ. 1900 ທ່ານໂມຣັງ ຂ້າຫລວງໃຫຍ່ຝຣັ່ງເສດປະຈຳວຽງຈັນໄດ້ສ້າງຍອດພຣະທາດແບບທໍ່ຄອຍນໍ່ແມນຂຶ້ນແທນຍອດເກົ່າ ຊຶ່ງເປັນຍອດແຫລມເໝືອນໝາກນ້ຳເຕົ້າປົ່ນປາຍລົງ.

ຕາມຣາຍງານຂອງທ່ານເຣັມຣີ ປາມັງເຈ ລົງວັນທີ 23 ເມສາ 1912 ກ່າວວ່າ ໃນຈຳນວນທາດນ້ອຍ 30 ໜ່ອຍ ຂາດຫາຍໄປ 8 ໜ່ອຍ ໄດ້ສັງເກດເຫັນວ່າກົມມະລຽນ ຫລືວິຫານຄົດອ້ອມພຣະທາດເພໂຢດລົງເກືອບໝົດ ອົງພຣະທາດເອງໄດ້ຖືກລົມໃຫຍ່ພັດເພໂຢດລົງຄືກັນ.

ໃນປີ ຄ.ສ. 1920 ທ່ານຈູເລດບອດ ຂ້າຫລວງໃຫຍ່ຝຣັ່ງເສດປະຈຳປະເທດລາວ ໄດ້ສເນີໃຫ້ທຳການສ້ອມແປງພຣະທາດຫລວງຂຶ້ນ ທ່ານໄດ້ໃຫ້ຄຳແນະນຳວ່າ ຖ້າບໍ່ຟ້າວລົງມືສ້ອມແປງໂດຍໄວ ພຣະທາດອົງນີ້ຈະຕ້ອງໂຢດເພລົງໝົດ ຈົນບໍ່ມີສ່ວນໃດເຫລືອ.

ໃນປີ ຄ.ສ. 1930 ທ່ານພົມແບັກໂຕ ເຈົ້າໜ້າທີ່ຮັກສາອະນຸສາວະຣີທາງປອັດສາດ ໄດ້ຮັບ

ການແຕ່ງຕັ້ງໃຫ້ເປັນຜູ້ທຳການສ້ອມແປງພຣະທາດຫລວງ ທ່ານໄດ້ລົງມືເຮັດໂລດສ້ອມແປງແລ້ວເສັດເມື່ອປີ ຄ.ສ. 1935 ສິ່ງສຳຄັນທີ່ໄດ້ຮັບການສ້ອມແປງໃໝ່ແມ່ນ

1. ກົມມະລຽນ ພ້ອມທັງກຳແພງແລະປະຕູທັງ 4 ດ້ານ.
2. ຫໍໄຫວ້ທຸກ ໆ ດ້ານ.
3. ເຕົ້າພຣະທາດໄດ້ຄົງໄວ້ຄືເກົ່າ ແຕ່ເຮັດໃຫ້ໝັ້ນຄົງຂຶ້ນກວ່າເດີມ,
4. ຍອດພຣະທາດໃຫຍ່ໄດ້ສ້າງຂຶ້ນໃໝ່ແທນ ແຕ່ຮັກສາຮູບຮ່າງເກົ່າໄວ້.

ພຣະທາດຫລວງສມັຍເອກຣາດ

(ຄ.ສ. 1949 ຮອດສມັຍປັດຈຸບັນ)

ເມື່ອລາວເຮົາໄດ້ເອກຣາດໂດຍສົມບູນແລ້ວ ກໍໄດ້ຫັນມາເອົາໃຈໃສ່ອຸປຖັມບຳຣຸງພຣະພຸທສາສນາຊຶ່ງເປັນສາສນາປະຈຳຊາດ ໄດ້ມີໂຄງການສ້ອມແປງປູຊະນີຍະສຖານທົ່ວປະເທດ ໂດຍສະເພາະເພື່ອຕ້ອນຮັບປາງບຸນສເລີມສລອງ ພ.ສ. 2500 (ຄ.ສ. 1957) ບຸນສເລີມສລອງເປັນທາງການໄດ້ກະເອົາພຣະທາດຫລວງເປັນຈຸດສູນກາງ ເພື່ອຈະໃຫ້ສົມກຽດແກ່ປະເທດ ທາງຣັຖບານຈຶ່ງໄດ້ກະງົບປະມານຂອງຊາດອອກໃຊ້ຈ່າຍໃນການສ້າງສິ່ງສຳຄັນຂຶ້ນໃນບໍຣິເວນພຣະທາດຫລວງ ແລະດັດແປງເດີ່ນພຣະທາດໃຫ້ກວ້າງຂວາງອອກໄປອີກ ເພາະຕອນນັ້ນມີແຕ່ປ່າໄມ້.

ສິ່ງກໍ່ສ້າງຕ້ອນຮັບ ພ.ສ. ໒໕໐໐

1– ມະຫາກະຖິໃຫຍ່ 1 ຫລັງ
2– ຫໍທັມມະສະພາໃຫຍ່ 1 ຫລັງ
3– ຟອກຄຳປ້ອຍອດພຣະທາດໃໝ່.

ຄັນຮອດ ພ.ສ. 2500 ກໍໄດ້ທຳບຸນສເລີມສລອງເປັນການໃຫຍ່ ດັ່ງທີ່ຜ່ານມາແລ້ວ.

ລັກສນະພຣະທາດຫລວງປັດຈຸບັນ

໑. ລັກສນະໂດຍທົ່ວໄປ

– ມີຮູບຮ່າງເໝືອນໂອຂ້ອ ຫລືພາກໂມຜ່າເຄິ່ງງ່ຳໄວ້ເທິງແທ່ນຮູບ 4 ລ່ຽມຕາມ

ຢ່າງສະຖູບສານຈີ ແຫ່ງປະເທດອິນເດັຽ.

– ຍອດພຣະທາດເປັນສິລປະລາວແທ້ ມີລັກສນະເປັນດອກບົວຈູມ ຫລືດວງປີຣູບ 4 ລ່ຽມ.

– ມີທາດນ້ອຍຍອດແຫລມອົງແວດລ້ອມເປັນບໍຣິວານ.

– ຖັດລົງມາແມ່ນກຳແພງສອງຖ້ານ ຊຶ່ງປະດັບດ້ວຍໃບສີມາ ຫລຽວເບິ່ງຄືກຳແພງພຣະຣາຊວັງແວດລ້ອມຜາສາດ ແລະຫໍໂຮງຂອງພຣະເຈົ້າແຜ່ນດິນ ເຂົ້າໃຈວ່າສ້າງຂຶ້ນຕາມອຸດົມຄະຕິພຣະຣາຊວັງລາວບູຮານ.

– ວັດຖຸສຳລັບກໍ່ສ້າງ ໃຊ້ດິນຈີ່ຖືປູນບາງສ່ວນໃຊ້ຫີນແລງ ໂດຍສະເພາະເຕົ້າພຣະທາດໃຫຍ່ສ້າງດ້ວຍຫີນແລງລ້ວນ.

໔. *ຖ້າຈະແບ່ງສ່ວນຂອງພຣະທາດອອກໂດຍຣະອຽດ* ອາດແບ່ງໄດ້ດັ່ງນີ້ (ນັບແຕ່ລຸ່ມຮອດເທິງ)

– ກ. ກົມລຽນອ້ອມຮອບອົງພຣະທາດ ປຽບໃສ່ກຳແພງເມືອງຊັ້ນນອກ ຍາວ 91 ແມັດ ກວ້າງ 75 ແມັດ ມີປະຕູໂຂງຫລັງຄາເຮືອນຍອດທັງ 4 ດ້ານ. ກຳແພງກົມລຽນມີຊ່ອງລະບາຍລົມ ພາຍໃນກົມລຽນແມ່ນພຣະລານ ຫລື ສນາມພຣະທາດ.

– ຂ. ຖ້ານລຸ່ມສຸດຂອງພຣະທາດ ປຽບໃສ່ກຳແພງເມືອງຊັ້ນກາງ. ຖ້ານນີ້ແມ່ນແທ່ນຂອງພຣະທາດ ມີລວງກວ້າງຍາວຈາກເໜືອໄປຫາໃຕ້ 68 ແມັດ ຈາກຕາເວັນອອກໄປຕາເວັນຕົກ 49-ແມັດ ແທ່ນພຣະທາດນີ້ເປັນທີ່ຕັ້ງຂອງກຳແພງຊັ້ນນອກຂອງພຣະທາດເອງ ກຳແພງຊັ້ນນີ້ຕົກແຕ່ງດ້ວຍໃບສີມາ 323 ໃບ ຈະເຫັນຫໍໄຫວ້ຫລັງຄາເຮືອນຍອດທັງ 4 ດ້ານຂອງແທ່ນພຣະທາດ ໂດຍສເພາະດ້ານຕາເວັນອອກຫໍໄຫວ້ໄດ້ກວມພຣະທາດນ້ອຍເອົາໄວ້ ພຣະທາດນ້ອຍນີ້ ປະດັບຕົກແຕ່ງດ້ວຍລາຍແລະຟອກຄຳປົວງົດງາມຫລາຍ ອາດຈະເປັນພຣະທາດຈຳຣອງ ຫລື ພຣະທາດເດີມ ກໍໄດ້.

ຄ. ຖ້ານທີສອງຂອງພຣະທາດ ປຽບໃສ່ກຳແພງເມືອງຊັ້ນໃນ ຖ້ານນີ້ແມ່ນກຳແພງແກ້ວຊັ້ນໃນຢູ່ຖັດຫໍໄຫວ້ຂຶ້ນໄປ ກຳແພງແກ້ວນີ້ມີປະຕູໂຂງເຮືອນຍອດຕັ້ງຢູ່ຊື່ຫໍໄຫວ້ທັງ 4 ດ້ານ ແລະມີຂັ້ນໄດລົງ ກຳແພງນີ້ປະດັບຕົກແຕ່ງດ້ວຍໃບສີມາ 223 ໃບ ໂອບອ້ອມດ້ວຍກາບດອກບົວໃຫຍ່ຊູຂຶ້ນໃນລັກສນະກຳລັງບານມີຈຳນວນ 120 ກາບ. ກຳແພງຊັ້ນນີ້ ແວດລ້ອມອົງພຣະທາດນ້ອຍ 30 ໜ່ວຍໄວ້ ເອີ້ນວ່າ ສະມະຕິງສາປາຣະມີ ລັກສນະຂອງພຣະທາດນ້ອຍງົດງາມຫລາຍ ຫລຽວເບິ່ງເໝືອນກັບ

ປ້ອມຣົບ ຫລື ທໍ່ຣົບ ແວດອົງມະຫາຜາສາດ ຄືພຣະທາດອົງໃຫຍ່ໄວ້. ກ່າວກັນວ່າ ແຕ່ເດີມພຣະທາດນ້ອຍນີ້ມີຍອດໂອບດ້ວຍແຜ່ນຄຳ.

ງ. ຖ້ານທີ 3 ປຽບໃສ່ທໍ່ຜາສາດ ແລະໂຮງຫລວງ. ຖ້ານນີ້ແມ່ນອົງພຣະທາດໃຫຍ່ນັ້ນເອງ ຕັ້ງຢູ່ພາຍໃນພຣະທາດນ້ອຍດັ່ງກ່າວແລ້ວ ອົງພຣະທາດໃຫຍ່ນີ້ມີຄວາມກວ້າງດ້ານລະ 30 ແມັດ ແບ່ງອອກເປັນ 4 ສ່ວນຄື:

1– ເຕົ້າພຣະທາດ ມີລັກສນະເໝືອນໂຂວ້າດັ່ງກ່າວແລ້ວ.

2– ຕີນຍອດພຣະທາດ ຕັ້ງຢູ່ເທິງຫລັງເຕົ້າພຣະທາດ ມີຮູບ 4 ລ່ຽມ ອ້ອມໂອບດ້ວຍກາບດອກບົວຫງາຍກຳລັງບານ ຢູ່ເທິງດອກບົວນີ້ແມ່ນໂບກຂວ້າໂບກຫງາຍ ຊຶ່ງປະກອບເປັນແອວຂັນຂອງຍອດພຣະທາດ.

3– ເຕົ້າຍອດພຣະທາດ ແມ່ນເຕົ້າເທິງໂບກຫງາຍຂຶ້ນໄປ ມີລັກສນະ 4 ລ່ຽມ ເຫວີຂຶ້ນໄປເທິງຈັກໜ້ອຍ.

4– ຍອດພຣະທາດ ແມ່ນສ່ວນເທິງສຸດຂອງພຣະທາດ ຕັ້ງຢູ່ເທິງເຕົ້າຍອດພຣະທາດນັ້ນເອງມີຮູບ 4 ລ່ຽມເພື່ອໃຫ້ກົມກືນກັບເຕົ້າຍອດພຣະທາດ ແຕ່ສ້ອຍແຫລມຂຶ້ນເທິງເໝືອນດອກບົວຈູມຫລືປີກ້ວຍເອີ້ນວ່າ ດວງປີ. ທີ່ມີຮົ່ມ ຫລື ເສຕສັດກັ້ງບັງຍອດພຣະທາດໄວ້.

ຄວາມສູງຂອງພຣະທາດ ຈາກຕີນຮອດຍອດ 45 ແມັດ.

ດັ່ງນັ້ນ ຈຶ່ງເຫັນວ່າ ພຣະທາດຫລວງນີ້ ໄດ້ສ້າງຂຶ້ນຕາມອຸດົມຄະຕິທາງອັນນະຄະດີລາວທີ່ກ່າວເຖິງລັກສນະເມືອງບູຮານ.

ຂໍ້ສັງເກດ

ຖ້ານທັງສາມ ນັກປຣາດຝຣັ່ງເສດໄດ້ປຽບທຽບດັ່ງນີ້

(1) ຖ້ານທີ 1 ປຽບໃສ່ໂລກທາດຊັ້ນ ກາມາວະຈະຣະພູມ

(2) ຖ້ານທີ 2 " " " ຮູປາວະຈະຣະພູມ

(3) ຖ້ານທີ 3 " " " ອະຮູປາວະຈະຣະພູມ

* * *

ພຣະທາດສີໂຄຕບອງ ຄຳມ່ວນ

ພຣະທາດສີໂຄຕບອງ

ແຂວງຄຳມ່ວນ

ໂດຍ ຄຳ ຈຳປາແກ້ວມະນີ

ພຣະທາດພ່ອຍນີ້ເປັນປູຊະນີຍະສະຖານສຳຄັນແຫ່ງນຶ່ງໃນພຣະຣາຊອານາຈັກລາວ. ຕັ້ງຢູ່ເມືອງເກົ່າທ່າແຂກ ແຂວງຄຳມ່ວນ ຫ່າງຈາກໂຮງການແຂວງລົງຕາມລຳນ້ຳຂອງ ປະມານ 6 ກິໂລແມັດ.

ປວັດທາງບູຮານຄະດີ

(ປະມານສັຕວັດທີ 1–13)

ດັ່ງກ່າວມາແລ້ວວ່າ ປູຊະນີຍະສະຖານທີ່ສຳຄັນທັງຫລາຍໃນພຣະຣາຊອານາຈັກລາວນັ້ນ ມີເຣື່ອງເລົ່າໄວ້ໃນນິທານອຸຣັງຄະທາດທັງນັ້ນ. ພຣະທາດນີ້ເຣີ່ມສ້າງຂຶ້ນໃນສມັຍອານາຈັກສີໂຄຕບອງມີອຳນາດ. ຕາມໜັງສືອຸຣັງຄະທາດວ່າສ້າງເປັນອະນຸສາວະຣີຂອງພຍາສີໂຄຕບອງ ກະສັດນະຄອນສີໂຄຕະປຸຣະ (ເມືອງເກົ່າເຊບັ້ງໄຟ ຫ່າງຈາກນ້ຳຂອງປະມານ 15 ກິໂລແມດ.) ເພາະບ່ອນນີ້ເຄີຍເປັນທີ່ປະດິສຖານພຣະສາຣີຣິກະທາດຂອງພຣະພຸທເຈົ້າທັງ 4 ຄື: ພຣະກຸກກຸສັນໂທ, ພຣະໂກນາຄະມະໂນ, ພຣະກັດສະໂປ ແລະ ພຣະໂຄຕະໂມ.

ພຣະທາດພ່ອຍນີ້ໄດ້ເຣີ່ມກໍ່ສ້າງຂຶ້ນ ໂດຍພຣະເຈົ້າສຸມິນທະຣາດ ຫລືສຸມິຕຕະທັມມະວົງສາອະທິຣາດແຫ່ງອານາຈັກສີໂຄຕບອງ (ປະມານສັຕວັດທີ 6) ມີເຣື່ອງເລົ່າວ່າ ເມື່ອພຣະເຈົ້າສຸຣິຍະວົງສາສິດທິເດດຣາຊາທິຣາດແຫ່ງອານາຈັກສີໂຄຕບອງສຸຣະຄົຕແລ້ວ ທາງເມືອງສາເກດ (ຮ້ອຍເອັດ) ຖືກກອງທັບອານາຈັກທວາຣະວະດີຮຸກຮານ ຜູ້ຄົນກໍໄດ້ອົພຍົບເຂົ້າມາເພິ່ງບຸຣົມໂພທິສົມພານຂອງພຣະເຈົ້າສຸມິນທະຣາດແຫ່ງມະຣຸກຂະນະຄອນ (ທ່າແຂກເກົ່າ) ພຣະເຈົ້າສຸມິນທະຣາດມີອຳນາດມາກໄດ້ຍົກກອງທັບໄປຂັບໄລ່ພວກທວາຣະວະດີອອກໄປ ແລະຍົກກອງທັບຕິດຕາມໄປຕີເອົາເມືອງທວາຣະວະດີແລະອິນທະປັດຖະໄດ້ ໄດ້ໄຊຍາພິເສກຂຶ້ນເປັນຣາຊາທິຣາດແຫ່ງອານາຈັກສີໂຄຕບອງ (ປະມານສັຕວັດທີ 6) ໃນສມັຍນີ້ໄດ້ມີພຣະເຖຣະຜູ້ຊົງຄຸນອຸດທີເດີນທາງມາເຜີຍແຜ່ພຣະພຸທສາສນາ ໃນອານາຈັກສີ

ໂຄຕບອງ ໂດຍຄຳແນະນຳຂອງພຣະເຖຣະທັງຫລາຍ ພຣະເຈົ້າສຸມິນທະຣາດຈຶ່ງໄດ້ລົງມືກໍ່ສ້າງພຣະທາດສີໂຄຕບອງຂຶ້ນ ເພື່ອສເລີມພຣະກຽດແກ່ພຍາສີໂຄຕບອງ ແລະໄດ້ເອົາພຣະສາຣີຣິກະທາດບັນຈຸໄວ້.

ອານາຈັກສີໂຄຕບອງ ຄົງຈະແມ່ນຊົນຊາດລາວບູຮານຜູ້ອົພຍົບລົງຈາກພາກໃຕ້ຂອງຈີນສ້າງຂຶ້ນ.

ເຣື່ອງອົພຍົບລົງມາຂອງຊົນຊາດລາວບູຮານ ສ້າງອານາຈັກສີໂຄຕບອງມີແຈ້ງຢູ່ໃນໜັງສືອຸຣັງຄະທາດແລະນິທານໂຍນົກນາຄະພັນແລ້ວ ອານາຈັກສີໂຄຕບອງອາດຈະຢູ່ໃນຍຸກດຽວກັບອານາຈັກຟູນັນ ແລະຍຸກເຈລະຂອງປະເທດຂເມນ. ອານາຈັກສີໂຄຕບອງມີສ່ວນພົວພັນກັບອິນເດັຽເປັນສ່ວນໃຫຍ່ ເຊັ່ນດຽວກັບອານາຈັກອື່ນໆ ໃນແຫລມອິນດູຈີນ.

ເມື່ອອານາຈັກສີໂຄຕບອງເສື່ອມອຳນາດລົງໃນປາຍສັຕວັດທີ 7 ຂເມນບູຮານກໍ່ເຣີ່ມມີອຳນາດຂຶ້ນທີ່ປະເທດຂເມນປັດຈຸບັນ ແລະໄດ້ແຜ່ອຳນາດຂຶ້ນມາປົກຄອງດິນແດນຕອນນີ້ ສູນກາງປົກຄອງອຳນາດຂອມທີ່ພາກກາງຂອງລາວ ຢູ່ທີ່ນະຄອນຈຳປາສີ ແລະຮ້ອຍເອັດ ໃນດິນແດນທີ່ເອີ້ນວ່າພາກອີສານປະເທດໄທຍປັດຈຸບັນ ລະຫວ່າງຂເມນມີອຳນາດ ຂເມນໄດ້ດັດແປງປູຊະນີຍະສະຖານຕ່າງໆໃຫ້ເປັນເທວະສະຖານຂອງສາສນາຮິນດູ. ເຣື່ອງຣາວຂອງພຣະທາດສີໂຄຕບອງໃນສມັຍນີ້ບໍ່ຄ່ອຍປາກົດແຈ້ງຊັດ ຈົນກະທັ້ງຮອດສັຕວັດທີ 15 ຄື ໃນ ຄ.ສ. 1433 ເຈົ້າເມືອງກະບອງ (ທ່າແຂກ) ກໍ່ໄດ້ເຣີ່ມຖາກຖາງບໍຣິເວນພຣະທາດນີ້ຂຶ້ນ ເພື່ອໃຫ້ເປັນສີແກ່ເມືອງຂອງຕົນ ແລະບົວຣະບັດຮັກສາ ເຈົ້າເມືອງຜູ້ນີ້ບໍ່ໄດ້ສ້າງເສີມຕໍ່ເຕີມພຣະທາດພ້ອຍນີ້ຂຶ້ນອີກແຕ່ປະການໃດ ຄົງຮັກສາຮູບຮ່າງເດີມໄວ້. ພຣະເຈົ້າແຜ່ນດິນລ້ານຊ້າງໃນສມັຍນີ້ບໍ່ຄ່ອຍສົນໃຈໃນປູຊະນີຍະສຖານທີ່ອື່ນເລີຍ ເພາະວ່າສມັຍກ່ອນສົມເດັດພຣະໂພທິສາຣະຣາດຂຶ້ນໄປຮອດພຍາຟ້າງູ່ມ ມະໂຍບາຍຜູກໃຈຫົວເມືອງຕ່າງໆໃຫ້ຈົງຮັກພັກດີ ໃຊ້ລັດທິບູຊາແຖນຟ້າເປັນສື່ກາງ ບໍ່ໄດ້ໃຊ້ນະໂຍບາຍທາງພຣະພຸທສາສນາ ດັ່ງພາກົດໃນນິທານຂຸນບູຣົມສະບັບພຣະມະຫາເທພຫລວງໃນຣັຊການຂອງພຍາວິຊູນ (ຄ.ສ. 1500–1520)ວ່າ "ສອງເດືອນໃດໃຫ້ໃຊ້ຄົນເມືອໄຫວ້ສາຫາເຮົາສູ່ບ້ານສູ່ເມືອງ ໃຫ້ເຮົາຮູ້ອັນດີອັນຮ້າຍ ສາມປີໃດໃຫ້ຫົວເຈົ້າທັງຫລາຍຂຶ້ນເມືອໄຫວ້ສາເຮົາ ເມືອຮອດຊຽງດົງຊຽງທອງພຸ້ນແລ້ວ ເຮົາຈັກໄດ້ບູຊາແຖນພ່ຳຄົ່ມ. ແຖນແຕ່ງ ແຖນຊັ້ງ ແຖນເຖືອກ ຯລຯ.

ໃຫ້ເມືອຮອດສູ່ເມືອງ ເດືອນ 3 ໃຫ້ຮອດເມືອງຊະວາ ຄົນໃຜບໍ່ຂຶ້ນ ເຮົາບໍ່ວ່າຊື່ຕໍ່ເຮົາແລ ອັນວ່າໃຫ້ລ້ຽງພ່ຳລ້ຽງແຖນນີ້ ປູ່ເຈົ້າພ່ຳຫລວງໂງ່ມທາກໄດ້ສັ່ງເຮົາໄວ້ໃຫ້ເຮົາຮູ້ຈັກຫົວໃຈເຈົ້າຂຸນ

ທັງມອມ ອັນຢູ່ໃນເມືອງລ້ານຊ້າງ ຜູ້ຊີ້ ແລະຜູ້ດີຈາກເຈົ້າແຜ່ນດິນທັ້ນແລ ປູ່ເຈົ້າຫລວງໂງ່ນໄດ້ສັ່ງໄວ້ສືບໆມາດັ່ງນີ້ແລ".

ພຣະທາດສີໂຄຕບອງປາງປວັດສາດ

(ຄ.ສ. 1530–1929)

ພຣະທາດສີໂຄຕບອງຜາກົດມີເຣື່ອງຣາວແຈ້ງຊັດຂຶ້ນແຕ່ໃນສັຕວັດທີ 16 ອັນເປັນສມັຍກາງ ຂອງອານາຈັກລ້ານຊ້າງໃນປີ ຄ.ສ. 1539 ສົມເດັດພຣະໂພທິສາຣະຣາດ ໄດ້ສະເດັດລົງມາສ້ອມແປງພຣະທາດພ່ອຍນີ້ ແຕ່ບໍ່ໄດ້ສ້າງເສີມຕໍ່ເຕີມ ຍັງຄົງຮູບເກົ່າໄວ້.

ພຣະທາດສີໂຄຕບອງໄດ້ສ້າງເສີມຕໍ່ເຕີມໃຫ້ເປັນສິລປະລາວສມັຍລ້ານຊ້າງ ໂດຍສົມເດັດພຣະໄຊຍະເຊດຖາທິຣາດທີ 1 ລຸນຫລັງທີ່ສ້າງພຣະນະຄອນວຽງຈັນ ແລະວັດອາອາຣາມຕ່າງໆ ທີ່ນະຄອນຫລວງເສັດແລ້ວ ອາດຢູ່ໃນຣະຫວ່າງປີ ຄ.ສ. 1568. ແລະທຳບຸນສເລີມສລອງເປັນການໃຫຍ່ໄດ້ຈົ່ງມອບຂ້າໂອກາດໄວ້ບົວຣະບັດຮັກສາ.

ໃນສມັຍລ້ານຊ້າງນັບແຕ່ສົມເດັດພຣະໂພທິສາຣະຣາດລົງມາ ພຣະມະຫາກະສັດທຸກອົງ ກໍໄດ້ເອົາໃຈໃສ່ອຸປຖຸມບຳຣຸງພຣະທາດພ່ອຍນີ້ບໍ່ໄດ້ຂາດ,

ໃນຣັຊການຂອງສົມເດັດພຣະເຈົ້າສຸຣິຍະວົງສາທັມມິກະຣາດ ເຈົ້ານະຄອນກະບອງ ຫລືເມືອງສີໂຄຕບອງ ແມ່ນເຈົ້າພໍ່ເມືອງ (ຄ.ສ. 1519–1622) ຊົງດຳຣົງຍົດເປັນເຈົ້ານະຄອນວ່າ "ພຣະຍານະຄອນຫລວງພິຊິດຣາຊທານີສີໂຄຕບູນຫລວງ" ໄດ້ພາໄພ່ພົນອຸປຖາກຮັກສາພຣະທາດບໍ່ໄດ້ຂາດ.

ໃນ ຄ.ສ. 1806 ສົມເດັດພຣະເຈົ້າອະນຸໄຊຍະເສດຖາທິຣາດ (ທີ 3) ກໍໄດ້ສະເດັດລົງໄປສ້ອມແປງພຣະທາດພ່ອຍນີ້ຮ່ວມກັບເຈົ້າຂັດຕິຍະຣາດ ເຈົ້ານະຣຸກຂະນະຄອນ (ທ້າວແອກເກົ່າ).

ພຣະທາດສີໂຄຕບອງສມັຍຝຣັ່ງເສດ

(ຄ.ສ. 1893–1949)

ລຸນຫລັງສມັຍພຣະເຈົ້າອະນຸແລ້ວ ພຣະທາດກໍເສົ້າພອງ ປາສຈາກຜູ້ເບິ່ງແຍງຮັກສາ.

ຍ້ອນລາວໄດ້ສູນເສັຽເອກຣາດທາງການເມືອງ. ເມື່ອຝຣັ່ງເສດເຂົ້າມາປົກຄອງເມືອງລາວ ເຈົ້າໜ້າທີ່ຝ່າຍລາວ ໂດຍສະເພາະເຈົ້ານາຍລາວພ້ອມດ້ວຍປະຊາຊົນຊາວແຂວງຄຳມ່ວນ ກໍໄດ້ພຍາຍາມເອົາໃຈໃສ່ບົວຣະບັດເບິ່ງແຍງ.

ໃນປີ ຄ.ສ. 1912 ທາງຣາຊການພ້ອມດ້ວຍຣາສດອນໄດ້ພາກັນຖາກຖາງປ່າໄມ້ແລະເຄືອເຂົາໃນບໍຣິເວນພຣະທາດໃຫ້ແປນແລະສະອາດ ແລ້ວນິມົນພຣະສົງມາຈຳພັນສາຢູ່ທີ່ວັດນີ້. ພຣະສົງກໍໄດ້ພາອອກຕົນຍາດໂຍມສ້າງວິຫານໃຫຍ່ຂຶ້ນ 1 ຫລັງ ທາງດ້ານເໜືອອົງພຣະທາດ.

ພຣະທາດສີໂຄຕບອງສມັຍປັດຈຸບັນ

(ຄ.ສ. 1949–ຮອດປັດຈຸບັນ)

ດັ່ງລາວໄດ້ເອກຣາດແລ້ວ ທາງຣັຖບານແລະປະຊາຊົນກໍໄດ້ເອົາໃຈໃສ່ຟື້ນຟູປະເພນີປະຈຳແຂວງຄຳມ່ວນຂຶ້ນ ແລະໄດ້ຖືເອົາປາງບຸນພຣະທາດສີໂຄຕບອງນີ້ເປັນປາງບຸນສເລີມສລອງທາງຣາຊການບໍ່ໄດ້ຂາດ ໄດ້ເຣີ່ມຕົ້ນມາຕັ້ງແຕ່ປີ ຄ.ສ. 1963 ໂດຍກຳນົດເອົາເດືອນຍີ່ເພັງເປັນມື້ສເລີມສລອງ ແລະໄດ້ສ້າງກະດີສົງຂຶ້ນ 1 ຫລັງ.

ແຕ່ວຽກການສ້ອມແປງໄດ້ເຣີ່ມແຕ່ປີ 1948–49. ທ່ານເຈົ້າແຂວງຄຳມ່ວນ (ທ່ານບຸນທັນ ຊົງວິໄລ) ພ້ອມດ້ວຍບັນດາຂ້າຣາຊການທຸກພແນກ ໄດ້ຕັດຖນົນຈາກເມືອງທ່າແຂກໄປຍັງພຣະທາດເປັນຣະຍະທາງ 6 ກິໂລແມດ. ແລະໄດ້ດຸດດັດແປງບໍຣິເວນພຣະທາດໃຫ້ຣາບຮຽບພຽງງາມດີ.

ລັກສນະພຣະທາດສີໂຄຕບອງ

– ແທ່ນພຣະທາດກວ້າງດ້ານລະ 25,30 ແມັດ. ແທ່ນພຣະທາດນີ້ຕັ້ງຢູ່ເທິງໂພນສູງ ຊຶ່ງສູງປະມານ 1,50 ແມັດ

– ອົງພຣະທາດມີລັກສນະຮູບ 4 ລ່ຽມທຍ້ມຸມ ມີລວງກວ້າງດ້ານລະ 14,33 ແມັດ.

– ຍອດພຣະທາດມີລັກສນະເປັນຮູບດອກບົວຈູມ ຫລືດວງປີ ຊຶ່ງເປັນສິລປະແບບລາວແທ້

– ຄວາມສູງຈາກຕີນແທ່ນເຖິງຍອດ (ບໍ່ນັບຮົ່ມກັ້ງ) 28,89 ແມັດ.

ສິ່ງກໍ່ສ້າງໃນບໍຣິເວນພຣະທາດ

(ເປັນຂອງໃໝ່)

---

1. ພຣະພຸທຮູບຊີມັງ 4 ອົງ ຕັ້ງຢູ່ອົງລະດ້ານຂອງພຣະທາດ.

2. ກຳແພງພຣະທາດ ຕັ້ງຢູ່ພົ້ນດິນເມືອງ ດ້ານເໜືອແລະດ້ານໃຕ້ຍາວ 42,47 ແມັດ ຕາເວັນອອກແລະຕາເວັນຕົກຍາວ 45 ແມັດ ເດີ່ນພາຍໃນກຳແພງນີ້ ເບື້ອງເໜືອແລະໃຕ້ກວ້າງ 4,87 ແມັດ ເບື້ອງຕາເວັນອອກແລະຕາເວັນຕົກກວ້າງ 4,36 ແມັດ, ກຳແພງສູງ 2,30 ແມັດ

ກຳແພງນີ້ຄົງແມ່ນກຳແພງເກົ່າ ໃນປີ ຄ.ສ. 1956 ໄດ້ທຳການສ້ອມແປງ ແລະເສີມໃບສີມາຂຶ້ນອີກ.

3. ກົມມະລຽນອ້ອມພຣະທາດມີພຽງ 2 ດ້ານ ຄື ດ້ານເໜືອ ແລະໃຕ້ ດ້ານລະ 4 ຫລັງ ສ້າງຂຶ້ນເມື່ອ ຄ.ສ. 1961. ສ່ວນດ້ານຕາເວັນອອກມີກຳແພງກັ້ນ ສ້າງໃນປີດຽວກັນ ກຳແພງນີ້ ປະກອບດ້ວຍຕາມ່າງເຫລັກ ຮູບເທພນົມ ແລະມີປະຕູໂຂງ.

4. ຫໍຜາສາດແບບຈະຕຸຣະມຸກ ຕັ້ງຢູ່ທິດຕາເວັນອອກຊື່ອົງພຣະທາດ ສ້າງໃນປີດຽວກັນ ຍອດຜາສາດເປັນຮູບຍອດພຣະທາດ ຜາສາດນີ້ຕັ້ງຢູ່ກາງສະນ້ຳ ມີຂົວຂ້າມໄປຫາຜາສາດ ຂົວແລະຜາສາດສ້າງດ້ວຍຊີມັງເສີມເຫລັກ.

5. ຫໍແຈກ ຕັ້ງຢູ່ຂ້າງໃຕ້ຂອງອົງພຣະທາດ 1 ຫລັງ.

6. ວິຫານໃຫຍ່ຫລັງນຶ່ງ ຕັ້ງຢູ່ທາງທິດເໜືອຂອງພຣະທາດ ເໜືອວິຫານມີຕົ້ນໂພພຸທຄະຍາ ແຫ່ງອິນເດັຽ ຊຶ່ງປູກເມື່ອ ພ.ສ. 2500 (ຄ.ສ. 1957).

ບູຮານສະຖານອື່ນໆ

1. ພຣະທາດໃຫຍ່ 1 ໜ່ວຍ ຕັ້ງຢູ່ຂ້າງຫ້ວຍສີມັງທາງຕາເວັນອອກບ່ອນຂົວຂ້າມ ແຕ່ເພລົງໝົດແລ້ວ.

2. ຫໍພຣະກັດຈາຍ 1 ຫລັງ ຢູ່ໃນບໍຣິເວນດຽວກັນກັບທາດທີ່ເພລົງ.

3. ຊາກວິຫານ 1 ຫລັງ ເຫລືອແຕ່ແທ່ນພຣະພຸທຮູບ ຕິດກັບແທ່ນວິຫານ ຊຶ່ງຕັ້ງຢູ່ຫ່າງຈາກກຳແພງພຣະທາດໄປທາງໃຕ້ປະມານ 30 ແມັດ.

4. ສີມຮ້າງຕັ້ງຢູ່ຖັດໄປທາງຕາເວັນອອກຂອງວິຫານຮ້າງປະມານ 15 ແມັດ ຍັງເຫລືອແຕ່ໃບສີມາ ແລະໂນນສີມ ເວລາບວດກໍໄດ້ອາສັຍສີມນີ້ບວດມາກ.

5. ຫ້ວຍປວັດສາດ ຕັ້ງຢູ່ທາງເໜືອຂອງບໍຣິເວນພຣະທາດ ມີຂົວຂ້າມ ຫ້ວຍນີ້ຊາວບ້ານເອີ້ນວ່າ ຫ້ວຍສີມັງ ຫລືຫ້ວຍເຂົ້າໜ່າ ຊຶ່ງມີເຣື່ອງພົວພັນກັບພຍາສີໂຄດຕບອງ.

ພຣະທາດອິງຮັງ ສວັນນະເຂດ

ພຣະທາດອິງຮັງ (ອິນທຣະພາສາດ)

ແຂວງສວັນເຂດ

ໂດຍ ຄຳ ຈຳປາແກ້ວມະນີ

ພຣະທາດອິງຮັງ ເປັນປູຊະນີຍະສະຖານທີ່ສັກສິດແລະ ສຳຄັນແຫ່ງນຶ່ງໃນພຣະຣາຊອານາຈັກລາວ ເປັນນຶ່ງຂວັນຂອງຊາວສວັນນະເຂດ ມີປາງບຸນສເລີມສລອງປະຈຳປີ ລະຫວ່າງ ເດືອນຈຽງເພັງ, (ແຕ່ກ່ອນເອົາບຸນລະຫວ່າງເດືອນ 12 ເພັງ) ພຣະທາດພ່ອຍນີ້ມີລັກສນະງົດງາມຫລາຍ ແລະ ເປັນທີ່ສງວນຮັກສາໄວ້ຊຶ່ງສິລປະກັມລາວສມັຍບູຮານເກືອບຄົບຖ້ວນ ເບິ່ງຄືວ່າເປັນພຣະທາດພ່ອຍດຽວທີ່ຊົງຮູບຮ່າງເດີມຢູ່ ບໍ່ໄດ້ຖືກທຳລາຍແຕ່ປະການໃດ ຕັ້ງຢູ່ເທິງເສັ້ນທາງສວັນນະເຂດ–ເຊໂນ ຫ່າງຈາກຕົວເມືອງສວັນນະເຂດ ປະມານ 15 ກິໂລແມັດ.

ປວັດທາງບູຮານຄະດີ (ປະມານສັຕວັດທີ 1–13)

ພຣະທາດນີ້ກ່າວວ່າ ເຣີ່ມສ້າງຂຶ້ນໃນສມັຍອານາຈັກສີໂຄຕບອງມີອຳນາດ (ປະມານສັຕວັດທີ 6) ພຣະເຈົ້າສຸມິນທະຣາດ ຣາຊາທິຣາດແຫ່ງອານາຈັກສີໂຄຕບອງ ໄດ້ວາງຮາກຖານສ້າງຂຶ້ນຕາມຄຳແນະນຳຂອງ ພຣະເຖຣະຊາວອິນເດັຽ. ເພື່ອເປັນເຄື່ອງໝາຍແທນສະຖານທີ່ສະເດັດປະຣິນິບພານຂອງພຣະພຸທເຈົ້າທີ່ປ່າໄມ້ຮັງ ເມືອງກຸສິນາຣາຍປະເທດອິນເດັຽ. ເມື່ອສ້າງເສັດແລ້ວໄດ້ນຳເອົາພຣະສາຣີຣິກະທາດບັນຈຸໄວ້, ລັກສນະຂອງພຣະທາດໃນສມັຍນັ້ນເປັນຮູບ 4 ລ່ຽມຖານດຽວ.

ແຕ່ພົງສອຸຣັງຄະທາດກ່າວວ່າ ໄດ້ຊົງສ້າງຂຶ້ນເປັນເຄື່ອງໝາຍສະຖານທີ່ປະທັບນັ່ງຂອງ ພຣະພຸທເຈົ້າ ຄາວພຣະອົງສະເດັດມາຢ້ຽມຢາມພຍາສີໂຄຕບອງ ຄົງຈະມີຈຸດປະສົງເພື່ອໃຫ້ປະຊາຊົນເຫັນຄວາມສຳຄັນຂອງປູຊະນີຍະສະຖານແຫ່ງນີ້ຫລາຍຂຶ້ນ ຈຶ່ງເອົາສະຖານທີ່ນີ້ໄປພົວພັນກັບພຣະພຸທເຈົ້າ.

ຄັນຕໍ່ມາເຣື່ອງຣາວຂອງອານາຈັກສີໂຄຕບອງກໍຫາຍໄປ ຄົງແມ່ນຂເມນບູຮານແຜ່ອຳນາດເຂົ້າມາຄອບຄອງດິນແດນສ່ວນນີ້ ເຣີ່ມແຕ່ສັຕວັດທີ 9.

ມີແຕ່ນິທານພຍາສີໂຄຕບອງເລົ່າສືບ ໆ ກັນມາ ອັນວ່ານິທານພຍາສີໂຄຕບອງນີ້ມີເລົ່າກັນເກືອບທຸກປະເທດໃນອິນດູຈີນ ໂດຍສະເພາະ ລາວ ແລະໄທ. ແຕ່ກໍລົງເອີຍເອົາວ່າ ພຍາສີໂຄຕບອງເປັນຊາວລ້ານຊ້າງ ໄດ້ເອົາໄມ້ຄ້ອນເຫລັກມາຕີຊ້າງຕາຍ.

ລະຫວ່າງຂະເມນມີອຳນາດ ພຣະທາດນີ້ໄດ້ຖືກດັດແປງໃຫ້ເປັນເທວະສະຖານຂອງຮິນດູ ແລະ ໄດ້ສ້າງເສີມຕໍ່ເຕີມໄປອີກຊັ້ນນຶ່ງ ລົງລາຍຕົກແຕ່ງຕາມຝາປະຕູແລະຜນັງກໍໄດ້ຄວັດອັ້ນກ່ຽວກັບເທພເຈົ້າຮິນດູ. ໂດຍສະເພາະເຣື່ອງເມຖຸນສັງວາດ ລັກສນະຂອງພຣະທາດກໍກາຍເປັນຜາສາດ ຫລືພຣະປາງຂອງຂະເມນບູຮານໄປ. ດັ່ງຈະເອີ້ນວ່າອິນທຣະຜາສາດ, ແລ້ວກາຍມາເປັນອິງຮັງໄປ ໃນສມັຍເມື່ອຊາດລາວໄດ້ມີອຳນາດແທນຂອມ ເຣີ່ມແຕ່ສັຕວັດທີ 13.

ພຣະທາດອິງຮັງທາງປວັດສາດ (ປະມານສັຕວັດທີ 13–19)

ຊົນຊາດລາວເຣີ່ມມີອຳນາດຄວບຄຸມດິນແດນສ່ວນນີ້ ແທ້ຈິງໃນສັຕວັດທີ 13 ແຕ່ກໍບໍ່ໄດ້ໂຮມກັນເປັນປະເທດດຽວ ໄດ້ແຍກຍ້າຍກັນຕັ້ງອານາຈັກຂຶ້ນຫລາຍແຫ່ງ. ອານາຈັກຊາດລາວໃນດິນແດນຕອນນີ້ດັ່ງເອີ້ນວ່າ ອານາຈັກກະບອງ ຕາມຊື່ອານາຈັກສີໂຄຕບອງ (ສຣີໂຄຕປຸຣະ) ບູຮານ.

ເຈົ້າຄອງເມືອງກະບອງໃນສັຕວັດທີ 14 ມີນາມວ່າ ພຍາແປດບໍ່. ໃນປີ ຄ.ສ. 1349 ພຍາຟ້າງຸ່ມຜູ້ທ້ອນໂຮມແຜ່ນດິນລາວໄດ້ຍົກທັບມາຜາບແພ້ພຍາແປດບໍ່ຜູ້ນີ້ຈົນເຖິງແກ່ຄວາມຕາຍ ແລ້ວຕັ້ງນ້ອງຊາຍພຍາແປດບໍ່ເປັນພຍາກະບອງຄອງເມືອງແທນ.

ໃນລະຫວ່າງເຊື້ອວົງຂອງພຍາແປດບໍ່ຄອງອານາຈັກກະບອງນີ້ ເຣື່ອງຣາວກ່ຽວກັບພຣະທາດສຳຄັນຕ່າງ ໆ ໃນດິນແດນສ່ວນນີ້ກໍບໍ່ໄດ້ກ່າວເຖິງ ແຕ່ເຂົ້າໃຈວ່າເຈົ້າເມືອງກະບອງທຸກ ໆ ອົງດັ່ງຈະເອົາໃຈໃສ່ເບິ່ງແຍງປູຊະນີຍະສະຖານຕ່າງ ໆ ໃນອານາຈັກຂອງຕົນ ພາຍເອົາພຣະທາດອິງຮັງນຳດ້ວຍ.

ເຣື່ອງຣາວພຣະທາດອິງຮັງພາກົດແຈ້ງຊັດຂຶ້ນ ໃນຣຊການຂອງສົມເດັດພຣະໂພທິສາຣະຣາດ ແລະສົມເດັດພຣະໄຊຍະເຊດຖາທິຣາດຕາມລຳດັບ. ໃນລະຫວ່າງທີ່ສົມເດັດພຣະໂພທິສາຣະຣາດ ລົງມາປະທັບທີ່ນະຄອນວຽງຈັນ ໃນປີ ຄ.ສ. 1539 ພຣະອົງກໍໄດ້ສະເດັດລົງໄປນະມັສການປູຊະນີຍະສະຖານທີ່ສຳຄັນໃນເຂດເມືອງກະບອງ ຄື ພຣະທາດອິງຮັງນີ້ ແລະພຣະທາດສີໂຄຕບອງ, ພຣະທາດພນົມ ແລະພຣະທາດໂພ່ນ. ພຣະອົງໄດ້ມອບຂ້າໂອກາດບົວຣະບັດເບິ່ງແຍງພຣະທາດທຸກ ໆ ພ່ອຍ.

ພຣະທາດອິງຮັງໄດ້ຖືກສ້າງເສີມຕໍ່ເຕີມອີກ ໂດຍສົມເດັດພຣະໄຊຍະເຊດຖາທິຣາດທີ 1 ຫລັງຈາກທີ່ໄດ້ຊົງສຖາປະນານະຄອນວຽງຈັນເປັນເມືອງຫລວງ ລະຫວ່າງ ຄ.ສ. 1548. ພຣະອົງໄດ້ດັດແປງພຣະທາດພ່ອຍນີ້ໃຫ້ກັບຄືນເປັນເຈດີໃນທາງພຣະພຸທສາສນາ ສ້າງຍອດເຈດີຕາມແບບສິລປະກັມຂອງລາວບູຮານ ຄັນສ້າງເສັດແລ້ວກໍໄດ້ທຳບຸນສເລີມສລອງ ແລະມອບຂ້າໂອກາດໃຫ້ບົວຣະບັດຮັກສາ.

ພຣະມຫາກະສັດລ້ານຊ້າງທຸກ ໆ ພຣະອົງ ຫລັງຈາກສົມເດັດພຣະໄຊຍະເຊດຖາທິຣາດກໍໄດ້

ເອົາໃຈໃສ່ບົວຣະບັດຮັກສາພຣະທາດອິງຮັງນີ້ເໝືອນພຣະທາດອື່ນບໍ່ໃຫ້ຂາດຣາຊປະເພນີ ຈົນຮອດ ຄ.ສ. 1829 ສມັຍທີ່ອານາຈັກລ້ານຊ້າງວຽງຈັນຖືກທຳລາຍ ລຸນຫລັງຈາກນີ້ພຣະທາດກໍເສົ້າໝອງ ປາສຈາກການອຸປຖາກຮັກສາ ມີແຕ່ຊາວບ້ານໃກ້ໆ ເທົ່ານັ້ນ ໂຄຣົບບູຊາ ແລະຖືເປັນບ່ອນສັກສິດດັ່ງທີ່ເຄີຍເຊື່ອຖືກັນມາແຕ່ບູຮານການ.

ພຣະທາດອິງຮັງສມັຍປັດຈຸບັນ (ແຕ່ ຄ.ສ. 1893 ຮອດປັດຈຸບັນ)

ຕໍ່ມາເຖິງ ຄ.ສ. 1893 ຝຣັ່ງເສດເຂົ້າຄອງເມືອງລາວຝັ່ງຊ້າຍແມ່ນ້ຳຂອງ ໃນຣະຫວ່າງ 11 ປີ ຕົ້ນສມັຍຝຣັ່ງເສດ ອົງພຣະທາດກໍເສົ້າໝອງ ດຳກ່ຳ ເຄືອໄມ້ ຕົ້ນໂພນ້ອຍ ເກີດເກາະຈັບ ແລະກົກໄມ້ນ້ອຍເກີດຫຸ້ມຫໍ່ພຣະທາດ ຈົນກາຍເປັນປ່ານ້ອຍໆ ຫາບ່ອນພໍຈະເປັນຕາເບິ່ງຕາຊົມກໍບໍ່ມີ.

ຫລັງຈາກປີ 1930 ເຈົ້າໜ້າທີ່ບູຮານວັດຖຸຝຣັ່ງເສດ ລົງມືສ້ອມແປງບູຮານສະຖານໃນພຣະຣາຊອານາຈັກລາວ. ເຂົາກໍໄດ້ສ້ອມແປງພຣະທາດອິງຮັງພຽງເລັກນ້ອຍ ຮູບນາຍທວາຣບານກໍໄດ້ສ້ອມແປງໃໝ່ໃນລັກສນະເດີມ ສ່ວນຝາປະຕູທາດເກົ່າດ້ານນຶ່ງໄດ້ນຳເອົາມາໄວ້ທີ່ຫໍພຣະແກ້ວວຽງຈັນ ໄດ້ເຮັດຝາປະຕູໃໝ່ຂຶ້ນແທນ.

ນັບແຕ່ ຄ.ສ. 1949 ມາ ລາວໄດ້ເອກຣາດແລ້ວ ຂ້າຣາຊການ ທະຫານ ຕຳຣວດ ເມືອງສວັນນະເຂດ ໂດຍມີເຈົ້າແຂວງເປັນປະທານ ພ້ອມດ້ວຍປະຊາຊົນ ໂດຍໄດ້ຮັບການສນັບສນູນຈາກຣັຖບານ ກໍໄດ້ວາງແຜນສ້ອມແປງພຣະທາດອິງຮັງໃຫ້ເປັນຕາເບິ່ງຕາຊົມ ໄດ້ດັດແປງບໍຣິເວນອ້ອມພຣະທາດໃຫ້ກວ້າງຂວາງ ໄດ້ປູກກົມລຽນ ແລະກຳແພງພ້ອມປະຕູໂຂງຫລັງຄາເຮືອນຍອດຂຶ້ນ ອ້ອມອົງພຣະທາດ ໄດ້ກຳນົດເອົາປາງບຸນສເລີມສລອງປະຈຳປີລະຫວ່າງເດືອນຍີ່ເພັງຂອງທຸກໆ ປີ ຊຶ່ງແຕ່ກ່ອນເອົາບຸນລະຫວ່າງເດືອນ 12 ເພັງ ເພາະເຫັນວ່າຢູ່ໃນຣະຍະດຽວກັນກັບບຸນພຣະທາດຫລວງ ແລະໃຫ້ຖືວ່າເປັນບຸນຂອງຊາດ ສົມເດັດພຣະເຈົ້າມຫາຊີວິດ ຫລື ອົງມຸງກຸດຣາຊກຸມານ ຫລື ວ່າຜູ້ຕາງພຣະເນດພຣະກັນໄດ້ສະເດັດມາເປັນອົງປະທານໃນພິທີບຸນນະມັສການພຣະທາດໜ່ວຍນີ້ບໍ່ໄດ້ຂາດ ເໝືອນກັບບຸນຂອງຊາດອື່ນໆ ໃນພຣະຣາຊອານາຈັກ.

ລັກສນະພຣະທາດ

ຮູບຮ່າງ 4 ລ່ຽມຫຍໍ້ມຸມ ເໝືອນຫໍປາງ ຫລືຜາສາດ ເປັນເຈດີແບບຜະສົມວິຫານ ຄືວ່າໃຊ້ເປັນທີ່ປະດິສຖານຮູບສັກສິດກໍໄດ້ ເພາະມີປະຕູອັດ–ໄຂໄດ້ ຂ້າງໃນບັນຈຸພຣະສາຣີຣິກະທາດ ອົງພຣະທາດມີສາມຖ້ານ ຖ້ານລຸ່ມເປັນສິລປະດັ້ງເດີມ ຍອດພຣະທາດເປັນສິລປະແບບລາວສມັຍລ້ານຊ້າງ ມີຮູບເປັນດອກບົວຈູມ ຫລືປີກ້ວຍ ເອີ້ນວ່າດວງປີ.

ແທ່ນພຣະທາດລວງກວ້າງຍາວດ້ານລະ 9 ແມັດ ລວງສູງ 25 ແມັດ. ✳

ພຣະທາດໂພ່ນ

ບ້ານທາດ ແຂວງຈຳພອນ

ໂດຍ ຄຳ ຈຳປາແກ້ວມະນີ

ພຣະທາດໂພ່ນນີ້ ເປັນປູຊະນີຍະສະຖານສຳຄັນແຫ່ງນຶ່ງໃນພຣະຣາຊອານາຈັກລາວ ຕັ້ງຢູ່ທາງທິດໃຕ້ກຳແພງນະຄອນສວັນນະເຂດປະມານ 45 ກິໂລແມັດ ມີລັກສນະເໝືອນພຣະທາດສີໂຄດຕະບອງ ແຂວງຄຳມ່ວນ ພຣະທາດພ່ອຍນີ້ກ່າວກັນວ່າສ້າງກອມຫລັກຫີນຮູບ 4 ລ່ຽມເຖິງ 7 ໜ່ວຍ ຊູມມຸມຂອງຫລັກຫີນເຫລົ່ານີ້ເຊື່ອກັນວ່າສ້າງເປັນທີ່ຣະລຶກເວັຈກຸດີຂອງພຣະພຸທເຈົ້າ 5 ພຣະອົງ ຫລັກຫີນທັງ 7 ນີ້ເຂົ້າໃຈວ່າສ້າງຂຶ້ນໃນສມັຍດຽວກັນກັບພຣະທາດສີໂຄດຕະບອງ.

ເນື້ອຄວາມໃນຕຳນານໄດ້ກ່າວພົວພັນກັບພຣະໂຄດົມພຸທເຈົ້າ ໄດ້ສະເດັດຈາກເມືອງເວສາລີ (ເມືອງຫລ້ານ້ຳ) ມາຍັງໂພນຊ້າງສາມນີ້ ໄດ້ຊົງໂຜດລັພສັດທັງຫລາຍຕລອດ 7 ວັນ ພຣະຍານາກຜູ້ຮັກສາສະຖານທີ່ນີ້ມີຈິດໃຈເຫລື້ອມໄດ້ສ້າງເວັຈກຸດີຖວາຍພຣະອົງ ພຣະທາດນີ້ຈຶ່ງມີຊື່ວ່າພຣະທາດໂພ່ນ ຊຶ່ງທ້າວຄັທນາມໄດ້ສ້າງຂຶ້ນຕາມຄຳແນະນຳຂອງພຣະມານດາ.

ພໍສັນນິຖານໄດ້ວ່າ ດັ້ງເດີມເປັນເສົາຫີນ ແຕ່ພໍມາຮອດສມັຍຂະເມນບູຮານມີອຳນາດ ເຈົ້າຂະເມນຜູ້ຄອງດິນແດນຕອນນີ້ຈຶ່ງໄດ້ພາໄພ່ພົນມາສ້າງອະນຸສາວະຣີຂຶ້ນທີ່ນີ້.

ພຣະທາດໂພ່ນສມັຍປວັດສາດ

ເມື່ອຈຸລສັກຣາດ 901 (ຄ.ສ. 1539) ສົມເດັດພຣະໂພທິສາຣະຣາດ ພຣະເຈົ້າແຜ່ນດິນລ້ານຊ້າງ ໄດ້ພາໄພ່ພົນພ້ອມດ້ວຍພຣະຍາກະບອງລົງມາສ້າງເສີມຕໍ່ເຕີມຂຶ້ນ ແລະໄດ້ພຣະຣາຊອາດຍາໝາຍເຂດພຣະທາດໄວ້ດັ່ງນີ້:—

"ຕັ້ງແຕ່ປູນພຣະນະຄອນ ໄດ້ແບ່ງມາແພງສີ 102 ວາ, ຕັ້ງແຕ່ຫ້ວຍລຶກ ແຕ່ມາໃຕ້ມາໜອງທູພານໄດ້ 560 ວາ ຕົກໄປໜອງກ້ານສຸດໄປໂພນນາຈານ ຕົກໄປໂພນແກ້ວດົງເກືອໄປໜອງເມັກ

ໄປຈອມປອກສູງ ຕົກໄປວັງພຸພອງໄຜ່ ໄປທໍຣະນີນອງ ໄປດົງຈົມພອງປາຝາ ຕັດໄປພອງສອງຫ້ອງ ກ່າມປູດຳເພັດໂຈດ ໄປທົມກອງໃກ້ພູກະແຕ ຕັດໄປພອງຜັກຣະ ພອງກຸງ ຕັດໄປດົງຊີດົງຄວາມ ພອງຂອມແກ່ນ ພອງຫຍ້າມ້າ ທົມຮູບທາດຕັດມາມາຫລັກ ມາຫົວແຮດ ຕັດມາມາໂພນ ຊອດຫ້ວຍສະໂຍງ ເລາະລ່ອງຊອດຂຶ້ນມາປາກຮ່ອງສ້ຽວ ຕັດມາຈອດໂພນກົກດູມກົກມ່ວງ ຕັດມາໂພນງິ້ວ ພອງບົວຂີ້ແບ້ ຊອດໃສ່ຫ້ວຍເລົາເລາະລ່ອງຕາມຄົດຕາມຊື່ຊອດຫູມານ.

ນອກຈາກນີ້ ພຣະອົງໄດ້ມອບບ້ານສ່ວຍໃຫ້ແກ່ພຣະທາດເປັນຈຳນວນຄົນ 166 ຄົນ ພ້ອມທັງໄຮ່ນາເອີ້ນວ່າຂ້າໂອກາດ ໃຫ້ອຸປຖາກບົວຣະບັດພຣະທາດແລ້ວໄດ້ປັ່ງພຣະຣາຊອາດຍາໄວ້ວ່າ:–

"ຜູ້ໃດໄດ້ກິນນາພຣະມຫາທາດ ເອົາຄົນຜູ້ນັ້ນໄປເປັນຂ້ອຍພາຍສາຍດາບໃຫ້ຄອງອິມາດຈິບຫາຍເຖິງມັນຜູ້ນັ້ນ ອັນນຶ່ງໃຜຫາກມາຍາດດິງຊີງເອົາຂ້ອຍໂອກາດຊັກນ້າວຂຶ້ນເຮືອນ ໃຫ້ຄອງດັບຄອງອາຍເຖິງມັນຜູ້ນັ້ນ ອັນນຶ່ງໃຜກິນນາພຣະມຫາທາດບໍ່ມາອຸປຖາກໃຫ້ບາບກິນດິນກິນມັນ ຊ້ອນມັນຢ່າຮີບມັນຢ່າກວ້າງ ແຂ່ງມັນຕົກຄົນມາ ຂາມັນຕົກຕາກ້າ ເຮັດພຽງຕາໃຫ້ລົງພຽງຕີນ ໃຫ້ພອຍຊີວິດພຣະພຸທເຈົ້າອຸບັດມາຄູ່ເມັດທິນເມັດຊາຍ ຢ່າໃຫ້ເຂົາເກີດພ້ອມພຣະພຸທເຈົ້າເມດໄຕຍ ໃຜເຊື່ອໃຫ້ບໍ່ກິນມັນຜູ້ນັ້ນ ພຣະຣາຊາອົງໃດກໍຕາມຫາກປະຕິບັດສືບ ໆ ກັນທຸກ ໆ ພຣະອົງ".

ໃນຣັຊການຂອງສົມເດັດພຣະໄຊຍະເຊດຖາທິຣາດ ຈົນຮອດສົມເດັດພຣະເຈົ້າອະນຸ ພຣະທາດອົງນີ້ໄດ້ຮັບອຸປຖຸມບຳຣຸງໃຫ້ໝັ້ນຄົງດີເໝືອນຢ່າງເດີມ. ພຣະເຈົ້າແຜ່ນດິນແຫ່ງອານາຈັກລ້ານຊ້າງກໍໄດ້ປະຕິບັດຕາມຢ່າງຣາຊປະເພນີສືບ ໆ ກັນມາ ຈົນຮອດສມັຍທີ່ຣາຊອານາຈັກລາວລ້ານຊ້າງເປັນເມືອງຂຶ້ນຂອງຕ່າງຊາດ ພຣະທາດກໍເສົ້າໝອງປາສຈາກການອຸປຖຸມບຳຣຸງຮັກສາ ເໝືອນຢ່າງປູຊະນີຍະສະຖານແຫ່ງອື່ນໃນພຣະຣາຊອານາຈັກ ຈົນຮອດສມັຍທີ່ເມືອງລາວຕອນທີ່ເປັນພຣະຣາຊອານາຈັກປັດຈຸບັນໄດ້ຮັບເອກຣາຊແລ້ວ ຣັຖບານໂດຍການສນັບສນຸນຂອງສົມເດັດພຣະເຈົ້າມຫາຊີວິດ ກໍໄດ້ຫັນມາເອົາໃຈໃສ່ບຳຣຸງປູຊະນີຍະສະຖານທັງຫລາຍ.

ໃນປີ ຄ.ສ. 1950 (ພ.ສ. 2483 ຈຸລສັກຣາດ 1305 ເດືອນ 7 ແຮມ 12 ຄ່ຳປີມະເສັງ ວັນເສົາ) ປະຊາຊົນທັງຫລາຍໃນເຂດຕາແສງນາຄຳ ໂດຍການນຳຂອງທ່ານພຣະຄຣູເຫລື້ອມ ເຈົ້າຣາຊາຄນະແຂວງສວັນນະເຂດ ໂດຍການສນັບສນູນຈາກພຣະຍາໂພທິສັດເຈົ້າເມືອງຄັນທະບຸຣີ ໄດ້ສ້ອມແປງພຣະທາດພ່ອຍມີຂຶ້ນຕື່ມ ສິ້ນເງິນໄປ 1000 ທຣຽນ ໄດ້ເອົາເງິນຕີໂອແລະຣົ່ມກັ້ງ 109 ທຣຽນ ປະດັບຍອດພຣະທາດ ແລະໄດ້ໃຊ້ເງິນທຣຽນອີກ 37 ທຣຽນ ເຮັດໃບສີມາປະດັບພຣະທາດອີກ. ✳



ພຣະທາດພນົມ ເມື່ອປີ 1867

ພຣະທາດພນົມ

ໂດຍ ຄຳ ຈຳປາແກ້ວມະນີ

ພຣະທາດພນົມເປັນສຖາປັດຕະຍະກັມບູຮານລາວແຫ່ງນຶ່ງ ແຕ່ປະຊາຊົນລາວບໍ່ມີສິດຄອບຄອງ ເພາະເຫດການບ້ານເມືອງບໍ່ຮຽບແປງ ດິນແດນລາວທີ່ເອີ້ນວ່າພາກອິສານໃນປັດຈຸບັນ ຢູ່ພາຍໃຕ້ການຄອບຄອງຂອງພຣະຣາຊອານາຈັກໄທ ເຖິງຢ່າງໃດກໍຕາມ ຊາວລາວໃນພຣະຣາຊອານາຈັກລາວປັດຈຸບັນກໍມີສ່ວນໄປຮ່ວມປາງບຸນສເລີມສລອງທຸກປີບໍ່ໄດ້ຂາດ.

ພຣະທາດອົງນີ້ຕັ້ງຢູ່ເມືອງທາດພນົມ ແຂວງນະຄອນພນົມ ແຄມຝັ່ງຕາເວັນຕົກຂອງແມ່ນ້ຳຂອງ ຊຶ່ງກົງກັບປາກເຊບັ້ງໄຟ, ທາງພຣະຣາຊອານາຈັກລາວ ແຕ່ບູຮານສມັຍທີ່ລາວຍັງເປັນເຈົ້າຂອງພຸ້ນ ສິດທິເບິ່ງແຍງປົວຣະບັດຕົກຢູ່ກັບຊາວເມືອງປາກເຊບັ້ງໄຟ ແຂວງຄຳມ່ວນ. ແຕ່ດຽວນີ້ພວກເຂົາເຈົ້າໄດ້ສູນເສັຽສິດອັນນັ້ນມາເກືອບຮ້ອຍປີແລ້ວ.

ໜ້າສັງເກດຢ່າງນຶ່ງວ່າ ເຣື່ອງຣາວພຣະທາດທີ່ສຳຄັນໃນດິນແດນລ້ານຊ້າງບູຮານ ມີເຄົ້າມາຈາກນິທານທາດພນົມ ເຊິ່ງເອີ້ນວ່າອຸຣັງຄະນິທານທັງໝົດ.

ປວັດພຣະທາດພນົມທາງບູຮານຄະດີ (ປະມານສັຕວັດທີ 1–13)

ນິທານອຸຣັງຄະທາດກ່າວວ່າ ພຣະມະຫາກັສປະແຫ່ງອິນເດັຽໄດ້ນຳເອົາພຣະບໍຣົມທາດຂອງພຣະພຸທເຈົ້າມາປະດິສຖານໄວ້ທີ່ພູກຳພ້ານີ້ (ທີ່ຕັ້ງພຣະທາດພນົມ) ໃນຂນະທີ່ທ່ານເປັນຫົວໜ້າທັມມະທູດ ເດີນທາງມາຈາກປະເທດອິນເດັຽ ມາເຜີຍແຜ່ພຣະພຸທສາສນາໃນສຸວັນນະພູມ. ທ່ານໄດ້ນຳຄນະເດີນທາງມາຮອດອານາຈັກແຫ່ງນຶ່ງທີ່ຕັ້ງພຽງແມ່ນ້ຳຂອງ ຕອນທີ່ເປັນແຂວງຄຳມ່ວນ–ສວັນນະເຂດ ພຣະຣາຊອານາຈັກລາວ, ແລະແຂວງນະຄອນພນົມ–ສາກົນນະຄອນ ພຣະຣາຊອານາຈັກໄທ, ຊຶ່ງໃນສມັຍນັ້ນເອີ້ນວ່າອານາຈັກສີໂຄຕບູນ ຫລືສີໂຄຕບອງຕາມສຳນຽງລາວ. ອານາຈັກສີໂຄຕບອງນີ້ອາດຈະຢູ່ໃນສມັຍດຽວກັນກັບອານາຈັກຟູນັນແຫ່ງປະເທດຂເມນ ເພາະຄຳວ່າຟູນັນ ສຳນຽງຈີນເອີ້ນຄຳວ່າພນົມ ໃນພາສາຂເມນບູຮານ ຊຶ່ງແປວ່າເມືອງແຫ່ງພູເຂົາ. ແລະໃນບໍຣິເວນແຂວງຄຳມ່ວນມີບູຮານສະຖານສມັຍກ່ອນຂເມນບູຮານຫລວງຫລາຍ ຊື່ເມືອງທ່າແຂກກໍດີ ຊື່ນະຄອນພນົມກໍດີ ມີສ່ວນພົວພັນກັບ

ອິນເດັຽແລະຟູນັນທັງນັ້ນ ເມື່ອອານາຈັກຟູນັນຕົກຢູ່ໃນສັຕວັດທີ່ 1 ເຖິງທີ່ 7 ແຫ່ງ ຄ.ສ. ອານາຈັກສີໂຄຕບອງກໍຄົງຢູ່ໃນລະຫວ່າງດຽວກັນ ຍ້ອນວ່າເຮົາໄດ້ຄົ້ນພົບສິລປະຮູບໂຄຣົບ ໂດຍສະເພາະພຣະພຸທຮູບໃນສັຕວັດທີ່ 6 ເຖິງທີ່ 7 ຫລາຍອົງ ຈາກດິນແດນສອງຟາກຝັ່ງແມ່ນ້ຳຂອງ ເມື່ອໄວ ໆ ນີ້ກໍໄດ້ພົບພຣະພຸທຮູບຂອງຊ່າງສະກຸນສິລປະສມັຍສີໂຄຕບອງທີ່ທ່າລາດ ແລະບໍຣິເວນປາກແມ່ນ້ຳເຫືອງພາຍໃນພຣະຣາຊອານາຈັກລາວ.

ດັ່ງນັ້ນພໍຈະກ່າວໄດ້ວ່າ ເຣີ່ມຕົ້ນແມ່ນພຣະມຫາກັສປະເຖຣະຊາວອິນເດັຽ (ບໍ່ແມ່ນມຫາກັສປະຄັ້ງພຸທສມັຍ) ໄດ້ເດີນທາງມາເຜີຍແຜ່ພຣະພຸທສາສນາໃນອານາຈັກສີໂຄຕບອງ ໃນລະຫວ່າງສັຕວັດທີ່ 1 ເຖິງທີ່ 2 ທ່ານໄດ້ນຳເອົາພຣະພຸທສາຣີຣິກະທາດມາດ້ວຍ ແລະຊັກຊວນເຈົ້ານະຄອນຕ່າງ ໆ ໃຫ້ຮ່ວມມືກັນກໍ່ສ້າງພຣະເຈດີບັນຈຸພຣະບໍຣົມທາດຂອງພຣະພຸທເຈົ້າໄວ້ທີ່ພນົມຖ້ຳດຽວກ່ອນ.

ນິທານອຸຣັງຄະທາດບອກວ່າ ມີພຍາຈາກ 5 ເມືອງໄດ້ພາໄພ່ພົນຮ່ວມກັນກໍ່ສ້າງພຣະທາດພນົມນີ້ ບັນຈຸພຣະທາດຫົວເອິກຂອງພຣະພຸທເຈົ້າ, ພຍາທັງ 5 ຄື :–

1. ພຍານັນທະເສນ ເຈົ້າຄອງເມືອງສີໂຄຕບອງ (ຫ່າງຈາກປາຊບັ້ງໄຟເຂົ້າໄປໃນປະມານ 15 ກິໂລແມັດ).
2. ພຍາສຸວັນນະພິງຄານ ເຈົ້າຄອງເມືອງໜອງຫານຫລວງ (ສະກົນນະຄອນ).
3. ພຍາຄຳແດງ ເຈົ້າຄອງເມືອງໜອງຫານນ້ອຍ (ກຸມພະວາປີ).
4. ພຍາອິນທະປັດ ເຈົ້າຄອງເມືອງອິນທະປັດຖະ (ກັມພູຊາ).
5. ພຍາຈຸລນີພົມທັດ ເຈົ້າເມືອງປະກັນ (ຊຽງຂວາງ).

ຄັນລຸເຖິງຣັຊການຂອງພຣະເຈົ້າສມົມທະຣາດ ຣາຊາທິຣາດແຫ່ງອານາຈັກສີໂຄຕບອງ (ປະມານສັຕວັດທີ່ 6) ພຣະອົງໄດ້ຮັບຄຳແນະນຳຈາກພຣະເຖຣະຜູ້ເດີນທາງມາຈາກອິນເດັຽ ແລະພຣະເຖຣະໃນປະເທດຂອງພຣະອົງ ຈຶ່ງໄດ້ສ້າງເສີມຕໍ່ເຕີມພຣະທາດພ້ອຍນີ້ຂຶ້ນອີກຊັ້ນນຶ່ງ, ເທັກນິກໃນການກໍ່ສ້າງຖ່າຍແບບມາຈາກສິລປະກັມອັມທະຣະຍຸກຫລັງຂອງອິນເດັຽໃຕ້ ຄືໃຊ້ແຜ່ນດິນຈີ່ໃຫຍ່ ໆ ຮຽງຊ້ອນກັນ ບໍ່ໄດ້ໃຊ້ເລື່ອມສົມເຂົ້າຫາກັນຢ່າງທີ່ເຮັດໃນສມັຍລ້ານຊ້າງ ປະສານຫລືເຊື່ອມຕໍ່ດ້ວຍນ້ຳຢາຫລືສີນ້ຳບຣານ ຊຶ່ງເຮັດຈາກນ້ຳອ້ອຍ, ຢາງໄມ້, ໜັງສັດ ແລະດິນໜຽວ. ເມື່ອຈອດດີແລ້ວຈຶ່ງຝົນໃຫ້ກ້ຽງເກົາແລະຮາບພຽງດີ ຈຶ່ງໃຫ້ຊ່າງຄວັດສລັກລວດລາຍຕ່າງ ໆ ແລະຮູບຄົນສັດລົງໄປ ຢ່າງຄວາຍ, ໝູ, ຊ້າງ, ມ້າ ແລະກວາງ ສອງດ້ານຂອງແຈພຣະທາດມີພາບຄົນຂີ່ຊ້າງແລະມ້າສລັບກັນໄປ ທັງດ້ານເທິງແລະດ້ານລຸ່ມ. ກ່າວກັນວ່າເປັນຂະບວນແຫ່ພຍາສີໂຄຕບອງ, ລາຍເບື້ອງຫລັງເປັນລາຍກ້ານຂົດ

ກ້ອນຂີ້ເຜີ້ອ, ສ່ວນລາຍເທິງຂອບປະຕູຈາງຫາຍໄປ ທິດໃຕ້ລາຍເທິງຂອບປະຕູເປັນຣູບສະເດັດອອກຊົງຜນວດຂອງພຣະພຸທເຈົ້າ ຊຶ່ງມີສິງປະດັບຢູ່ສອງຂ້າງ ມີຣູບພຣະພຸທເຈົ້າປະທານບາດແກ່ພຍາສີໂຄຕ-ບອງ. ມີຣູບເທວະດາຢູ່ພາຍໃນວົງກົມປະກອບທັງສອງຂ້າງ ແລະມີຣູບສິງຢູ່ພາຍນອກອີກ ປະຕິມາກັມເຫລົ່ານີ້ລ້ວນແຕ່ກ່ຽວກັບພຣະພຸທສາສນາ ຄົງຈະເປັນຂອງເດີມທີ່ສ້າງຂຶ້ນໃນຣັຊການຂອງພຣະເຈົ້າສຸມິນທະຣາດ.

ແຕ່ຖ້າພິຈາຣະນາເບິ່ງຂອບປະຕູດ້ານເໜືອ ຈະເຫັນຣູບພຣະອິສນຸຊົງຄຸດແວດລ້ອມດ້ວຍໝູ່ເທວະດາ ຊຶ່ງເປັນປະຕິມາກັມທາງສາສນາຮິນດູ. ເຂົ້າໃຈວ່າຄົງເຮັດຂຶ້ນຕອນຫລັງໃນສມັຍທີ່ຂເມນບູຮານເຂົ້າມາມີອຳນາດຄອບຄອງພຣະຣາຊອານາຈັກລາວ ລະຫວ່າງສັຕວັດທີ 9 ເຖິງທີ່ 13, ພວກຂເມນບູຮານໄດ້ດັດແປງປູຊະນີຍະສະຖານແຫ່ງນີ້ ເປັນເທວະສະຖານຂອງຮິນດູ.

ພຣະທາດພນົມທາງປວັດສາດ (ປະມານສັຕວັດທີ່ 14–19)

ເມື່ອຊົນຊາດລາວມີອຳນາດເຂົ້າຄອບຄອງດິນແດນສ່ວນນີ້ແລ້ວ ໃນສມັຍຕົ້ນ ໆ ບໍ່ປາກົດວ່າພຣະທາດລູກນີ້ມີຄວາມສຳຄັນຢ່າງໃດ ແຕ່ວ່າເຈົ້າຄອງອານາຈັກກະບອງໃນສັຕວັດທີ່ 14 ຄົງຈະເອົາໃຈໃສ່ບົວຣະບັດພຣະທາດພ່ອຍນີ້ຢູ່ ທີ່ປາກົດຊັດວ່າມີເຈົ້າເມືອງກະບອງມາສ້ອມແປງພຣະທາດນີ້ຈາກສິລາເລກທີ່ພົບໃນປີຈຸລສັກຣາດ 795 (ຄ.ສ. 1433) ສມັຍນີ້ພຣະທາດພນົມຍັງບໍ່ປາກົດລືຊາ ພຣະເຈົ້າແຜ່ນດິນອານາຈັກລ້ານຊ້າງຈຶ່ງບໍ່ສົນໃຈ ພໍລຸເຖິງຣັຊການຂອງສົມເດັດພຣະໂພທິສາຣະຣາດຫລັງຈາກທີ່ພຣະອົງຊົງປະກາດຍົກເລີກບູຊາຜີຟ້າຜີແຖນ ແລະໄດ້ປະກາດເອົາພຣະພຸທສາສນາເປັນສາສນາປະຈຳຣາຊສຳນັກແທນ ພຣະອົງຈຶ່ງຫັນມາດຳເນີນການສົ່ງເສີມພຣະພຸທສາສນາເປັນການໃຫຍ່ເຈົ້າຍິງຂເມນ ຊຶ່ງເປັນພຣະຊາຍາຂອງພຣະອົງ ໄດ້ນຳເອົາເຣື່ອງຣາວຂອງພຣະທາດພນົມຂຶ້ນທູນຖວາຍພຣະອົງຈຶ່ງໄດ້ສະເດັດລົງໄປເມືອງກະບອງ (ທ່າແຂກເກົ່າ) ມີພຣະຣາຊບັນຊາໃຫ້ພຍາກະບອງເປັນຫົວໜ້າສ້ອມແປງຕົກແຕ່ງທາດພນົມຂຶ້ນ ສ່ວນພຣະອົງເອງໄດ້ຊົງສລະຊັບສ້າງວິຫານຫລັງນຶ່ງ ຫລັງຄາປະດັບດ້ວຍແກ້ວທັງມວນ ແລະໄດ້ຕັ້ງຂ້າໃຊ້ຂອງພຣະອົງເອງຜູ້ນຶ່ງ ຊຶ່ງເປັນນ້ອງຊາຍຂອງຂ້າສະເອງ ໃຫ້ດຳຣົງຕຳແໜ່ງພັນເຣືອທິນ ມີໜ້າທີ່ບົວຣະບັດເບິ່ງແຍງແລະຈັດດອກໄມ້ທູບທຽນບູຊາເປັນປະຈຳ ພ້ອມດ້ວຍບໍຣິວານ 3000 ຄົນ. ແລະໄດ້ຊົງສ້າງວິຫານອີກຫລັງນຶ່ງທາງດ້ານເໜືອໃຫ້ຊື່ວ່າວັດສອນສັ່ງ. ຕັ້ງ

ແຕ່ນັ້ນມາພຣະທາດພນົມກໍລືຊາຜາກົດວ່າເປັນສິ່ງສັກສິດ ຄວນແກ່ການສັກກາຣະບູຊາຂອງປະຊາຊົນທັງຫລາຍ.

ລຸເຖິງຣັຊການຂອງສົມເດັດພຣະໄຊຍະເຊດຖາທິຣາດທີ່ 1 (ຄ.ສ. 1550–1572) ລຸນຫລັງທີ່ສະຖາປະນາວຽງຈັນຂຶ້ນເປັນເມືອງຫລວງ ແລະສ້າງພຣະທາດຫລວງແລ້ວ ໄດ້ສະເດັດລົງໄປນະມັສການພຣະທາດຕ່າງ ໆ ທີ່ເມືອງກະບອງ ພຣະອົງກໍໄດ້ໄປນະມັສການພຣະທາດພ່ອຍນີ້ດ້ວຍ ແລະພຣະບັນຊາໃຫ້ສ້າງເສີມຕໍ່ເຕີມພຣະທາດພ່ອຍນີ້ຂຶ້ນອີກຖ້ານນຶ່ງ ເປັນຖ້ານທີ 3. ແລ້ວພຣະຣາຊທານອານາເຂດພ້ອມທັງໝູ່ບ້ານຖວາຍພຣະທາດ.

ລຸນຫລັງທີ່ສົມເດັດພຣະໄຊຍະເຊດຖາທິຣາດສະເດັດສຸຣະຄົດແລ້ວ ພຣະທາດພ່ອຍນີ້ກໍໄດ້ຮັບການອຸປຖັມບຳຣຸງຈາກເຈົ້ານະຄອນກະບອງທຸກ ໆ ພຣະອົງ ສີລາເລກແຜ່ນນຶ່ງບອກວ່າໄດ້ສ້ອມແປງຂຶ້ນອີກເມື່ອ ຄ.ສ. 1614 (ຈຸລສັກຣາດ 976) ໃນຣັຊການຂອງສົມເດັດພຣະວໍຣະວົງສາທັມມິກະຣາດຄາວນັ້ນເຈົ້າຄອງນະຄອນກະບອງມີນາມວ່າ ພຣະບັນດິດໂພທິສານ ຫລືເຈົ້ານະທານາມ ຊຶ່ງໃນຕຳນານພຣະທາດໂພ່ນເອີ້ນວ່າ ພຍາແສນນະຄອນ ຕຳນານທາດພນົມເອີ້ນວ່າ ພຣະເຈົ້ານະຄອນຫລວງພິຊິດທິສາຣາຊທານີສີໂຄດຕະບູນຫລວງ ເຈົ້ານະຄອນອົງນີ້ໄດ້ຂໍ່ຽນຊື່ເມືອງທ່າແຂກ ຊຶ່ງໃນສມັຍນັ້ນເອີ້ນວ່າມະຣຸກຂະນະຄອນ ດີນເປັນເມືອງສີໂຄດຕະບອງ ຫລືສີໂຄດຕະບູນດັ່ງເກົ່າ ພຣະອົງໄດ້ສະເດັດໄປສ້ອມແປງພຣະທາດພ່ອຍນີ້ ໂດຍກໍ່ກຳແພງອ້ອມ ເຮັດປະຕູໂຂງຊຸ້ມກາງແລະທໍໄຫວ້ທັງ 4 ດ້ານ. ຕາມສີລາເລກນັ້ນມີໃຈຄວາມວ່າ.

"ສັກຣາດໄດ້ 976 ປີກາບຍີ່ ນີ້ຮອງ ໄດ້ຣິກ 3 ໂຕ" ກົງກັບແຜ່ນດິນຂອງສົມເດັດພຣະວໍຣະວົງສາທັມມິກະຣາດເຈົ້າລ້ານຊ້າງ".

ລະຫວ່າງຣັຊການຂອງສົມເດັດພຣະເຈົ້າສຸຣິຍະວົງສາທັມມິກະຣາດ (ຄ.ສ. 1633–1690) ຊຶ່ງເປັນລະຍະເວລາທີ່ມີຄວາມສງົບສຸກ ບ້ານເມືອງກໍຈະເຣີນຮຸ່ງເຮືອງຕລອດ 57 ປີ ພຣະທາດພນົມກໍໄດ້ຮັບການບົວຣະບັດເບິ່ງແຍງດີດີເກົ່າ ເຈົ້າຄອງນະຄອນສີໂຄດຕະບອງໄດ້ທຳໜ້າທີ່ຕາງພຣະເນດພຣະກັນ.

ລຸນຫລັງພຣະມຫາກະສັດອົງນີ້ແລ້ວ ບ້ານເມືອງກໍເຕັມໄປດ້ວຍຄວາມວຸ້ນວາຍ ເຈົ້ານາຍມົວແຕ່ຍາດແຍ່ງຣາຊສົມບັດກັນ ຈົນເປັນເຫດໃຫ້ອານາຈັກລ້ານຊ້າງທີ່ກວ້າງໃຫຍ່ແຕກແຍກກັນ ລະຫວ່າງນີ້ທ່ານພຣະຄຣູຍອດແກ້ວໂພນສເມັກ (ຍາຄຣູຂີ້ຫອມ) ໄດ້ພາຍາດໂຍມອົພຍົບອອກຈາກວຽງຈັນເພື່ອສແວງຫາທີ່ປອດໄພ ໄດ້ໄປຈຳພັນສາຢູ່ພຣະທາດພນົມນີ້ເປັນເວລາ 3 ປີ ໄດ້ພາອອກຕົນຍາດໂຍມບົວຣະບັດພຣະທາດອົງນີ້ ຢູ່ບໍ່ດົນກໍໄດ້ຄິດວ່າບໍ່ມີຄວາມປອດພັຍ ຈຶ່ງໄດ້ອົພຍົບລ່ອງລົງໄປອາສັຍຢູ່

ເມືອງພນົມເປັນປະເທດຂເມນ ດັ່ງພາກົດໃນພົງສາວະດານເມືອງນະຄອນຈຳປາສັກນັ້ນແລ້ວ.

ໃນປີ ຄ.ສ. 1808 ສົມເດັດພຣະເຈົ້າອະນຸໄຊຍະເຊດຖາທິຣາດ ໄດ້ສະເດັດລົງໄປສ້າງເສີມຕໍ່ພຣະທາດທາດພນົມຂຶ້ນອີກ ພ້ອມທັງເຮັດບຸນສເລີມສລອງ ແລະອຸທິດຂ້າໂອກາດບໍ່ວຣະບັດຮັກສາພຣະທາດ ຕາມຍ່າງປະເພນີກະສັດມາແຕ່ກ່ອນ ພຣະທາດພນົມໃນສມັຍນັ້ນ ຈຶ່ງສູງຂຶ້ນຮອດ 43 ແມັດ

ພໍຮອດສມັຍດິນແດນຟາກຝັ່ງຕາເວັນຕົກຂອງແມ່ນ້ຳຂອງ ຕົກເປັນສິດຂອງພຣະຣາຊອານາຈັກໄທ ເມື່ອ ຄ.ສ. 1893 ຕາມສັນຍາຝຣັ່ງເສດກັບສຍາມ ພຣະທາດພນົມກໍໄດ້ຕົກເປັນສົມບັດຂອງໄທໂດຍສົມບູນ ທາງຣາຊການໄທໄດ້ລົງມືດັດແປງພຣະທາດພນົມໃໝ່ ເມື່ອ ຄ.ສ. 1939 ໄທລັງກຽດສີມືຊ່າງລາວ ໂດຍສະເພາະສີມືຊ່າງຂອງສົມເດັດພຣະເຈົ້າອະນຸ ຈຶ່ງໄດ້ມ້າງຍອດພຣະທາດອອກໝົດແລະ ເຮັດຂຶ້ນໃໝ່ດັ່ງທີ່ເຫັນຢູ່ໃນປັດຈຸບັນນີ້ ຍອດພຣະທາດພນົມຈຶ່ງສູງກວ່າເດີມ 14 ແມັດ ດັ່ງນັ້ນ ຄວາມສູງຂອງພຣະທາດທັງໝົດຈຶ່ງຮອດ 57 ແມັດ.

ລັກສນະພຣະທາດພນົມ

ລັກສນະຮູບ 4 ລ່ຽມທຍໍ້ມຸມ ກໍ່ດ້ວຍດິນຈີ່ ເຊື່ອມຕໍ່ດ້ວຍນ້ຳຢາ ມີ 3 ຖ້ານ ຕົກແຕ່ງດ້ວຍລວດລາຍ ແທ່ນແທກໂດຍອ້ອມ 74 ແມັດ ສູງ 57 ແມັດ ເປັນເຈດີເດັ່ງວິຫານ.

ຍອດພຣະທາດເດີມເປັນແບບດວງປີ ຕາມສິລປະຂອງລາວແທ້ ຕໍ່ມາໄທໄດ້ເຮັດໃໝ່ຮູບຮ່າງຈຶ່ງບໍ່ງຽມໄປຈັກໜ່ອຍ ແລະເຮັດລີງລາຍເຄືອດອກໄມ້ຍໍກ້ານ.

* * *

ຫໍພຣະແກ້ວ ວຽງຈັນ

ວັດຫໍພຣະແກ້ວ ນະຄອນວຽງຈັນ

ໂດຍ ຈັນທ໌ ອິນທຸພິລາສ

ວັດຫໍພຣະແກ້ວ ນະຄອນວຽງຈັນ ເປັນວັດມີຊື່ສຽງ ຕົວຫໍພຣະແກ້ວເອງກໍສູງໃຫຍ່ ສງ່າງາມກວ່າສິ່ງກໍ່ສ້າງທາງສາສນະສະຖານໃດ ໆ ໃນນະຄອນວຽງ ເປັນສະຖານທີ່ຫາບໍ່ຍາກ ຕັ້ງຢູ່ດ້ານທ່າຂອງຖນົນໄຊຍະເຊດຖາທິຣາດ ມີສະຖານທີ່ ແລະວັດສຳຄັນອ້ອມຢູ່ ຄື ວັດສີສະເກດ ຫລື ວັດສະຕະສະຫັດສາຣາມ ຕັ້ງຢູ່ທິດເໜືອ ຄົນລະຟາກຖນົນໄຊຍະເຊດຖາທິຣາດ, ດ້ານທິດຕາເວັນອອກ ມີໂຮງພຍາບານມະໂຫສົດຕັ້ງຢູ່. ວັດຫໍພຣະແກ້ວ ຕັ້ງຢູ່ຮ່ວມກຳແພງໃຫຍ່ກັບສຳນັກພຣະຣາຊວັງ ທີ່ຕັ້ງຢູ່ທາງດ້ານທ່າ ແລະກັບຫໍຄຳຫລັງເກົ່າ ເຊິ່ງເຄີຍເປັນສະພາຜູ້ແທນຣາສດອນມາສມັຍນຶ່ງ ໃນບັດຈຸບັນເພິ່ນມ້າງແລ້ວ ວາງສີລາຣິກສ້າງໃໝ່ເມື່ອ ວັນທີ 20–7–1974 ສະຖານທີ່ອີກແຫ່ງນຶ່ງ ເຊິ່ງຄວນກ່າວໄວ້ເປັນປວັດກໍ່ຄື ໂຮງສົມເດັດເຈົ້າມະຫາອຸປຣາດ ເພັດຊຣາດ ທີ່ຕັ້ງຢູ່ດ້ານຕາເວັນອອກຂອງສຳນັກພຣະຣາຊວັງ ຫລືຢູ່ດ້ານທ່າ ຂອງຫໍພຣະແກ້ວ ເຊິ່ງບັດນີ້ ເພິ່ນໄດ້ມ້າງຖິ້ມເສັຽແລ້ວ ໃນປີ 1974 ນີ້ເອງ.

ຫໍພຣະແກ້ວ ມີການກ່າວເຖິງປວັດການສ້າງໄວ້ ແຕ່ເລັກນ້ອຍບໍ່ມີບ່ອນໃດກ່າວໄວ້ພິສດານ, ແມ່ນວ່າພົງສາວະດານ ສະບັບກະຊວງສຶກສາທິການ ເຊິ່ງຣຈນາໂດຍທ່ານມະຫາສິລາ ວີຣະວົງສ໌ ກໍກ່າວເຖິງພໍຍ່ອຍດຽວດັ່ງນີ້ :

"ເຖິງປີ ຈຸລສັກຣາດ 922 (ຄ.ສ. 1560) ສົມເດັດພຣະໄຊຍະເຊດຖາທິຣາດເຈົ້າ ທົງພິຈາຣະນາເຫັນວ່າ ນະຄອນຊຽງທອງ ເປັນທີ່ຄັບແຄບບໍ່ກວ້າງຂວາງ ແລະອີກປະການນຶ່ງ ກໍຢູ່ໃນທາງເດີນຂອງພະມ້າ ເຊິ່ງກຳລັງເປັນສັດຕູຢູ່ກັບນະຄອນຊຽງທອງ ທັງພິຈາຣະນາເຫັນວ່າ ເມືອງວຽງຈັນເປັນນະຄອນອັນໃຫຍ່ ມີບ່ອນທຳມາຫາກິນກວ້າງຂວາງ ອຸດົມດ້ວຍເຂົ້າປາອາຫານ ສົມຄວນຈະຕັ້ງເປັນພຣະມະຫານະຄອນໄດ້ ທົງຈິນຕະນາແລ້ວ ກໍທົງປຶກສາຫາລືນຳເສນາມຸນຕີທັງຫລາຍ ພວກເສນາມຸນຕີທັງຫລາຍກໍເຫັນດີນຳ; ດັ່ງນັ້ນພຣະອົງຈຶ່ງທົງມອບເວນນະຄອນຊຽງທອງ ໃຫ້ພຣະສັງຄະເຈົ້າຢູ່ເຝົ້າຮັກສາ ພ້ອມດ້ວຍພຣະບາງເຈົ້າ ສ່ວນພຣະອົງໄດ້ເຊີນເອົາພຣະແກ້ວມໍຣະກົດ ແລະພຣະແຊກຄຳກັບພຣະຣາຊສົມບັດທັງມວນແລ້ວ ກໍຍົກຈະຕຸຣົງຄະເສນາໂຍທາທານລົງມາຢູ່ນະຄອນວຽງຈັນ ຈຶ່ງຂນານນາມນະຄອນວຽງຈັນຂຶ້ນວ່າ "ພຣະນະຄອນຈັນທະບຸຣີສຣີສັຕນາຄນະຫຸດ ອຸຕມະຣາຊທານີ" ໃນປີ ກົດສັນ

(ປີອອກ) ຈຸລສັກຣາດໄດ້ 922, ສ່ວນພຣະນະຄອນຊຽງທອງນັ້ນ ຈຶ່ງເອີ້ນວ່າ ນະຄອນຫລວງພຣະບາງ ແຕ່ກາລະນັ້ນມາ ເຫດວ່າ ພຣະບາງເຈົ້າ ຍັງສະຖິດຢູ່ທີ່ນັ້ນ........, ແລ້ວພຣະອົງກໍໄດ້ສ້າງພຣະມະຫາຜາສາດຣາຊວັງຂຶ້ນໃໝ່ພ້ອມທັງຫໍພຣະແກ້ວ ພຣະແຊກຄຳຢ່າງວິຈິດພິສດານຍິ່ງນັກ" ດັ່ງນີ້.

ນັບແຕ່ກາລະນັ້ນມາ ບໍ່ມີຜາກົດໃນຣັຊສມັຍຂອງພຣະເຈົ້າກຸງສຣີສັຕນາຄນະຫຸດ ລ້ານຊ້າງ ວຽງຈັນອົງໃດວ່າໄດ້ປະຕິສັງຂອນສ້ອມແປງຫໍພຣະແກ້ວນັ້ນຂຶ້ນຕື່ມຢ່າງໃດ ໃນປາງລາວຍັງເປັນເອກ–ຣາດອັນຍາວນານ, ແມ່ນວ່າ ໃນສມັຍລຸນຫລັງນະຄອນວຽງຈັນ ຈະຖືກຍຶດຄອງຕ້ອງເສັຽເອກຣາດໃຫ້ແກ່ພະມ້າໄປໃນລະຍະນຶ່ງກໍບໍ່ມີການກ່າວເຖິງວ່າ ພະມ້າຈັດການສະຖານໃດກັບອົງພຣະແກ້ວ ແລະຫໍພຣະແກ້ວນັ້ນ.

ຕໍ່ມາເຖິງ ຣັຊການພຣະເຈົ້າສິຣິບຸນຍະສານ ພົງສາວະດານສະບັບດັ່ງກ່າວຈຶ່ງບັນທຶກກ່ຽວກັບເຣື່ອງພຣະແກ້ວໄວ້ ເຊິ່ງໃຜ ໆ ອ່ານແລ້ວຄົງຈະອົດເສົ້າໂສກກຳສຸດໃຈບໍ່ໄດ້ ດັ່ງເນື້ອຄວາມວ່າ :

"ພຣະເຈົ້າສິຣິບຸນຍະສານ ຈຶ່ງແຕ່ງໃຫ້ ເຈົ້ານັນທະເສນ ຣາຊໂອຣົດເປັນແມ່ທັບຄຸມທະຫານອອກຈາກເມືອງໄປຕີຕ້ານທະຫານໄທ, ເຈົ້ານັນທະເສນຂີ່ຊ້າງພາຍຄຳສູງທຶກສອກສາມນິ້ວ (ອອກໄປຮົບ)

ຕັ້ງແຕ່ຮົບກັນມາໄດ້ 4 ເດືອນເສດ ກອງທັບໄທຍັງບໍ່ສາມາດເຂົ້າຕີເມືອງໄດ້. ແຕ່ພຣະເຈົ້າສິຣິບຸນຍະສານເຫັນວ່າ ຈະສູ້ໄປບໍ່ໄຫວ ຈຶ່ງພາເອົາເຈົ້າອິນ ເຈົ້າພົມ ຣາຊໂອຣົດ ແລະຄົນສນິດລັກລົງເຮືອລ່ອງໜີໄປເມືອງຄຳເກີດໃນເວລາກາງຄືນ. ຝ່າຍເຈົ້ານັນທະເສນໄດ້ຊາບວ່າ ພຣະຣາຊບິດາລັກໜີແລ້ວກໍເສັຽພຣະທັຍ ຈຶ່ງຕົກລົງໃຈເປີດປະຕູເມືອງຍອມໃຫ້ກອງທັບໄທ ເຂົ້າເມືອງໄດ້ ໃນວັນຈັນເດືອນ 10 ແຮມ 3 ຄ່ຳ ປີກຸນ ຈຸລສັກຣາດ 1141 (ຄ.ສ. 1779, ພ.ສ. 2322). ເມື່ອກອງທັບໄທເຂົ້າເມືອງໄດ້ແລ້ວ ກໍຈັບເອົາເຈົ້ານັນທະເສນ ຣາຊໂອຣົດ ເຈົ້າອຸປຣາດຄອງພ້າ ແລະພຣະນາງແກ້ວຍອດຟ້າກັລຍານີສຣີກະສັຕຣີ ພຣະຣາຊທິດາຂອງພຣະເຈົ້າສິຣິບຸນຍະສານ ຕລອດຈົນພຣະບໍຣົມວົງສານຸວົງ ເສນາຂ້າຣາຊການຜູ້ໃຫຍ່ສາວສນົມນອກໃນທັງປວງໄວ້ໝົດ ແລ້ວກໍກວາດເກັບເອົາຊັບສິນເງິນຄຳເຂົ້າຂອງອັນມີໃນຫ້ອງພຣະຄັງຫລວງ ແລະຕາມຫໍໂຮງບ້ານເຮືອນຂອງຂ້າຣາຊການໝົດທຸກແຫ່ງ ຕລອດເຄື່ອງສັພສາຕຣາອາວຸດປືນໃຫຍ່ປືນນ້ອຍເປັນອັນມາກ ແລະ *ພຣະແກ້ວມໍຣະກົດ ພຣະບາງ* ເມື່ອກວາດເກັບເອົາໝົດແລ້ວ ຈຶ່ງໄດ້ຂົນຂ້າມໄປໄວ້ເມືອງພັນພ້າວ ພ້ອມດ້ວຍຄອບຄົວຊາວເມືອງວຽງຈັນທັງມວນແລ້ວ ແມ່ທັບໄທ ຈຶ່ງໃຫ້ *ສ້າງຫໍພຣະແກ້ວ* ຂຶ້ນໄວ້ທີ່ເມືອງພັນພ້າວເປັນການຊົ່ວຄາວ ແລະພ້ອມກັບຕີວຽງຈັນໄດ້ນີ້ ແມ່ທັບໄທ ກໍໄດ້ບັງຄັບໃຫ້ເຈົ້າສຸຣິຍະວົງ ເຈົ້ານະຄອນຫລວງພຣະບາງຍອມເປັນເມືອງຂຶ້ນຂອງປະເທດໄທດັ່ງດຽວກັນ. ເປັນອັນວ່າ ພຣະແກ້ວມໍຣະກົດ ທີ່ສະເດັດມາເປັນມິ່ງ

ຂວັນເມືອງລາວ ແຕ່ປີ ພ.ສ. 2093 (ຄ.ສ. 1550) ແລະປະທັບຢູ່ນະຄອນຊຽງທອງ (ຫລວງພຣະບາງ) ເປັນເວລາ 11 ປີ ເຖິງປີ ພ.ສ. 2113 (ຄ.ສ. 1560) ໄດ້ສະເດັດມາປະທັບທີ່ກຸງຈັນທະບຸຣີສຣີສັຕນາຄນະຫຸດຈົນຮອດປີ ພ.ສ. 2322 ເປັນເວລາເຫິງນານເຖິງ 230 ປີນັ້ນ ກໍຕ້ອງສະເດັດຈາກໄປ ພ້ອມກັບຊາຕາເມືອງຂາດ !

ເມື່ອແຜ່ນດິນລາວທັງ 3 ອານາຈັກຕົກເປັນຫົວເມືອງຂຶ້ນຂອງໄທແລ້ວ ລ່ວງເລີຍມາເຖິງສມັຍຂອງພຣະເຈົ້າອະນຸວົງ (ເຊິ່ງໃນສີລາເລກວັດສີສະເກດອອກພຣະນາມວ່າ ພຣະໄຊຍະເຊດຖາທິຣາດ ອີກອົງນຶ່ງ) ພົງສາວະດານສະບັບກະຊວງສຶກສາທິການ ໄດ້ບັນທຶກເຫດການກ່ຽວກັບຫໍພຣະແກ້ວໄວ້ ກ່ອນທີ່ພຣະອົງຈະທຳການກູ້ເອກຣາດພຽງແຖວດຽວວ່າ "ໃນປີ (ຄ.ສ. 1816) ໄດ້ທຳບຸນສລອງຫໍພຣະແກ້ວ ແລະຫໍໄຕ" ພຣະອົງໄດ້ປະຕິສັງຂອນຫໍພຣະແກ້ວ ເຊິ່ງຍັງເຫລືອແຕ່ພຣະແທ່ນກັບຂວັນພຣະແກ້ວນັ້ນຫລືຢ່າງໃດ ? ແລະທີ່ວ່າ ສລອງຫໍໄຕນັ້ນ ແມ່ນຫໍໄຕຢູ່ວັດໃດແທ້ ? ສ່ວນເຣື່ອງພາກົດໃນສີລາເລກວັດມີສະເກດວ່າ "ພຣະເຈົ້າອະນຸວົງ ທົງສ້າງວັດສະຕະສະຫັສສາຣາມ (ວັດແສນ) ແຕ່ປີ ພ.ສ. 2361 (ຄ.ສ. 1818) ແລະໄດ້ສລອງວັດ ພ້ອມທັງສິມກົນລຽນກະດີ, ທາດ ແລະຫໍໄຕ" ນັ້ນບໍ່ເຫັນບັນທຶກໄວ້ໃນພົງສາວະດານສະບັບນັ້ນ.

ໃນຣັຊການພຣະເຈົ້າອະນຸວົງນີ້ເອງ ພຣະອົງໝາຍຈະທຳການກອບກູ້ເອກຣາດ ປົດແອກໄທຈາກຄໍຂອງປະຊາຊົນລາວ ແຕ່ບໍ່ເປັນຈັ່ງບຸນ ພຣະອົງທົງເສັຽຊັຍ ໄທເຂົ້າທຳລາຍວຽງທັງຣື້ທັງເຜົາຫໍຜາສາດຣາຊວັງ ກຳແພງເມືອງຕລອດຕັດໂຄ່ນກົກໝາກກົກພ້າວ ແລະກົກໄມ້ທີ່ໃຊ້ກິນໝາກອື່ນ ໆ ຈົນກ້ຽງວຽງ. ເມື່ອພຣະເຈົ້າອະນຸວົງທົງຫລົບພັຍໄປຢູ່ເມືອງແກວແລ້ວຫລົບຕ່າວຄືນມາວຽງ ພ້ອມດ້ວຍຄົນມານຳພັນປາຍ ທະຫານແກວ 80 ຄົນ ພຣະອົງໄປພັກເຊົາຢູ່ຫໍພຣະແກ້ວ. ຫໍພຣະແກ້ວຍັງບໍ່ຖືກທຳລາຍມ້າງເພໃນຕອນນັ້ນ, ແຕ່ຖືກເຜົາ–ທຳລາຍຕອນພຣະເຈົ້າແຜ່ນດິນໄທ ສັ່ງໃຫ້ທຳລາຍວຽງຈັນເທື່ອທີສອງ, ໄທເຮັດກັບວຽງຈັນປາງນັ້ນ ປານວ່າ ເອົາວຽງຈັນເປັນເຄື່ອງແກ້ແຄ້ນແທນພະມ້າ ທີ່ທຳລາຍກຸງສຣີອະຍຸທຍາ ປີ ພ.ສ. 2310 (ຄ.ສ. 1767) ນັ້ນແທ້ ໆ !

ແຕ່ຢ່າງໃດກໍຕາມ, ເມື່ອເມືອງລາວຫລຸດຈາກແອກອຳນາດຂອງໄທເມື່ອ ປີ ພ.ສ. 2436–ຄ.ສ. 1893 ເຂົ້າສູ່ແອກອຳນາດຂອງຝຣັ່ງແລ້ວ, ກໍເປັນທີ່ຮູ້ກັນທົ່ວໄປວ່າ ຫໍພຣະແກ້ວນັ້ນໄດ້ເພພັງລົງເປັນຊາກກອງດິນຈີ່, ເຄື່ອງໄມ້ແນວທີ່ທົນແດດທົນຝົນທ່ານັ້ນ ທີ່ຍັງເຫລືອຢູ່ ພ້ອມກັບພຣະພຸທຮູບທອງຫລໍ່ອົງໃຫຍ່ ຍັງສູ້ທົນຕໍ່ແດດລົມຝົນ ເຝົ້າຊາກຫໍພຣະແກ້ວຢູ່ ສິ່ງມີຄ່າອັນນຶ່ງ ຍັງເຫລືອມາໃຫ້ເຫັນສີມືສິລປະຂອງຄົນບູຮານ (ອາດຈະແມ່ນ) ສມັຍພຣະເຈົ້າໄຊຍະເຊດຖາທິຣາດ ທີ 1 ກໍຄືຝາປະຕູໄມ້ຄວັດ

ອັນວິຈິດພິສດານ ເຊິ່ງຢູ່ປະຕູທາງດ້ານຕາເວັນອອກ ປັດຈຸບັນ ແລະຝາປະຕູໄມ້ນີ້ ໄດ້ຂ້າມທະເລໄປອວດສິລປະຂອງລາວເຖິງກຸງປາຣີ ປະເທດຝຣັ່ງເສດ ເມື່ອປີ 1930.

ດັ່ນເຖິງປີ ພ.ສ. 2479 (ຄ.ສ. 1936) ສົມເດັດເຈົ້າມະຫາອຸປຣາດເພັດຊຣາດ ນາຍົກພຸທບັນດິດສະພາຈັນທະບຸຣີແຫ່ງຣາຊອານາຈັກລາວ ພ້ອມດ້ວຍພຣະສົງສາມເນນ ແລະ ປະຊາຊົນພົລເມືອງລາວ ພາກັນມີເຈຕນາສັດທາ ຮື້ຖອນກົກໄມ້ເດື່ອໄມ້ ແລະ ຊາກດິນຈີ່ນັ້ນອອກ ຈົນເຫັນແຜນຜັງເດີມແລ້ວປະຕິສັງຂອນສ້ອມແປງໃໝ່ ໂດຍມີສົມເດັດເຈົ້າສຸວັນນະພູມາເປັນນາຍຊ່າງໃຫຍ່ ການປະຕິສັງຂອນໄດ້ເຮັດຕາມແຜນຜັງເດີມ ທີ່ພໍຈະເຫັນເຄົ້າໄດ້ ແລະ ການປະຕິສັງຂອນສ້ອມແປງມາສຳເຣັດລົງໃນປີ ພ.ສ. 2485 (ຄ.ສ. 1942), ແຕ່ຕາມສັງເກດແລ້ວການຕິດດອກດວງລິງລາຍຍັງບໍ່ທັນສົມບູນດັກ. ກຳແພງໃຫຍ່ທີ່ອ້ອມຮອບຫໍພຣະແກ້ວທັງສຳນັກພຣະຣາຊວັງ ແລະ ບໍຣິເວນທັງໝົດສ້າງຂຶ້ນໃນສມັຍຂອງນາຍພົນຕຣີ ພູມີ ໜໍ່ສວັນ ມີອຳນາດ.

ມີສິ່ງໜ້າຄິດອີກຢ່າງນຶ່ງຄື ພຣະພຸທຮູບອົງໃຫຍ່ ຫລໍ່ດ້ວຍທອງ ແລະພອກຂມຸກສີດຳ ເຊິ່ງຜິນພຣະພັກຂຶ້ນທາງເໜືອນ້ຳ ຫລືທາງທິດຕາເວັນຕົກ ໃນຫໍພຣະແກ້ວ ປັດຈຸບັນນີ້ ສ້າງແຕ່ເມື່ອໃດໃຜສ້າງ ? ຕາມສືບຖາມໄດ້ຄວາມວ່າ ເມື່ອຮື້ຊາກຫໍພຣະແກ້ວ ເພື່ອປະຕິສັງຂອນໃຫມ່ນັ້ນ ພຣະພຸທຮູບອົງນີ້ ປະດິສຖານຢູ່ທາງຝາຫໍພຣະແກ້ວ ດ້ານຕາເວັນຕົກ ຜິນພຣະພັກໄປກ້ຳຕາເວັນອອກ ຕາມແຜນຜັງໃນໜັງສືທີ່ທ່ານປາມັງເຈຂຽນໄວ້ ພຣະພຸທຮູບອົງນີ້ ຕັ້ງຢູ່ໜ້າແທ່ນເກົ່າຂອງພຣະແກ້ວມໍຣະກົດ, ແຕ່ທ່ານຜູ້ນຶ່ງ ຢັ້ງຢືນວ່າ ໄດ້ເຫັນດ້ວຍຕາຕົນເອງວ່າ ແທ່ນພຣະໃຫຍ່ອົງນີ້ ຢູ່ຕິດກັບຝາຜນັງຫໍ ດ້ານຕາເວັນຕົກ, ມີພຣະພຸທຮູບປະທາຍທີ່ຫັກເພຢູ່ກ້ຳນ້າຂອງ ແລະມີແທ່ນພຣະແກ້ວເກົ່າຢູ່ດ້ານທິດ (ຫລືທິດອຸດອນ), ຂ້າພະເຈົ້າຢາກຈະສັນນິຖານວ່າ ພຣະພຸທຮູບໃຫຍ່ອົງນີ້ ຄົງຈະສ້າງຫລັງຈາກພຣະແກ້ວມໍຣະກົດຖືກໄທປຸ້ນເອົາໄປແລ້ວ ເພາະເມື່ອພຣະແກ້ວຍັງຢູ່ເປັນປະທານເປັນຂວັນຂອງຫໍ ຫລືຂອງວັດນັ້ນເພີນຄົງຈະບໍ່ສ້າງພຣະພຸທຮູບອົງອື່ນຂຶ້ນມາເສັງປາຣະມີກັບພຣະແກ້ວ ເພາະເຖິງຈະສ້າງຂຶ້ນມາກໍຄົງຈະບໍ່ແພ້ປາຣະມີຂອງພຣະແກ້ວ; ດັ່ງນັ້ນເມື່ອເສັຽພຣະແກ້ວໄປແລ້ວ ເພີ່ນຈຶ່ງສ້າງພຣະພຸທຮູບອົງນີ້ຂຶ້ນມາເພື່ອເປັນຂວັນຫໍພຣະແກ້ວ ແທນພຣະແກ້ວມໍຣະກົດ ແຕ່ຈະເປັນພຣະເຈົ້າມະຫາຊີວິດອົງໃດສ້າງຍັງເປັນການສົງສັຍຢູ່ ເພາະເພີ່ນບໍ່ຈາຣຶກຂໍ້ຄວາມໃດ ໆ ໄວ້ໃນແທ່ນພຣະພຸທຮູບອົງນັ້ນເລີຍ, ຫາກພຣະພຸທຮູບອົງນີ້ສ້າງຂຶ້ນເມື່ອພຣະແກ້ວສະເດັດຈາກໄປແລ້ວ ກໍຄົງຈະຕ້ອງຫລໍ່ເປັນປ່ຽງ ໆ ແລ້ວເອົາເຂົ້າໄປຈອດກັນໃນຫໍອີກເທື່ອນຶ່ງ ຄົງຈະບໍ່ເຈາະຫໍພຣະແກ້ວ ເອົາພຣະພຸທຮູບໃຫຍ່ຂນາດນັ້ນເຂົ້າໄປຄັກແນ່ ໄດ້ຍິນວ່າ ທີ່ເອົາພຣະພຸທຮູບອົງນີ້ຜິນພຣະພັກຂຶ້ນທາງເໜືອນັ້ນເປັນຄວາມຄິດຂອງສົມເດັດເຈົ້າມະຫາອຸປ–

ຣາດເພັຊຣາດ ແຕ່ພຣະອົງມີພຣະປະສົງຢ່າງໃດແທ້ນັ້ນ ຕ້ອງສືບສວນຕໍ່ໄປ.

ຄວາມປາຖນາຂອງຂ້າພະເຈົ້າ ຢາກຈະໃຫ້ຫໍພຣະແກ້ວ ມີພຣະແກ້ວທີ່ແທ້ຈິງ ແມ່ນຈະບໍ່ເປັນອົງເດີມກໍຕາມ ຍັງຈະມີສັກສິກວ່າເປັນພຽງຫໍພິພິທພັນດັ່ງໃນປັດຈຸບັນນີ້.

ເພື່ອໃຫ້ປວັດຫໍພຣະແກ້ວມີເນື້ອຫາສາຣະສົມບູນຍິ່ງຂຶ້ນ ຈຶ່ງໄດ້ເຊີນເອົາພຣະນິພົນຂອງສະເດັດເຈົ້າສຸວັນນະພູມາ (ເຈົ້າກຣົມມາ) ມາຍົກຣັຖມົນຕີອົງປັດຈຸບັນມາພິມຕໍ່ເຕີມໄວ້ດັ່ງຕໍ່ໄປນີ້ :

ການປະຕິສັງຂອນ ວັດຫໍພຣະແກ້ວ ທີ່ນະຄອນວຽງຈັນ

ໃນສມັຍທີ່ຂ້າພະເຈົ້າ ເປັນຜູ້ແນບນຳຜແນກອາຄານພົລເຮືອນ ຂອງກົມໂຍທາທິການແຫ່ງປະເທດລາວ ຂ້າພະເຈົ້າ ໄດ້ຂຽນບົດຄວາມສັ້ນໆບົດນຶ່ງ ລົງໃນ "ວາຣະສານມິຕພາບແຫ່ງເມືອງລາວ" ສະບັບທຳອິດ. ສາມສິບປີຕໍ່ມາ ຂ້າພະເຈົ້າຮູ້ສຶກດີໃຈທີ່ໄດ້ເຫັນບົດຄວາມນີ້ປາກົດໃນວາຣະສານມິຕພາບແຫ່ງຣາຊອານາຈັກລາວນັ້ນອີກ ພະຍານອັນນີ້ ເຮັດໃຫ້ເຮົາລຳນຶກເຖິງ ການທຳລາຍຂອງສົງຄາມຈາກຕ່າງປະເທດ. ວັດຫໍພຣະແກ້ວໄດ້ສ້າງຂຶ້ນໃໝ່ຈາກສີມືຂອງຄົນລາວເອງ, ເຖິງແມ່ນວ່າ ຂ້າພະເຈົ້າໄດ້ຮັບກຽດເປັນຜູ້ນຳໃນເພື່ອນຮ່ວມຊາດຈຳນວນໜ້ອຍ ໃນຄວາມສຳເຣັດນີ້, ແຕ່ຂ້າພະເຈົ້າກໍພາກພູມໃຈທີ່ການກໍ່ສ້າງໃໝ່ນີ້ໄດ້ກາຍເປັນເຣື່ອງລະດັບຊາດໃນເທື່ອທຳອິດ.

ວຽງຈັນ, ເດືອນ ພຶສພາ 1970.

ສະເດັດ ເຈົ້າສຸວັນນະພູມາ

ພຣະໄຊຍະເຊດຖາທິຣາດກະສັດແຫ່ງກຸງລ້ານຊ້າງ ໄດ້ຈັດສ້າງຫໍພຣະແກ້ວຂຶ້ນເມື່ອປີ 1565 ເພື່ອເປັນທີ່ປະດິສຖານພຣະພຸທຮູບ ແກ້ວມໍຣະກົດ ຊຶ່ງໄດ້ນຳມາຈາກນະຄອນຊຽງໃໝ່. (1)

---

(1) ວິສວະກອນ ໄດ້ສ້າງພຣະແກ້ວຕາມຄຳຂໍຮ້ອງຂອງພຣະເຖຣະນາຄເສນແຫ່ງກຸງປາຕະລີບຸດ ສ້າງດ້ວຍແກ້ວມໍຣະກົດ ທີ່ຍັກສາແຫ່ງພູເຂົາເວບູລະບັບພະຕາມອບໃຫ້ ພຣະພຸທຮູບທີ່ທົ່ງອິດທິຣິດໄດ້ຄ່ຽນຍ້າຍຈາກເມືອງປາຕະລີບຸດ ມາລັງກາ, ອິນທະປັດຖະ (ຂເມນ), ອະຍຸທຍາ, ກຳແພງເພັດ, ລະໂວ້, ກັບມາກຳແພງເພັດອີກ, ໄປຊຽງຣາຍ, ຊຽງໃໝ່ ແລ້ວພຣະເຈົ້າໄຊຍະເຊດຖາທິຣາດ ຣາຊໂອຣົດຂອງພຣະໂພທິສາຣະຣາດ (1547) ເຊີນມານະຄອນຫລວງພຣະບາງ. ປວັດໄດ້ບອກພຽງເທົ່ານີ້ກ່ຽວກັບຄວາມເປັນມາຂອງພຣະແກ້ວ ກ່ອນຈະໄດ້ເຊີນມານະຄອນວຽງຈັນ (ຈາກ ລ. ພີນົດ, ການຄົ້ນຄວ້າກ່ຽວກັບອັກສອນສາດຂອງລາວ).

ຫໍພຣະແກ້ວ ກໍຄືກັນກັບສິ່ງກໍ່ສ້າງຕ່າງ ໆ ທາງສາສນາໃນຣາຊອານາຈັກລາວ, ຊຶ່ງເປັນຫໍສີ່ລ່ຽມຍາວ ມີລະບຽງອ້ອມຮອບ ມີຫ້ອງໃຫຍ່ທາງກາງ ເປັນບ່ອນປະດິສຖານພຣະແກ້ວ ແລະ ມີບ່ອງຢ້ຽມ ເພື່ອໃຫ້ແສງສວ່າງ 10 ບ່ອງດ້ວຍກັນ, ລະບຽງກວ້າງ 4 ແມັດ ຂັ້ນດ້ວຍຝາພນັງ ດ້ານເໜືອ ແລະດ້ານໃຕ້. ຝາພນັງດ້ານໃຕ້ມີປະຕູ 3 ບ່ອງ ຊຶ່ງເປັນທາງຜ່ານຣະຫວ່າງລະບຽງດ້ານໃຕ້ກັບຫ້ອງກາງໃຫຍ່ ປະຕູແຕ່ລະບ່ອງອ້ອມດ້ວຍວົງກົບ ແລະຊຸ້ມປະຕູເອ້ເຕັມໄປໝົດ. ສ່ວນຝາພນັງດ້ານເໜືອກໍມີປະຕູ 3 ບ່ອງ ແຕ່ບ່ອງເຄິ່ງກາງເປັນພຽງຮູບປະຕູຊື່ ໆ ໃຊ້ໄຂ–ອັດບໍ່ໄດ້.

ໂຄງກໍ່ສ້າງຂອງຫໍນີ້ ເປັນແບບຫລັງຄາເປັນຊັ້ນ ໆ ຊຶ່ງຖ່າຍແບບມາຈາກສິລປະຂອງອິນເດັຽ ຕັ້ງຢູ່ເທິງພື້ນຍົກສອງຊັ້ນ ພື້ນຍົກຊັ້ນເທິງນັ້ນມຸງດ້ວຍເທິບ ຄ້ຳດ້ວຍເສົາທີ່ມີປາຍເອ້ແບບໂກແລງ ພື້ນຍົກດ້ານເທິງ ສູງແລະຊັນກວ່າພື້ນຍົກດ້ານລຸ່ມ ພື້ນຍົກດ້ານລຸ່ມກວ້າງ ແລະລ້ອມດ້ວຍຝາຕ່ຳ ໆ ຊຶ່ງກໍ່ດ້ວຍດິນຈີ່ ເອ້ຕາມສມັຍ. ທາງອອກທີ່ຕິດຕໍ່ກັນ ໄດ້ຕື່ມຄວາມກວ້າງຂວາງ ແລະສງ່າຜ່າເຜີຍໃຫ້ແກ່ຫໍເມື່ອເຮົາເບິ່ງຢູ່ໃນຣະຍະຫ່າງໄກ.

ເສິກໄທສມັຍປີ 1778 ຫລັງຈາກທີ່ພວກໄທໄດ້ເຊີນພຣະແກ້ວມໍຣະກົດໄປຍັງບາງກອກແລ້ວ ຫໍພຣະແກ້ວໄດ້ຖືກທຳລາຍເປັນບາງສ່ວນ ແລະ ເຈົ້າອະນຸກໍໄດ້ສ້ອມແປງຄືນ. ຫລັງຈາກພວກໄທໄດ້ກວາດລ້າງນະຄອນວຽງຈັນຄັ້ງປີ 1826 ຫໍພຣະແກ້ວໄດ້ຖືກທຳລາຍເກືອບຈະບໍ່ມີຫຍັງເຫລືອໄວ້ເລີຍ ແລະເມື່ອປີ 1936 ປາກົດວ່າຫໍພຣະແກ້ວໄດ້ຖືກຕົ້ນໄມ້ຮະຣານຢ່າງທາຣຸນ "ປ່າໄມ້ທີ່ປົກຄຸມ ແລະເຄືອເຂົາທີ່ກ້ຽວພັນຕາມກົກເສົາຢ່າງມິດມິດນັ້ນ ເຮັດໃຫ້ຫໍພຣະແກ້ວມີລັກສນະເລິກລັບ ສະແດງໃຫ້ຜູ້ທີ່ມາທ່ຽວຊົມຣະນຶກເຖິງອິນຍານຂອງບັນພະບຸຣຸດທີ່ສິງສຖິດຢູ່ຕາມປ່າສັກສິດເຫລົ່ານີ້. ຮົ້ວ ແລະຂັ້ນໄດທີ່ພາໄປສູ່ລະບຽງກໍ່ດ້ວຍດິນຈີ່ທີ່ເປື່ອຍແປນ. ຕາມຮາວຂັ້ນໄດເປັນຮູບນາກຍໍດ ສະແດງເຖິງຄວາມມີອຳນາດ" (*)

ສມັຍທ່ານປາວີ ມາຢ້ຽມນະຄອນວຽງຈັນ ຫລັງຄາບາງສ່ວນຂອງຫໍພຣະແກ້ວຍັງປາກົດຢູ່, ແຕ່ຕໍ່ມາບໍ່ສາມາດຕ້ານທານການຮະຣານ ແລະນ້ຳໜັກຖ່ວງດຶງຂອງເຄືອໄມ້ໄດ້, ຫລັງຄາເຫລົ່ານັ້ນ ຈຶ່ງເພພັງໄປ ຝາທັງສີ່ດ້ານທີ່ກໍ່ດ້ວຍດິນຈີ່ແລະປະທາຍປູນຂາວ ໄດ້ເນີ້ງເຊຈອນຈະເພພັງລົງຍ້ອນການກຸກກອນຂອງຮາກໄມ້.

ດ້ວຍຄວາມຫ່ວງໃຍ ແລະປະສົງຢາກປ້ອງກັນການທຳລາຍເສັຽຫາຍຂອງອະນຸສາວະຣີອັນລ້ຳຄ່າ ຂອງອານາຈັກລ້ານຊ້າງ ທ່ານຂ້າຫລວງໃຫຍ່ຝຣັ່ງ ເອີຕຣົບ ແລະ ສະເດັດເຈົ້າເພັດຊຣາດ ປະທານ

(*) ເດີ ກາເນ "ການເດີນທາງໃນອິນດູຈີນແລະໃນປະເທດຈີນ" ປາຣີສ໌ 1872.

ສະຖາບັນພຸທສາສນາແຫ່ງຣາຊອານາຈັກລາວ ຈຶ່ງໄດ້ຮ້ອງຂໍຕໍ່ໂຮງຮຽນຝຣັ່ງເສດໃນຕາເວັນອອກໄກເຖິງແຜນປະຕິສັງຂອນຫໍພຣະແກ້ວນີ້. ວຽກງານສ້ອມແປງໄດ້ຕົກລົງເມື່ອເດືອນສິງຫາ 1936 ຫລັງຈາກການຢ້ຽມຢາມຂອງ ທ່ານ ມາກຊາລ ຫົວໜ້າພແນກບູຣານຄະດີຂອງໂຮງຮຽນຝຣັ່ງເສດໃນພາກຕາເວັນອອກໄກ.

ໃນຣາຍງານການສຳຣວດ ທ່ານມາກຊາລໄດ້ບັຣຍາຍສະພາບຂອງວັດພຣະແກ້ວ ທີ່ເຂົາໄດ້ພົບເຫັນແລະໄດ້ສເນີແຜນປະຕິບັດງານໃນການສ້ອມແປງດັ່ງນີ້ :

— ວຽກທຳອິດທີ່ຈະເຮັດ ຄື ສ້ອມແປງຝາໃຫ້ມີຄວາມແໜ້ນໜາຖາວອນຂຶ້ນ ເອົາຮາກໄມ້ອອກ ອັດຮູ ແລະຮອຍແຕກຕ່າງ ໆ ສ່ວນຝາດ້ານໃຕ້ຕ້ອງມ້າງແລະເຮັດໃໝ່ໝົດ.

— ເອົາໄມ້ທັບຫລັງວົງປະຕູແລະບ່ອງຢ້ຽມທຸກວົງ ເພື່ອຈະເຮັດໃຫ້ຝາກໍ່ເປັນຜືນແຜ່ນດຽວກັນ ເຮົາຈຶ່ງຈະສາມາດກໍ່ສີໜ້າດ້ານໃຕ້ ເສົາຮອບນອກລະບຽງ ແລະສ່ວນທີ່ຍື່ນອອກດ້ວຍດິນຈີ່ໄດ້.

— ເທີບດ້ານໜ້າດ້ານຫລັງ ຫລັງຄາລະບຽງ ເຮັດດ້ວຍໄມ້ທັມມະດາຂອງພື້ນບ້ານກໍພໍເບິ່ງໄດ້ຢູ່.

— ຫລັງຄາມຸງດ້ວຍດິນຂໍ ພື້ນຫ້ອງການ ພື້ນລະບຽງ ແລະພື້ນລານທັງສອງຊັ້ນ ຕ້ອງຕຳໃຫ້ແໜ້ນແລະປູດ້ວຍດິນກາໂຣເຜົາ.

— ວຽກຈະສ້ຽງສຸດ ຫລັງຈາກຕິດແລະຄວັດສີໜ້າດ້ານເໜືອແລະໃຕ້ ແລະຄວັດລິງລາຍເຄື່ອງໄມ້ຕ່າງ ໆ ຢ່າງ ບານປະຕູ ບານບ່ອງຢ້ຽມ ເອ້ຕາມຝາແລະກົກເສົາ ດ້ວຍໄມ້ຫລືມ້າກ້ຽງກໍໄດ້.

— ຕົວອາຄານແລ້ວຮຽບຮ້ອຍ ກໍມາກຳກັບຝາກຳແພງຂອງຖານຊັ້ນລຸ່ມ.

— ການສ້ອມແປງແຕ່ລະສ່ວນຂອງຫໍ ກໍບໍ່ມີບັນຫາສຳຄັນ ເພາະໂຄງສ້າງເກົ່າກ່ອນຍັງມີຮູບຮ່າງທີ່ສາມາດຈະເຮັດແບບແລະສ້ອມແປງໄດ້ດັ່ງເດີມ.

— ເສດສ່ວນຂອງໂຄງສ້າງທີ່ຍັງເຫລືອຕາມຝາຂ້າງນອກ ຊີ້ບອກຢ່າງຄັກແນ່ເຖິງແບບແລະສ່ວນຂອງລະບຽງ.

— ກ່ຽວກັບສະຖາປັດຕະຍະກັມແລະການເອ້ຍ້ອງ ເຮົາສາມາດກ່າຍແລະຖອດແບບໄດ້ຢ່າງຖືກຕ້ອງ ຈາກສິ່ງຂອງທີ່ຍັງປາກົດຢູ່.

ຄວາມຫຍຸ້ງຍາກທີ່ສຳຄັນນັ້ນ ກໍກ່ຽວກັບຄວາມບໍ່ຫົວຊາແລະການປ່ອຍປະລະເລີຍ ຂອງຄົນໃນບູຮານສະຖານ ອັນເປັນອະນຸສອນທາງປວັດສາດ ຂອງອານາຈັກລ້ານຊ້າງມາເປັນຫລາຍສັຕວັດແລ້ວ. ບາງສ່ວນຂອງຖານທີ່ເຮັດດ້ວຍດິນອັດ ກຳລັງແຕກຮ້າວຢ່າງໜ້າວິຕົກ ຍ້ອນການຣະຣານຂອງຮາກໄມ້.

ການທີ່ຈະສ້ອມແປງສິ່ງເກົ່າແກ່ຕ່າງໆ ຕ້ອງໃຊ້ຄວາມອົດທົນ ແລະພົດເປືອງຄ່າແຮງງານ. ເພື່ອຢາກໃຫ້ຝາຂອງຣາກຖານມີຄວາມແໜ້ນໜາ ຄວນຈະຖອກດ້ວຍຊີມັງ ການທີ່ສ້ອມແປງຣາກຖານບາງສ່ວນແລະທັບວົງກົບແລະບ່ອງຢ້ຽມດ້ວຍການຕຳແລະດິນອັດ ຈະບໍ່ເຮັດໃຫ້ທໍ່ມີຄວາມແໜ້ນໜາຖາ–ວອນທໍ່ຖອກດ້ວຍຊີມັງ. ເພື່ອບໍ່ເປັນການປມາດ ຄວນຈະມຸງຫລັງຄາກ່ອນຣະດູຝົນ ແລ້ວຄ່ອຍເອົາຕາມຝາກົກເສົາ ປະຕູ ແລະບ່ອງຢ້ຽມໃນຂັ້ນຕໍ່ໄປ

ວຽກປະຕິສັງຂອນ ໄດ້ລົງມືໃນເດືອນຕຸລາ 1936 ຕາມງົບປະມານຂອງນະຄອນວຽງຈັນທີ່ໄດ້ຮັບອະນຸມັດໃຫ້ເປັນຈຳນວນ 2000 ຫຣຽນ ຊຶ່ງໄດ້ມອບໃຫ້ໂຮງຮຽນຝຣັ່ງເສດໃນຕາເວັນອອກໄກສຳລັບປີ 1937 ທ່ານຂ້າຫລວງໃຫຍ່ຝຣັ່ງປະຈຳຣາຊອານາຈັກລາວ ໄດ້ກະເງິນສ່ວຍສາອາກອນ 2000 ຫຣຽນ ຂອງງົບປະມານທ້ອງຖິ່ນ ແລະທ່ານຂ້າຫລວງເຈົ້າຄອງກຳແພງນະຄອນວຽງຈັນ ໄດ້ຫ້າງທາໄວ້ 2000 ຫຣຽນເປັນສ່ວນທີສອງ. ທາງຝ່າຍໂຮງຮຽນເອງກໍໄດ້ຮັບປາກວ່າ ຈະຊ່ວຍເປັນຈຳນວນເງິນ 2000 ຫຣຽນ ຖ້າວ່າສະຖານະການດ້ານການເງິນຫາກພຽງພໍ.

ສ່ວນຊາວລາວເອງ ກໍບໍ່ໄດ້ລົດລະຄວາມພຍາຍາມ ຊິດຊ່ອຍຕາມຖານະໃນການປະຕິສັງ-ຂອນ ບູຮານສະຖານທາງສາສນາຂອງປະເທດເຂົາເຈົ້າ. ພະນັກງານອາສາສມັກບາງພວກກໍໄດ້ມາຂົນຫີນແລະຊາຍ ບາງພວກກໍ່ມາຊ່ອຍມ້າງຝາ. ຊ່າງກໍ່ແລະຊ່າງໄມ້ ກໍຍິນດີເຮັດວຽກໃນຄ່າແຮງຖືກໆ. ມ້າວຽກເຫລົ່ານີ້ສົມຄວນໄດ້ຮັບກຳລັງໃຈ ເພາະສີມືຂອງຊາວລາວເອງ ສາມາດສ້າງນະຄອນວຽງຈັນໃຫ້ມີຄວາມສງ່າງາມ ຈົນເຮັດໃຫ້ແຂກທີ່ມາຢ້ຽມຢາມ ດັ່ງທ່ານອັນອຸສຕົບ ແລະຄຸນພໍ່ມາຣິນີ ໄດ້ຕົກຕະລຶງຍ້ອນ.

ວຽງຈັນ, ວັນທີ 18 ມະກະຣາ 1937

ສະເດັດ ເຈົ້າສຸວັນນະພູມາ

* * *

ວັດສີສະເກດ ວຽງຈັນ

ວັດສີສະເກດ

ຫລືວັດສະຕະສະຫັສສາຣາມ (ວັດແສນ)

ໂດຍ ຈັນທ໌ ອິນທຸພິລາສ

ວັດສີສະເກດ ເປັນວັດຫລວງ–ວັດໃຫຍ່ ມີຊື່ສຽງວັດນຶ່ງໃນນະຄອນວຽງຈັນ ເປັນວັດທີ່ຫາຫົນແຫ່ງແຫລ່ງຢູ່ງ່າຍ, ຖ້າທ່ານເຫັນວັດພຣະແກ້ວ ກໍທໍ່ກັບວ່າ ໄດ້ເຫັນວັດດັ່ງກ່າວນັ້ນແລ້ວ ຄື ວັດພຣະແກ້ວຢູ່ດ້ານທ່າຂອງວັດສີສະເກດ ຄົນລະຟາກຖນົນໄຊຍະເຊດຖາທິຣາດ ຫລືຈະວ່າແຈ ວັດສີສະເກດເຊິ່ງເຫັນຫໍໄຕຕັ້ງເດັ່ນຢູ່ດ້ານຕາເວັນຕົກນັ້ນ ເປັນບ່ອນເລີ່ມຕົ້ນຂອງຖນົນລ້ານຊ້າງ ເຊິ່ງເນັ້ງໄປສູ່ອະນຸສາວະຣີທະຫານນິຣະນາມ ແລະເລີຍໄປທາງໂພນເຄັງ.

ວັດນີ້ເປັນວັດແປກປລາດກວ່າວັດອື່ນໆໃນນະຄອນວຽງຈັນ ແລະເປັນວັດມີອະພິນິຫານ. ທີ່ວ່າເປັນວັດແປກປລາດນັ້ນ ແປກປລາດປະການທີ່ 1 ເພາະມີຊື່ສອງຊື່ ຄືຊື່ນຶ່ງເປັນຊື່ທີ່ຄົນທົ່ວໆໄປຮ້ອງ ແລະຄົນກໍຮູ້ກັນໃນຊື່ນີ້ທັງນັ້ນ ຄື *ວັດສີສະເກດ* ອີກຊື່ນຶ່ງເປັນຊື່ທີ່ຈາຣຶກຢູ່ໃນລາຍຈູມ ຫລືສິລາເລກ ແລະເພິ່ນຂຽນໃສ່ປະຕູວັດ ວ່າ *ວັດສະຕະສະຫັສສາຣາມ* ເຊິ່ງຖ້າຈະແປກໍວ່າ *ວັດແສນ* ຊື່ລຸນນີ້ ຄົນບໍ່ຄ່ອຍຮູ້ຈັກ ນອກຈາກພຣະພິກຂຸສາມເນນ ກັບຄະຫັດ ຜູ້ຢູ່ໃນກະຊວງທັມມະການ. ເປັນຫຍັງວັດນີ້ ຈຶ່ງມີສອງຊື່ ແລະເປັນຫຍັງຄຳວ່າວັດສີສະເກດ ຈຶ່ງມີອິດທິພົນຕໍ່ພາສາເວົ້າຂອງປະຊາຣາສດອນຫລາຍກວ່າຊື່ທີ່ເພິ່ນຜູ້ສ້າງພຣະຣາຊທານໄວ້ ຄືວັດສະຕະສະຫັສສາຣາມ? ກໍເປັນເຣື່ອງແປກ ຫລືວ່າ ເພິ່ນສ້າງທັບວັດເກົ່າທີ່ຮ້ອງວ່າ ວັດສີສະເກດ ຄົນຮ້ອງຊື່ວັດນັ້ນຈົນລຶ້ງ ແລະຮູ້ຈັກກັນທົ່ວໄປ ຊື່ວັດສະຕະສະຫັສສາຣາມ ເລີຍບໍ່ຕິດປາກຄົນ ທັງເປັນຊື່ດັດລີ້ນບໍ່ມ່ອນລີ້ນມ່ອນຫູ ທີ່ຊື່ເກົ່າອາດຈະເປັນຢ່າງຊື່ນາມຍົດເມືອງລາວເຖິງນາມຍົດໃຫ້ເປັນເພັຽ ເປັນພຍາ ມີຣາຊທິນນາມກໍຕາມກໍບໍ່ຄ່ອຍມີໃຜຮ້ອງຊື່ໃໝ່ນັ້ນ ທີ່ຄົນຮ້ອງຕິດນັ້ນ ມີໜ້ອຍທີ່ສຸດ ສູ້ຊື່ເກົ່າບໍ່ໄດ້ ລາງທ່ານວ່າ ຊື່ວັດສີສະເກດ ອາດມີມາກ່ອນແລ້ວ ແລະເປັນທັມນຽມກໍວ່າໄດ້ທີ່ຕ້ອງມີວັດຊື່ນີ້ ຢ່າງເມືອງໜອງຄາຍ ມີຊື່ວັດຊ້ຳກັບວັດໃນນະຄອນວຽງຈັນ ຢູ່ຫລາຍວັດ ຢ່າງວັດສີເມືອງ ວັດທາຍໂສກ ວັດສີດຳດວນ ເປັນຕົ້ນ ແລະອີກວັດນຶ່ງກໍຄືວັດສີສະເກດ ຢູ່ບາງກອກ ປະເທດໄທກໍມີວັດນຶ່ງທີ່ມີຊື່ເກືອບຄືກັບວັດສີສະເກດ ຂາດຢູ່ພຍາງດຽວທີ່ນັ້ນ–ນັ້ນຄື ວັດສຣະເກດ.

ແປກປລາດປະການທີ 2 ກໍຄື ວັດນີ້ ມີສິມ ຫລືໂບດມີປະຕູ ແລະພຣະພຸທຮູບອົງເປັນປະທານ ບິ່ນພຣະພັກລົງທາງທ່າ ຫລື ທາງທິດຕາເວັນຕົກ ລາງທ່ານວ່າ ພຣະເຈົ້າອະນຸວົງ ຜູ້ທົງສ້າງວັດ ມີພຣະປະສົງຈະໃຫ້ພຣະພຸທຮູບໃນສິມໄດ້ມີພຣະພັກຈະພູ່ສູ່ພຣະຣາຊວັງຂອງພຣະອົງ ເຊິ່ງຢູ່ທາງດ້ານທ່າ ມັ້ນທຸກຍາມ ແລະພຣະອົງຄົງຈະບັນທົມພິນພຣະສຽນ (ຫລືພຣະເກດ) ມາທາງວັດສີສະເກດທຸກວັນຄືນ ຍ້ອນວັດນັ້ນຢູ່ເບື້ອງສີສະຫລືເບື້ອງເກດທຸກວັນຄືນນັ້ນ ລວດຕັດເອີ້ນຫລັ້ນໆວ່າວັດສີສະເກດ ໃນທີ່ສຸດ ຄຳທີ່ຕັດນັ້ນເລີຍກາຍເປັນຄຳນິຍົມຂອງເສນາຂ້າຣາຊການ ແລະປະຊາຣາສດອນທົ່ວໄປຈົນລັ້ງ ຫລືບໍ່ນິຍົມຮ້ອງວັດຕາມຊື່ໃໝ່ ຢ່າງນີ້ກໍອາດເປັນໄດ້ ເປັນຫຍັງເພິ່ນຈິ່ງພຣະຣາຊທານນາມວັດວ່າ ວັດສະ–ຕະສະຫັສສາຣາມ ເຊິ່ງແປວ່າວັດແສນ ເມື່ອສືບສາວຫາວຫາເຄົ້າມູນບໍ່ໄດ້ ຂ້າພະເຈົ້າກໍເລີຍສັນນິຖານເອົາວ່າ ເພິ່ນຄົງຈະໃສ່ຊື່ວັດເພື່ອເປັນກຽດ ຫລືເປັນສັນຍະລັກແກ່ພຣະພຸທຮູບ 2 ອົງ ທີ່ພຣະອົງທົງສ້າງເປັນພຣະພຸທຮູບແທນພຣະອົງ ດັ່ງຜາກົດໃນສິລາເລກວ່າ.... "…. ສ້າງພຣະທອງຫລໍ່ຄ່າພຣະອົງຄ໌ 2 ອົງຄ໌ ໜັກ 4 ແສນ 9 ໝື່ນ 8 ພັນ...." ແຕ່ບໍ່ວ່າວັດສີແສນ ຕັດຄຳອື່ນອອກເຫລືອໄວ້ ແຕ່ຄຳວ່າ ແສນ ຢ່າງດຽວ ຢ່າງນີ້ກໍອາດເປັນໄດ້.

ແປກປລາດປະການທີ່ 3 ກໍຄືບໍ່ມີວັດໃດມີກົມລຽນ ທີ່ໃນສິລາເລກຮ້ອງວ່າ ຈົງກົມອ້ອມສິມ ຫລືພຣະອຸໂປສົດຢ່າງນີ້ຈັກວັດ ມີຢູ່ທີ່ທາດຫລວງ ກໍແມ່ນອ້ອມພຣະທາດຫລວງ ບໍ່ແມ່ນອ້ອມສິມ, ວັດອື່ນໆນັ້ນ ຢ່າງດີກໍມີແຕ່ກຳແພງແກ້ວເຕັ້ຽໆ ອ້ອມ ແລະບໍ່ເຫັນມີຢູ່ວັດໃດຊ້ຳ ເຖິງຢູ່ນະຄອນຫລວງພຣະບາງ ກໍໄດ້ຍິນວ່າ ບໍ່ມີຄືກັນ.

ແປກປລາດປະການທີ່ 4 ກໍຄືໃນກົມລຽນມີພຣະພຸທຮູບນັ່ງລຽນກັນເປັນແຖວ ເຖິງ 120 ອົງ ຄືກັນເປັນພິມດຽວ ແລະຢູ່ຜາຜນັງດ້ານໃນຂອງສິມຂອງກົມລຽນ ເພິ່ນເຮັດເປັນຊ່ອງຮ້ອງວ່າ ຊ່ອງກຸດ ຫລື ບ່ອງນົກຕືອ ບັນຈຸພຣະພຸທຮູບນ້ອຍໆ ທັງພຣະເງິນບຸ ແລະພຣະພິມມີຈຳນວນ 9168 ອົງ ເຊິ່ງຈະຫາວັດໃດໆ ຄືບໍ່ມີ.

ແປກປລາດປະການທີ 5 ກໍຄື ບໍ່ມີວັດໃດ ຈະມີຫໍໄຕ (ປິດົກ) ຈົບງາມ ແຂງແຮງ ແລະມີຕູ້ໄມ້ໃຫຍ່ຫລາຍຊັ້ນ ສຳລັບໃສ່ພຣະທັມມະໄຕປິດົກ ຂ້າງນອກຕູ້ທັງ 4 ດ້ານ ຂຽນເປັນດອກດວງດ້ວຍ ນ້ຳຄຳທີ່ຍັງສີສົດຢູ່ເທົ່າດຽວນີ້ ແລະຈະຫາບ່ອນໃດຂຽນລາຍຄຳຄືຕູ້ພຣະໄຕປິດົກພ່ອຍນີ້ ບໍ່ເຫັນມີ, ຢ້ານວ່າ ຄົນມີບອນຈະທຳລາຍເສັຽ ຈຶ່ງຂໍສເນີໃຫ້ທ່ານຜູ້ມີອຳນາດກ່ຽວກັບການນີ້ ຊ່ອຍຮັກສາໄວ້ໃຫ້ດີມາກ.

ທີ່ກ່າວວ່າເປັນວັດມີອະພິນິຫານນັ້ນ ເພາະເປັນວັດທີ່ຕລອດປອດພັຍຈາກພັຍແຫ່ງສົງຄາມ ຄາວເຈົ້າຂອງຜູ້ທົງສ້າງວັດນີ້ ທຳການກູ້ເອກຣາດຈາກໄທໃນປາງນັ້ນ ນະຄອນວຽງຈັນ ຖືກໄທຮື້ມ້າງ

ເຜົາທຳລາຍປານເຂົາຖາງ ແລະເຜົາໄຮ່ ພໍເຂົ້າວຽງໄດ້ເທື່ອທຳອິດ ກໍທຳລາຍເທື່ອນຶ່ງແລ້ວ ແຕ່ພໍຂ້າມໄປຝັ່ງຂວາແລ້ວ ແມ່ທັບໄທເຂົ້າຖວາຍຣາຍງານເຫດການຕໍ່ເຈົ້າແຜ່ນດິນໄທ ວ່າຈັບພຣະເຈົ້າອະນຸວົງຍັງບໍ່ໄດ້ ກໍຕັດສັ່ງໃຫ້ແມ່ທັບກັບມາທຳລາຍວຽງຈັນ ຢ່າໄວ້ສິ່ງໃດທີ່ຄົນພໍຈະສ້າງຈະແປງເປັນທີ່ອາສັຍເພື່ອຈະຕັ້ງຕົວກັບເປັນບ້ານເປັນເມືອງໄດ້ອີກ ທຳໂຮງບ້ານເຮືອນຣາສດອນ ຕລອດວັດກຸດີວິຫານ ໂບດສິມບໍ່ໄວ້ ເຜົາພັດ ວິຫານພຣະອົງຕື້ ສິມວັດມີຊັຍ ຫໍພຣະແກ້ວຖືກເຜົາຢ່າງບໍ່ດຽມມີ ແມ່ນວ່າເຂົາເຈົ້າເຫລົ່ານັ້ນ ຈະຖືວ່າຕົນເປັນພຸທສາສນິກຊົນ—ຄົນຜູ້ນັບຖືສາສນາພຸດກໍຕາມ ແຕ່ວັດສີສະເກດຫໍໄຕ ສິມຕລອດພຣະພຸທຮູບຫລວງຫລາຍໃນວັດນັ້ນ ປອດຈາກເພດພັຍແລະອັກຄີພັຍທັງສອງຄັ້ງສອງຄາວຢ່າງປລາດ, ແມ່ນວ່າໃນລະຫວ່າງນະຄອນວຽງຈັນ ພວມຮ້າງຢູ່ນັ້ນ ຄວນຈະຖືກຄົນໃຈບາບມາສແວງຫາສົມບັດໃນວັດ ຈະມ້າງເພທຳລາຍ ກໍບໍ່ມີຫຍັງຜິດສັງເກດພໍປະມານ, ມາເຖິງສມັຍຫໍ້ເຂົ້າປຸ້ນວຽງຈັນ ໃນປີ ພ.ສ. 2316 (ຄ.ສ. 1873) ພວກຫໍ້ໄດ້ເຂົ້າມ້າງເພ ເຈາະຈົ້ມພຣະພຸທຮູບ ພຣະສະຖູບເຈດີ ນັບແຕ່ອົງພຣະທາດຫລວງລົງມາຫາວັດອື່ນໆ ເກືອບທຸກວັດ ກໍຜາກົດວ່າ ວັດສີສະເກດນີ້ຕລອດປອດພັຍອີກ, ຄັນມາເຖິງສມັຍຝຣັ່ງເສດຊ່ອຍບູຣນະສ້ອມແປງສາສນະສະຖານທີ່ສຳຄັນໆວັດສີສະເກດກໍຢູ່ໃນໂຄງການນັ້ນນຳ ຮູບຮ່າງສິ່ງກໍ່ສ້າງ ສິລປະວັດຖຸ ຕລອດສີລາເລກແຜ່ນສຳຄັນຂອງວັດຍັງຢູ່ດີ ບໍ່ຖືກທຳລາຍສູນເສັຽ— ຈົນເຖິງສມັຍກອງແລປະຕິວັດ ແລະຣົບກັນຢ່າງຮ້າຍແຮງ ກັບກອງທັບຂອງນາຍພົນພູມີ—ສີໂຫ ເພື່ອຍາດແຍ່ງຊິງເອົານະຄອນວຽງຈັນ, ບ້ານເຮືອນ ວັດ ແລະໂຮງການ—ຫລວງຫລາຍແຫ່ງຖືກເຜົາໄໝ້ ແລະຖືກລູກປືນເສັຽຫາຍ, ວັດສີສະເກດ ກໍປອດພັຍອີກ ເມື່ອນາຍພົນພູມີ ສ້າງຂຍາຍທາງຫລວງສາຍລ້ານຊ້າງໃຫ້ກວ້າງຂວາງ ບຽດເອົາທີ່ວັດສີສະເກດເຂົ້າໄປ ມີຜູ້ທັນໃຈນ້ອຍ ໃຈໃຫຍ່ ຢ້ານວ່າເຂົາເຈົ້າຈະມາເພຫໍໄຕ ອັນສງ່າງາມນັ້ນເສັຽ ແຕ່ກໍເຕຊະບຸນ ເຂົາເຈົ້າຍັງເຫັນຫໍໄຕເປັນສິລປະອັນສຳຄັນຢູ່ ຈຶ່ງເວັ້ນໄວ້. ເຫດນັ້ນ ຈຶ່ງວ່າວັດສີສະເກດ ເປັນວັດມີອະພິນິຫານຍິ່ງກວ່າວັດອື່ນໆ.

ລາງທ່ານອາດຈະຄຶດສົງສັຍວ່າ ວັດນີ້ຄົງຈະເປັນວັດສີສະເກດ ຫລາຍກວ່າຈະເປັນວັດສະຕະສະຫັສສາຣາມ (ວັດແສນ) ສີລາເລກນັ້ນ ອາດຈະເອົາມາຈາກບ່ອນອື່ນ ບໍ່ແມ່ນສີລາເລກຂອງວັດນີ້, ດັ່ງນັ້ນ ເພື່ອໃຫ້ທ່ານໄດ້ພິສູດທຽບຄຽງຂໍ້ຄວາມໃນສີລາເລກກັບສິ່ງກໍ່ສ້າງຂອງວັດນີ້ ແລະໃຫ້ທ່ານຕັດສິນໃຈເອງ ຈຶ່ງຈະຮູ້ວ່າ ວັດນີ້ ເປັນວັດສະຕະສະຫັສສາຣາມແທ້ຫລືບໍ່? ຈຶ່ງຂໍກ່າຍເອົາຂໍ້ຄວາມໃນລາຍຈູນ ຫລືສີລາເລກທັງໝົດມາສເນີທ່ານດັ່ງຕໍ່ໄປນີ້:

ສັກຣາຊດັ່ງນີ້..............................1180

ອະວະມານດັ່ງນີ້..............................247

ມັງຄະລະຣູປ..............................44

ມັງຄະລະໂສມ..............................22

ມາທິຕິດຖີ..............................22

ມາສເກນດັ່ງນີ້..............................12616

ຫໍຣະຄຸນດັ່ງນີ້..............................4313031

ມາທິຣົກ 41 ລູກຕິດຖີ 8 ຕົວ

"ອິທັງ........ສຸພະມັສຕຸ ພຣະຣາຊອາຈຍາ ລາຍຈູນສົມເດັດພຣະບໍຣົມບໍພິຕ ພຣະມະຫາຂັດຕິຍະທິເບດ ໄຊຍະເຊດຖາ ຊາຕິສຸຣິຍະວົງສ໌ ອົງຄ໌ເອກອັຄຄະທິບໍດິນ ບໍຣົມທາທິປະຕິຣາຊາທິຣາຊ ມະຫາຈັກກະພັດຕິພູມິນທາທິປະຕົລ ໄຕຍະພູວະນາດ ຊາຕຍູພະໂຕວິສຸທທະ ມະກຸຕສຳພະວະຣາພິປູລະອະດຸລຍະໄພທິສັຕ ຂັຕຕິຍະພຸທທັງກຸໂລຕຕະຣະ ມະຄະລະມະຫາໂສພັສສັນໂຕ ຄຊະລັກຂະຣັຕຖະຣາຊບຸຣິສຣິທັມມະທິຣາຊ ບໍຣົມນາຖບໍຣົມບໍພິຕຣ.

ອົງຄ໌ປະກອບດ້ວຍທະສະພິທຣາຊທັມມ໌ ແລະອະຈະລະສັທທາ ສາສນູປະຖັມພະກະ ໃນອໍຣະພຸທສາສນາ ເປັນອັນຍິ່ງ ຈິ່ງປົງປະສິທທິລາຍຈູນດວງນີ້ໄວ້ ກັບວັດສະຕະສະຫັສສະວິຫາຣະຣາມາທີ່ນີ້ ແຕ່ພຸທທະສັກຣາຊ ສາສນາແຫ່ງພຣະບໍຣົມສາສດາຈາຣິຍະຄຣູເຈົ້າລ່ວງໄປແລ້ວ 2361 ພຣະວັສສາ ປີເປີກຍີ່ເດືອນ 4 ຂຶ້ນ 9 ຄ່ຳ ວັນ 5 ຍາມອຸທັງຣາຊາ ປະກອບດ້ວຍນັກຂັຕຣ ຊື່ວ່າ ໂລຫິນີ ໄດ້ຍໍວັດສະຕະສະຫັສສະວິຫາຣາມາທີ່ນີ້ ມີຈົງກົມຣອບທັງ 4 ດ້ານໄດ້ ປຸນປັປຸນັງ ພຣະພຸທຮູບໃຫຍ່ ໃນພຣະວິຫານອົງຄ໌ນຶ່ງ ສ້າງພຣະທອງຫລໍ່ດຳພຣະອົງຄ໌ 2 ອົງຄ໌ໜັກ 4 ແສນ 9 ໝື່ນ 8 ພັນ, ສ້າງພຣະໃສ່ຊ່ອງກຸດຝາຜນັງວັດ ພຣະເງິນບຸ 276 ອົງຄ໌ ພຣະພິມ 2 ພັນ 52 ອົງຄ໌ ພຣະພຸທຮູບລາຍຣອບຈົງກົມ 120 ອົງຄ໌ ພຣະພິມໃສ່ຊ່ອງກຸດ ຝາຜນັງຈົງກົມ 6 ພັນ 8 ຮ້ອຍ 40 ອົງຄ໌, ສ້າງຈຸລວິຫາຣໄວ້ຖະປັ້ນມະພຸທຮູບເກົ່າຫລັງນຶ່ງ, ສ້າງພຣະເຈດີ 2 ອົງຄ໌ ສ້າງຫໍພຣະໄຕຍປິດົກ ແລະຕູ້ໃສ່ພຣະທັມມະໄຕຍປິຕະກະສ້າງສາລາໂຮງທັມມ໌ຫລັງນຶ່ງສ້າງກະຕິໝູ່ 2 ໝູ່ກະຕິລາຍ 8 ຫລັງ,ສ້າງຫໍກອງຫລັງນຶ່ງຄ້ອງກອງແສ່ງພ້ອມສ້າງທີ່ຊຳຣະນ້ຳ ແລະຖານ ສ້າງກຳແພງຣອບອາຣາມະເຂຕກະຕິທັງ 4 ດ້ານໄຖ່ຄົນເວນໃຫ້ເປັນຂ້າອາຣາມ 18 ຄົນ ແລະ ຊື້ບ້ານໃຫ້ເປັນອາຣາມະເຂຕ ແຕ່ພຣະອົງຄ໌ສວາງໄປຍັງຣາຊສົມບັດ ສ້າສະຕະສະຫັສະຣາມາທີ່ນີ້ ໝົດຄ່າປ້ວ ລ້ານ 3 ແສນ ໝື່ນ 7 ຮ້ອຍ 4 ແຜ່ນ ທີ່ເປັນເງິນ ຮ້ອຍ 30 ຊັ່ງ

6 ຕຳລຶງ 2 ບາທ 2 ສລຶງ, ເງິນປ໋ວ 3 ໝື່ນ ພັນ 6 ແຜ່ນ ທີ່ເປັນເງິນ 2 ຕຳລຶງ 3 ບາທ 2 ສລຶງ ແກ້ວລູກໃສ່ເກສພຣະ ປະດັບແທ່ນພຣະໃສ່ຍອດເສຕຕະສັຕເຂົ້າກັນ 8 ຮ້ອຍ 65 ລູກ ເປັນເງິນ 13 ຕຳລຶງ 2 ບາທ ເບັ້ຽ ແຫວັນ 50 ໜ່ອຍ ແກ້ວປະດັບຂາວຂຽວໜັກ 2 ແສນ 5 ໝື່ນ 6 ຮ້ອຍ ເປັນເງິນ 6 ຊັ່ງ 5 ຕຳລຶງ ທອງເນັ້ງຫລັງວັດ ແລະເສຕະສັຕ ໜັກ 7 ພັນ 2 ຮ້ອຍ 9 ບາທ ເປັນເງິນ 2 ຕຳລຶງ 3 ບາທເຟ້ອງ ເບັ້ຽ 5 ແຫວັນ 50 ໜ່ອຍ, ກະດິງທອງ 26 ໜ່ອຍ ໜັກ 6 ພັນ 8 ບາທ ເປັນເງິນ 3 ຕຳລຶງເຟ້ອງເບັ້ຽແຫວັນ 75 ໜ່ອຍ ເຫລັກໜັກລ້ານ 2 ແສນ 4 ໝື່ນ 3 ພັນ 7 ຮ້ອຍ ເປັນເງິນ 4 ຊັ່ງ 13 ຕຳລຶງ ບາທ 2 ສລຶງ ເບັ້ຽ 5 ແຫວັນ 50 ໜ່ອຍ. ນ້ຳຮັກ 2 ພັນ 4 ຮ້ອຍ 55 ຄະນານ ເປັນເງິນ 24 (ຊັ່ງ) 11 ຕຳລຶງ, ນ້ຳມັນຍາງ 8 ໝື່ນ 4 ພັນ 6 ຮ້ອຍ 90 ຄະນານ ເປັນເງິນ 60 ຊັ່ງ 9 ຕຳລຶງ 3 ບາທ ສລຶງ ເຟ້ອງ ເບັ້ຽ 2 ແຫວັນ 25 ໜ່ອຍ ຊິໜັກລ້ານ 4 ແສນ 7 ໝື່ນ 6 ພັນ ເປັນເງິນ ຊັ່ງ 2 ຕຳລຶງ 2 ສລຶງ ເບັ້ຽ 3 ແຫວັນ. ນ້ຳອ້ອຍໜັກ 2 ລ້ານ 3 ແສນ 5 ໝື່ນ 6 ພັນ 8 ຮ້ອຍ ເປັນເງິນ 2 ຊັ່ງ 18 ຕຳລຶງ 3 ບາທ 2 ສລຶງເຟ້ອງ ເບັ້ຽ 2 ແຫວັນ 75 ໜ່ອຍ. ປູນ 6 ໝື່ນ 8 ພັນ 44 ຖັງ ເປັນ (ເງິນ) 37 ຊັ່ງ 9 ຕຳລຶງ ບາທ ສລຶງເຟ້ອງ ເບັ້ຽ 4 (ແຫວັນ) 93 ໜ່ອຍ, ກະເບື້ອງ 8 ແສນ 7 ໝື່ນ 8 ພັນແຜ່ນ ເປັນເງິນ 27 ຊັ່ງ 8 ຕຳລຶງ 3 ບາທ ດິນຂໍ 2 ພັນ 4 ຮ້ອຍ 2 ແຜ່ນ ເປັນເງິນ 10 ຕຳລຶງ 2 ບາທສລຶງ ເບັ້ຽແຫວັນ 26 ໜ່ອຍ ເຄື່ອງຂຽນທັງມວນເປັນເງິນ 9 ຊັ່ງ 12 ຕຳລຶງ 3 ບາທສລຶງເຟ້ອງເບັ້ຽ 50 ໜ່ອຍ, ຈ້າງຊ່າງຊຽນຝາຜນັງວັດ ແລະຈັງກິນເປັນນິທານຫລາຍປະການຕ່າງໆເປັນເງິນ ຊັ່ງ 2 ຕຳລຶງເຟ້ອງ ເບັ້ຽ 5 ແຫວັນ 15 ໜ່ອຍ. ຜ້າບັ້ງພຣະໃນພຣະ (ປະ) ທານ ແລະພຣະລາຍຮອບຈັງກົມຮ້ອຍ 23 ຜືນ ເປັນເງິນ 5 ຊັ່ງ 6 ຕຳລຶງ 2 ບາທ 2 ສລຶງເຟ້ອງ ຄະນະນາແຕ່ສ້າງ ສະຕະສະຫັສາຣາມາທີ່ມີ (ໂຮມ) ກັນທັງເຄື່ອງປະດັບ ເປັນເງິນ 3 ຮ້ອຍ 33 ຊັ່ງ 10 ຕຳລຶງ ເບັ້ຽແຫວັນ 44 ໜ່ອຍ ກໍບໍຣະບວນແລ້ວ ຄັນເຖິງສັກຣາຊພັນຮ້ອຍ 86 ຕົວ ປີກາບສັນ ເດືອນ 6 ຂຶ້ນ 9 ຄ່ຳ ວັນ 5 ສລອງວັດສະຕະສະຫັສສາຣາມາທີ່ມີຮູບສັພພະສັຕທັງປວງ ສັຕ 4 ຕີນຄືຮູບຊ້າງ ມ້າ ຣາຊະສີ ເສືອໂຄ່ງ ເປັນເຄົ້າ ສັຕ 2 ຕີນທັງຫລາຍມີຮູບພຍາຄຸດ ແລະນົກກໍຣະວິກຫັສດີລິງ ພຍາຫົງຄຳເປັນເຄົ້າ ແລະພຍານາຄະຣາຊ ມີປາສາທຕັ້ງບົນຫລັງ ໃສ່ພຣະທັມມາປິຕະກະທຸກຕົວສັຕ ມີທຸງກະດາດ ແລະທຸງໄຊຍຢາຍຕາມ 2 ຕາບຂ້າງຊ້າງມ້າຣາຊຣົຖຈັດຕັ້ງເປັນຖັນ ລຽນກັນຖືດອກໄມ້ທຽນທູບໄຕ້ຈວນຈັນ ຄັນທະຂອງຫອມ ແວດລ້ອມແທ່ພຣະທັມມະເຈົ້າ ສຽງຄື່ນເຄົ້າເຖິງພົນ ດັງຣະງົມ ຕຸຣິຍະນົນຕຣີທັງຫລາຍຜ່າຍກ້າໜ້າ ແລະກ້າຫລັງ ຮອບຣາຊວັງເຖິງ 3 ວັນ ມີເທພະດາ ທັງຄົນຜາຍດອກໄມ້ບູຊາ ພຣະທັມມະເຈົ້າແລ້ວ ພຣະອົງທັງພຣະ

ຣາຊສັທທາ ສວາງໄປຍັງໄທຍະທານຖວາຍເຄື່ອງ ອັຕຖະບໍຣິຂານແກ່ພຣະສັງຄະເຈົ້າທັງປວງ ມີໄຕຍະຈີວອນລ້ວແຣ ແພເທດເຂົ້າກັນ 2 ພັນ 9 ຮ້ອຍ 40 ໄຕຣບາຕຣ໌ 96 ໜ່ວຍ ກັມມະລໍ່ ມັສສາກາຣ 26 ໜ່ວຍ ໃສ່ຈອກແກ້ວ ຈອກຖ້ວຍ ຕີນທຽນທອງພ້ອມໂຄມແກ້ວກົມໃຫຍ່ນຶ່ງ ກຳພີ 2 ຮ້ອຍທຽນໝາກ 2 ແສນ 2 ພັນ ທູບ 2 ພັນ 9 ຮ້ອຍ 40 ມັດ ພັດປົກນົກ 28 ຕາຣະບັດຕານ 3 ຮ້ອຍຄັນໂທງວງຖົມບົ່ດ ບົ່ດຖາດຮອງ 2 ໜ່ວຍ ການ້ຳຖົມປັດ ການ້ຳເຄືອບ ການ້ຳບ້ານຊາ ການ້ຳທອງຄັນໂທຖ້ວຍ ຄັນໂທດິນ ເຂົ້າກັນ 2 ຮ້ອຍ 79 ໜ່ວຍ ກະໂຖນຖົມບົ່ດໃຫຍ່ນ້ອຍ ກະໂຖນຖ້ວຍລາຍກະໂຖນປາກແກໃຫຍ່ນ້ອຍ ກະໂຖນຂຽວປາກອອມ ກະໂຖນທອງ ເຂົ້າກັນ 2 ຮ້ອຍ 2 ໜ່ວຍ ພາກວາ (ພາກົ່ວ?) ຝາຊີ ພາສາມ ເຂົ້າກັນ 6 ຮ້ອຍ 42 ພາ ຖ້ວຍໃຫຍ່ນ້ອຍ ສຳຫລັບກັບພາເຂົ້າ 4 ພັນ 7-ຮ້ອຍ 12 ໃບ ກ່ອງເຂົ້າ 4 ຮ້ອຍ 18 ໜ່ວຍ ສາດອ່ອນ ສາດໂພທິສັດ ສາດອ່ຽນ ເຂົ້າກັນ 7 ຮ້ອຍ 56 ຜືນ ໝອນພ້ອມ ຮົ່ມ 6 ຮ້ອຍ 48 ຄັນ ຍ່າມໝາກເຄື່ອງທອງ ຮ້ອຍ 98 ຊຸມ ຖົງຢາແພ 4 ຮ້ອຍ 62 ໜ່ວຍ ເຄື່ອງເຫລັກ 3 ຮ້ອຍຊຸມ ເຫລັກໄຟ 5 ຮ້ອຍ 49 ດວງ. ໜັມມະກົກ 96 ໜ່ວຍ ກັບເຂັມ 96 ໜ່ວຍ, ເຫລັກຈານ 3 ຮ້ອຍ 40 ອັນ, ເກີບ 4 ຮ້ອຍ 41 ຄູ່, ກວດຢາມັດ 4 ອັນ, ໄອເຖົາ 60 ເຖົາ, ລັກກະຈັ່ນໃສ່ຈອກລອຍ 70 ໜ່ວຍ, ຊ້ຳຖວາຍເງິນໃຫ້ພຣະສັງຄະເຈົ້າ 24 ຊັ່ງ 16 ຕຳລຶງ 3 ບາທ ເບັ້ຽ 5 ແຫວັ້ນ ຖວາຍເນຣເປັນເງິນ 9 ຊັ່ງ 6 ຕຳລຶງ 2 ບາທ ມີກາລະພຶກສາມຕົ້ນເຖິງ 3 ອັນ ພຣະຣາຊທານໃຫ້ພວກຄົນຫລົ້ມມະໂຫຣະສົບທັງຫລາຍ ໃຫ້ທານຜ້າຊາຍຍິງທຸກໄຮ້ 2 ພັນຜືນ ສາລາທອດທານ 3 ແຫ່ງເຖິງ 9 ອັນ ມີໄຟຕອດ ໄຟດອກ ໄຟດອກໄມ້ຈູດບູຊາ ຄະນະມາແຕ່ສ້າງອັດເປັ່ນເງິນຕຣາ 5 ຮ້ອຍ 12 ຊັ່ງ 17 ຕຳລຶງ 3 ບາຖສລຶງເຟື້ອງ ໂຣມມ້ອມເຂົ້າກັນເປັ່ນເງິນຕຣາ 8 ຮ້ອຍ 49 ຊັ່ງ 7 ຕຳລຶງ 3 ບາທ 2 ສລຶງເຟື້ອງ ເບັ້ຽ 5 ແຫວັນ 12 ໜ່ວຍ ພຣະອົງຄ໌ກໍ່ຈຳແນກແຈກອອກຍັງສິ່ງຂອງນໍຣະທັບສັພພະທັງມວນ ຕາມຄະນະມາເຂົ້າຂອງຝູງນັ້ນເປັ່ນພຣະຣາຊສັດ–ທາ ພຣະອົງຄ໌ປະສົງຄ໌ສ້າງໄວ້ເປັ່ນມູລະສາສນາ ເພື່ອອຸປະນິສັຍບົ່ດໃຈ ຕຣອດນ້ຳອຸທິສະໄປຄ້ຳໄປຊູພຣະຣາຊບິດາ ພຣະຣາຊມານດາ ພຣະຍາຕິວົງສ໌ພົງສາແລະສັພພະສັດທັງປວງ ພາຍລຸ່ມແຕ່ອະເວຈີຂຶ້ນໄປ ພາຍບົນມີເນວະສັນຍາຍະຕະນາພົມ ລວງກົມມີແສນໂກດອະນັນຕະຈັກກະວານເປັ່ນທີ່ສຸດ ໃຫ້ມາຮັບເອົາຍັງສ່ວນບຸນຍະຣາສີ ກິຣິບາທານະວັດຖຸຝູງນັ້ນ ຝູງໃດໄດ້ສເວີຍສຸກແລ້ວ ຊ້ຳໃຫ້ໄດ້ສເວີຍສຸກຍິ່ງໆ ກວ່າເກົ່າ ສຸກພົ້ນເທົ້າແລະແສນທີ, ຝູງໃດໄດ້ສເວີຍທຸກແລ້ວ ຂໍໃຫ້ພົ້ນຈາກທຸກຂໍໃຫ້ໄດ້ສເວີຍສຸກທຸກຕົນທຸກຄົນ ທຸກຕົວສັຕມີໄດ້ຂາດ ພຣະອົງຄ໌ປາສາຕທິອຸດທິສະສ່ວນໂກສົນ ຜົນບຸນແຜ່ໄປທົ່ວສາກົລະຈັກກະວານທັງມວນ ສົມເດັດພຣະບໍຣົມມະນາຖ ບໍຣົມມະບໍພິຕຕະເຈົ້າ ອົງຄ໌ເປັ່ນພຣະຢູ່ຫົວ

ທອດພຣະທາຊທຶຣະໄທຍ ຈຶ່ງໄປດ້ວຍສັທທາເຜື່ອງໆ ມິໄດ້ຂາດ ຈຶ່ງປາສາດທີ່ຈຸ່ມທລອງດວງນີ້ໄວ້ກັບວັດສະຕະສະຫັສສາຣາມາທີ່ນີ້ ເທົ່າ 5 ພັນວັສສາ ຄຸງນຸປະສິທທິພຣະຣາຊອາຈຍາ.

ບັນທຶກປະກອບສິລາເລກ

1– ໃນສິລາເລກແຜ່ນນີ້ ເພິ່ນໃຊ້ຕົວອັກສອນເກືອບຄົບຕາມຕົວສັນສະກຣິດ ຕົວໃດບໍ່ມີໃນອັກສອນລາວ ເພິ່ນກໍໃຊ້ຕົວທັນແທນ ດັ່ງນັ້ນ ຕົວອັກສອນທີ່ກ່າຍອອກມາສູ່ອັກສອນລາວນີ້ ຈຶ່ງບໍ່ຄົບດັ່ງໃນສິລາເລກແທ້ ຕົວໃດພໍທຽບກັນໄດ້ກໍພຍາຍາມກ່າຍໃຫ້ໃກ້ກັນທີ່ສຸດ, ແຕ່ເພິ່ນກໍຂຽນຄຳຜິດໆຢູ່ແດ່ກໍມີ.

2– *ລາຍຈູນ:* ຄືສິລາເລກນັ້ນເອງ ໝາຍເຖິງບັນທຶກປວັດກ່ຽວກັບເຫດການອັນໃດອັນນຶ່ງ ລາງທ່ານວ່າ ຈຸ້ມ ຫລືບັ້ງຈຸ້ມກໍໄດ້.

3– ໃນສິລາເລກນີ້ ມີພຣະນາມວ່າ.........ພຣະມະຫາ ຂັຕຕິຍາທິເບດ ໄຊຍະເຊດຖາ....ຯລຯ ເຊິ່ງພວກເຮົາເຄີຍເຂົ້າໃຈກັນວ່າ ເປັນພຣະນາມຂອງເຈົ້າອະນຸວົງ ເວລາສະເດັດຂຶ້ນສເວີຍຣາຊສົມບັດແລ້ວ ແລະຖືວ່າ ເປັນພຣະໄຊຍະເຊດທິຣາດ ທີ 3 ຄືພຣະໄຊຍະເຊດຖາທິຣາດ ທີ 1 ແມ່ນອົງສ້າງພຣະທາດຫລວງ, ພຣະໄຊຍະເຊດຖາທິຣາດທີ 2 ແມ່ນພຣະໄຊຍອົງເວ້. ແຕ່ເມື່ອຂ້າພະເຈົ້າໄດ້ສຳຣວດເບິ່ງຈາຣຶກແທ່ນພຣະເກົ່າໆ ໃນຫໍພຣະແກ້ວ ມີຜາກົດພຣະນາມຂອງພຣະສີຣິບຸນຍະສານ ຫລືເຈົ້າອົງບຸນຢູ່ແທ່ນພຣະອົງນຶ່ງວ່າ ພຣະມະຫາບຸນຍະໄຊຍະເຊດຖາທັມມິກຣາຊາ ຂ້າພະເຈົ້າຖືວ່າ ພຣະນາມໃນແທ່ນພຣະເປັນພຣະນາມເວລາສເວີຍຣາຊສົມບັດແລ້ວ ດັ່ງນັ້ນ ຈຶ່ງຢາກສເນີຄວາມເຫັນໃໝ່ວ່າ ພຣະໄຊຍະເຊດຖາທິຣາດນັ້ນມີ 4 ອົງ. ໃຫ້ເຈົ້າອົງບຸນ ຫລືພຣະສີຣິບຸນຍະສານເປັນພຣະໄຊຍະເຊດຖາທິຣາດ ທີ 3 ໃຫ້ເຈົ້າອະນຸວົງ ເປັນພຣະໄຊຍະເຊດຖາທິຣາດທີ 4.

ໃນພຣະນາມທີ່ຈາຣຶກໃນສິລາເລກນີ້ ນັບວ່າມີຄວາມໝາຍດີ ສົມກັບສມັຍ ເສັຽແຕ່ການຂຽນມີອັກຂຣະວິບັດຢູ່ຫລາຍຄຳ ແລະມີລາງຄຳແປບໍ່ໄດ້ ອາດຈະຂຽນຜິດກໍໄດ້ ຍ່າງຄຳວ່າ: ມະຫາໂສພັສສັນໂຕ....?

4– ຄຳວ່າ ສະຕະສະຫັສວິຫາຣະຣາມາ ຫລືສະຕະສະຫັສະຣາມາ ຄວນເປັນສະຕະສະຫັສສະວິຫາຣ ຫລື ສະຕະສະຫັສສາຣາມ (ແປວ່າ ວັດແສນ).

5– ຄຳວ່າ ຈົງກົມ ແປວ່າ ບ່ອນເດີນກຳນົດອາຣົມ ທຳກັມມະຖານ ແຕ່ໃນທີ່ນີ້ໝາຍເຖິງກົມລຽນ (ກົມມະລຽນ) ຄຳວ່າ ກົມລຽນ ຈະໃຊ້ມາແຕ່ເມື່ອໃດກໍບໍ່ຮູ້.

6– ຄຳວ່າ "ພຣະທອງຫລໍ່ຄ່າພຣະອົງຄ໌ 2 ອົງຄ໌" ໝາຍເຖິງ ພຣະພຸທຮູບ ທີ່ທົງສ້າງຂຶ້ນແທນພຣະອົງ ຫລືສລອງພຣະອົງ ຄ້າຍກັບເປັນພຣະຕໍ່ອາຍຸ ຫລືພຣະພຸທຮູບປະຈຳຣັຊການ.

7– ພຣະອຸໂປສົດ ຫລື ສິມນີ້ ລາງເທື່ອເພິ່ນໃຊ້ວ່າ *ວັດ* ດັ່ງຄຳວ່າ "ສ້າງພຣະໃສ່ຊອງກຸດຝາຜນັງວັດ...." ລາງເທື່ອເພິ່ນໃຊ້ວ່າ ວິຫານ ດັ່ງຄຳວ່າ "ພຣະພຸທຮູບໃຫຍ່ໃນວິຫານ...."

8– "ສ້າງຈຸລວິຫາຣ" ໝາຍເຖິງວິຫານນ້ອຍໃສ່ພຣະພຸທຮູບເກົ່າ ຈັກວ່າຢູ່ບ່ອນໃດ?

9– "ສ້າງພຣະເຈດີ 2 ອົງຄ໌" ໝາຍເຖິງພຣະເຈດີ 2 ອົງທີ່ເຫັນຢູ່ດ້ານໜ້າສິມປັດຈຸບັນນີ້. ເມື່ອວັດນີ້ຢູ່ໃນສມັຍເປັນວັດຮ້າງນັ້ນ ທາດພ່ອຍເໜືອເພລົງ ຄົນປະຕິສັງຂອນວັດນີ້ຂຶ້ນໃໝ່ໄດ້ເອົາພຣະພຸທຮູບແຕກໆຫັກໆກັບໜັງສືທັນໃບລານທີ່ແຕກຜູກ ເຂົ້າກັນແລະກໍທາດກອນໄວ້ບ່ອນເກົ່ານີ້ ແຕ່ຈະເປັນສັດທາຂອງໃຜບໍ່ຮູ້ ຮູ້ແຕ່ວ່າ ຕໍ່ມາໄດ້ເປັນບ່ອນບັນຈຸອັດຖິ ເຈົ້າຈິຕຣາດ. ສ່ວນທາດພ່ອຍໃຕ້ເປັນແຕ່ປະຕິສັງສອນຕື່ມໂດຍ ເຈົ້າຍິງແສງຈັນ ຊາຍາເຈົ້າຈິຕຣາດ ແລະໄດ້ບັນຈຸອັດຖິ ເຈົ້າຍິງແສງຈັນ ໃນເວລາຕໍ່ມາ.

10– ໃນສິລາເລກບອກວ່າເພິ່ນສ້າງ ຫໍໄຕປິດົກ (ຍັງຢູ່), ສ້າງສາລາໂຮງທັມ (ບໍ່ເຫັນ) ສ້າງກະດີໝູ່ 2 ໝູ່, ກະດີລາຍ 8 ຫລັງ, ສ້າງຫໍກອງມີທັງກອງແສ່ງ, ຄ້ອງພ້ອມ, ສ້າງທີ່ສົງນ້ຳ ແລະວິດ ຂອງທັງ 4 ຢ່າງເຫລົ່ານີ້ ບໍ່ເຫລືອແລ້ວ ຖ້າອານາເຂດທີ່ເຫລືອຢູ່ເວລານີ້ ຄົງຈະສ້າງສິ່ງດັ່ງກ່າວນັ້ນບໍ່ພໍ ແລະຄົງຈະບໍ່ສົມເປັນຂອງວັດພຣະເຈົ້າມະຫາຊີວິດໂດຍແທ້ ເຂົ້າໃຈວ່າສົມຄົງຢູ່ກາງວັດ ຄົງບໍ່ແມ່ນຢູ່ແຈໆວັດດັ່ງດຽວນີ້.

11– ເພິ່ນບອກອີກວ່າ "ສ້າງກຳແພງຮອບອາຣາມະເຂດທັງ 4 ດ້ານ" ກຳແພງທີ່ເຫັນປັດຈຸບັນນີ້ ສ້າງເມື່ອປະຕິສັງຂອນວັດໃໝ່ປະມານປີ ຄ.ສ. 1923 ມານີ້ ເດີມເປັນກຳແພງເຕັ້ຍພັ້ງຍ່ອນຍາໄດ້, ຕໍ່ມາ ສມັຍນາຍພັນພູມີ ມີອຳນາດໄດ້ຂຍາຍຖນົນລ້ານຊ້າງ ໄດ້ແຫຍ້ເອົາດິນວັດທາງດ້ານຕາເວັນຕົກຈົນເຖິງຕີນຫໍໄຕ ຕ້ອງມ້າງກຳແພງເກົ່າອອກ ເມື່ອປີ ຄ.ສ. 1963 (?) ເພື່ອເປັນການແລກປ່ຽນດິນວັດ ຈຶ່ງໃຊ້ກຳລັງທະຫານສ້າງກຳແພງໃຫ້ໃໝ່ ດັ່ງເຫັນຢູ່ທຸກວັນນີ້ ແລະສ້າງກະດີກໍ່ດິນ 2 ຊັ້ນ ຖວາຍເປັນກະດີເຈົ້າອາວາດວັດອີກນຶ່ງຫລັງ, ສ່ວນປະຕູໂຂງ ດ້ານຕາເວັນຕົກ (ໃກ້ໄປທາງສະພາຣາຊມົນຕຣີ) ນັ້ນໄດ້ຂຸດເຖິງຮາກແລ້ວ ໃຊ້ກຳລັງຣົດຄ່ອຍແກ່ເຂົ້າມາຈົນໄດ້ບ່ອນຕ້ອງການ. ເມື່ອເວົ້າຕາມສິລາເລກ ເຂດວັດຕ້ອງກວ້າງກວ່ານີ້ຫລາຍ ແລະຄົງເປັນກຳແພງດິນ

ຈີ່ດັກແມ່ ບໍ່ແມ່ນຕ້າຍໄມ້ແກ່ນ ແຕ່ສຳຣວດບໍ່ໄດ້ ເພາະມີສິ່ງກໍ່ສ້າງອ້ອມຮອບຂັດຂວາງ ດັ່ງຈະຖືກຕັດຖືກແຫຍ້ເອົາເລື້ອຍ ໆ ມາຈົນເຫລືອຢູ່ຢ່າງທຸກມື້ນີ້.

12. ຂໍໃຫ້ສັງເກດແນວນຶ່ງວ່າ ເພີ່ມລະອຽດລະອໍໃນການຈົດລາຍການຈ່າຍ ແລະລາຍການສິ່ງກໍ່ສ້າງເອົາແທ້ ໆ ເພື່ອໃຫ້ທ່ານຜູ້ບໍ່ຮູ້ອັຕຣາຂອງເງິນສມັຍນັ້ນ ຈະໄດ້ຮູ້ຂໍບອກໄວ້ດັ່ງນີ້.

3 ສະຕາງ = 1 ໄພ, 4 ໄພ ຫລື 12 ສະຕາງ = 1 ເຟື້ອງ,

23 ສະຕາງ = 1 ສລຶງ, 4 ສລຶງ = 1 ບາດ, 4 ບາດ = 1 ຕຳລຶງ,

20 ຕຳລຶງ ຫລື 80 ບາດ = 1 ຊັ່ງ. ສ່ວນເງິນເບັ້ຽ 100 ພ່ວຍ = 1 ແຫວັນ.

13. ເນື່ອງຈາກພຣະເຈົ້າອະນຸວົງ ໄປໃຫຍ່ຢູ່ບາງກອກປະເທດໄທ, ເຫດນັ້ນ ຊື່ສິ່ງຂອງລາງແນວຈຶ່ງໃຊ້ນຳໄທ ເຊິ່ງອາດຈະຖືວ່າເປັນຄຳມີກຽດ ດັ່ງດຽວກັບລາວໃນສມັຍຂຶ້ນກັບຝຣັ່ງເສດຖ້າໃຊ້ຄຳຝຣັ່ງກໍວ່າມີກຽດນັ້ນແລ. ຂໍອະທິບາຍໄວ້ເປັນລາງຄຳດັ່ງນີ້: ກະດີທີ່ປຸກແບບຫ້ອງແຖວຮ້ອງວ່າ *ກະດີຫມູ່*, *ກະດີລາຍ* ນັ້ນ ເຮັດເປັນຫລັງ ໆ ລຽນກັນໄປເປັນແຖວ.

— ແກ້ວປະດັບຂາວຂຽວ: ແມ່ນແວ່ນສີຂາວ–ສີຂຽວ ສຳລັບຕັດປະດັບຕາມດອກດວງຕ່າງ ໆ ຍັງມີໃຫ້ເຫັນຢູ່ນຳພ້າທໍ່ບ່ອງປະຕູກົມລຽນນັ້ນທຸກທໍ (ເຊິ່ງມີອາຍຸເຖິງ 150 ປີປາຍແລ້ວ).

— ກຳມະລໍມັສສາການ = ພາຊນະໃສ່ນ້ຳຂຽນລາຍ (?).

— ພວກເຄື່ອງ *ຄົມປັດ* ແມ່ນພາຊນະທີ່ເຮັດດ້ວຍທອງແດງທອງເຫລືອງທີ່ພອກນ້ຳຢາປະສົມກັບພາກປັດແກ້ວທີ່ບົດໃຫ້ມຸ່ນເປັນຝຸ່ນ ເພື່ອໃຫ້ເປັນສີແລະລິງລາຍຕ່າງ ໆ. ຄົນໂທຖ້ວຍແມ່ນຄົນໂທແບບຖ້ວຍທີ່ມີລິງລາຍ, ຄົນໂທດິນແມ່ນຢ່າງຄົນໂທດິນເຜົາທັມມະດາ, ຄຳວ່າກະໂຖນ ແມ່ນງຽງນັ້ນເອງ. ຄຳວ່າພາ–ກວານັ້ນ ເຂົ້າໃຈວ່າພາກ້ວ ຄືພາເຂົ້າທີ່ເຮັດດ້ວຍກ້ວດ້ວຍຊືນ ບໍ່ແມ່ນສານດ້ວຍໄມ້ໄຜ່. ຝາຊີແມ່ນເຄື່ອງສານສຳລັບງວຳຂອງກິນ ບໍ່ໃຫ້ແມງວັນຕອມຫລືຝຸ່ນໃງ່ໃສ່. ສາດອ່ອນແມ່ນສາດຈີນ ຫລືສາດລາວທັມມະດາ, ສາດໂພທິສັດ ແມ່ນສາດເຮັດມາຈາກເມືອງໂພທິສັດເມືອງຂເມນ. ສາດອ່ຽນແມ່ນສາດໄຫລ. ທັມມະກົກ (ທະມະກະຣົກ) ແມ່ນກະບັ້ງຕອງນ້ຳ, ຍ່າມແມ່ນຖົງຜ້າ, ກອດຢາມັດແມ່ນແນວໃສ່ຢາມັດ ເຊິ່ງອາດນິຍົມກັນໃນສມັຍນັ້ນ ແລະຍັງມີຢູ່ໃນເມືອງໄທເທົ່າດຽວນີ້ ແຕ່ຢາມັດທີ່ເພີ່ນກ່າວໄວ້ນີ້ ຈະເປັນຢາມັດແນວໃດກໍບໍ່ຮູ້ດັກ. ລັກກະຈັ່ນໃສ່ຈອກລອຍ ແມ່ນພໍ້ໃສ່ນ້ຳໃນເວລາເດີນທາງໄກ ສຳລັບພຣະທັມພຣະທຸດົງໃຊ້. ຄຳວ່ານໍຣະທັບ ສັພພະທັງມອນ ໝາຍເຖິງຊັບສິ່ງຂອງທີ່ທອດທານທັງປວງ. ຄຳວ່າສວາງໄປ ໝາຍຄວາມວ່າສລະທອດເທໄປ. ຄຳວ່າ "ຄຸງມຸປະສິດທິພຣະຣາຊອາຈຍາ" ໝາຍຄວາມວ່າຈັດທຳ ຫລືບັນທຶກຕາມພຣະຣາຊໂອງການຕັດສັ່ງ ຫລືບັນທຶກນີ້ສຳເຣັດລົງຕາມພຣະຣາຊອາດຍາ.

14. ໃນຕອນຈັດການສລອງວັດນັ້ນກ່າວວ່າ ສັກຣາດພັນຮ້ອຍ 86 ຕົວນັ້ນ ຄືຈຸລສັກຣາດ 1186 ກົງກັບ ພ.ສ. 2367– ຄ.ສ. 1824 ໂຣມເວລາສ້າງຢູ່ 7 ປີຈິ່ງສຳເຣັດ ນັບແຕ່ກໍ່ສ້າງ (ຄ.ສ. 1818) ຈົນເຖິງປີ ຄ.ສ. 1974 ມີອາຍຸໄດ້ 156 ພໍດີ, ຫາກບ້ານເມືອງດີປີເມືອງກວ້າງ ເມື່ອວັດຄົບອາຍຸ 175 ປີ ຫລື 200 ປີ ຄວນຈະມີການສ້ອມແປງໃຫຍ່ ແລະສລອງໃຫຍ່ກໍຈະເປັນການດີ.

ທີ່ເພິ່ນກ່າວວ່າ ໃນເວລາສລອງເພິ່ນສ້າງຮູບສັດ 4 ຕີນ, 2 ຕີນແລະຮູບນາຄຣາດນັ້ນແມ່ນເຮັດຮູບໃສ່ເຄື່ອງທານສຳລັບແຫ່ ບໍ່ແມ່ນຮູບສັດຖາວອນແຕ່ຢ່າງໃດ.

15. ສີລາເລກແຜ່ນນີ້ ແຕ່ເດີມຢູ່ທາງດ້ານຫລັງຂອງສິມ ເມື່ອທ່ານໂຟນແບັກໂຕທຳການປົວແປງພຣະທາດຫລວງ ແລະວັດສີສະເກດ ເມື່ອ ຄ.ສ. 1930 ຈິ່ງເອົາສີລາເລກກ່ຽວກັບການສ້າງວັດນີ້ ມາຕິດຕັ້ງໄວ້ປະຕູກົມລຽນດ້ານໜ້າສິມ ດັ່ງທີ່ເຫັນຢູ່ທຸກມື້ນີ້.

ສ່ວນສີລາເລກຮູບຕົວເພິ່ງຕົວສເວີຍ ທີ່ຢູ່ກົງກັນຂ້າມກັບສີລາເລກແຜ່ນສຳຄັນນັ້ນ, ໄດ້ຍິນວ່າສະເດັດເຈົ້າມະຫາອຸປຣາດເພັຊຣາດຕັດສັ່ງໃຫ້ເອົາມາແຕ່ວັດສີເມືອງ ເພາະຖິ້ມຢູ່ບ່ອນບໍ່ປອດພັຍ ແລະມີຄົນບໍ່ຮູ້ຄຸນຄ່າຂອງບູຮານ ໄດ້ໃຊ້ເປັນຫີນຝົນພ້າໄປແດ່ແລ້ວ ແຕ່ເພິ່ນຈະເອົາມາແຕ່ປີໃດກໍບໍ່ຮູ້ຄັກ.

ວັດສີສະເກດຄືນຊີບ

ຫລັງຈາກພຣະເຈົ້າອະນຸວົງສ໌ ຫລືພຣະໄຊຍະເຊດຖາທິຣາດທີ 4 ທຳການກູ້ຊາດຈາກສຍາມບໍ່ສຳເຣັດ ກອງທັບສຍາມເຂົ້າທຳລາຍລ້າງວຽງເຖິງສອງຄັ້ງສອງຄາວ ແລະພຣະອົງເອງທັງພຣະມະເຫສີໂອຣົດທິດາຍາຕິວົງ ຖືກລາວຜູ້ພັກດີຕໍ່ໄທຕ່າງດ້າວທ້າວຕ່າງແດນ ຈັບສົ່ງໃຫ້ກະສັດສຍາມຈົນຖືກທໍຣະມານສະເດັດສຸຣະຄົດແລ້ວ, ກຸງຈັນທະບຸຣີສຣີສັຕນາຄະນະຫຸດ ອຸຕມະຣາຊທານີ ຕົກຢູ່ໃນສະພາບເປັນ "ວຽງຈັນຮ້າງເປັນໂພນຂີ້ໝາຈອກ" ຢູ່ຕອນນຶ່ງ ຊີວິດຂອງປະເທດລ້ານຊ້າງທັງ 3 ອານາຈັກຕົກຢູ່ໃນຍຸກມືດ, ແລະວັດສີສະເກດກໍເສົ້າໝອງລົງ ເພາະຫາຄົນອຸປຖັມຄ້ຳຊູບໍ່ໄດ້ ປວັດຂອງວັດໄດ້ຂາດຕອນໄປ ຄ້າຍກັບມັນຕາຍໄປດອມຊົນຊີບຂອງພຣະຜູ້ສ້າງມັນຂຶ້ນມາ ກາຍເປັນວັດຮ້າງຮົກເຮື້ອຢ່າງໜ້າສັງເວດສລົດໃຈ ມີຄື້ຣົດແຫ່ງສົງຄາມ ແລະຄວາມເສັຽເອກຣາດຂອງຊາດ!

ເມື່ອຝຣັ່ງເສດໄດ້ເມືອງລາວເປັນຫົວເມືອງຂຶ້ນຈາກສຍາມແລ້ວ ກໍບູຣະນະສ້ອມແປງນະຄອນວຽງຈັນ ໃຫ້ເປັນນະຄອນຫລວງຂອງລາວ ເປັນສູນກາງຕັ້ງໂຮງການປົກຄອງລາວ ສ່ວນນະຄອນຫລວງພຣະບາງນັ້ນ ເປັນແຕ່ພຽງຣາຊທານີ (ເມືອງປະທັບຂອງພຣະມະຫາກະສັດ) ເມື່ອວຽງຈັນຄືນຊີບເປັນເມືອງຫລວງອີກເທື່ອນຶ່ງ, ວັດສີສະເກດກໍຄ່ອຍຟື້ນຄືນມີລົມຫັນໃຈມາໂດຍລຳດັບ ນັບຈາກ

ສະພາບເປັນວັດຜັ່ງຕົວຢູ່ແຄມປ່າ ເຊິ່ງບໍ່ຖືໄປກວ່າຫໍພຣະແກ້ວໃນສມັຍດຽວກັນ ເລີ່ມມີພຣະສົງສາມ–ເນນເຂົ້າຖາກຖາງປ່າ ຢູ່ປະຈຳແຕ່ປະມານປີ ພ.ສ. 2466 ຄ.ສ. 1923 ເປັນຕົ້ນມາ, ຫລັງສິມ, ຫໍໄຕ ກົມລຽນ ໄດ້ຖືກສ້ອມແປງມາໂດຍລຳດັບ ໂດຍຄວາມເບິ່ງແຍງຂອງສະເດັດເຈົ້າເພັຊຣາດ ສມັຍຍັງເປັນເຈົ້າຣາຊພາຄີໄນ ແລະສະເດັດເຈົ້າສຸວັນນະພູມາ ກະດີຂອງສະເດັດເຈົ້າເພັຊຣາດສ້າງຖວາຍຍາ–ທ່ານຫລັກຄຳແກ້ວ ກໍຍັງຢູ່ເທົ່າບັດນີ້.

ປີ ພ.ສ. 2467– ຄ.ສ. 1924 ທາງຣາຊການໄດ້ນິມົນເອົາຍາທ່ານຫລັກຄຳແກ້ວ ເຊິ່ງເປັນຄົນບ້ານພອງພ່ຽງ ເມືອງໄຊທານີດຽວນີ້ ມາເປັນເຈົ້າວັດ ເພີ່ນເປັນສັດທິວິຫາຣິກຂອງຍາທ່ານມີ ເຊິ່ງເຄີຍເປັນຜູ້ມາຢູ່ວັດສີສະເກດຄາວນຶ່ງ ກ່ອນທີ່ມັນຈະເປັນວັດຮ້າງເທື່ອສຸດທ້າຍ ແລະກ່ອນທີ່ຍາທ່ານຫລັກຄຳແກ້ວຈະມາເປັນເຈົ້າວັດ.

ຍາທ່ານຫລັກຄຳແກ້ວ ໄດ້ເປັນເຈົ້າຣາຊາຄນະປະຈຳວຽງຈັນຢູ່ເທີງ ຈົນເຖິງປີ ພ.ສ. 2496 ຄ.ສ. 1953 ລາວໄດ້ເອກຣາດແລ້ວ ຈຶ່ງເຖິງແກ່ມໍຣະນະພາບ, ຕໍ່ຈາກນັ້ນ ທາງຣາຊການໄດ້ນິມົນເອົາທ່ານຍາຄຣູຫລວງຈາກວັດອິນແປງ ມາເປັນເຈົ້າວັດ ແລະເປັນຍາຄຣູຫລັກຄຳ ຕຳແໜ່ງເຈົ້າຄນະແຂວງວຽງຈັນ ແຕ່ເພີ່ນຢູ່ໄດ້ເຖິງປີ ພ.ສ. 2497– ຄ.ສ. 1954 ກໍເຖິງແກ່ມໍຣະນະພາບ ຕໍ່ຈາກນັ້ນ ທາງການຈຶ່ງຕັ້ງຍາຄຣູເປັ້ງ ຖີຣະຈິຕໂຕ ເປັນເຈົ້າອາວາດວັດສີສະເກດສືບມາເທົ່າບັດນີ້.

ບັດນີ້ ວັດສີສະເກດເປັນວັດຫລວງ ຣັຖບານລາວທີ່ຈະເຂົ້າຮັບຕຳແໜ່ງໃໝ່ ເຄີຍເຂົ້າທຳພິທີສາບານຕົວຕາມຣັຖທັມມະນູນບັນຍັດໄວ້, ປູຊະນີຍະວັດຖຸ ແລະປູຊະນີຍະສະຖານໃນວັດນີ້ ນັບແຕ່ພຣະພຸທຮູບ, ຫໍໄຕແລະສິມ ຢູ່ໃນບັນຊີແລະຢູ່ໃນຄວາມຄຸ້ມຄອງເບິ່ງແຍງກົມບູຣານຄະດີ ກະຊວງທັມ-ມະການຢ່າງຄົບຖ້ວນ.

ພຣະຣາຊປວັດທຍ໌ຂອງພຣະເຈົ້າອະນຸວົງ

ສຸດທ້າຍຂໍແຖມພຣະຣາຊປວັດທຍ໌ ຂອງພຣະອົງຜູ້ຊົງສ້າງວັດສີສະເກດ ຫລືວັດສະຕະ–ສະຫັສສາຣາມໄວ້ນຳດັ່ງນີ້ :–

ພຣະໄຊຍະເຊດຖາທິຣາດທີ 4 ເຊິ່ງຄົນທັງຫລາຍຮູ້ຈັກພຣະອົງໃນພຣະນາມເດີມວ່າ ເຈົ້າອະນຸວົງນັ້ນ ເປັນພຣະຣາຊໂອຣົດຂອງພຣະໄຊຍະເຊດຖາທິຣາດທີ 3 ເຊິ່ງຄົນທັງຫລາຍຮູ້ຈັກພຣະອົງໃນພຣະນາມວ່າເຈົ້າອົງບຸນ ຫລືພຣະເຈົ້າສິຣິບຸນຍະສານ, ປະສູດເມື່ອປີ ພ.ສ. 2310 (ຄ.ສ. 1767)

ຄັນຣາຊອານາຈັກວຽງຈັນຂອງພຣະຣາຊບິດາ ເສັຽເອກຣາດແກ່ສຍາມເມື່ອ ພ.ສ. 2321/ຄ.ສ. 1779 ແລ້ວ ພຣະອົງພ້ອມທັງພຣະເຊຕຖາ ຄືເຈົ້ານັນທະເສນ ເຈົ້າອິນທະອົງ ຕ້ອງຖືກກັກຕົວເປັນປະກັນຢູ່ບາງກອກ ເວລານັ້ນ ພຣະອົງມີພຣະຊົນໄດ້ 13 ປີ.

ເມື່ອ ພ.ສ. 2338 ຄ.ສ. 1795 ເຈົ້າອິນທະອົງໄດ້ມາເປັນເຈົ້າແຜ່ນດິນ ຄອງນະຄອນວຽງຈັນ ເຈົ້າອະນຸວົງໄດ້ມາເປັນເຈົ້າມະຫາອຸປຮາດ, ໄດ້ອອກຕີເສິກກັບພະມ້າ ຊ່ອຍກອງທັບສຍາມຫລາຍເທື່ອ ແລະມີຊັຍທຸກເທື່ອ.

ຄັນເຖິງປີ ພ.ສ. 2347 ຄ.ສ. 1804 ສົມເດັດພຣະເຈົ້າອິນທະອົງ ຜູ້ເປັນພຣະເຊຕຖາທິຮາດ ສະເດັດສູຣະຄົດ, ກະສັດສຍາມຈິ່ງສະຖາປະນາເຈົ້າມະຫາອຸປຮາດອະນຸວົງ ໃຫ້ເປັນກະສັດຄອງນະຄອນວຽງຈັນໃນປີນັ້ນ.

ເມື່ອສເວີຍຮາດແລ້ວ ໄດ້ສະເດັດໄປຮາຊການທັບເຖິງຊຽງຕຸງ, ຊຽງຮຸ່ງ, ເມືອງລື້, ໄດ້ສະເດັດໄປສ້ອມແປງແລະໄຫວ້ພຣະທາຕຸພະນົມ ທັງໄດ້ສ້າງຂົວຂ້າມນ້ຳຂອງແຖວວັດຊ້າງເຜືອກ ມາຫາບ້ານພອງປ່າໄມ.

ປີ ພ.ສ. 2349– ຄ.ສ. 1806 ໄດ້ສ້າງຜາສາດຣາຊວັງຂຶ້ນໃໝ່ໃນນະຄອນວຽງຈັນ.

ປີ ພ.ສ. 2361– ຄ.ສ. 1818 ທັງຕັ້ງແຮກກໍ່ສ້າງວັດສະຕະສະຫັສສາຣາມ ຫລືວັດສີສະເກດ ຈົນເຖິງປີ ພ.ສ. 2367– ຄ.ສ. 1824 ຈິ່ງສຳເຣັດແລະທັງສລອງວັດໃນປີນັ້ນ.

ປີ ພ.ສ. 2370– ຄ.ສ. 1827 ພຣະອົງທັງປະກາດເອກຮາດບໍ່ຍອມຂຶ້ນກັບສຍາມ ແລະຍົກທັບລົງໄປຈົນເຖິງນະຄອນຣາຊສີມາ, ແຕ່ພຣະອົງເສັຽຊັຍໃຫ້ແກ່ກອງທັບສຍາມ ພຣະອົງພ້ອມທັງພຣະມະເຫສີ, ພຣະໂອຣົດທິດາ ຕ້ອງຖືກທໍຣະມານແລະຖືກປະຫານພຣະຊົນ ໃນຖານວ່າເປັນກະບົດຕໍ່ກະສັດສຍາມ!

ນັ້ຄືພົນຂອງບຸກຄົນຜູ້ຮັກຊາດຮັກເອກຮາດ ທີ່ທຳການປົດແອກຂອງຊາດ ຖ້າທຳການມີຊັຍຊນະກໍໄດ້ເປັນວີຣະບຸຣຸດ ເປັນມະຫາບຸຣຸດ ຫລືເປັນມະຫາຮາດ, ແຕ່ຖ້າເສັຽຊັຍກໍຖືກຖືວ່າ ເປັນຄົນທໍຣະຍົດເປັນກະບົດ!.

* * *



ເສົາຫິນຫລັກເມືອງ ທີ່ວັດສິເມືອງ ວຽງຈັນ

ວັດສີເມືອງ ນະຄອນວຽງຈັນ

ໂດຍ ຈັນທ໌ ອິນທຸພິລາສ

ວັດສີເມືອງ ແຫ່ງນະຄອນວຽງຈັນ ຕັ້ງຢູ່ທາງລຸ່ມ ເຊິ່ງເປັນບ່ອນປະດິສຖານພຣະບໍຣົມຮູບພຣະເຈົ້າສຣີສວ່າງວົງສ໌, ດ້ານໜ້າຕິດກັບຖນົນໄຊຍະເຊດຖາທິຣາດ ດ້ານຫຼັງຕິດກັບຖນົນສາມແສນໄທ.

ວັດສີເມືອງ ນັບເນື່ອງໃນພຣະອາຣາມຫລວງທີ່ມີກຽດແລະສັກສິດ ເພາະຖືກັນວ່າເປັນວັດມີ "ຫລັກເມືອງ" ອັນເຂດຢຳຕັ້ງຢູ່ໃນສິມ, ໄດ້ຍິນວ່າ ວັດສີເມືອງ ນັບເປັນ *ສີ* ນຶ່ງໃນ *ສີທັງ* ຄື: ສີເມືອງ, ສີມູມ, ສີຖານ, ສີບົວບານ, ແລະສີທອນ, ໃນສມັຍບູຮານ ເມື່ອຈະມີພຣະຣາຊພິທີຣາຊາພິເສກ ພຣະສົງໃນວັດສີທັງ ດັ່ງກ່າວນັ້ນ ຕ້ອງສູດນ້ຳພຣະພຸທມົນສົ່ງໄປປະສົມກັບນ້ຳ ມຸດທາພິເສກ ທີ່ຈະຫົດສົງພຣະມະຫາກະສັດ ອົງສະເດັດຂຶ້ນສເວີຍຣາຊສົມບັດໃໝ່ນັ້ນ.

ວັດສີເມືອງ ແມ່ນວ່າຈະເປັນວັດຫລວງມີມາແຕ່ບູຮານກໍຕາມ ແຕ່ຈະຫາຫລັກຖານຕຳນານອັນໝັ້ນແກ່ນແໜ້ນແນ່ນັ້ນບໍ່ໄດ້ ເພາະບໍ່ມີທ່ານຜູ້ໃດຂຽນປະວັດໄວ້ ຫລື ເຮັດສີລາເລກໄວ້ໃຫ້ເຫັນຮ່ອງຮອຍ ມີແຕ່ເວົ້າກັນກ່ຽວກັບຫລັກຫີນສີ່ລ່ຽມໃຫຍ່ໃນສິມເວລານີ້ ເຊິ່ງຖືວ່າເປັນຫລັກເມືອງນັ້ນສືບໆກັນມາ.

ປະວັດຂອງວັດນັ້ນໃຜກໍມັກເລົ່າເຣື່ອງຕິດເນື່ອງກັບຫລັກເມືອງເປັນຕົ້ນເຫດທັງນັ້ນ ຂ້າພະເຈົ້າຈຶ່ງຂໍເລົ່າຕາມຄຳເລົ່າຂອງພໍ່ຕູ້ໂງ່ນ ອາຍຸ 81 ປີ ແຫ່ງຄຸ້ມເພັຽວັດ ກ່ຽວກັບເສົາຫີນຫລັກເມືອງທີ່ຈະພາໃຫ້ຮ້ອງຊື່ວັດນີ້ວ່າ ວັດສີເມືອງ ນັ້ນດັ່ງນີ້ :–

ຈະເປັນປາງໃດສມັຍໃດ ບໍ່ມີຕຳຣາໃດບອກແຈ້ງ ແຕ່ເລົ່າເຣື່ອງສືບໆກັນມາວ່າ ປາງເມື່ອຈະຕັ້ງຫລັກເມືອງທຳອິດນັ້ນ ເພິ່ນໄດ້ຂຸດຂຸມໃຫຍ່ສີ່ລ່ຽມພໍທີ່ຈະຝັງຄົນຜູ້ນຶ່ງກັບມ້າໃຫຍ່ໂຕນຶ່ງໄດ້ ຕັ້ງເຄື່ອງກິຍາບູຊາເທພາອາຣັກທັງຫລາຍ ຕັ້ງເສົາຫີນນັ້ນໄວ້ເທິງປາກຂຸມ ມີມ້າຂາວໂຕນຶ່ງຜູກຢູ່ໃກ້ຂຸມນັ້ນພ້ອມທີ່ຈະເອົາລົງຂຸມນັ້ນໄດ້ໃນທັນໃດ ມີພານມາຈານທຳພິທີບວງສວງຢູ່ອ້ອມປາກຂຸມ ພ້ອມທັງເຄື່ອງດົນຕຣີເສບງັນຢູ່ຕລອດເວລາ ແລ້ວມີຜູ້ແຫ່ຂະບວນຕີຄ້ອງຮ້ອງປ່າວໄປທົ່ວເມືອງ ແລະບ້ານໃຫຍ່ນ້ອຍທີ່ຢູ່ໃກ້ຖັດລັດລຽງກັບຄູວຽງວ່າ ເພິ່ນ (ຄົງໝາຍເຖິງພຣະມະຫາກະສັດ) ຈະຝັງຫລັກໝັ້ນຫລັກເມືອງໃຜຈະໄປເປັນເຈົ້າບ້ານເຈົ້າເມືອງ ໄປເປັນອາຣັກປົກປັກຮັກສາບ້ານເມືອງກໍຂໍເຊີນເຍີ, ໃນນີ້ຈະໄດ້ຜັງ

ຫລັກເມືອງນັ້ນ ມີແມ່ມານຜູ້ນຶ່ງຊື່ ສີ ຖືພາມານໄດ້ 3 ເດືອນ ຢູ່ບ້ານໄຊ ພົວໄປມາກ່ຽວເຂົ້າ, ເມື່ອນາງໄດ້ຍິນຄຳຂ່າວດັ່ງນັ້ນ ກໍບັນດົນໃຈຢາກໄປເບິ່ງເພີ່ນຝັ່ງຫລັກເມືອງເປັນຢ່າງຍິ່ງ ຈຶ່ງນຸ່ງເຄື່ອງໃໝ່ແລ້ວເດີນທາງມາກັບຂະບວນຮ້ອງຂ່າວ, ພໍມາເຖິງ ໄດ້ໄປສ່ອງເບິ່ງຂຸມນັ້ນ 2 ເທື່ອ ຄັນເຖິງເທື່ອທີ 3 ແມ່ມານສີ ກໍໂຕນລົງຂຸມ ເຈົ້າພິທີທີ່ຄອຍຢູ່ທຸກເວລານັ້ນໄດ້ຮ້ອງຂຶ້ນວ່າ ໄດ້ຣືກງາມຍາມດີແລ້ວ ພວກກຳກັບມ້າກໍຕັດເຊືອກມ້າ ຊູກມ້າລົງຂຸມ, ພວກກຳກັບເສົາຫີນກໍຖອດບ່ອນຢອງ ໃຫ້ເສົາຫີນທັ່ງລົງໃນຂຸມ ກໍຄົງຈະຖືກແມ່ມານກັບມ້ານັ້ນຕາຍທັນທີ ພວກທຳພິທີກໍເສບຄ້ອງເສບກອງເປັນການຕື່ນທ້ອງເອົາຣືກເອົາຊັຍພົດສນັ້ນ ພວກຖົມດິນກໍຖົມ ເປັນອັນເສັດພິທີຝັ່ງຫລັກເມືອງ. ເມື່ອເຖິງມາ ໄດ້ມາຕັ້ງວັດໃສ່ສະຖານທີ່ແຫ່ງນີ້ ຈຶ່ງຮ້ອງຊື່ວັດນີ້ ຕາມຊື່ຂອງແມ່ມານສີ ແລະເອົາຄຳວ່າ ຫລັກເມືອງມາປະກອບກັນເຂົ້າວ່າ ວັດສີເມືອງ ດັ່ງນີ້:

ຕໍ່ມາມີການເວົ້າເຖິງຄວາມເຂັດຢຳຂອງອາຣັກຫລັກເມືອງວ່າ ເຖິງມື້ດຶກດື່ນດີ ວັນພຣະ ວັນສິນ ໃນສມັຍກ່ອນ (ລາງທ່ານວ່າຮອດສມັຍນີ້) ຈະມີຄົນຂີ່ມ້າຂາວ ຄໍແຂວນໝາກຫິ່ງດັງຍ້ອງໆ ລາງເທື່ອກໍແລ່ນທາງດິນ ລາງເທື່ອກໍແລ່ນຢູ່ເທິງອາກາດ ອ້ອມຄຸ້ມບ້ານສີເມືອງແລະຄຸ້ມອ້ອມແອ້ມນັ້ນ ແລະເວົ້າກັນວ່າ ຄົນນັ້ນຄົງແມ່ນແມ່ມານສີ ມ້າກໍຄົງແມ່ນມ້າທີ່ເອົາລົງຂຸມຫລັກເມືອງນຳກັນນັ້ນເອງ. ແຖມຍັງມີຜູ້ເລົ່າຕື່ມແລະເຊື່ອຖືກັນຢູ່ຮອດທຸກມື້ນີ້ວ່າ ແມ່ມານສີ ຜູ້ເປັນເຈົ້າອາຣັກແຫ່ງຫລັກເມືອງນີ້ ເປັນຜູ້ໃຫ້ທັງໂທດທັງຄຸນແກ່ພວກແມ່ມານທີ່ຢູ່ນຳຄຸ້ມສີເມືອງແລະຄຸ້ມໃກ້ຄຽງນັ້ນ ຄື ຖ້າໃຜມານລູກແລ້ວບໍ່ໄປບອກຄອບເລົ່າຂໍຄວາມຄຸ້ມຄອງຕໍ່ອາຣັກຫລັກເມືອງນັ້ນ ຜູ້ນັ້ນ ຈະບໍ່ຄ່ອຍຢູ່ດີມີແຮງ, ແຕ່ຖ້າໃຜຄອບເລົ້າແລະບະບົນແລ້ວຜູ້ນັ້ນຈະຢູ່ດີມີແຮງ ແລະອອກລູກງ່າຍ ເມື່ອພົ້ນອັນຕຣາຍແລ້ວໃຫ້ເອົາພາຫວານ 2 ພາ, ໝາກພ້າວສ້ອມ 2 ໜ່ວຍ, ພັນພູ 2 ພັນ ກັບບັ້ງໄຟ 2 ບັ້ງ ໄປເປັນເຄື່ອງແກ້ບະ (ບັ້ງໄຟຕ້ອງຕອກຕ້ອງຕຳໃສ່ບັ້ງໄມ້ໃຜແທ້ໆ ແມ່ນບໍ່ໃຫຍ່ ທໍ່ມືອື່ນກໍໄດ້ ຖ້າມັກງ່າຍເອົາກະໂພກເຈັຽເຮັດຕາງບັ້ງໄຟ ຈະໄປອອກປາກຄົນວ່າ ບໍ່ມັກບໍ່ຖືກຕ້ອງ).

ອັນນິທານແມ່ມານສີ ມາເປັນອາຣັກຫລັກເມືອງນີ້ ຈະກຳນົດວ່າເຮັດໃນສມັຍໃດແທ້ກໍບໍ່ໄດ້ ຈະເປັນສມັຍພຣະຍາຈັນທະບຸຣີ ສີປະສິດທິສັກ (ບຸຣີຈັນອ່ອຍລ່ອຍ) ຫລື ສມັຍພຣະໄຊຍະເຊດຖາທິຣາດກໍບໍ່ເຫັນຫລັກຖານ. ອັນນິທານທຳນອງດັ່ງກ່າວນີ້ ເຄີຍອ່ານພໍ້ວ່າ ຊາວມອນ ພມ້າ ແລະຊາວໄທ ກໍພາກັນວ່າມີຄືກັນ ຈັກໃຜຈະໄດ້ນຳໃຜ, ມາຄິດເບິ່ງແລ້ວກໍປລາດ ເພີ່ນເປັນຫຍັງຈຶ່ງເອົາແມ່ມານຕາຍທຸງ ຫລືແມ່ຍິງຕາຍກຸມເຊິ່ງຄົນທັງຫລາຍຖືວ່າເປັນຜີຮ້າຍຂາດ ມາເປັນເທພາອາຣັກປະຈຳຫລັກເມືອງ ອັນເປັນສະຖານນິ່ງມຸງຄຸນຂອງພຣະນະຄອນ ຄືວ່າບໍ່ສົມກັບບ່ອນໂຄຣົບນັບນອບຂອງປະຊາຊົນຕລອດຮອດເຈົ້າບ້ານຜ່ານເມືອງ.

ອັນຈະຮູ້ວ່າ ຫລັກເມືອງນັ້ນຈະເປັນຈິງດັ່ງນິທານເວົ້າຫລືບໍ່ນັ້ນ ກໍສຸດວິສັຍຈະພິສູດເສັຽແລ້ວ ເພາະບໍ່ມີໃຜຈະຄິດໄປຂຸດໄປກົ້ນເບິ່ງຂຸມເດີມຂອງຫລັກເມືອງວ່າ ມີດູກຄົນດູກມ້າຫລືບໍ່, ຖືວ່າເປັນເຣື່ອງເທິງນານມາແລ້ວກໍສະບາຍໃຈດີ.

ຜາກົດໃນຕຳນານຂຸນບຸຣົມໆ ຕອນທີ່ພຣະມະຫາປາສມັນ ກັບພຣະມະຫາເທພລັງກາ ເຊີນພຣະບາງຂຶ້ນມາແລະໄປພັກເຊົາຢູ່ທີ່ດອນຈັນ ວ່າ "ເຈົ້າພື້ນຈັນ ທັງຊາວບ້ານຊາວເມືອງທັງຫລາຍ ຈຶ່ງອາຫນາພຣະເຈົ້າ (ຄືພຣະບາງ) ເຊົາທີ່ດອນຈັນຫັ້ນກ່ອນ ທ້າວພຣະຍາທັງຫລາຍ ທັງຊາວບ້ານຊາວເມືອງ ກໍໄປໄຫວ້ພຣະບາງເຈົ້າ ທັງໄຫວ້ພຣະມະຫາເຖຣະເຈົ້າທັງສອງໆຈຶ່ງຖາມທ້າວພຣະຍາທັງຫລາຍວ່າດັ່ງນີ້ :– ທີ່ໃດວ່າປາກບາງໄຊ, ທີ່ໃດວ່າປາກປາສັກ, ທີ່ໃດວ່າໂພນສະບົກ, ທີ່ໃດວ່າໜອງຈັນ, ທີ່ໃດວ່າໜອງກະແດ, ທີ່ໃດວ່າພັງໝ້ (ຄົງໝາຍເຖິງສະພັງໝ້ ຫລືສະພັງມີ) ພຣະມະຫາປາສມັນເຈົ້າຖາມດັ່ງນັ້ນ ເຂົາຈຶ່ງຫາເຖົ້າເມືອງຊຽງມຸງມາຖາມ ເຖົ້າເມືອງວຽງຈັນແລະເຖົ້າເມືອງຊຽງມຸງ ຈຶ່ງບອກຈຶ່ງເລົ່າບ່ອນທີ່ທັງມວນ ດັ່ງນັ້ນພຣະຈຶ່ງເອົາຕຳນານແຕ່ເມືອງນະຄອນຫລວງ (ເມືອງຫລວງຂເມນ) ນັ້ນມາອ່ານດູ ແມ່ນດັ່ງເຖົ້າເມືອງແລ ທ້າວພຣະຍາທັງຫລາຍແລ ພຣະຈຶ່ງວ່າ ອັນທີ່ປາກປາສັກຫັ້ນ ເຈົ້າອົດສີທັງຫລາຍໝາຍຫລັກໄມ້ຈັນໄວ້ໃນທີ່ນີ້ແລ *ອັນທີ່ສະໂພນສູງ ເບື້ອງຕາເວັນອອກເລົ້າຂ້າງໜອງກະແດນາກໍ້າຕາເວັນຕົກ ເຈົ້າອົດສີຍັງເອົາຫລັກຫີນ ອັນນຶ່ງ* ເປັນສີ່ລ່ຽມ ໝາຍໄວ້ແຕ່ຫາດພຣະເຈົ້າທັງສີ່ຕົນພຸ້ນ ເປັນຕົ້ນວ່າ ພຣະກຸກກຸສັນໂທ, ພຣະໂກນາຄົມ ພຣະກັສປະເຈົ້າ ມາໃສ່ສິ່ງຄຳຕົວນຶ່ງ ອະທິດຖານຈຶ່ງເອົາຫລັກຫີນໝາຍໄວ້".

"ຫລັກຫີນສີ່ລ່ຽມ" ທີ່ກ່າວໃນນິທານຂຸນບຸຣົມ ໆ ຕາມຄຳໃຫ້ການຂອງພຣະມະຫາເຖຣະປາສມັນນີ້ ຈະແມ່ນຫລັກເມືອງຂອງອົດສີເມືອງນີ້ຫລືບໍ່ ເພາະເປັນຫີນສີ່ລ່ຽມແລະເກົ່າແກ່ ໃຫຍ່ສູງບໍ່ຄ່ອຍ ສົມຈະເປັນຂອງມີອາຍຸນັບເປັນພັນປີໄດ້ຢູ່. ທ່ານຜູ້ນຶ່ງວ່າ ບ່ອນທີ່ຕັ້ງອົດສີເມືອງບໍ່ເປັນໂພນສູງ ດັ່ງທີ່ເພິ່ນວ່າ ທີ່ສະໂພນສູງບ່ອນດັ່ງກ່າວ ຄວນຈະເປັນບ່ອນຕັ້ງທາດຫລວງດຽວນີ້ຫລາຍກວ່າ ໃນຕອນທຳອິດກໍເປັນຫລັກຫີນ ຕໍ່ມາມີຜູ້ກໍ່ທາດກວມ ເຖິງສມັຍພຣະໄຊຍະເຊດຖາທິຣາດ ພຣະອົງຈຶ່ງກໍ່ທາດຫລວງກວມອີກເທື່ອນຶ່ງ ວ່າດັ່ງນີ້, ເບິ່ງຕາມຕຳນານທົ່ວໄປໃນປາງປະຖົມບ່ອນຝັງພຣະບໍຣົມສາຣີຣິກະທາດ (ດູກພຣະພຸທເຈົ້າ) ຫລືບ່ອນສຳຄັນ ມັກຈະເອົາຫລັກຫີນເຮັດເປັນເຄື່ອງໝາຍໄວ້ ຢ່າງພຣະເຈົ້າອະໂສກຣາດ ໝາຍສະຖານທີ່ເກີດ ທີ່ສະແດງທັມມະຈັກຂອງພຣະພຸທເຈົ້າດ້ວຍຫລັກຫີນ ສ່ວນບ່ອນຕັສຮູ້ ແລະບ່ອນນິພານນັ້ນ ມີກົກໂພ ແລະກົກຮັງເປັນຫລັກຖານ ແລ້ວຈຶ່ງບໍ່ໃສ່ຫລັກຫີນ ເປັນແຕ່ເອົາແທ່ນຫີນໄປຕັ້ງໄວ້ເປັນເຄື່ອງໝາຍ ແລະວ່າທຸກແຫ່ງທີ່ພຣະອົດສີໝາຍບ່ອນປະດິດສະຖານພຣະ

ບໍຣິມສາຣີຣິກະທາດໃນດິນແດນສຸວັນນະພູມ ຫລືເມືອງລ້ານຊ້າງນີ້ ກໍພາຍດ້ວຍຫລັກຫີນ ດັ່ງທາດພົມ, ທາດຫລວງ ເປັນຕົ້ນ ກໍພາຍໄວ້ດ້ວຍແທ່ງຫລັກຫີນທັງນັ້ນ, ຂ້າພະເຈົ້າ ຢາກຈະເຂົ້າໃຈວ່າ ເສົາຫີນທີ່ເປັນຫລັກເມືອງໃນສິມວັດສີເມືອງນີ້ ຄົງເປັນຫລັກພາຍທີ່ສຳຄັນທາງພຣະພຸທສາສນາ ເປັນແທ້ ເພາະຖ້າບໍ່ແມ່ນເປັນເຄື່ອງພາຍທາງສາສນາແລ້ວ ຄົງຈະບໍ່ມີທາດທີ່ກໍ່ດ້ວຍຫີນແລງມາຕັ້ງຢູ່ໃກ້ໆນັ້ນ ຫລັກຫີນຈະມີມາແຕ່ສມັຍໃດແທ້ກໍຍາກແກ່ການສັນນິຖານ, ສ່ວນທາດຫີນແລງນັ້ນເບິ່ງຕາມລັກສນະທີ່ຍັງພໍຫລຽວເຫັນເຄົ້ານັ້ນ ຕ້ອງແມ່ນສີມືລາວຄັກແນ່ ອາດຈະຮ່ວມສມັຍກັນກັບວັດຈັນ, ວັດເພັຽວັດ (ວັດພຣະຍາ) ເຊິ່ງພຣະຍາຈັນທະບຸຣີສຣີສັດທັມມະໄຕຣໂລກເປັນຜູ້ສ້າງ ປາງພຣະໄຊຍະເຊດຖາທິຣາດຍັງສເວີຍຣາຊສົມບັດຢູ່ນະຄອນຊຽງທອງ (ຫລວງພຣະບາງ) ປະມານ 420 ປີປາຍມາແລ້ວນັ້ນກໍໄດ້ ເພາະສືບໄດ້ຄວາມວ່າ ພື້ນເດີມຂອງສິມໃຫຍ່ວັດເພັຽວັດນັ້ນມີແຕ່ຫີນແລງແບບດຽວກັບທາດຫີນແລງວັດສີເມືອງ ແມ່ນຈະຕ່າງສມັຍກໍຄົງຈະບໍ່ຫ່າງກັນປານໃດ ຜາກົດວ່າສິ່ງກໍ່ສ້າງດ້ວຍສີລາແລງນີ້ມີໃນວຽງຈັນຫລາຍແຫ່ງ.

ຂ້າພະເຈົ້າຄິດອີກອັນນຶ່ງກໍຄື ກ່ອນຈະເຖິງວັນໄຫວ້ທາດຫລວງ ຕ້ອງໄປໄຫວ້ຫລືແຫ່ທາດວັດສີເມືອງເສັຽກ່ອນ ໄຫວ້ທາດອິນແປງ ແລ້ວຈຶ່ງໄປໄຫວ້ພຣະອົງຕື້ ເປັນການສະແດງວ່າ ປູຊະນີຍະສຖານດັ່ງກ່າວ ມີຄວາມສຳຄັນແລະມີມາກ່ອນມາລຸນໂດຍລຳດັບກັນ ຜູ້ເຖົ້າແຕ່ກ່ອນບໍ່ວ່າໄປໄຫວ້ຫລັກເມືອງ ແຕ່ວ່າໄປໄຫວ້ທາດສີເມືອງ ໄດ້ຍິນມາວ່າດັ່ງນີ້. ຢູ່ເຫິງມາ ຈະເປັນສມັຍໃດກໍບໍ່ຮູ້ ທ່ານຜູ້ມີອຳນາດໃນບ້ານເມືອງ ຢາກຈະໃຫ້ມີຫລັກເມືອງເປັນຫລັກຍຶດຈິດໃຈຂອງປະຊາຊົນພົລເມືອງ ແລະເຫັນຫລັກຫີນຂອງວັດສີເມືອງມີລັກສນະສຳຄັນກວ່າແຫ່ງອື່ນ ຈຶ່ງສົມມຸດເອົາວ່າ ເປັນຫລັກເມືອງສືບໆມາ. ຫາກວ່າຫລັກຫີນຫລັກນີ້ເປັນຫລັກເມືອງມາແຕ່ເຄົ້າແທ້ໆ ແລະມີວະພິທີການເຂັດຢຳດັ່ງກ່າວຂ້າງຕົ້ນພຸ້ນແລ້ວ ຄົງຈະບໍ່ມີໃຜ ຕລອດຮອດພຣະສົງພາກັນມາສ້າງວັດປຸກສິມກອມຢ່າງຄັກແນ່ ຫລືວ່າ ນາງສີ ລາວເຄີຍເປັນພຸທສາສນິກຊົນກໍເລີຍຢູ່ກັນໄປໄດ້ກັບທາງວັດທາງວາກໍວ່າບໍ່ຊ່າງ.

ວັດສີເມືອງກໍຄືກັບວັດເກົ່າແກ່ອີກຫລາຍໆວັດໃນນະຄອນວຽງຈັນ ມີວັດທີ່ພຣະແກ້ວເປັນຕົ້ນເປັນປະທານ ໃນສມັຍນຶ່ງໄດ້ມີສະພາບເປັນວັດຮ້າງຢູ່ເຫິງນານ ພາຍຫລັງວຽງຈັນຖືກທຳລາຍໃນສົງຄາມຣະຫວ່າງລາວກັບໄທ ສມັຍຂອງພຣະເຈົ້າອະນຸວົງກູ້ເອກຣາດ ແຕ່ບໍ່ເປັນຈັ່ງບຸນ ຝ່າຍລາວເສັຽຊັຍແກ່ສຍາມ. ພໍ່ຕູ້ໂງ່ນຄຸ້ມວັດເພັຽວັດເລົ່າສູ່ຟັງວ່າ ປະມານເກືອບ 70 ປີ ມາແລ້ວ ບໍຣິເວນຂອງວັດສີເມືອງອຸດົມສົມບູນໄປດ້ວຍປ່າໄມ້ໃຫຍ່ຄຶຄຶ້ມແລະໄມ້ນ້ອຍນານາແນວ ມີສັດສີ່ຕີນ ນັບແຕ່ກະຮອກກະແຕກະຕ່າຍ ເຫັນ ຕລອດໄກ້ ສັດສອງຕີນ ກໍມີໄກ່ປ່າ ນົກນ້ອຍນົກໃຫຍ່ທຸກແນວ ນັບແຕ່

ນົກແກ້ວຮອດນົກຂີ້ຖີ່ ນົກເຄົ້າ, ຢູ່ແຖບນີ້ ຍັງມີໜອງທີ່ມີປາຫລາຍຢູ່ຫລາຍໜອງ ຢ່າງໜອງໂດນ ໜອງສົ້ມໂຮງ ໜອງຄ້າເປັນຕົ້ນ. ໃນບໍຣິເວນວັດຮ້າງກໍ່ມີຫລັກຫີນທີ່ຖືວ່າເປັນຫລັກເມືອງດຽວນີ້ຕັ້ງເດັ່ນຢູ່ເທິງແທ່ນກອງດິນຈີ່ອັນເພພັງຂອງຊາກສິມເກົ່າ ອີກຂ້າງນຶ່ງ ມີກົກຈຳປາໃຫຍ່ ແລະສູງຄົງຈະມີອາຍຸນັບຮ້ອຍປີ ກັບກົກໂພໃຫຍ່ໃບດົກຄຶ້ມ ຖັດຈາກສິມໄປຕາເວັນຕົກ ຫລືຈະວ່າດ້ານເໜືອນັ້ນກໍ່ມີທາດຫີນຫີນແລງ ທີ່ຮົກເຮື້ອດ້ວຍຮຸ່ມໄມ້ ແລະເຄືອໄມ້ ເບິ່ງແລ້ວໜ້າຢ້ານ. ໃນບໍຣິເວນດັ່ງກ່າວ ນອກຈາກກາງເວັນທ່ານັ້ນ ຄົນຈຶ່ງຈະຫຽວໄປມາ ຕົກກາງຄືນແລ້ວ ໃຜບໍ່ອາດຈະຍ່າງເຂົ້າໄປຕາມແຖບນີ້ ເພາະຢ້ານຜີ ແລະຢ້ານສຽງນົກເຄົ້າທີ່ຮ້ອງສຽງໜ້າສະທ້ານຢ້ານກົວຢູ່ຊວ່າແຊວ.

ພໍ່ຕູ້ໂງ່ນເລົ່າໃຫ້ຟັງວ່າ ກົກຈຳປາໃຫຍ່ນັ້ນ ຮອດຍາມເດືອນສີ່ເດືອນຫ້າມາມັນເປັນດອກເຕັມຕົ້ນ ຖ້າມກາງສຽງຈັກຈັ່ນແລະແມງວີຮ້ອງກ້ອງສນັ່ນບ່ຳ ມີອ້າຍບ່າວ ແລະນາງສາວພາກັນໄປແພ້ນເອົາດອກໄປເຮັດພາຂວັນຫລືເປັນດອກໄມ້ສຳລັບບູຊາທຸກໆປີ (ກົກຈຳປາກົກນັ້ນຈະລົ້ມຈະໂຄ່ນຕາຍໄປແຕ່ປີໃດບໍ່ມີໃຜຈື່) ທາດຫີນແລງນັ້ນ ກໍ່ເປັນທາດສັກສິດໃຜຈະເອົາກ້ອນຫີນທີ່ກໍ່ທາດນັ້ນໜີໄປບໍ່ໄດ້ຈະເຫັນຣິດໂລດ ເພິ່ນວ່າຍາຄຣູຫລັກຄຳແກ້ວວັດສີສະເກດກໍ່ເຄີຍເຫັນຣິດມາແລ້ວ ຕ້ອງເອົາກ້ອນຫີນຄືນມາສົ່ງ, ທາດນີ້ທີ່ເພພັງລົງຈະຍ່ອມຖືກທຳລາຍໃນຍາມສົງຄາມ ຫລືວ່າຍ້ອມຫັກທຳລາຍ ຫລືຈະຍ້ອນຮາກໄມ້ ເຄືອໄມ້ ແທງງັດຈົນພັງກໍ່ອາດເປັນໄດ້. ເສົາຫີນ ຫລືຫລັກເມືອງນັ້ນ ພໍ່ຕູ້ໂງ່ນເລົ່າຕາມຜູ້ເຖົ້າເລົ່າຕໍ່ມາວ່າ ສມັຍຫໍ້ເຂົ້າວຽງຈັນ (ເມື່ອປີ ຄ.ສ. 1875 ພ.ສ. 2418) ພວກຫໍ້ໄດ້ພາກັນຊອກຫາຊັບຕາມວັດວາອາຮາມທົ່ວໄປ ມັນໄດ້ງັດໃຫ້ຫລັກຫີນລົ້ມລົງ ໂດຍມັນເຂົ້າໃຈວ່າ ຢູ່ແທ່ນກ້ອງຫລັກຫີນນັ້ນຄົງຈະມີສົມບັດອັນມີຄ່າຝັງຢູ່ ເມື່ອແມ່ທັບໄທຍທີ່ມາປາບຫໍ້ນັ້ນ ໄດ້ມາເຫັນຈຶ່ງໃຫ້ປຸກລຸກຂຶ້ນຕັ້ງໄວ້ດັ່ງເດີມ ເຣື່ອງນີ້ອາດຈະເປັນຈິງເພາະມີກ່າວໄວ້ໃນພົງສາວະດານວ່າ.... "ຝ່າຍຫໍ້ສາມກໍປິວ ເມື່ອຕີຊຽງຂວາງໄດ້ແລ້ວ ຈຶ່ງໃຫ້ຫໍ້ອົງອັນ ກັບຫໍ້ກວານລານ ຍົກພົນຫໍ້ 1000 ຄົນ ລົງມາຕີວຽງຈັນ ໃນປີ ຄ.ສ. 1875 ເມືອງວຽງຈັນເວລານັ້ນ ເປັນເມືອງຮ້າງ ບໍ່ມີເຈົ້ານາຍຢູ່ຮັກສາ ເຈົ້າໜ້າທີ່ຝ່າຍໄທຂຶ້ນມາປົກຄອງເມືອງວຽງຈັນ ໄດ້ຕັ້ງບ່ອນເຮັດການຢູ່ໜອງຄາຍ ເມື່ອພວກຫໍ້ລົງມາຮາສດອນກໍ່ພາກັນແຕກຕື່ນປະເຣືອນປະຊານເຂົ້າຂອງໜີໄປຢູ່ເມືອງໜອງຄາຍໝົດ ຜູ້ທີ່ບໍ່ທັນກໍ່ຍອມອ່ອນນ້ອມ ເສັຽເງິນໃຫ້ພວກຫໍ້ຕາມແຕ່ມັນຈະຮຽກເອົາ ພວກຫໍ້ເຂົ້າຕີວຽງຈັນແລ້ວກໍ່ຫຽວຫາເກັບເອົາສິ່ງຂອງແລະມ້າງເພພຣະທາດເຈດີ ໂບດ ສິມ ວິຫານ ພຣະພຸທຮູບ ຊອກຄົ້ນເອົາເງິນຄຳ ເປັນເວລານານເຖິງ 4 ເດືອນ".

ເວລານັ້ນຂ້າຫລວງໄທຊື່ພຣະຍາມະຫາອຳມາດ (ຊື່ມ) ຢູ່ເມືອງອຸບົນໄດ້ຮັບຣາຍງານ

ຈາກເມືອງພອງຄາຍ ຈຶ່ງຍົກທະຫານຂຶ້ນມາລ້ອມຕີທັບຢູ່ວຽງຈັນຕາຍເກືອບໝົດ ເຫລືອຄົນໄປໄດ້ແຕ່ 6 ຄົນ ແລ້ວກອງທະຫານພະຍາມະຫາອຳມາດກໍນຳຕີທັບໄປຈົນເຖິງທົ່ງຊຽງຄຳ ພວກທັບຈຶ່ງແຕກໜີໄປ..” ທີ່ທັບຕ້ອງຕາຍຈົບຫາຍວາຍວອດເຫລືອພຽງ 5–6 ຄົນນີ້ ອາດຍ້ອນຣິດເດດຂອງຫລັກຫີນທີ່ມັນໄປໂດ່ນໃຫ້ລືມລົງກໍວ່າບໍ່ຊ່າງ !

ເມື່ອນະຄອນວຽງຈັນຮ້າງມາເຫິງ ຈົນເຖິງສມັຍຝຣັ່ງມາຍາດເອົາລາວອອກຈາກອຳນາດສຍາມມາສູ່ອຳນາດຂອງຕົນແລ້ວປະມານ ຄ.ສ. 1910ປາຍ ຊຸມຊຸນະນິກອນ(ທິດທອງຂັນ)ເປັນອຸປຣາດຢູ່ວຽງຈັນ (ວ່າເປັນພໍ່ໃຫຍ່ຂອງຍາພໍ່ພາຍ, ທ່ານພູຍ ຊຸນະນິກອນ) ຕັ້ງບ້ານເຮືອນຢູ່ຄຸ້ມເພັຽວັດໄດ້ມີສັດທາ ໂດຍຈ້າງຄົນຂົນດິນຈີ່ເກົ່າອອກຈາກຊາກສິມເກົ່າ ແລ້ວສ້າງສິມໃໝ່ລົງທັບສິມເກົ່າ ໂດຍໃຫ້ແທ່ນຫລັກຫີນນັ້ນຢູ່ຂ້າງໃນສິມຕາມຮູບເດີມ ດັ່ງທີ່ເຫັນຮູບຮ່າງຢູ່ດຽວນີ້ ເມື່ອທາງຣາຊການຕັດຖນົນສາຍສຳຄັນຄື ຖນົນໄຊຍະເຊດຖາທິຣາດດ້ານທ່າ ແລະຖນົນສາມແສນໄທດ້ານທົ່ງແລ້ວ ຜູ້ຄົນໄທບ້ານກໍຫລາຍຂຶ້ນໂດຍລຳດັບ ວັດກໍຄ່ອຍເສາະໃສຂຶ້ນ ໃນຕອນວັດກັບສະພາບ ມີຊີວິດຄືນໃໝ່ແລ້ວນັ້ນໄດ້ຍາຄຣູແກ້ວມາເປັນເຈົ້າວັດ (ຕໍ່ມາສິກ ໄດ້ເປັນພໍ່ມ້າຂອງທ່ານວອງ) ຕໍ່ມາຍາຄຣູຕາດຳ ເປັນເຈົ້າວັດຢູ່ມາເຖິງສມັຍລາວອິສຣະ ຈຶ່ງມໍຣະນະພາບ, ອົງຕໍ່ມາແມ່ນຍາຄຣູທຸຍ ແລ້ວຈຶ່ງເຖິງເຈົ້າວັດອົງປັດຈຸບັນ ຄື ພຣະມະຫາລີຍາ ເຊິ່ງເປັນເຈົ້າຄນະຕາແສງວັດສີເມືອງ ມີຫລັກເມືອງອັນສັກສິດເປັນສິ່ງສຳຄັນໃນສິມ ຈຶ່ງພາກົດມີປະຊາຊົນ (ໂດຍຈຳເພາະພວກແກວແລະເຈັກ) ພາກັນໄປນົບໄຫວ້ແລະແກ້ບະບົນຢູ່ເກືອບທຸກມື້.

ທຸກປີ–ວັນເດືອນ 12 ຂຶ້ນ 13 ຄ່ຳ ຕອນແລງ ຂ້າຣາຊການພົລເຮືອນ ທະຫານ ຕຳຣວດ ແລະປະຊາຊົນ ອັນມີເຈົ້າແຂວງກຳແພງເປັນປະທານແຫ່ຜາສາດເຜິ້ງໄປທອດວັດສີເມືອງ ແລ້ວມີການຄົບງັນຕລອດຄືນຢູ່ທີ່ວັດສີເມືອງນັ້ນ ໝາຍຄວາມວ່າ ຕ້ອງແຫ່ຜາສາດເຜິ້ງໄປໄຫວ້ຫລັກເມືອງວັດສີເມືອງກ່ອນທີ່ຈະມີການແຫ່ຜາສາດເຜິ້ງໄປຖວາຍພຣະທາດຫລວງໃນມື້ເພັງເດືອນ 12 ຈະປະຕິບັດດັ່ງນີ້ມາແຕ່ປີໃດກໍບໍ່ພາກົດ.

ຂໍສຸດປວັດວັດສີເມືອງທີ່ນີ້ກ່ອນ.

✻ ✻ ✻

ຫໍໄຕ ວັດອິນແປງ ວຽງຈັນ

ວັດອິນແປງ

ໂດຍ ບຸນເຮັງ ບົວສີແສງປະເສີດ

ວັດອິນແປງເປັນວັດເກົ່າແກ່ແລະສຳຄັນ ວັດນຶ່ງໃນນະຄອນວຽງຈັນ ເຫັນໄດ້ຈາກຫລັກຖານສິລປະ ແລະ ສະຖາປັຕຍະກັມ ອັນເກົ່າແກ່ເຊັ່ນ: ພັທສີມາ ພຣະພຸທຮູບ ຫໍໄຫວ້ ຫໍໄຕຣ ພຣະເຈດີຫລາຍລູກ ເສົາຫີນ ແລະບູຮານວັດຖຸອື່ນ ໆ ທີ່ວ່າສຳຄັນກໍດີ ມີພຸທບໍຣິສັດນັບຖືແລະສັກກາຣະບູຊາຫລາຍ ທັງເປັນວັດທາງຣາຊການໃຫ້ກຽດສເລີມສລອງທຸກ ໆປີ ດັ່ງເຮົາເຫັນໄດ້ຫລັງຈາກສລອງພຣະທາດຫລວງແລ້ວ ເພິ່ນກໍມາສລອງວັດອິນແປງແລະວັດອົງຕື້ພ້ອມກັນ ວັດອິນແປງແຕ່ກ່ອນຕາມຜູ້ເຖົ້າ ຜູ້ແກ່ເວົ້າວ່າ ກວ້າງຂວາງຕິດຕໍ່ໃສ່ວັດອົງຕື້ ແຕ່ມາບັດນີ້ໄດ້ກາຍເປັນບ້ານເຮືອນຄົນກັ້ນເຂດແດນໝົດແລ້ວ. ວັດອິນແປງຕັ້ງຢູ່ຖນົນໄຊຍະເຊດຖາທິຣາດ ຫ່າງໄກຈາກນ້ຳຂອງປະມານ 200 ແມັດ ບັດຈຸບັນນີ້ ສິມກໍກຳລັງສ້ອມແປງຢູ່ ຄືເພິ່ນໄດ້ຍົກຫລັງຄາຂຶ້ນອີກທຳການຣິເລີ່ມສ້ອມແປງມາແຕ່ປີ 1968 ບັດນີ້ກໍຍັງບໍ່ທັນສຳເຣັດເທື່ອ ວັດອິນແປງບໍ່ໄດ້ສ້ອມແປງມາແຕ່ດຽວນທື່ມັ້ນ ເພິ່ນໄດ້ທຳການສ້ອມແປງມາແຕ່ຕົ້ນສັຕວັດທີ 20 ພູ້ນແລ້ວກໍມີ.

ວັດອິນແປງຍາກທີ່ຈະຫາຫລັກຖານແນ່ນອນວ່າເພິ່ນສ້າງຂຶ້ນເມື່ອໃດ ? ໃຜເປັນຜູ້ສ້າງ ? ນອກຈາກນິທານປາຣັມປະຣາເລົ່າກັນສືບ ໆ ມາໂດຍປາສຈາກຫລັກຖານອັນແນ່ນອນ ຕ່າງກໍກ່າວກັນໄປຄົນລະຢ່າງບໍ່ເໝືອນກັນ ເພາະວ່າຍັງບໍ່ທັນມີໃຜໄດ້ພົບເຫັນຫລັກຖານ ຈາກໜັງສືຜູກໃດມັດໃດໄວ້ແນ່ນອນ ບາງຄົນກໍເລົ່າວ່າ ໃນເວລາທີ່ເພິ່ນສ້າງວັດອິນແປງຢູ່ນັ້ນໄດ້ມີພຣະຍາອິນປອມຕົວເປັນພໍ່ຂາວລົງມາຊ່ອຍສ້າງເພິ່ນຈຶ່ງຮ້ອງວ່າວັດອິນແປງຕໍ່ມາ ບາງຄົນກໍເລົ່າວ່າໃນເວລາເພິ່ນຫລໍ່ພຣະພຸທຮູບວັດອິນແປງຢູ່ນັ້ນ ໄດ້ມີພຣະຍາອິນປອມຕົວເປັນຕາຜ້າຂາວລົງມາແຕ່ທາງໃດບໍ່ຊາບ ມາຊ່ອຍແປງໜ້າໃຫ້ ຈຶ່ງສຳເຣັດ ດັ່ງນັ້ນເພິ່ນຈຶ່ງຮ້ອງວ່າວັດອິນແປງຕໍ່ມາຈົນບັດນີ້ ເຖິງຢ່າງໃດກໍດີທຸກຄົນກໍຮູ້ດີຢູ່ວ່າ ວຽງຈັນໄດ້ຖືກພວກສັຕຣູ ຈູດເຜົາມາຕັ້ງຫລາຍຄັ້ງຫລາຍຫົນ ວັດຖຸສົມບັດບ້ານເມືອງ ບໍ່ວ່າວັດວາອາຣາມ ຫໍໂຮງທີ່ທຳການຂອງຣັດກໍຖືກທຳລາຍຕລອດຮອດຕຳຣັບຕຳຣາ ນັກປຣາດອາຈານກໍສູນສ້ຽງໝົດ ພວກເຮົາກໍເລີຍກາຍເປັນຄົນອະນາຖາໃນທຸກ ໆ ດ້ານ ແຕ່ກ່ອນ ຄົນລາວເຮົາມີຄວາມສີວິໄລ ຄວາມຮູ້ ຄວາມສາມາດທຸກດ້ານທຸກທາງ ດັ່ງຈາກຄວາມສີວິໄລຍັງສະແດງໃຫ້ເຮົາເຫັນເປັນຫລັກຖານຢູ່ເຊັ່ນວັດສີສະເກດ

ວັດຫໍພຣະແກ້ວ ວັດອົງຕື້ ວັດອິນແປງ ວັດຈັນ ວັດເພັຽວັດ ພຣະທາດຫລວງ ທາດດຳ ດັ່ງນີ້ ເປັນຕົ້ນ ນີ້ພໍແຕ່ເສດນຶ່ງສ່ວນຮ້ອຍທີ່ນັ້ນ ທີ່ເຫລືອຈາກການທຳລາຍຈາກຂ້າເສິກ.

ວັດອິນແປງມີທາງດຽວທີ່ຈະພໍຮູ້ໄດ້ວ່າເພິ່ນສ້າງຂຶ້ນໃນສມັຍໃດ ກໍຄືອາສັຍນັກບູຮານຄະດີ ໄປຄົ້ນຄວ້າວິຈັຍເບິ່ງບູຮານວັດຖຸທີ່ຍັງເຫລືອຢູ່ແລະບາງອັນເພິ່ນໄດ້ເກັບມ້ຽນໄວ້ວັດຫໍພຣະແກ້ວ ດັ່ງພຣະພຸທຣູບເຮັດດ້ວຍໄມ້ ແລະພຣະພຸທຣູບເອີ້ນວ່າອິນແປງ ປັດຈຸບັນຢູ່ວັດມະຫາພຣຶດທາຣາມກຸງເທບ ອາດເອົາໄປຈາກວັດອິນແປງກໍເປັນໄດ້.

ກ່າວຕາມການບັນທຶກແລະຮູບພາບ ສິລປະແລະສະຖາປັດຍະກັມລາວ ຂອງທ່ານເຣມຣີ ປາກມັງເຈ ຄົນຝຣັ່ງເສດ ເພິ່ນໄດ້ຄົ້ນຄວ້າສິລປະແລະສະຖາປັດຍະກັມ ໃນພຣະຣາຊອານາຈັກລາວເມື່ອ ປີ ຄ.ສ. 1911 ເພິ່ນໄດ້ບັນທຶກແລະຖ່າຍຮູບໄວ້ເປັນຫລັກຖານ ວ່າໃນປີ ຄ.ສ. 1911 ນັ້ນ ສິມ ວັດອິນແປງໄດ້ເພລິງຫມົດແລ້ວຍັງເຫລືອແຕ່ເສົາທີ່ນັ້ນ ໄດ້ພົບເຫັນພຣະພຸທຣູບຫລາຍອົງ, ມີເສົາຫີນ, ມີຮູບຫີນເປັນສີ່ຫນ້າ, ຮູບສິງ 2 ໂຕ ຫໍໄຕຣ, ແລະ ພຣະທາດຫລາຍຫນ່ວຍ ໃນຈຳນວນທີ່ເພິ່ນພົບເຫັນນັ້ນມີພຣະພຸທຣູບຫີນເຂົ້າໃຈວ່າເປັນສມັຍຂອມ ຊຶ່ງມີຕົວຢ່າງແລ້ວຢູ່ປະເທດຂເມນ ແລະ ປະຕູສິມຊຶ່ງມີລັກສນະດັ່ງດຽວກັນກັບຢູ່ເກາະຊະວາ ປະເທດອິນໂດເນເຊັຽ ຕາມຄວາມເຂົ້າໃຈຂອງທ່ານແລ້ວວັດອິນແປງອາດເປັນສມັຍດຽວກັນກັບສມັຍຂອມ (ລາວເອີ້ນວ່າສມັຍຊາຍຟອງ) ຄືລະຫວ່າງສັຕວັດທີ 8 ເຖິງສັຕວັດທີ 13 ແຫ່ງ ຄ.ສ. ສ່ວນຂ້າພະເຈົ້າເຫັນວ່າ ຫໍໄຕຣ ວັດອິນແປງນັ້ນເປັນແບບສິລປະສມັຍລ້ານຊ້າງ ຄົງຈະບໍ່ແມ່ນສມັຍຂອມແຕ່ຢ່າງໃດ ສ່ວນຫໍໄຕອັນນັ້ນກໍເປັນສິລປະສມັຍລ້ານຊ້າງຄືກັນ ແຕ່ອາດໄດ້ຮັບອິດທິພົນອິນເດັຽມາກ່ອນເພາະຫໍໄຕແບບນີ້ ຂ້າພະເຈົ້າໄດ້ພົບເຫັນຢູ່ຣັດເບັງກອນຫລາຍບ່ອນ, ປະເທດອິນເດັຽ. ແຕ່ວ່າຢູ່ປະເທດອິນເດັຽປາກົດວ່າບໍ່ມີຍອດຍາວເໝືອນຢູ່ບ້ານເຮົາສິລປະແບບນີ້ປາກົດມີຂຶ້ນໃນສມັຍຂອງປາລະເສນາປະມານສັຕວັດທີ 9 ຫາທີ 11 ແຫ່ງ ຄ.ສ. ເຖິງຢ່າງໃດກໍດີທີ່ກ່າວມານີ້ເປັນພຽງແຕ່ການສັນນິຖານທີ່ນັ້ນ ເນື່ອງຈາກວ່າເຮົາຍັງບໍ່ທັນພົບຫລັກຖານອັນແນ່ນອນຢ່າງສິລາເລກຕຳຣາ ຜູກໃດມັດໃດກ່າວໄວ້ ສ່ວນຕຳຣາຝຣັ່ງເສດນັ້ນກໍພຽງແຕ່ບັນທຶກແລະຮູບຖ່າຍທີ່ນັ້ນບໍ່ໄດ້ເອົາເຖິງການເປັນມາແຕ່ຢ່າງໃດ ແຕ່ກໍພໍເປັນຮ່ອງຮອຍທາງປວັດສາດ ສິລປະແລະສະຖາປັດຍະກັມລາວຊຶ່ງຫມາຍເຖິງຄວາມສີວິໄລຂອງຄົນລາວໃນສມັຍກ່ອນໂດຍແທ້.

ມີປວັດສາດຕອນນຶ່ງໄດ້ກ່າວເຖິງວັດອິນແປງຄືໃນປີ ຄ.ສ. 1705 (ຈຸລສັກຣາດ 1067) ວ່າສົມເດັດພຣະໄຊຍະເຊດຖາທິຣາດອົງເວ້ ໄດ້ມີພຣະຣາຊອາດຍາເຊີນເອົາພຣະບາງລົງມາປະດິສຖານໄວ້ວຽງຈັນ ເຊີນພຣະບາງອອກຈາກວັດວິຊຸນມະຫາວິຫານ ເມື່ອວັນພະຫັດ ຍາມໃກ້ທ່ຽງ ເດືອນ 3

ເພັງໃສ່ເຮືອລ່ອງລົງມາເຖິງນະຄອນວຽງຈັນເດືອນ 4 ແຮມ 4 ຄ່ຳວັນອັງຄານ ຍາມກອງງາຍ ແລ້ວອາຣາທນາພຣະບາງໄປສະຖິດໄວ້ວັດປ່າສັກຫລວງ ວັດປ່າສັກຫລວງນີ້ເອງບາງທ່ານເຂົ້າໃຈວ່າວັດອິນແປງປວັດສາດອາຈານມະຫາສິລາ ວິຣະວົງ ເຫັນວ່າວັດປ່າສັກຫລວງ ມັນຢູ່ຕໍ່ໜ້າວັດອິນແປງດ້ານທ່າແຖວແຄມຂອງບໍຣິເວນໂຮງການພາສີແລະໂຮງພິມປາກປ່າສັກດຽວນີ້ (1974) ຂ້າພະເຈົ້າກໍເຫັນດ້ວຍທີ່ວ່າວັດອິນແປງແລະວັດປ່າສັກຫລວງ ບໍ່ແມ່ນອັນດຽວກັນ. ວັດປ່າສັກຫລວງອາດຢູ່ລຽບແຄມຂອງແຖວທີ່ນຶ່ງ ເວົ້າຕາມໜັງສືທຸຄຳໝັ້ນ ວ່າວັດຢູ່ໃນກຳແພງເມືອງວຽງຈັນແຕ່ກ່ອນມີ 36 ວັດ ຂ້າພະເຈົ້າສັນນິຖານວ່າ ວັດຢູ່ໃນກຳແພງວຽງເກົ່າ (ໝາຍເອົາກຳແພງເມືອງຊັ້ນໃນ) ອາດມີວັດຢູ່ຢ່າງນ້ອຍ 4 ແຖວ ຄືຕັ້ງແຕ່ປາກນ້ຳສັກລົງໄປຮອດທາດຂາວສັນນິຖານດັ່ງນີ້ ຕັ້ງແຕ່ປາກນ້ຳສັກຮອດແຄມຂອງລົງໄປຮອດຂົວຂາວ ເປັນ *ແຖວທີ່ນຶ່ງ* ປະກອບດ້ວຍວັດຫລາຍວັດດັ່ງ ວັດປ່າສັກຫລວງ (ປັດຈຸບັນບໍ່ມີແລ້ວ), ວັດຈັນທະບຸຣີ, ລະຫວ່າງວັດຈັນທະບຸຣີແລະຊຽງຍືນອາດມີວັດນຶ່ງ, ວັດກາງ (ບ່ອນໂຮງແຮມລ້ານຊ້ານປັດຈຸບັນ), ວັດຫໍພຣະແກ້ວ, ບ່ອນໂຮງໝໍມະໂຫສົດອາດມີວັດນຶ່ງ), ວັດທາດຂາວ, ບ່ອນຂົວຂາວອາດມີວັດນຶ່ງ, *ແຖວສອງຄື* ຕັ້ງແຕ່ວັດອິນແປງ, ວັດອົງຕື້, ວັດມີໄຊ, ບໍຣິເວນແຖວກົມໂຄສະນາການອາດມີວັດນຶ່ງ, ເບື້ອງຫລັງໂຮງແຮມລ້ານຊ້າງອາດມີວັດນຶ່ງ, ວັດເກົ້າຍອດ, ຣະຫວ່າງວັດສີເມືອງແລະວັດເພຍວັດອາດມີວັດນຶ່ງ, ບ່ອນໄຟແດງສີ່ແຍກທາດຂາວອາດມີວັດນຶ່ງ, *ແຖວສາມຄື* ບໍຣິເວນໂຮງໜັງບົວສວັນແລະຮ້ານຂາຍໜັງສືນາຍໄຊອາດມີວັດນຶ່ງ, ວັດຫາຍໂສກ, ຕໍ່ໜ້າວັດມີໄຊຄືບ່ອນຮ້ານຂາຍຢາລາວໂອສົດອາດມີວັດນຶ່ງ, ບ່ອນຕລາດເກົ່ານ້ຳພຸອາດມີວັດນຶ່ງ, ວັດສີສະເກດ, ວັດສີເມືອງ, ວັດຜາໄຊ, ວັດບຶງຂຍອງ, *ແຖວສີ່ຄື* ວັດສີທອນ (ດຽວນີ້ບໍ່ມີແລ້ວ), ບ່ອນສີ່ແຍກໄຟແດງ (ບ່ອນຫໍໄຫວ້ແກວ) ອາດມີວັດນຶ່ງ, ໃຕ້ລົງໄປອີກປະມານ 200 ແມັດອາດມີວັດນຶ່ງ, ຕໍ່ໜ້າທາງເຂົ້າສນາມກິລາອາດມີວັດນຶ່ງ, ບໍຣິເວນກົມວິທຍຸອາດມີວັດນຶ່ງ, ທາດດຳວັດນຶ່ງ, (ດຽວນີ້ບໍ່ມີແລ້ວ), ບ່ອນກະຊວງໄປສະນີອາດມີວັດນຶ່ງ, ລຽບລົງໄປຕາມຄູວຽງອາດມີຫລາຍວັດ, ນີ້ໝາຍເອົາແຕ່ວັດທີ່ມີຢູ່ໃນກຳແພງຊັ້ນໃນທີ່ນັ້ນ ສ່ວນສະຖານທີ່ອື່ນ ໆ ຍັງມີຫລາຍວັດ ອ້າງຕາມປວັດສາດທ້າວຍູ້ນ ອ່ອນພົມ ວ່າວັດໃນວຽງຈັນມີເຖິງ 120 ວັດຄືທາງທິດວັນອອກຕັ້ງແຕ່ທາດຫລວງມາ ທາງທິດເໜືອຕັ້ງແຕ່ວັດທົ່ງປົ່ງ, ທາງໃຕ້ຕັ້ງແຕ່ບໍ່ໂອໄປຫາໂຮງງານຢາສູບສາມທ້າຫລັກແປດທາງໄປທ່າເດື່ອ ເຖິງຢ່າງໃດກໍດີທີ່ກ່າວມາທັງໝົດນີ້ເປັນພຽງການຕັ້ງຢູ່ຂອງວັດອາດເປັນຮູບສີ່ລ່ຽມຍາຍໄປຕາມລຳຂອງມີທາງຍ່າງໜ້ອຍໆລະຫວ່າງວັດແລະວັດແລະມີເຮືອນຄົນແຊກຢູ່ຕາມຫວ່າງ ແຕ່ກ່ອນນັ້ນທາງບໍ່ກວ້າງຫລືຍ່າງກວ້າງກໍພໍກວຽນໄປໄດ້ເທົ່ານັ້ນ ການສັນນິຖານບ່ອນຕັ້ງຢູ່ຂອງວັດນີ້ຍັງບໍ່ທັນມີນັກບູຮານຄະດີຫລືປວັດສາດຄົນໃດ ໄດ້ທຳການຄົ້ນຄວ້າເບິ່ງຄັກ

ແມ່ ແຕ່ຫວັງວ່າໃນອະນາຄົດຂ້າງໜ້າເພິ່ນຈະໄດ້ທຳການຄົ້ນຄວ້າຢ່າງຈິງຈັງ ການທີ່ເຮົາຮຽນຮູ້ປວັດສາດ ຄວາມສາມາດຂອງບັນພະບຸຣຸດເຮົານັ້ນ ເຮັດໃຫ້ເຮົາມີຄວາມຮັກຊາດ ຮັກສາສມາຕົ່ມຂຶ້ນອີກແລະສະແດງໃຫ້ໂລກເຫັນວ່າ ລາວເຮົາເປັນປະເທດນຶ່ງທີ່ເກົ່າແກ່ມີຄວາມສີວິໄລໄດ້ຫລາຍຮ້ອຍປີມາແລ້ວ.

ດັ່ງນັ້ນຂ້າພະເຈົ້າຂໍສຣຸບຄວາມໄດ້ດັ່ງນີ້.

(1) ວັດອິນແປງບໍ່ແມ່ນວັດດຽວກັນກັບວັດປ່າສັກຫລວງ,

(2) ວັດອິນແປງ ຄົງບໍ່ສ້າງກ່ອນວັດປ່າສັກຫລວງຫລືວັດຈັນທະບຸຣີ ເພາະເຫດວ່າວັດທີ່ສ້າງຂຶ້ນກ່ອນຄົງແມ່ນວັດຢູ່ຕາມແຄມນ້ຳຂອງ ຄົນສ່ວນຫລາຍມັກຢາກອາສັຍຢູ່ຕາມແຄມຂອງກ່ອນບ່ອນອື່ນ,

(3) ວັດອິນແປງ ອາດສ້າງຂຶ້ນພ້ອມກັນກັບອົງຕື້ປີ ຄ.ສ. 1566 ເພາະເປັນວັດຢູ່ແຖວດຽວກັນ (ແຖວສອງ) ແລະຕິດຕໍ່ກັນຕາມຜູ້ເຖົ້າເພິ່ນເລົ່າວ່າ ວັດອົງຕື້ແລະວັດອິນແປງ ຕິດຕໍ່ເປັນວັດດຽວກັນ ແຕ່ດຽວນີ້ກາຍເປັນບ້ານເຮືອນຄົນຂຶ້ນໝົດແລ້ວ ແລະ ຫລັກຖານອີກຢ່າງນຶ່ງກໍຄືເມື່ອເພິ່ນສລອງພຣະທາດຫລວງແລ້ວໃນມື້ແຮມ 1 ຄ່ຳເດືອນ 12 ເພິ່ນຈະມາສລອງວັດອົງຕື້ແລະວັດອິນແປງອີກເທື່ອນຶ່ງ ນີ້ກໍເຫັນຈະເປັນເພາະພຣະໄຊຍະເຊດຖາທິຣາດ ສ້າງພຣະທາດຫລວງກ່ອນແລ້ວຈຶ່ງມາສ້າງວັດອົງຕື້ແລະວັດອິນແປງ ກໍເປັນໄດ້,

(4) ວັດອິນແປງ ຄົງມີອາຍຸບໍ່ຕ່ຳກວ່າ 400 ປີແລະຈະບໍ່ເກົ່າແກ່ໄປກວ່າສັຕວັດທີ 14 ສມັຍລ້ານຊ້າງວຽງຈັນນີ້ເອງ. ຖ້າການສັນນິຖານຂອງຂ້າພະເຈົ້າຫາກຜິດພາດກໍຫວັງວ່າທ່ານປັ້ນຍາຊົນທັງຫລາຍຄົງຈະໃຫ້ອະພັຍ.

* * *



ພຣະພຸທຮູບອົງຕື້ ທີ່ວັດອົງຕື້ ວຽງຈັນ

ວັດອົງຕື້ວຽງຈັນ

ໂດຍ ບຸນເຮັງ ບົວສີແສງປະເສີດ

ວັດອົງຕື້ ເປັນວັດທີ່ສຳຄັນແລະເກົ່າແກ່ວັດນຶ່ງໃນນະຄອນວຽງຈັນ ເປັນວັດທີ່ປະຊາຊົນລາວມີຄວາມນັບຖືຫລາຍ ໂດຍສະເພາະແລ້ວແມ່ນຊາວນະຄອນວຽງຈັນແລະອ້ອມແອ້ມ ນອກຈາກນີ້ວັດອົງຕື້ຍັງເປັນວັດທີ່ປະກອບພິທີທາງຣາຊການ ຢ່າງພິທີສາບານນ້ຳຜ່າຍອາດຍາສິດການປົກຄອງຕ່າງໆແລະພິທີທຳບຸນທາງຣາຊການ ດັ່ງເຮົາຈະເຫັນໄດ້ຈາກງານບຸນພຣະທາດຫລວງສຳເຣັດລົງແລ້ວ ເພິ່ນຕ້ອງມາທຳພິທີສລອງວັດອົງຕື້ທຸກໆເທື່ອ ສິ່ງສຳຄັນທີ່ດຶງດູດປະຊາຊົນໃຫ້ເຫລື້ອມໃສນັ້ນກໍຄື ວັດອົງຕື້ເປັນວັດທີ່ເກົ່າແກ່ມີອາຍຸໄດ້ເກືອບ 500 ປີແລ້ວ, ທີ່ປາກົດໃຫ້ເຫັນເປັນພິຍານກໍຄື ສິມ ແລະ ພຣະເຈົ້າອົງຕື້.

ວັດອົງຕື້ຕັ້ງຢູ່ຖນົນໄຊຍະເຊດຖາທິຣາດ ຢູ່ທາງທິດເໜືອຫໍພຣະແກ້ວປະມານ 1 ກິໂລແມດ ຫ່າງໄກຈາກແມ່ນ້ຳຂອງປະມານ 200 ແມັດ ນັບວ່າຕັ້ງຢູ່ໃຈກາງຂອງນະຄອນວຽງຈັນ ສະດວກແກ່ການໄປມາສັກກາຣະບູຊາຂອງພຸທບໍຣິສັດທັງຫລາຍ. ໃນສມັຍກ່ອນວັດອົງຕື້ມີບໍຣິເວນກວ້າງຂວາງຕິດຕໍ່ກັນກັບວັດອິນແປງ ວັດມີໄຊຍາຣາມ ແລະວັດຫາຍໂສກ ແຕ່ໃນປັດຈຸບັນນີ້ໄດ້ກາຍເປັນອາຄານບ້ານເຮືອນກັ້ນເຂດແດນໝົດແລ້ວ ວັດອົງຕື້ໃນສມັຍປັດຈຸບັນເພິ່ນໄດ້ສ້າງຫໍໂຮງຫລາຍຢ່າງ ດັ່ງ ໂຮງຮຽນບາລີຊັ້ນສູງຫລັງເກົ່າ ໄດ້ສ້າງຂຶ້ນໃນສມັຍພຍາພູວົງ ພິມມະສອນ ເປັນອະທິບໍດີກົມທັມມະການ ສະເດັດເຈົ້າກົມມາ (ສຸວັນນະພູມາ) ເປັນນາຍົກຣັຖມົນຕີ ໃນປີ ຄ.ສ. 1953 ກະດີ 4 ຫລັງ ແລະສະຖາບັນສິກສາພຸທສາສນາ ຫລັງໃໝ່ ໄດ້ສ້າງຂຶ້ນຫວ່າງບໍ່ດົນມານີ້ເອງ.

ບັນຫາມີຢູ່ວ່າວັດອົງຕື້ສ້າງຂຶ້ນເມື່ອໃດ ? ສມັຍໃດ ? ຍາກທີ່ຈະຫາຫລັກຖານໄດ້ແນ່ນອນ, ແຕ່ທີ່ພໍຮູ້ໄດ້ກໍຄື ພຣະເຈົ້າອົງຕື້ (ພຣະພຸທຮູບອົງຕື້) ທີ່ຍັງປະດິສຖານຢູ່ໃນສິມປັດຈຸບັນ ພໍສະແດງໃຫ້ເຫັນເປັນຫລັກຖານ ນັກປວັດສາດທັງຫລາຍໄດ້ກ່າວໄວ້ວ່າ ພຣະເຈົ້າອົງຕື້ນີ້ແມ່ນພຣະໄຊຍະເຊດຖາທິຣາດ ທີ 1 ເປັນຜູ້ຈົງຫລໍ່ຂຶ້ນໃນ ຄ.ສ. 1566 ພ້ອມກັບພຣະພຸທຮູບອົງອື່ນໆ ໂຮມ 4 ອົງນຳກັນ ຄື ພຣະເຈົ້າອົງຕື້ ພຣະສຸກ ພຣະໃສ ພຣະເສີມ. ພຣະສຸກ ເຊື່ອກັນວ່າຈົມນ້ຳຢູ່ເວີນສຸກ ໃນເວລາທີ່ໄທໄດ້ພຍາຍາມເອົາຂ້າມນ້ຳໄປຝັ່ງປະເທດໄທ, ພຣະໃສຢູ່ວັດໂພໄຊ ໜອງຄາຍ, ສ່ວນພຣະເສີມປັດຈຸບັນ

ຢູ່ວັດປະທຸມວະນາຣາມກຸງເທບປະເທດໄທ, ຕາມຜູ້ເຖົ້າເລົ່າວ່າ ວັດອົງຕື້ກ່ອນພຣະໄຊຍະເຊດຖາທິຣາດ ສ້າງພຣະພຸທຮູບອົງຕື້ຂຶ້ນນັ້ນມີຊື່ວ່າ ວັດໄຊຍະພູມ ໃນເມື່ອພຣະເຈົ້າອົງຕື້ໄດ້ມາປະດິສຖານຢູ່ແລ້ວ ຈຶ່ງເອີ້ນວ່າວັດອົງຕື້ຕໍ່ມາຈົນຮອດທຸກວັນນີ້ ໃນເມື່ອລາວເສັຽອິສຣະພາບໃຫ້ໄທເມື່ອ ຄ.ສ. 1827 ໄທໄດ້ເກັບກວາດເອົາສົມບັດເຂົ້າຂອງໄປໝົດແລ້ວຍັງທຳລາຍນະຄອນວຽງຈັນຈົນເປັນເທົ່າຖ່ານໂຮມທັງວັດວາອາຣາມດ້ວຍ ວັດອົງຕື້ກໍ່ຖືກທຳລາຍນຳ ແຕ່ຂ້າເສິກບໍ່ສາມາດເອົາພຣະເຈົ້າອົງຕື້ໄປໄດ້, ສ່ວນພຣະພຸທຮູບອົງອື່ນ ໆ ໄທໄດ້ກວາດໄປໝົດ, ວັດອົງຕື້ທີ່ພວກເຮົາໄດ້ໄຫວ້ສັກກາຣະບູຊາຢູ່ທຸກວັນນີ້ ເພິ່ນໄດ້ສ້ອມແປງຂຶ້ນໃໝ່ໃນປີ ຄ.ສ. 1911 ແລະປີ 1927 (ອ້າງຕາມການບັນທຶກຂອງຄົນຝຣັ່ງເສດ) ການປະຕິສັງຂອນວັດອົງຕື້ຂຶ້ນໃໝ່ນີ້ເຂົ້າໃຈວ່າ ເພິ່ນໄດ້ຮັກສາຮູບສິລປະລາວໄວ້ຕາມເດີມ ເນື່ອງດ້ວຍວ່າໃນສມັຍນັ້ນອິດທິພົນຂອງປະເທດໃກ້ຄຽງຍັງບໍ່ທັນເຂົ້າມາມີບົດບາດເໝືອນທຸກວັນນີ້, ຕາມນັກປຣາດຄົນຝຣັ່ງເສດໄດ້ບັນທຶກໄວ້ວ່າ ສິມວັດອົງຕື້ ເປັນສິມແບບລາວໂດຍແທ້ ການປະດັບດອກດວງແລະຮູບຈົ່ງຂອງສິມນັ້ນໝາຍເຖິງການສະແດງອອກຂອງຄວາມສີວິໄລແບບລາວ ພຣະເຈົ້າອົງຕື້ທີ່ປະດິສຖານຢູ່ໃນສິມນັ້ນຊີ້ໃຫ້ເຫັນຄວາມສາມາດຂອງຄົນລາວກ່ຽວກັບສິລປະ ແລະ ສະຖາປັຕຍະກັມທາງພຸທສາສນາໃນສມັຍນັ້ນ, ນັບວ່າບໍ່ນ້ອຍໜ້າແກ່ປະເທດໃດໃນໂລກ.

ປວັດພຣະໄຊຍະເຊດຖາທິຣາດທີ 1 ທີ່ສະແດງໃຫ້ເຫັນເປັນຫລັກຖານກ່ຽວກັບວັດອົງຕື້ຄື ພຣະອົງເປັນຜູ້ສ້າງພຣະພຸທຮູບອົງຕື້ (ພຣະເຈົ້າອົງຕື້) ຊຶ່ງເປັນພຣະພຸທຮູບອົງສຳຄັນດັ່ງກ່າວແລ້ວ, ເປັນສິລປະຍອດຍ້ຽມຂອງລາວສມັຍລ້ານຊ້າງ. ພຣະໄຊຍະເຊດຖາທິຣາດ ພຣະນາມເດີມຊື່ວ່າ ເຈົ້າເຊດຖະວັງໂສ ເປັນຣາຊໂອຣົດອົງໃຫຍ່ຂອງພຣະໂພທິສາຣະຣາດ ພຣະມາຣດາເປັນທິດາຂອງພຣະເຈົ້າແຜ່ນດິນເມືອງຊຽງໃໝ່ ສົມເດັດພຣະໄຊຍະເຊດຖາທິຣາດ ປະສູດປີ ມະເມັຽ ເດືອນອ້າຍ ແຮມ 9 ຄ່ຳ ວັນອາທິດ ເວລາທ່ຽງ ຈຸລສັກຣາດ 896 (ຄ.ສ. 1534) ພຣະອົງເປັນກະສັດທີ່ເຂັ້ມແຂງ ມີອຸດົມຄະຕິອັນສູງເປັນຜູ້ມີຈິນຕະນາການໄກຄືພຣະອົງເຫັນວ່ານະຄອນຊຽງທອງເປັນທີ່ຄັບແຄບແລະກັນດານແກ່ຂ້າເສິກເພາະເປັນທາງເດີນທັບຂອງພະມ້າ, ພຣະອົງເຫັນວ່າເມືອງວຽງຈັນເປັນເມືອງທີ່ອຸດົມສົມບູນ ທັງຕັ້ງຢູ່ເຄິ່ງກາງປະເທດ ສະດວກແກ່ການໄປມາຫາສູ່ກັນຣະວ່າງພາກໃຕ້ແລະພາກເໜືອ ດ້ວຍເຫດນີ້ພຣະອົງຈຶ່ງໄດ້ມອບເມືອງຊຽງທອງໃຫ້ແກ່ພຣະສັງຄະເຈົ້າເບິ່ງແຍງ ສ່ວນພຣະອົງເອງຈຶ່ງໄດ້ເອົາ ພຣະແກ້ວມໍຣະກົດແລະພຣະແຊກຄຳ ພ້ອມທັງສົມບັດແລະເສນາອຳມາດ ລົງມາເມືອງວຽງຈັນ ແລ້ວສະຖາປະນາເມືອງວຽງຈັນຂຶ້ນເປັນນະຄອນຫລວງຊົງຂນານນາມວ່າ ພຣະນະຄອນຈັນທະບຸຣີສີສັຕນາຄະນະຫຸດອຸຕມະຣາຊທານີ ໃນປີກົດສັນ (ປີວອກ) ຄ.ສ. 1560. ໃນເວລາຕໍ່ມາເມື່ອປີ ຄ.ສ. 1566 ພຣະໄຊຍະເຊດຖາ

ທິຣາດ ໄດ້ຊົງສ້າງພຣະທາດຫລວງຂຶ້ນທີ່ອຸທຍານດ້ານຕາເວັນອອກແຫ່ງພຣະນະຄອນ ໂດຍກໍ່ກວມເຈດີເກົ່າລູກນຶ່ງອັນມີໃນທີ່ນັ້ນ, ເມື່ອພຣະອົງໄດ້ຊົງສ້າງພຣະທາດຂຶ້ນຫລາຍ ໆ ແຫ່ງແລ້ວ ກໍຊົງສ້າງແລະປະຕິສັງຂອນວັດຕ່າງ ໆ ດັ່ງ ສ້າງວັດຣີສີສັງທອນເປັນຕົ້ນ, ແລ້ວຊົງຫລໍ່ພຣະພຸທຮູບຂຶ້ນຫລາຍ ໆ ອົງ ແຕ່ມີຜາກົດອົງສຳຄັນກໍຄືພຣະພຸທຮູບອົງຕື້ (ພຣະເຈົ້າອົງຕື້) ພຣະສຸກ ພຣະໃສ ແລະພຣະເສີມ ດັ່ງກ່າວມາແລ້ວ.

ຕຳນານນຶ່ງທີ່ພົບເຫັນຢູ່ວັດພຣະເຈົ້າອົງຕື້ບ້ານນ້ຳໂມງອຳເພີທ່າບໍ່ ຈັງຫວັດໜອງຄາຍ ປະເທດໄທ ຂຽນໄວ້ວ່າ ພຣະເຈົ້າອົງຕື້ ຢູ່ວັດບ້ານນ້ຳໂມງນີ້ ແມ່ນເມັຽນ້ອຍຂອງພຣະໄຊຍະເຊດຖາທິຣາດເປັນຜູ້ສ້າງ ສ່ວນພຣະເຈົ້າອົງຕື້ທີ່ວຽງຈັນນັ້ນ ແມ່ນເມັຽຫລວງຂອງເພິ່ນເປັນຜູ້ສ້າງ ຍັງມີການກ່າວກັນຕໍ່ໄປອີກວ່າ ພຣະເຈົ້າອົງຕື້ອົງອື່ນ ໆ ດັ່ງ ພຣະເຈົ້າອົງຕື້ຢູ່ວັດທ່າລາດ ເມືອງໂພນໂຮງ ກິ່ງແຂວງຖິ່ນແກ້ວ ຢູ່ວັດເມືອງໂສຍ ວັດບ້ານເຕື່ອມ ແຂວງຫົວພັນ ດັ່ງນີ້ເປັນຕົ້ນ ກໍວ່າພຣະໄຊຍະເຊດຖາທິຣາດສ້າງຂຶ້ນຄືກັນ ຕາມຄວາມສັນນິຖານຂອງຂ້າພະເຈົ້າແລ້ວ ພຣະເຈົ້າອົງຕື້ອົງອື່ນ ໆ ນັ້ນອາດບໍ່ໄດ້ສ້າງຂຶ້ນໃນເວລາດຽວກັນກໍໄດ້ ແຕ່ເອົາແບບຢ່າງກັນມາເລື້ອຍ ໆ ວິທີສ້າງພຣະພຸທຮູບອົງຕື້ນີ້ ອາດມີຂຶ້ນໃນສມັຍຂອງພຣະໄຊຍະເຊດຖາທິຣາດນີ້ກໍເປັນໄດ້ ເປັນທັມມະດາຢູ່ວ່າ ຄວາມຈະເຣີນກ້າວໜ້າຂອງສິລປະແຕ່ລະສະກູລນັ້ນຕ້ອງໃຊ້ເວລາຢູ່ເປັນຮ້ອຍ ໆ ປີ.

ສິ່ງສຳຄັນອີກຢ່າງນຶ່ງກໍຄື ຕົ້ນມະຫາໂພທິ ທີ່ພຣະມະຫາມາຣະທະເຖຣະ ປະເທດສຣີລັງກາ ນຳມາປະດິສຖານໄວ້ຢູ່ທາງທິດຕາວັນຕົກຂອງສິມປະມານ 15 ແມັດ ໃນປີ ພ.ສ. 2481 (ຄ.ສ 1939) ກົງກັບປີ ຂານ ເດືອນ 3 ແຮມ 10 ຄ່ຳ ວັນອັງຄານ ແລະ ບານປະຕູສິມ ທີ່ພວກເຮົາເຫັນເປັນສງ່າວິຈິດງົດງາມຢູ່ປັດຈຸບັນນີ້ນັ້ນມີຈຳນວນ 3 ປະຕູ ແມ່ນພຣະບໍຣົມເສດຖາຂັດຕິຍະສຸຣິຍະວົງສາ ພຣະມະຫາສີສວ່າງວັທນາ ໄດ້ຊົງນຳມາຖວາຍໄວ້ເມື່ອ ພ.ສ. 2509 (ຄ.ສ. 1966) ຜູ້ຮັບສນອງພຣະຣາຊສັດທາ ແມ່ນເຈົ້າພຍາຫລວງເມືອງຈັນ (ອູ່ທອງ ສຸວັນນະວົງ) ຊຶ່ງເປັນຜູ້ເອື້ອເຟື້ອຊ່ອຍຫລືອໄມ້; ເຈົ້າມະນີວົງ ຂັດຕິຍະຣາດ ເປັນຜູ້ແຕ້ມ ເພັຽສິດທິພົນອາດ (ທິດຕັນ) ສຸວັນນະພູມ ເປັນຜູ້ຄວັດລວງລາຍ ວັດອົງຕື້ນອກຈາກມີຄວາມສຳຄັນດັ່ງກ່າວແລ້ວຍັງເປັນວັດທີ່ຜລິດນັກສຶກສາ ຝ່າຍສາສນາອີກດ້ວຍຄື ເຣີ່ມຕົ້ນແຕ່ປີ ຄ. ສ. 1953 ເຖິງປັດຈຸບັນນີ້ມີພຣະພິກຂຸສາມເນນສຳເຣັດການສຶກສາຈາກສະຖາບັນສຶກສາພຸທສາສນາແຫ່ງນີ້ຫລາຍຮ້ອຍອົງແລ້ວ ຂ້າພະເຈົ້າຂໍສຣຸບດັ່ງນີ້ຄື :

1. ວັດອົງຕື້ອາດສ້າງຂຶ້ນກ່ອນສມັຍພຣະໄຊຍະເຊດຖາທິຣາດ ສະເດັດລົງມາສ້າງເມືອງວຽງຈັນເປັນຣາຊທານີ ເພາະວ່າປະຊາຊົນວຽງຈັນໄດ້ນັບຖືພຣະພຸທສາສນາມາກ່ອນ ສມັຍພຣະໄຊຍະເຊດຖາທິຣາດ

2. ວັດອົງຕື້ອາດສ້າງຂຶ້ນພ້ອມດຽວກັນກັບພຣະໄຊຍະເຊດຖາທິຣາດ ສ້າງພຣະເຈົ້າອົງຕື້ (ພຣະພຸທຮູບອົງຕື້) ເພຣາະວ່າເປັນທັມນຽມຂອງກະສັດ ໃນສມັຍກ່ອນນັ້ນເພິ່ນມັກສ້າງວັດຂຶ້ນໄວ້ສັກກາຣະບູຊາເປັນຂອງເພິ່ນເອງ

3. ວັດອົງຕື້ອາດສ້າງຂຶ້ນໃນສມັຍຂອງພຣະໂພທິສາຣະຣາດ ພຣະບິດາຂອງພຣະໄຊຍະເຊດຖາທິຣາດ ຄືຕອນທີ່ພຣະອົງໄດ້ລົງມາປະທັບຢູ່ນະຄອນວຽງຈັນ, ຕໍ່ມາພຣະຣາຊໂອຣົດຂອງພຣະອົງຈຶ່ງມາຫລໍ່ພຣະເຈົ້າອົງຕື້ປະດິສຖານໄວ້

ຢ່າງໃດກໍດີທີ່ກ່າວທັງໝົດນີ້ເປັນພຽງການສັນນິຖານທ່ານັ້ນ ເພາະເຮົາຍັງບໍ່ທັນໄດ້ພົບຫລັກຖານແນ່ນອນ.

ພຣະພທຮູບທີ່ວັດເພັຽວັດ ວຽງຈັນ (ເມື່ອຍັງບໍ່ປະຕິສັງຂອນໃໝ່)

ພັທສິມາ ວັດຈັນທະບຸຣິ ວຽງຈັນ

ວັດເພັຍວັດ (ພຍາວັດ) ແລະວັດຈັນທະບຸຣີ

ໂດຍ ບຸນເຮັງ ບົວສີແສງປະເສີດ

ວັດເພັຍວັດ ຫລືພຍາວັດ ແລະວັດຈັນທະບຸຣີ ເປັນວັດເກົ່າແກ່ໃນນະຄອນວຽງຈັນ ເປັນວັດທີ່ມີສີລປະ ແລະສະຖາປັຕຍະກັມລາວອັນລ້ຳຄ່າ ສະແດງໃຫ້ເຫັນວ່າສີມືລາວໃນສມັຍກ່ອນຍອດຍ້ຽມກວ່າຄົນລາວສມັຍນີ້ ເຮົາຈະເຫັນໄດ້ຈາກຮູບລັກສນະຂອງສິມ ລາຍແລະດອກດວງ ແລ ພຣະພຸທຮູບຫລາຍອົງ ຍັງເປັນຫລັກຖານໃຫ້ເຮົາເຫັນວ່າ ຄົນລາວໃນສມັຍກ່ອນມີຄວາມສີວິໄລຫລາຍ ບໍ່ແມ່ນແຕ່ພຽງການປົກຄອງ ການເສຖກິດ ແລະ ສັງຄົມທ່ານັ້ນ ການສາສນາ ການສ້າງສາ ສີລ–ປະແລະສະຖາປັຕຍະກັມ ກໍຈະເຣີນຫລາຍ ເຖິງແມ່ນວ່າວັດທັງສອງນີ້ ຈະຖືກທຳລາຍດ້ວຍຂ້າເສິກມາຫລາຍຄັ້ງກໍຕາມ ຄວາມສີວິໄລກໍຍັງເປັນຮູບຮ່າງພໍໃຫ້ເຮົາເຫັນໄດ້ເໝືອນເງົາຢູ່ໃນແວ່ນ.

ເມື່ອເຮົາເວົ້າເຖິງວັດເພັຍວັດ ຈະຕ້ອງກ່າວເຖິງວັດຈັນທະບຸຣີນຳດ້ວຍ ເພາະວ່າວັດທັງສອງນີ້ສ້າງຂຶ້ນພ້ອມກັນ ໃນສມັຍແລະຄົນດຽວກັນເປັນຜູ້ສ້າງ ວັດເພັຍວັດແລະວັດຈັນທະບຸຣີຕັ້ງຢູ່ແຄມນ້ຳຂອງ ຫ່າງກັນປະມານ 1 ກິໂລແມັດປາຍ ເພັຍວັດຢູ່ທາງທິດຕາເວັນອອກ ວັດຈັນທະບຸຣີຢູ່ທາງທິດຕາເວັນຕົກ ຢູ່ໃນກຳແພງເມືອງຊັ້ນໃນ.

ສິ່ງສຳຄັນທີ່ປາກົດໃຫ້ເຮົາເຫັນຢູ່ບັດຈຸບັນນີ້ ໃນວັດເພັຍວັດນັ້ນກໍຄື ສິມໃຫຍ່ເຖິງວ່າຈະໄດ້ປະຕິສັງຂອນຂຶ້ນໃໝ່ກໍຕາມ ແຕ່ກໍຍັງຮັກສາຊົງເດີມໄວ້ຢູ່ແລະພຣະພຸທຮູບຫລາຍອົງທີ່ເອົາໄປຮັກສາໄວ້ວັດຫໍພຣະແກ້ວ ແລະຍັງເຫລືອຢູ່ວັດເພັຍວັດເອງກໍມີ. ໃນສມັຍກ່ອນວັດເພັຍວັດອາດຈະກວ້າງໃຫຍ່ກວ່າບັດຈຸບັນນີ້ ເພາະວ່າແຕ່ກ່ອນນັ້ນເພິ່ນໃສ່ຊື່ວ່າວັດພຍາ ຕາມຄວາມເຫັນຂອງຂ້າພະເຈົ້າແລ້ວເຫັນວ່າ ຜູ້ສ້າງວັດນີ້ອາດຈະມີເຈຕນາຢາກໃຫ້ວັດເພັຍວັດນີ້ເປັນສູນກາງໃຫຍ່ໃນນະຄອນວຽງຈັນ ສະນັ້ນເພິ່ນຈຶ່ງເອີ້ນຊື່ວ່າພຍາວັດ ຕໍ່ມາຄົນເລີຍຮ້ອງແປ່ໄປວ່າ ວັດເພັຍວັດ.

ຫລັກຖານທີ່ສະແດງໃຫ້ເຫັນວ່າ ວັດເພັຍວັດເປັນວັດເກົ່າແກ່ ຍ້ອນຫີນສີລາເລກຂຽນໄວ້ວ່າ ໄດ້ສ້າງຂຶ້ນໃນປີ ຈຸລສັກຣາດ 913 (ຄ.ສ. 1551) ບັດຈຸບັນ ຫີນສີລາເລກນີ້ໄດ້ເກັບໄວ້ທີ່ວັດຫໍພຣະແກ້ວ ມີພຣະພຸທຮູບທອງສັມຣິດຫລາຍອົງທີ່ເພິ່ນຂຽນຈຸລສັກຣາດໄວ້ ສະແດງໃຫ້

ເຫັນວ່າ ສ້າງຂຶ້ນໃນສັດຕະວັດທີ 16 ຄືກ່ອນສມັຍພຣະໄຊຍະເຊດຖາທິຣາດທີ 1 ລົງມາຕັ້ງເມືອງວຽງຈັນເປັນຣາຊທານີປະມານ 9 ປີ ໂດຍພຣະຍາຈັນທະບຸຣີສີສັດທັມມະໄຕໂລກຜູ້ຄອງເມືອງວຽງຈັນ.

ວັດເພັຽວັດ (ພຍາວັດ) ແລະວັດຈັນທະບຸຣີສີສັດທັມມະໄຕໂລກ ກ່າວຕາມໜັງສືຂອງທ່ານເຣມຣີ ປາກມັງເຈ ນັກປຣາດຄົນຝຣັ່ງເສດ ໄດ້ເຂົ້າມາຄົ້ນຄວ້າສິລປະລາວໃນປີ 1911 ເພິ່ນພົບວ່າວັດເພັຽວັດ ເປັນວັດທີ່ເກົ່າແກ່ແລະຊຸດໂຊມຫລາຍ ເປັນທີ່ກວ້າງໃຫຍ່ຕາມແບບສິລປະຂອງລາວໂດຍແທ້ ເພິ່ນໄດ້ພົບເຫັນພຣະພຸທຮູບໃຫຍ່ຫລາຍອົງຢູ່ໃນສິມ ແລະຢູ່ຕາມຕົ້ນເສົາສິມມັນມີຮູບສັດຕ່າງໆ ໃນຕົວຂອງສິມມັນມີຮູບທ້ອນົກແລະທາງມ້າ ປາກົດວ່າໃນປີ 1911 ໄດ້ປະຕິສັງຂອນໃໝ່.

ທີ່ວັດຈັນທະບຸຣີ ເພິ່ນໄດ້ພົບເຫັນວ່າເປັນວັດເກົ່າແກ່ ມີຮູບແບບແຜນຜັງອັນດຽວກັນກັບວັດເພັຽວັດ ຢູ່ໃນສິມເພິ່ນພົບເຫັນຍອດທາດສຳຣິດເປັນສີ່ລ່ຽມ ເຮັດດ້ວຍທອງ ແຕ່ດຽວນີ້ປາກົດວ່າບໍ່ເຫັນບໍ່ຮູ້ວ່າໄປຢູ່ທາງໃດ ເພິ່ນພົບເຫັນພຣະພຸທຮູບທອງຫລາຍອົງດ້ວຍກັນ ແຕ່ພຣະພຸທຮູບທອງເຫລົ່ານີ້ຍັງຢູ່ວັດຈັນ ແລະເພິ່ນຍັງໄດ້ບັນທຶກໄວ້ວ່າ ເສົາປະຕູເຂົ້າວັດນັ້ນ ເພິ່ນຄວັດຮູບນາງເທວະດາໃສ່ວິຈິດງົດງາມຫລາຍ ດຽວນີ້ເກັບໄວ້ທີ່ວັດຫໍພຣະແກ້ວ ສະແດງໃຫ້ເຫັນວ່າວັດຈັນທະບຸຣີເປັນວັດເກົ່າແກ່ສວຍງາມຫລາຍ.

ວັດຈັນທະບຸຣີໄດ້ຖືກທຳລາຍໂດຍສັດຕຣູຫລາຍສມັຍ ແຕ່ໄດ້ປະຕິສັງຂອນຂຶ້ນໃໝ່ຫລາຍສມັຍຄືກັນ ຄືຣິເຣີ່ມແຕ່ປີ 1911 ເປັນຕົ້ນມາ ເປັນສມັຍທີ່ຝຣັ່ງເສດຄິດຣິເຣີ່ມ ຄົ້ນຄວ້າສິລປະແລະສະຖາປັຕຍະກັມໃນອິນໂດຈີນ ຝຣັ່ງເສດໄດ້ຈັດຕັ້ງໂຮງຮຽນຄົ້ນຄວ້າສິລປະບູຮານທີ່ ຮາໂນຍ ປະເທດວຽດນາມ ປາກົດວ່າສິລປະບູຮານຫລາຍຢ່າງ ທີ່ຖືກສົ່ງໄປຮາໂນຍ ເພື່ອທຳການພິສູດແລະວິຈັຍບາງຢ່າງກໍຖືກສົ່ງກັບມາຍັງຣາຊອານາຈັກລາວ ບາງຢ່າງກໍສູນເສັຽໄປ ສິລປະບູຮານໄດ້ສູນເສັຽໄປດ້ວຍຂ້າເສິກຫລາຍສມັຍ ຈົນເກືອບບໍ່ເຫັນຮ່ອງຮອຍເລີຍ ຍາກທີ່ຈະຄົ້ນຄວ້າຫາຫລັກຖານໄດ້ ສະນັ້ນຂ້າພະເຈົ້າຫວັງວ່າທ່ານນັກຍາຊົນທັງຫລາຍ ຈະຊ່ອຍກັນຊອກຄົ້ນຫາຕຳຣັບຕຳຣາ ທີ່ກ່ຽວກັບສາສນາສິລປະ ວັທນະທັມ ຮີດຄອງປະເພນີອັນດີງາມຂອງລາວເຮົາມາໄວ້ ໃຫ້ເປັນແບບແຜນອັນແນ່ນອນເພື່ອປະໂຍດແກ່ກຸລບຸດພາຍຊ້ອຍ. ຫລັງຈາກກະສັດອົງເຈົ້າອະນຸ ຊຶ່ງເປັນກະສັດອົງສຸດທ້າຍຂອງນະຄອນວຽງຈັນ ໄດ້ສັ້ນພຣະຊົນໄປແລ້ວ ພຣະນະຄອນວຽງຈັນກໍໄດ້ຕົກໄປເປັນເມືອງຂຶ້ນຂອງໄທວັດວາ ອາຣາມ ຫລາຍໆ ວັດຖືກທຳລາຍ ແລະບໍ່ມີພຣະພິກສຸສົງສາມເນນຢູ່ອາສັຍ ຈົນຮອດປີ ຄ.ສ. 1875 ພວກຫໍ້ໄດ້ຍົກພົນລົງມາຈາກທິດຕາເວັນອອກສຽງເໜືອຂອງຣາຊອານາຈັກລາວ ມາປຸ້ນສະດົມນະຄອນວຽງຈັນ ພວກຫໍ້ໄດ້ມ້າງເພ ໂບດວິຫານ ພຣະທາດເຈດີຕ່າງໆ ໂຮມທັງພຣະທາດ

ຫລວງ ເພື່ອຊອກເອົາຊັບສົມບັດທີ່ເພິ່ນຝັງໄວ້ໃນພຣະທາດແລະໂບດ ວິຫານຈົນໃຫ້ໝົດ ໃນສມັຍນັ້ນປາກົດວ່າພວກຫໍ້ໄດ້ຕັ້ງຄ້າຍຢູ່ວັດຈັນທະບຸຣີເພື່ອຕໍ່ສູ້ກັບກອງທະຫານໄທ ໃນທີ່ສຸດກອງທະຫານໄທກໍໄດ້ກຳຈັດພວກຫໍ້ອອກຈາກນະຄອນວຽງຈັນ ພວກຫໍ້ໄດ້ເສັຽໄພ່ພົນເປັນອັນມາກ ນີ້ສະແດງໃຫ້ເຫັນວ່າວັດຈັນທະບຸຣີ ໄດ້ກາຍເປັນປ້ອມຕໍ່ສູ້ຂອງພວກຂ້າເສິກໄປລະຍະນຶ່ງ.

ຫລັກຖານທາງປວັດສາດທີ່ສະແດງໃຫ້ເຫັນວ່າ ວັດເພັຽວັດ ແລະ ວັດຈັນທະບຸຣີ ເປັນວັດເກົ່າແກ່ ຄືໃນປີ ຄ.ສ. 1550 ພຣະໂພທິສາຣະຣາດ ພຣະບິດາຂອງພຣະໄຊຍະເຊດຖາທິຣາດໄດ້ສະເດັດສຸຣະຄົດ ພວກເສນາຝ່າຍໃຕ້ ອັນມີພຍາວຽງ 1 ແສນມະໂຮງ 1 ພຣະມານດາຂອງພຣະລ້ານຊ້າງ 1 ກວານດ້ານພ້າ 1 ເປັນຫົວໜ້າພໍ່ໄດ້ຊາບວ່າ ພຣະໂພທິສາຣະຣາດສະເດັດສຸຣະແລ້ວ ກໍພ້ອມກັນຄິດຈະເອົາພຣະລ້ານຊ້າງຂຶ້ນເປັນພຣະເຈົ້າແຜ່ນດິນ ຈຶ່ງຂັດແຂງຢູ່ເມືອງປາກຫ້ວຍຫລວງ ພຣະໄຊຍະເຊດຖາທິຣາດ ໄດ້ຊົງຊາບດັ່ງນັ້ນ ຈຶ່ງມີພຣະຣາຊອາຄຍາແຕ່ງໃຫ້ພຣະຍາສີສັດທັມມະໄຕໂລກ ຍົກພົນລົງມາກຳຈັດກອງທະຫານພຣະລ້ານຊ້າງ, ພຣະລ້ານຊ້າງກັບພຣະຍາສີສັດທັມມະໄຕໂລກໄດ້ຣົບກັນຢູ່ແກ້ງສາ ພຣະຍາວຽງ, ກວານດ້ານພ້າ, ແລະແສນມະໂຮງ ເຫັນວ່າຈະຕ້ານທານບໍ່ໄດ້ ຈຶ່ງເອົາພຣະລ້ານຊ້າງ ໜີລົງໄປເພິ່ງພຍານະຄອນ ທີ່ເມືອງກະບອງ (ທ່າແຂກ) ພຣະຍານະຄອນຈຶ່ງຈັບຄົນທັງສາມ ສົ່ງໃຫ້ພຣະຍາສີສັດທັມມະໄຕໂລກ ພວກສາມຄົນທີ່ເປັນຕົ້ນຄິດນັ້ນພຣະຍາສີສັດທັມມະໄຕໂລກ ກໍໃຫ້ປະຫານຊີວິດເສັຽ ແລ້ວຄຸມເອົາແຕ່ພຣະລ້ານຊ້າງແລະພຣະມານດາຂຶ້ນໄປເມືອງຊຽງທອງ ພໍເຖິງແກ້ງປິງ ພຣະຍາສີສັດທັມມະໄຕໂລກ ກໍສັ່ງໃຫ້ປະຫານຊີວິດພຣະມານດາຂອງພຣະລ້ານຊ້າງເສັຽ ຄຸມເອົາແຕ່ພຣະລ້ານຊ້າງ ແລະແມ່ລ້ຽງຜູ້ນຶ່ງຊື່ວ່າ ນາງກອງສ້ອຍຂຶ້ນໄປນະຄອນຊຽງທອງ ສົມເດັດພຣະໄຊຍະເຊດຖາທິຣາດເຈົ້າຈຶ່ງຊົງພຣະກະຣຸນາອະພັຍໂທດແລ້ວມອບໃຫ້ໄປຢູ່ນຳພຣະຍາແສນເມືອງ ເມື່ອພຣະອົງໄດ້ຈັດບ້ານເມືອງໃຫ້ສງົບລົງແລ້ວ ພຣະອົງກໍຊົງແຕ່ງຕັ້ງພຣະຍາສີສັດທັມມະໄຕໂລກ ຜູ້ມີຄວາມຊອບຂຶ້ນເປັນພຣະຍາຈັນທະບຸຣີສີສັດທັມມະໄຕໂລກນ້ຳອອກພຣະເປັນເຈົ້າ ແລ້ວພຣະອົງຈຶ່ງຊົງພຣະກະຣຸນາໃຫ້ມານັ້ງນະຄອນວຽງຈັນ ບັນດາເມືອງເຫລົ່ານີ້ຄື :— ຊຽງຄານ, ແກ່ນທ້າວ, ເມືອງແກ, ເມືອງພຣະມ້າຮຸ່ງ, ຊຽງສາ, ເມືອງປາກຫ້ວຍຫລວງ ແລະວຽງຄຳໃຫ້ຢູ່ໃນຄວາມປົກຄອງຂອງ ພຣະຍາຈັນທະບຸຣີສີສັດທັມມະໄຕໂລກ, ເພິ່ນໄດ້ລົງມານັ່ງເມືອງວຽງຈັນຈຶ່ງເປັນເມືອງໃຫຍ່ ໃນສມັຍທີ່ຢູ່ວຽງຈັນນີ້ເອງ ເພິ່ນໄດ້ສ້າງວັດຂຶ້ນ 2 ວັດຄື ວັດພຍາວັດຢູ່ທາງທິດຕາວັນອອກ (ຄືວັດເພັຽວັດທຸກວັນນີ້) ແລະວັດຈັນທະບຸຣີ ຢູ່ທາງທິດຕາວັນຕົກ (ຄືວັດຈັນທຸກມື້ນີ້) ໃນປີ ຄ.ສ. 1551 ນັ້ນເອງ.

ສມັຍຕໍ່ມາເມື່ອ ພ.ສ. 2473 (ຄ.ສ. 1930) ເຈົ້າຣາຊພາຄີໄນຍເພັຊຣາດ ໄດ້ຈັດຕັ້ງພຸທບັນດິດສະພາຈັນທະບຸຣີ ຂຶ້ນໃສ່ວັດຈັນທະບຸຣີ ຊຶ່ງມີພຍາມານເສນາ (ຈານບົວ) ປະຈຳຢູ່ທີ່ສມຸດ ຈຸດປະສົງຂອງພຸທບັນດິດສະພາຈັນທະບຸຣີ ກໍ່ເພື່ອເຜີຍແຜ່ພຸທສາສນາ ຮິບໂຮມຕຳຣາກ່ຽວກັບ ສາສນາ ສິລປະ ວັທນະທັມ ຮີດຄອງປະເພນີລາວ ແລະ ສົ່ງເສີມ ຈັດພິມໜັງສືວັນນະຄະດີລາວຕລອດຮອດແບບຮຽນ ພາສາບາລີຕ່າງໆ ສະນັ້ນຈຶ່ງນັບວ່າວັດຈັນທະບູຣີເປັນສະຖານທີ່ຟື້ນຟູສາສນາແລະວັນນະຄະດີລາວຄັ້ງໃຫຍ່ ຫລັງຈາກການສູນເສັຽເອກຣາດມາເປັນເວລາຫລາຍປີ. ວັດຈັນທະບຸຣີແລະພຸທບໍຣິສັດໃນເຂດວັດຈັນທະບຸຣີ ປາກົດວ່າອຸປຖັມໂຮງຮຽນບາລີມາຮອດທຸກວັນນີ້ແລ. ໃນການຕໍ່ມາເມື່ອປີ 1931 ອົງນາຍົກພຸທບັນດິດສະພາຈັນທະບຸຣີ (ຄືເຈົ້າເພັຊຣາດ) ຈຶ່ງໄດ້ຕັ້ງຄນະກັມມະການຂຶ້ນຄນະນຶ່ງປະກອບດ້ວຍບຸກຄົນດັ່ງຕໍ່ລົງໄປນີ້ຄື :–

– ເຈົ້າເພັຊຣາດ ນາຍົກພຸທບັນດິດສະພາຈັນທະບຸຣີ — ເປັນປະທານ
– ພນະທ່ານທຍຸຍ ອະພັຍ — ກັມມະການ
– ຍາພໍ່ມະຫາແກ້ວ — ”
– ຍາພໍ່ພິມມະສອນ — ”
– ຍາພໍ່ເມືອງໂຂງ — ”
– ພຍາມານເສນາ — ”
– ທ່ານເລກເຮືອງ — ”
– ທ່ານບລັງຊາ ເດີລາໂບຣດ — ”
– ພຍາສິນະຄອນໂລກ (ພນະທ່ານຜຸຍ ປັ້ນຍາ) — ”
– ທ່ານມະຫາສີລາ ວີຣະວົງ — ເລຂານຸການແລະກັມມະການ

ຄນະກັມມະການນີ້ປາກົດວ່າມີບົດບາດຍ່າງໃຫຍ່ຫລວງ ກ່ຽວກັບອັກສອນສາດລາວໄດ້ທຳການໂຕ້ແຍ່ງກັນ ກ່ຽວກັບອັກສອນສາດລາວ ບາງພວກທີ່ຮຽນຮູ້ພາສາຝຣັ່ງເສດມາຫລາຍກໍສເນີໃຫ້ລຶບລ້າງຕົວລາວຖິ້ມ ໃຫ້ນັນຍັດເອົາຕົວຝຣັ່ງເສດໃຊ້ແທນຕົວອັກສອນລາວ ແລະບາລີດັ່ງທີ່ໃຊ້ກັນໃນປະເທດວຽດນາມ ບາງພວກທີ່ມີຄວາມຮູ້ທາງວັດກໍສເນີໃຫ້ປັບປຸງເອົາຕົວລາວທີ່ມີຢູ່ນັ້ນ ຫາກໂຕໃດທີ່ຍັງບໍ່ຄົບຕາມແບບບາລີກໍໃຫ້ຕື່ມໃສ່, ສະນັ້ນຈຶ່ງນັບໄດ້ວ່າວັດຈັນທະບຸຣີ ເປັນບ່ອນສນັບສນູນຟື້ນຟູພຣະສາສນາ ສິລປະ ວັທນະທັມ ແລະວັນນະຄະດີຂອງຊາດ ✳

24 / VII
ຫ້າມຈຳໜ່າຍ

ພຣະຄຣູໂພນສະເມັກ ຫລືຍາຄຣູຂີ້ຫອມ

ໂດຍ ຈັນທ໌ ອິນທຸພິລາສ

ພຣະຄຣູໂພນສະເມັກຫລືຍາຄຣູຂີ້ຫອມ ເປັນພຣະມະຫາເຖຣະຜູ້ມີຊີວິດຢູ່ໃນອານາຈັກລາວ ເມື່ອ 300 ປີປາຍມາແລ້ວ ເປັນຜູ້ມີຊື່ລືຊາຜາກົດທັງສອງຝັ່ງຂອງ ຂອງອານາຈັກລາວຕັ້ງແຕ່ເໜືອສຸດໃຕ້ ຍ້ອນຄວາມທີ່ທ່ານເປັນຜູ້ມີຊື່ສຽງ ແລະເປັນທີ່ໂຄຣົບບູຊາຂອງປະຊາຊົນຢ່າງສູງ ຈຶ່ງເຮັດໃຫ້ປວັດຂອງທ່ານຜູ້ນີ້ ເກືອບຈະກາຍເປັນບຸກຄົນໃນເທພນິຍາຍໄປ ເພາະລາງຕອນໃນປວັດເລົ່າກັນໄປໃນທຳນອງອະພິນິຫານ ແຕ່ຢ່າງໃດກໍຕາມ ທ່ານຜູ້ນີ້ກໍມີຊື່ຕິດຢູ່ໃນປວັຕສາດແຫ່ງແຜ່ນດິນລາວ ທີ່ນັບວ່າລະອຽດພິສົນດອນ ແລະສົມບູນກວ່າພຣະເຖຣະອົງອື່ນໃນສມັຍດຽວກັນນັ້ນຕັ້ງຫລາຍສິບອົງ. ເປັນທັມມະດາຄົນທີ່ມີຊື່ສຽງ ເປັນທີ່ນັບຖືຂອງຄົນຫລາຍຖິ່ນຫລາຍແດນ ຄົນຍ່ອມຈະເວົ້າກ່າວເຖິງຜິດແຜກແຕກຕ່າງກັນໄປ ແລະເປັນທັມມະດາຂອງຄົນໃນປວັດສາດອັນຍາວນານ ຍ່ອມຈະຕ້ອງມີທັງເປືອກ ທັງນອກທັ້ນ ແກ່ນແທ້ຢູ່ໜາແໜ້ນ ເຮົາຜູ້ອ່ານປວັດຈະຕ້ອງໃຊ້ວິຈາຣະນະຍານ–ຄວາມຣິນຕອງໃຫ້ດີ ຢ່າຟ້າວເຊື່ອໂລດ ແລະຢ່າຟ້າວບໍ່ເຊື່ອໂລດ.

ພຣະຄຣູໂພນສະເມັກ ເປັນພຣະສົງຜູ້ທົງຄຸນງາມຄວາມດີ ເປັນທີ່ຮັກແພງແລະໂຄຣົບນັບຖືຂອງປະຊາຊົນຢ່າງຍິ່ງ ຈົນຖືກັນວ່າຂີ້ຂອງເພິ່ນກໍບໍ່ເໝັນ ຈຶ່ງຖວາຍເນມິຕກະນາມວ່າ "ຍາຄຣູຂີ້ຫອມ" ເພິ່ນມີປວັດຕິດພັນຢູ່ກັບຄົນຊັ້ນເຈົ້າຊັ້ນຈອມ ຕັ້ງແຕ່ຍັງຢູ່ນະຄອນວຽງຈັນ ຫລືກຸງສຣີສັຕນາຄນະຫຸດ ຈົນເຖິງຍາມໄປຢູ່ນະຄອນຈຳປາກນາຄບຸຣີ ຫລືນະຄອນຈຳປາສັກ ແລະໃນທີ່ສຸດ ເພິ່ນໄດ້ມີສ່ວນຈັດຕັ້ງຣາຊວົງຝ່າຍໃຕ້ ແລະອານາຈັກຈຳປາສັກ ອັນເປັນອານາຈັກທີ 3 ໃນດິນແດນລ້ານຊ້າງນຳ.

ພຣະຄຣູໂພນສະເມັກຊື່ນີ້ ຮ້ອງຕາມພົງສາວະດານສະບັບກະຊວງສຶກສາທິການລາວ ແຕ່ໃນໜັງສືປະຊຸມພົງສາວະດານພາກທີ 70 ເລື່ອງນະຄອນຈຳປາສັກສະບັບພາສາໄທໃຊ້ວ່າ ພຣະຄຣູໂພນສເມັດ ຈະບໍ່ຂໍກ່າວວິຈານວ່າຊື່ໃດຜິດຊື່ໃດຖືກ ຈະຂໍໃຊ້ຄຳວ່າ ພຣະຄຣູໂພນສະເມັກ ໃນການຂຽນປວັດຂອງທ່ານອົງນີ້ຕລອດເຣື່ອງ.

ຊາຕິພູມ ຄືສະຖານບ້ານເກີດເມືອງນອນເດີມແທ້ຂອງເພິ່ນຢູ່ໃສ ແລະເພິ່ນເປັນຄົນລາວ

ແທ້ຫລືບໍ່? ເປັນເຣື່ອງທີ່ໜ້າສົງສັຍ ໃນໜັງສືເຖຣະປະວັດພາສາໄທ ຂອງພຣະເທພຣັຕນະໂມລີ ເຈົ້າວັດພຣະທາຕຸພະນົມກ່າວວ່າ ພຣະຄຣູໂພນສະເມັກ ເກີດເມື່ອປີມະແມ ພ.ສ. 2174 (ຄ.ສ. 1631) ເກີດຢູ່ບ້ານກະລຶມເມືອງພານ ຢູ່ຕີນພູພານບ່ອນປະດິສຖານພຣະບາດບົວບົກ ຢູ່ໃນເຂດເມືອງຜື ແຂວງອຸດອນທານີ ປະເທດໄທດຽວນີ້, ແຕ່ໃນເຣື່ອງເມືອງຈຳປາສັກດັ່ງກ່າວຂ້າງເທິງນັ້ນ ກ່າວໄວ້ວ່າ ເພິ່ນມາແຕ່ກະລຶມເມືອງພານຄືກັນ ແຕ່ບອກບໍ່ຄັກວ່າບ້ານເມືອງອັນນັ້ນຢູ່ໃສ ແລະເພິ່ນບອກວ່າ ເພິ່ນ (ຍັງເປັນຈົວ) ເປັນລູກສິດຂອງພຣະຄຣູລຶມບອງ ພັ່ງເບິ່ງຕາມຊື່ບ້ານ ແລະຊື່ອາຈານຂອງເພິ່ນ ກໍໃກ້ໄປທາງພາສາຂເມນກ່ຽວກັບຫວາຍ ໆ ນີ້ແຫລະ ສ່ວນຊື່ຂອງເພິ່ນວ່າໂພນສະເມັກນັ້ນ ເປັນຊື່ບ່ອນຢູ່ຫລືຊື່ແທ້ຂອງເພິ່ນ ຫລືເພິ່ນມີຊື່ແທ້ຢູ່ອີກຕ່າງຫາກຍັງສົງສັຍຖ້າຄຳວ່າກະລຶມແລະລຶມບອງເປັນພາສາຂເມນຍາທ່ານໂພນສະເມັກອາດເປັນຄົນຂເມນ ບໍ່ແມ່ນຄົນລາວ ຈະເປັນຄົນຂເມນບ້ານກະລຶມ ທີ່ຢູ່ແຖວເມືອງອຸດອນຫລືເປັນຄົນຂເມນຂຶ້ນມາຈາກດິນຂເມນກັມພູຊາແທ້ ໆ ກໍອາດເປັນໄດ້ ເພາະເວລາພາພໍ່ອອກ ແມ່ອອກລົງໄປທາງໃຕ້ ຈຶ່ງກ້າເຂົ້າໄປໃນດິນແດນຂອງຂເມນຢ່າງອາດຫານ ຈົນເຖິງຖືກໄລ່ຈຶ່ງຖອຍກັບ, ຖ້າເພິ່ນເປັນຄົນລາວຄົງຈະບໍ່ກ້າຫານຈົນປານນັ້ນ ແຕ່ຍ້ອນເພິ່ນຄິດວ່າ ເປັນບ້ານເກົ່າເມືອງເດີມຂອງເພິ່ນຈຶ່ງເຮັດໄປຢ່າງນັ້ນກໍເປັນໄດ້.

ຕໍ່ໄປນີ້ ຈະເລົ່າປະວັດຂອງພຣະຄຣູໂພນສະເມັກ ຕາມຂໍ້ຄວາມໃນພົງສາວະດານລາວແດ່ ຕາມຂໍ້ຄວາມໃນເຣື່ອງເມືອງຈຳປາສັກແດ່ ແລະອາດຈະມີຄວາມເຫັນຂອງຜູ້ຂຽນແຊກເຂົ້ານຳແດ່ ເປັນບາງຕອນ:–

"ເມື່ອ ຈ.ສ. 1005 ປີມະແມ (ພ.ສ 2186/ ຄ.ສ. 1643) ມີພຣະຄຣູຍອດແກ້ວ ຢູ່ນະຄອນວຽງຈັນ ໃນຣັຊການຂອງພຣະເຈົ້າສຸຣິຍະວົງສາທັມມິກຣາດ ໃນກາງຄືນຈຳວັດໄປກໍເກີດນິມິດຄວາມຝັນເຫັນວ່າ ມີຊ້າງພາຍໃຫຍ່ຕົວນຶ່ງເຂົ້າມາໃນອາຣາມ ທຳລາຍພຣະວິຫານແລ້ວຂຶ້ນໄປເທິງກະດີເອົາງາແທງຫໍໄຕທະລາຍລົງ ແລະຈັບເອົາໜັງສືຄຳພີຕ່າງ ໆ ກືນກິນເປັນອາຫານໝົດທັງກະອູບ ພໍຮຸ່ງແຈ້ງຕົກໃຈຕື່ນຂຶ້ນ ພຣະຄຣູຍອດແກ້ວກໍເລົ່ານິມິດນັ້ນໃຫ້ສົງທັງປວງຟັ່ງ ແລ້ວກໍພາກັນໄປບິນທະບາດ, ພໍຮອດຕາເວັນສວາຍພຣະສົງກັບຕ່າວຈາກຄຸ້ມບາດ ກໍເຫັນຈົວອົງນຶ່ງອາຍຸປະມານ 13–14 ປີ ມານັ່ງຢູ່ໃນອາຣາມ ພຣະສົງທັງປວງຈຶ່ງຖາມຈົວນັ້ນວ່າມາຈາກໃສ ຈົວຈຶ່ງບອກແກ່ພຣະສົງວ່າ ມາແຕ່ *ກະລຶມເມືອງພານ* ເປັນລູກສິດຂອງ *ພຣະຄຣູລຶມບອງ* ທ່ຽວມາຫາບ່ອນສຶກສາຮ່ຳຮຽນ ພຣະສົງທັງປວງຈຶ່ງໄປໄຫວ້ເລົ່າຄວາມນັ້ນແດ່ພຣະຄຣູຍອດແກ້ວ ພຣະຄຣູຍອດແກ້ວຈຶ່ງທັນເອົາຈົວນັ້ນ ຂຶ້ນໄປເທິງກະດີ ແລ້ວໃຫ້ຢູ່ນຳທັງບຳຣຸງຈົວນັ້ນໄວ້ເປັນຢ່າງດີ, ຕໍ່ມາພຣະຄຣູຍອດແກ້ວ ໄດ້ໃຫ້ຈົວນັ້ນ

ຮຽນເລົ່າສູດມົນຈົນເຖິງພຣະປາຕິໂມກ, ຈົວກໍຮຽນເອົາໄດ້ຄັກຈົນຈຳນິຈຳນານ, ພຣະຄຣູຍອດແກ້ວກໍໃຫ້ຈົວເລົ່າສູດຈື່ໄດ້ຈົນສຸດ ຕໍ່ໄປກໍໃຫ້ຮຽນພຣະໄຕຣປິດົກ ຕັ້ງແຕ່ພຣະທັມມະບົດບັ້ນຕົ້ນບັ້ນປາຍແລະແມ່ນວ່າຈະຮຽນຄັມພີໃດໆ ຕລອດຈົນເອົາຄັມພີໃນກະອູບຢູ່ຫໍໄຕມາໃຫ້ຮຽນ ຈົວນັ້ນກໍຮູ້ຈັກຈົນສຸດຈົນສ້ຽງ ບໍ່ມີໃຜຈະສູ້ໄດ້ຈັກຄົນ ຊື່ສຽງອັນນັ້ນໄດ້ເລົ່າລືໄປເຖິງອົງພຣະເຈົ້າມະຫາຊີວິດ ພຣະອົງກໍມີພຣະຣາຊຫິຣະທັຍເຫລື້ອມໃສ ທົງສະຖາປະນາຂຶ້ນເປັ່ນຊາຈົວ. ນັບແຕ່ນັ້ນ ກໍລືຊາຜາກົດໄປທົ່ວອານາເຂດປະເທດລ້ານຊ້າງ, ຄັນຊາຈົວນັ້ນອາຍຸໄດ້ 21 ປີ ພໍທີ່ຈະອຸປສົມບົດເປັ່ນພຣະພິກຂຸ ພຣະເຈົ້າມະຫາຊີວິດຈິ່ງນິມົນຊາຈົວໃຫ້ບອດເປັ່ນພິກຂຸ, ຊາຈົວຈິ່ງໄຫວ້ພຣະຄຣູຍອດແກ້ວວ່າ ຖ້າຈະບອດໃຫ້ຕົນແລ້ວ ຂໍໃຫ້ນິມົນພຣະສົງນັ່ງຫັດຖບາດໃຫ້ໄດ້ 500 ອົງ ໃຫ້ເຮັດສິມນ້ຳຈິ່ງຈະບອດ. ພຣະຄຣູຍອດແກ້ວກໍເຂົ້າໄປຖວາຍພຣະພອນ ໃຫ້ສົມເດັດພຣະເຈົ້າ ຯ ຊົງຊາບຕາມຖ້ອຍຄຳຂອງຊາຈົວ. ເມື່ອສົມເດັດພຣະເຈົ້າ ຯ ທົງຊາບດັ່ງນັ້ນ ກໍຕັດສັ່ງໃຫ້ເສນາຂ້າຣາຊການ ຈັດຫາເຮືອໃຫຍ່ມາຜູກຕິດກັນເຂົ້າແລ້ວເຮັດເປັ່ນສິມນ້ຳ, ເມື່ອເຖິງມື້ກຳໜົດກໍແຫ່ນາກຈົວໄປສູ່ສິມນ້ຳ, ພຣະອຸປັດຊາ, ພຣະອະນຸກັມມະອາຈາກັບພຣະສົງຫັດຖບາດ 500 ອົງ ກໍພ້ອມກັນທຳອຸປສົມບົດຍົກຊາຈົວຂຶ້ນເປັ່ນເຈົ້າຫົວ ຂໍນິສັຍເສັດແລ້ວພຣະອະນຸກັມມະອາຈາພວມຈະໃຫ້ອະນຸສາດ (ຄຳສອນພຣະໃໝ່) ແພທີ່ເຮັດເປັ່ນສິມນ້ຳກໍຈົມລົງພໍດີພຣະສົງທັງປວງພາກັນລອຍນ້ຳຂຶ້ນຝັ່ງ ໄຕຈີວອນປຽກໝົດທຸກອົງ ແຕ່ພິກຂຸທີ່ບອດໃໝ່ນັ້ນບໍ່ປຽກສະບົງຈີວອນຍັງແຫ້ງຢູ່ດັ່ງເດີມ ສົງທັງປວງເຫັນແລ້ວກໍພາກັນອັສຈັນໃຈ, ສົມເດັດພຣະເຈົ້າ ຯ ກໍທົງຍິນດີເປັ່ນທີ່ຍິ່ງ.

ຄັນພິກຂຸອົງນັ້ນອຸປສົມບົດໄດ້ຄົບນຶ່ງວັດສາ ສົມເດັດພຣະເຈົ້າ ຯ ກໍທົງຈັດຫາເຄື່ອງອັດຖະບໍຣິຂານຄົບຖ້ວນແລ້ວ ພ້ອມດ້ວຍຄນະສົງຈິ່ງຕັ້ງພິກຂຸອົງນັ້ນໃຫ້ເປັ່ນພຣະຄຣູ ໃຫ້ຢູ່ວັດໂພນ–ສະເມັກ (ໃນເຣື່ອງນະຄອນຈຳປາສັກວ່າ ວັດໂພນສເມັດ) ຄົນທັງຫລາຍຈິ່ງຮ້ອງເພີ່ມນຳຊື່ວັດທີ່ຢູ່ວ່າພຣະຄຣູໂພນສະເມັກ ຕັ້ງແຕ່ນັ້ນສືບມາ. ໃນໜັງສືເຣື່ອງນະຄອນຈຳປາສັກນັ້ນໄດ້ກ່າວວ່າ ພຣະຄຣູໂພນສະເມັກໄດ້ຮັກສາສິກຂາວິນັຍຢ່າງບໍຣິບູນ ສຳເຣັດເຖິງອະພິນຍາ 5 ແລະສະມາບັດ 8 ປະການປະກອບໄປດ້ວຍຍານ ຈະເວົ້າຈະຈາສິ່ງໃດກໍເຂັດຢຳຍ້ອນບຸນບາຣະມີດັ່ງໃຈນຶກ ຄົນທັງປວງກໍນິຍົມນັບຖືຢ່າງຫລວງຫລາຍ ຕ່າງກໍພາກັນສັຣະເສີນບຸນຂອງພຣະຄຣູໂພນສະເມັກ, ສົມເດັດພຣະເຈົ້າ ຯ ກໍທົງຮັບເປັ່ນອຸປຖາກ (ພໍ່ອອກຄ້ຳ).

ສົມເດັດພຣະເຈົ້າສຸຣິຍະວົງສາທັມມິກຣາດ ໄດ້ສະເດັດສຸຣະຄົດລົງໃນປີ ພ.ສ. 2233 ຄ.ສ. 1690 (1) ໂດຍບໍ່ມີພຣະຣາຊໂອຣົດຈະສືບຣາຊບັນລັງ ທັງມີພຣະຣາຊໂອຣົດຢູ່ອົງດຽວກໍ

ທຳຄວາມຜິດ ຈົນເຖິງພຣະອົງເອງຕັດສັ່ງໃຫ້ປະຫານຊີວິດເສັຽ ແຕ່ມີພຣະຣາຊນັດດາທີ່ເກີດຈາກພຣະຣາຊໂອຣົດອົງນັ້ນຢູ່ 2 ອົງຄື ເຈົ້າກິ່ງກິສຣາຊກຸມານ ກັບເຈົ້າອິນທະໂສມ ແຕ່ກໍຍັງທັງພຣະເຍົາ, ສ່ວນພຣະຣາຊນັດດາອີກອົງນຶ່ງ ປະສູດຈາກເຈົ້ານາງສຸມັງຄະລາ ຣາຊທິດາຂອງພຣະອົງມີພຣະນາມວ່າ ເຈົ້າອົງຫລໍ່ ແລະຍັງທັງພຣະເຍົາດັ່ງດຽວກັນ, ເຈົ້ານາຍອົງອື່ນ ໆ ກໍຄົງຈະມີຢູ່ ແຕ່ອາດຈະຢູ່ໃນລັກສະນະວ່າ "ມີຊີບໍ່ຜາກົດ ມີຍົດບໍ່ລືຊາ" ເຫດນັ້ນ ເສນາບໍດີຊັ້ນຜູ້ໃຫຍ່ເວລານັ້ນ ຄືພຣະຍາເມືອງຈັນ (2) ຈຶ່ງຍຶດອຳນາດໃນຣາຊບັນລັງໄດ້ໂດຍງ່າຍ ແລ້ວສະຖາປະນາຕົນເອງຂຶ້ນເປັນພຣະເຈົ້າແຜ່ນດິນ ໃນປີນັ້ນ ໆ ເອງ.

ເມື່ອພຣະຍາເມືອງຈັນຕັ້ງຕົນເອງເປັນເຈົ້າແຜ່ນດິນແລ້ວ ຍັງຈະບັງຄັບເອົາເຈົ້ານາງສຸມັງຄະລາ ຜູ້ເປັນນາງໝ້າຍ ພອມທັງຖືພາມານປະມານ 6–7 ເດືອນຢູ່ນັ້ນ ໃຫ້ເປັນມະເຫສີຂອງຕົນອີກ. ແຕ່ເຈົ້ານາງກໍບໍ່ຍິນຍອມ, ພຣະຍາເມືອງຈັນບໍ່ພໍໃຈຄຽດໃຫ້ ແລະຄິດຈະກຳຈັດເຈົ້ານາງສຸມັງຄະລາ ພ້ອມກັບເຈົ້າອົງຫລໍ່ ຜູ້ຈະເປັນສ້ຽນໜາມຣາຊບັນລັງຂອງຕົນນັ້ນເສັຽ.

ເສນາອາມາດຜູ້ເປັນຝ່າຍຂອງເຈົ້ານາງຮູ້ເນື້ອຕົວ ຈຶ່ງພາກັນລັກເອົາເຈົ້າອົງຫລໍ່ໂອຣົດຂອງເຈົ້ານາງ ໜີໄປປະທັບຢູ່ເມືອງພານພູຊົນ (3) ຝ່າຍວ່າເຈົ້ານາງສຸມັງຄະລາ ໄດ້ເຂົ້າໄປເພິ່ງອາສັຍຢູ່ກັບພຣະຄຣູໂພນສະເມັກ.

ພຣະຍາເມືອງຈັນ ເຫັນຄົນໄປນັບຖືພຣະຄຣູໂພນສະເມັກຫລວງຫລາຍ ຢ້ານວ່າຈະເປັນສັຕຣູຕໍ່ຣາຊບັນລັງພາຍໜ້າ ຈຶ່ງຄິດຈະກຳຈັດພຣະຄຣູໂພນສະເມັກນັ້ນເສັຽອີກ ແຕ່ເພິ່ນກໍຮູ້ເນື້ອຄິງເສັຽກ່ອນ ຈຶ່ງພາພໍ່ອອກແມ່ອອກເປັນຈຳນວນ 3000 ຄົນ (4) ພ້ອມທັງເຈົ້ານາງສຸມັງຄະລາໜີຈາກວຽງຈັນລ່ອງລົງໄປນຳນ້ຳຂອງ ຈົນເຖິງບ້ານງິ້ວພັນລຳສົມສນຸກກໍພັກເຊົາຢູ່ຫັ້ນ ສ່ວນເຈົ້ານາງສຸມັງຄະລານັ້ນ ເພິ່ນໄດ້ໃຫ້ຄົນພາໄປລີ້ໜີຣາຊພັຍຢູ່ພູສະງຽງທີ່ຄ້ຳ (ເວົ້າກັນວ່າຢູ່ໃນເຂດແຂວງບໍຣິຄັນ).

ຂໍແຊກຄວາມເຫັນຂອງຂ້າພະເຈົ້າໄວ້ໜ້ອຍນຶ່ງວ່າ ອາການທີ່ພຣະຄຣູໂພນສະເມັກພາຄົນຈຳນວນເຖິງ 3.000 ຄົນ ໜີລົງໄປທາງໃຕ້ຈາກວຽງຈັນນັ້ນ ນັບວ່າເປັນເຫດການໃຫຍ່ອັນນຶ່ງ ຄົງຈະໄດ້ຍິນໄປເຂົ້າຫູພຣະຍາເມືອງຈັນ ແຕ່ເຫດໃດພຣະຍາເມືອງຈັນ ຈຶ່ງບໍ່ແຕ່ງກອງທັບໄປນຳເອົາຣາສດອນເຫລົ່ານັ້ນກັບຄືນ ຫລືທຳລາຍເສັຽ ຫລືວ່າຈະເປັນຄວາມປະສົງຂອງພຣະຍາເມືອງຈັນເອງ ທີ່ຢາກໃຫ້ພຣະຄຣູໂພນສະເມັກໜີໄປໄກຫູໄກຕາ. ເຣື່ອງນີ້ເປັນເຣື່ອງໜ້າຄິດ, ຂ້າພະເຈົ້າຂໍເດົາໃສ່ເຫດການເບິ່ງວ່າ ເມື່ອພຣະຄຣູໂພນສະເມັກຮູ້ເນື້ອຄີງວ່າຈະມີຣາຊພັຍມາເຖິງ ເພິ່ນຄົງຈະທຳການປ່ອຍຂ່າວໄປວ່າ ເພິ່ນຈະລົງໄປປະຕິສັງຂອນແລະໄຫວ້ທາຕຸພະນົມ ແລ້ວກໍອອກເດີນທາງໄປພ້ອມກັບລູກສິດພຽງບໍ່

ທີ່ໃດ ສ່ວນພໍ່ອອກແມ່ອອກນອກນັ້ນ ຄົງຈະໄດ້ນັດແນະໃຫ້ຄ່ອຍທອຍກັນໄປ ເທື່ອລະເລັກລະ–ນ້ອຍ ຢ່າໃຫ້ຜິດປົກຕິ ແລະບອກບ່ອນໝາຍປາຍທາງໃຫ້ຮູ້ວ່າ ໄປພ້ອມກັນຢູ່ບ້ານງິ້ວພັນລຳສົມ–ສນຸກ, ສ່ວນເຈົ້ານາງສຸມັງຄະລານັ້ນ ພຣະຄຣູໂພນສະເມັກຄົງຈະຈັດຄົນໃຫ້ຄວາມອາຣັກຂາ ແລະພາໜີໄປລີ້ຢູ່ພູສະງ້າທີ່ດຳເປັນພິເສດ ດັ່ງນີ້ກໍເປັນໄດ້.

ເມື່ອພຣະຍາເມືອງຈັນ ເປັນເຈົ້າແຜ່ນດິນຄອງເມືອງມາໄດ້ຫົກເດືອນ ເສນາອຳມາດຜູ້ຍຶດເອົາເຈົ້າອົງຫລ່ເປັນຫລັກອ້າງ ກໍຍົກກອງທັບມາຕີນະຄອນວຽງຈັນ ແລະຈັບພຣະຍາເມືອງຈັນໄດ້ແລ້ວໃຫ້ປະຫານຊີວິດເສັຽ ຈຶ່ງເຊີນເອົາເຈົ້າອົງຫລ້ຂຶ້ນເປັນເຈົ້າແຜ່ນດິນ.

ຂໍກັບຕໍ່ກ່າວເຖິງພຣະຄຣູໂພນສະເມັກ ເຊິ່ງລາງເທື່ອກໍຮ້ອງວ່າ ພຣະຄຣູຍອດແກ້ວ ເມື່ອເພິ່ນເດີນທາງຈາກນະຄອນວຽງຈັນລົງໄປທາງເມືອງໃຕ້ນັ້ນ ໄປຮອດບ່ອນໃດ ມີແຕ່ຄົນຮັກຫອມ ການເດີນທາງສະດວກ ການຢູ່ກິນກໍສະບາຍ ພວກພໍ່ອອກ ແມ່ອອກ ປະຊາຊົນທົ່ວໄປ ຈຶ່ງຮ້ອງເພິ່ນດ້ວຍຄວາມຮັກ ແລະໂຄຣົບວ່າ "ຍາຄຣູຂີ້ຫອມ".

ຝ່າຍເຈົ້ານາງສຸມັງຄະລາ ຜູ້ໄປລີ້ຣາຊະໄພຢູ່ພູສະງ້າທີ່ດຳ ໄດ້ປະສູດໂອຣົດອົງນຶ່ງຢູ່ຫັ້ນ ພຣະຄຣູໂພນສະເມັກ ຖວາຍພຣະນາມວ່າ ເຈົ້າໜໍ່ກະສັດ ພາຍລຸນ ເພິ່ນໄດ້ເຊີນເອົາ ເຈົ້ານາງສຸມັງຄະລາ ພ້ອມທັງໂອຣົດມາພັກເຊົາຢູ່ບ້ານງິ້ວພັນລຳ, ສ່ວນເພິ່ນເອງ ໄດ້ໄປທຳການປະຕິສັງຂອນພຣະທາຕຸພະນົມ ສ້ຽງສາມປີ ຈຶ່ງເສັດຕາມປະສົງ ແລ້ວພາຍາດໂຍມລ່ອງລົງໄປທາງໃຕ້ເລື້ອຍໆ.

ໃນໜັງສືເຣື່ອງ ນະຄອນຈຳປາສັກນັ້ນໄດ້ເລົ່າວ່າ "ຄົນຍົກໄປແຫ່ງໃດ ຍາດໂຍມກໍຍົກໄປນຳແຫ່ງລະ 2–3 ຄົວ ແລ້ວພຣະຄຣູໂພນສະເມັກກໍລົງໄປກຸງອິນທະປັດມະຫານະຄອນ ຄອບຄົວທີ່ເມື່ອຍລ້າຊ້າແຮງ ນຳລົງໄປບໍ່ໄດ້ ກໍຕັ້ງບ້ານເຮືອນເຮັ້ຽຣາຍຢາຍກັນໄປ ຈຶ່ງເອີ້ນວ່າ ລາວເດີມ ບ້ານບາຣາຍມາຈົນທຸກມື້ນີ້. ແລ້ວພຣະຄຣູໂພນສະເມັກກັບຄອບຄົວຍາດໂຍມສິດສານຸສິດ ກໍລົງໄປເຖິງທາງຕຸຍຈັງອະສຸດແດນ ແຕ່ບັດນີ້ຮ້ອງວ່າ ຈະໂຣຍ ຈັງວາ (ແປວ່າ ແຫລມ) ພຣະຄຣູໂພນສະເມັກເຫັນທ້ອງຖິ່ນ ຈະໂຣຍຈັງວາ ເປັນຊັຍພູມກວ້າງຂວາງ ແລະມີພູໃຫຍ່ນ້ອຍ ຈຶ່ງພັກຍາດໂຍມຄອບຄົວສິດສານຸສິດຢູ່ບ່ອນຫັ້ນ ແລ້ວພຣະຄຣູໂພນສະເມັກຈຶ່ງສ້າງພຣະເຈດີອົງນຶ່ງ ເທິງພູນັ້ນ ເມື່ອວັນຈະສຳເຣັດ ຍັງມີແມ່ຍິງຂເມນ ຜູ້ນຶ່ງຊື່ເປັນ ລົງໄປອາບນ້ຳໃນລຳນ້ຳໃຫຍ່ ແມ່ເຖົ້າເປັນ ເຫັນພຣະບໍຣົມທາດລ່ຽມໄຫລມາເທິງຫລັງນ້ຳ ມີພຣະຣັສມີ ມີແສງເປັນອັນງາມ ແມ່ເຖົ້າເປັນເຫັນປລາດ ຈຶ່ງເອົາຂັນນ້ຳເຂົ້າຮອງຮັບຂຶ້ນໄປຖວາຍພຣະຄຣູໂພນສະເມັກ ໆ ເຫັນເປັນພຣະບໍຣົມທາດຄັກແນ່ແລ້ວ ກໍບິນທະບາດ (ຄືຂໍເອົາ) ກັບແມ່ເຖົ້າເປັນ ແລ້ວພຣະຄຣູໂພນສະເມັກ ກໍອັງເຊີນເອົາພຣະບໍຣົມສາຣີ

ອີກະທາດເຂົ້າບັນຈຸໄວ້ໃນພຣະເຈດີ ເພິ່ນເຫັນວ່າ ພູເຂົານັ້ນ ພາສາຂເມນຮ້ອງວ່າ ພະນົມ ແລ້ວເອົາຊື່ແມ່ເຖົ້າເປັ່ນ ທີ່ໄດ້ພຣະບໍຣົມສາຣີຣິກະທາດມາປະກອບເຂົ້າກັນ ພຣະຄຣູໂພນສະເມັກຈຶ່ງໃຫ້ຊື່ວ່າ ພຣະເຈດີພະນົມເປັ່ນ ຄັນພາຍລຸນມາ ເຈົ້າກຸງກັມພູຊາທິບໍດີ ຍ້າຍເມືອງຈາກເມືອງປະທາຍເພັດລົງໄປສ້າງເມືອງຂຶ້ນທີ່ຖິ່ນນັ້ນເປັ່ນເມືອງຫລວງ ຈຶ່ງຮ້ອງນາມເມືອງວ່າ *ພະນົມເປັ່ນ* ມາຈົນເທົ້າທຸກມື້ນີ້ ແລະເມື່ອພຣະຄຣູໂພນສະເມັກສ້າງພຣະທາດແລ້ວ ຈຶ່ງຫລໍ່ພຣະພຸທປະຕິມາອົງນຶ່ງ ໄດ້ຕັ້ງແຕ່ ພຣະສຽນລົງມາເຖິງພຣະກອນ (ແຂນ) ເບື້ອງຂວາ ຍັງໄປ່ແລ້ວ ເຈົ້າກຸງກັມພູຊາທິບໍດີ ແຈ້ງວ່າ ພຣະຄຣູໂພນສະເມັກ ພາຄອບຄົວຍາດໂຍມລາວເຂົ້າມາຢູ່ໃນເຂດແດນ ຈຶ່ງແຕ່ງພຣະຍາພຣະຂເມນໄປຕອດບັນຊີຄອບຄົວ ພຣະຍາພຣະຂເມນຈະຮ້ອງຮຽກເອົາເງິນຄົນລະ 8 ບາດ ພຣະຄຣູໂພນສະເມັກເຫັນວ່າ ຍາດໂຍມຈະໄດ້ຄວາມຍາກແຄ້ນ ຈຶ່ງພາຍາດໂຍມຄອບຄົວໜີຂຶ້ນໄປຕາມລຳນ້ຳໂຂງ"

ເຣື່ອງທີ່ວ່າ ພຣະຄຣູໂພນສະເມັກ ສ້າງພຣະທາດເຈດີໄວ້ແລະໃສ່ຊື່ວ່າ ພຣະທາດພະນົມເປັ່ນ ຈົນເມື່ອຂເມນມາຕັ້ງເມືອງຫລວງລົງບ່ອນນັ້ນ ກໍຕັ້ງຊື່ເມືອງ ຕາມຊື່ພຣະທາດວ່າ ກຸງພະນົມເປັ່ນ ນັ້ນ ເຣື່ອງນີ້ຈະມີຄວາມຈິງພຽງໃດ ຕ້ອງກວດເບິ່ງທາງປວັດສາດຂອງຂເມນ ແລະຕ້ອງກວດເບິ່ງພຣະທາດເຈດີອົງນັ້ນ ໃນທາງໂບຣານວັດຖຸ ພວກເຮົາ ຄວນຈະອ່ານປວັດສາດຂອງຂເມນຕອນນີ້ເບິ່ງ.

ພົງສາວະດານ ເຣື່ອງເມືອງນະຄອນຈຳປາສັກ ໄດ້ກ່າວຕໍ່ໄປອີກວ່າ "....ຄັນໄປເຖິງສະຖານບ້ານແຫ່ງນຶ່ງທີ່ຮ້ອງວ່າ ເມືອງສົມບູນບັດນີ້, ພຣະຄຣູໂພນສະເມັກຈຶ່ງໄດ້ພາຍາດໂຍມຄອບຄົວຕັ້ງພັກອາສັຍຢູ່ໃນທີ່ນັ້ນ ແລ້ວພຣະຄຣູໂພນສະເມັກ ຈຶ່ງຊັກຊວນຍາດໂຍມສິດສານຸສິດສ້າງພຣະວິຫານໄວ້ຫລັງນຶ່ງຢູ່ບ່ອນນັ້ນ ຄັນເຈົ້າກຸງກັມພູຊາທິບໍດີ ໄດ້ແຈ້ງວ່າ ພຣະຄຣູໂພນສະເມັກຍົກໄປຍັງບໍ່ພົ້ນເຂດແດນ ຈຶ່ງແຕ່ງໃຫ້ພຣະຍາພຣະຂເມນ ຍົກທັບມາຂັບໄລ່ ພຣະຄຣູໂພນສະເມັກ ເຫັນວ່າຍາດໂຍມທາຍົກຈະພາກັນເປັ່ນອັນຕະຣາຍ ຈຶ່ງຕັ້ງອະທິດຖານວ່າ ເຕຊະປາຣະມີທັນ ທີ່ໄດ້ພ່ຳເພັງມາແຕ່ປາງຫລັງ ດັ່ງນີ້ຈົ່ງຊ່ອຍສັພສັດໃຫ້ພົ້ນອັນຕະຣາຍ ອໍເທພຍຸດາເຈົ້າຈົ່ງຊ່ອຍອະພິບານໃນຄັ້ງນີ້ ຍ້ອນອຳນາດກຸສົນບັງເອີນເຮັດໃຫ້ພຣະຍາພຣະຂເມນບໍ່ໄດ້ຄິດຈະທຳອັນຕະຣາຍ ພຣະຄຣູໂພນສະເມັກກໍພາຄອບຄົວໄປໄດ້ໂດຍສະດວກ ພຣະຍາພຣະຂເມນກໍເລີກທັບກັບຄືນ ໄປສູ່ກຸງກັມພູຊາທິບໍດີ"

"ຝ່າຍພຣະຄຣູໂພນສະເມັກ ບໍ່ມີບ່ອນພັກອາສັຍ ຈຶ່ງຕັ້ງອະທິຖານ ສ່ຽງເຕຊະກຸສົລທັນ ດິນກໍພູດຂຶ້ນເປັ່ນດອນ ຢູ່ບ່ອນນັ້ນ ກໍເກີດເປັ່ນຫາດຊາຍ ຣາສດອນຮ້ອງວ່າ ຫາດທ່ານພຣະຄຣູ ມາເທົ້າທຸກມື້ນີ້ ພຣະຄຣູໂພນສະເມັກກໍພາຍາດໂຍມ ທາຍົກຕຸດເຊົາຢູ່ໃນດອນນັ້ນ ພ້ອມກັນຫລໍ່ພຣະພຸທ

ປະຕິມາ ແຕ່ປ່າພາດພຣະກອນເບື້ອງຊ້າຍເຖິງພ້າຕັກ ຫຼຸບາດຕລອດພຣະແທ່ນສຳເຣັດແລ້ວ ຈຶ່ງໃຫ້ສຶດໄປເຊີນພຣະພຸທຮູບ ທີ່ຫລໍ່ໄວ້ທີ່ເຈດີພະນົມເປັນຍັງບໍ່ສຳເຣັດນັ້ນມາສຸບຕໍ່ກັນເຂົ້າ ດອນນັ້ນມີກ່ຽວກັນວ່າ ດອນພາດ ດອນຊາຍມາເທົ່າບັດນີ້ ແລ້ວພຣະຄຣູໂພນສະເມັກຈຶ່ງພາຍາດໂຍມທາຍົກແຫ່ພຣະອົ້ນມາເຖິງທາງໃດ ປາກນ້ຳເຊກອງຝັ່ງຕາເວັນອອກເຫັນພູມີສະຖານບ່ອນຫັນສົມຄວນ ພຣະຄຣູໂພນສະເມັກເຫັນວ່າ ເທິງໄປພາຍພ້າ ຄົງຈະໄດ້ເປັນເມືອງ ຈຶ່ງພ້ອມຍາດໂຍມທາຍົກສ້າງພຣະວິຫານລົງໄວ້ບ່ອນຫັ້ນ ແລ້ວອັງເຊີນພຣະພຸທຮູບພຣະແສນມາປະດິສຖານໄວ້ໃນວິຫານນັ້ນ ແລ້ວກໍ່ພຣະເຈດີໄວ້ທີ່ບາຈົງອົງນຶ່ງ ພຣະຄຣູໂພນສະເມັກຈຶ່ງໃຫ້ສຶດຜູ້ນຶ່ງ ກັບທັງຄອບຄົວເປັນຜູ້ອຸປຖາກພຣະພຸທປະຕິມາພຣະແສນ ຢູ່ບ່ອນຫັ້ນ."

ເຣື່ອງກ່ຽວກັບພຣະແສນນີ້ ມີກ່າວໄວ້ໃນຕຳນານເມືອງນະຄອນຈຳປາສັກສະບັບຂອງເຈົ້າພຣົມເທວານຸເຄາະ ແລະເຈົ້າຣາຊວົງເມືອງນະຄອນຈຳປາສັກວ່າ"....ເມື່ອພຣະຄຣູໂພນສະເມັກກັບຄອບຄົວຍົກອົພຍົບມາຈາກເມືອງຂເມນມາຕັ້ງຢູ່ທີ່ຊຽງແຕງເປັນບ່ອນທຳອິດນັ້ນ ໄດ້ແຜ່ນຳພວກຄອບຄົວໃຫ້ຮິບໂຮມທອງແດງທອງເຫລືອງໄດ້ນ້ຳໜັກຫລາຍເຖິງ 360 ຊັ່ງປາຍ ຫລໍ່ອົ້ນເປັນພຣະພຸທຮູບພຣະອົງນຶ່ງເນື້ອພາດີ ຜັດສີກັຽງອົ້ນເງົາງາມ ພຣະຄຣູໂພນສະເມັກ ຖວາຍພຣະນາມວ່າ ພຣະແສນ ເພາະຄິດນ້ຳໜັກໄດ້ຫລາຍກວ່າແສນເຟື້ອງ ຕັ້ງໄວ້ໃນວັດ ເຊິ່ງເປັນບ່ອນຢູ່ຂອງພຣະຄຣູໂພນສະເມັກໃນເມືອງຊຽງແຕງ. ພຣະແສນນັ້ນ ກໍ່ຢູ່ທີ່ເມືອງຊຽງແຕງມາຈົນເຖິງແຜ່ນດິນຂໍ້ດຈຸບັນ (ພາຍເຖິງ ສົມເດັດພຣະຈອມເກລົ້າຣັຊການທີ 4) ພຣະບາດສົມເດັດພຣະປິ່ນເກລົ້າເຈົ້າຢູ່ຫົວ (ເປັນເຈົ້າແຜ່ນດິນຄູ່ກັນກັບຣັຊການທີ 4) ທົງສືບຊາບ ທົງມີພຣະຣາຊປະສົງ ສະເດັດລົງມາຂາບທູນຂໍໃຫ້ມີຄຳສັ່ງໃຫ້ຂ້າຫລວງອົ້ນໄປເຊີນອາຣາທນາລົງມາ ເມື່ອປີມະແມ ນັກສັດເອກສົກສັກຣາດ 1221 (ພ.ສ. 2302)ກົງກັບປີຄຣິສຕະສັກຣາດ 1859, ຄັນເຊີນສະເດັດພຣະແສນລົງມາເຖິງແລ້ວ ກໍ່ພຣະຣາຊທານໄປໃນພຣະບໍວໍຣະຣາຊວັງ ຕາມພຣະຣາຊປະສົງ, ພຣະບາດສົມເດັດພຣະປິ່ນເກລົ້າເຈົ້າຢູ່ຫົວ ຈຶ່ງຕັດສັ່ງໃຫ້ອັງເຊີນໄປສ້າງແທ່ນປະດິສຖານໄວ້ໃນພຣະອຸໂປສົດວັດທົງສ໌ຣັຕນາຣາມ ຄອງບາງກອກໃຫຍ່ (ຝັ່ງທົນບຸຣີ) ຢູ່ຈົນເທົ່າທຸກວັນນີ້."

ສ່ວນຄຳກ່າວທີ່ວ່າ ກໍ່ພຣະເຈດີໄວ້ທີ່ບາຈົງອົງນຶ່ງນັ້ນ ຈັກວ່າຈະເປັນບ່ອນໃດແທ້

ມີຂໍ້ຄວາມກ່ຽວກັບບັນທຶກຂອງພໍ່ຄ້າຮໍລັນດາທີ່ເຂົ້າມານະຄອນວຽງຈັນ ເມື່ອປີ ຄ.ສ.–1641 ໃນຣັຊການພຣະເຈົ້າສຸຣິຍະວົງສາທັມມິກຣາດກ່າວໄວ້ຕອນນຶ່ງວ່າ "ທີ່ເມືອງສາມບາບູ (SAMBABOUR) ພວກພໍ່ຄ້າໄດ້ບໍ່ຽມເຮືອຈະຜ່ານຄວາມຫຍຸ້ງຍາກຂອງແກ້ງ ກ່ອນຈະໄປຮອດແກ້ງ ພວກ

ພໍ່ຄ້າຣໍລັນດາ ໄດ້ຢຸດພັກທີ່ບ້ານບັດຈອງ (**Bactjong** ຫລື **Bachong**) ເຊິ່ງເປັນບ້ານມີວັດບູຮານເກົ່າແກ່ຂອງຂະເມນຢູ່ແປະກັບຊຽງແຕງໃໝ່".

ທີ່ວ່າ ກໍ່ເຈດີໄອ້ທີ່ບາຈົງ ຈະເປັນບ່ອນດຽວກັນກັບທີ່ບັນທຶກຂອງພໍ່ຄ້າຣໍລັນດາກ່າວໄວ້ນີ້ ຫລືບໍ່ກໍ່ເປັນທີ່ສົງສັຍ.

ຈະຂໍເອົາຂໍ້ຄວາມໃນພົງສາວະດານ ເຣື່ອງເມືອງນະຄອນຈຳປາສັກມາກ່າວໄວ້ຕໍ່ໄປອີກພໍສົມຄວນ ເພາະເຫັນມີຂໍ້ຄວາມກ່າວໄວ້ລະອຽດພິສດານກວ່າທີ່ເຫັນໃນແຫ່ງອື່ນ....

"....ຄົນເຫິງມາ ສິດຜູ້ນັ້ນ ມີລູກຊາຍຜູ້ນຶ່ງ ຊື່ຊຽງແປງ ພໍ່ຜູ້ພໍ່ເຖິງເກົ່າກັນແລ້ວ ຊຽງແປງກໍ່ຮັກສາຄອບຄົວຢູ່ບ່ອນນັ້ນສືບຕໍ່ມາ, ແລະພຣະຄຣູໂພນສະເມັກ ກໍ່ພາສິດທັງປວງຂຶ້ນໄປຕາມລຳຂອງ ເຖິງດອນລີ່ຜີ ເພິ່ນຈຶ່ງສ້າງພຣະເຈດີດ້ວຍຫີນອັນນຶ່ງ ສູງ 4 ສອກ ສ້າງພຣະວິຫານໄວ້ຫລັງນຶ່ງ ແລ້ວກໍ່ຂຶ້ນໄປຕາມລຳນ້ຳຂອງ ເຖິງດອນໃຫຍ່ແຫ່ງນຶ່ງ ຈຶ່ງພັກຢູ່ບ່ອນນັ້ນ ແລ້ວພຣະຄຣູໂພນສະເມັກກໍ່ນັ່ງບໍຣິກັນເຫັນວ່າ ໃນດອນນີ້ ເທິງໄປຂ້າງໜ້າຈະໄດ້ເປັນເມືອງ ຈຶ່ງສ້າງພຣະເຈດີໄວ້ພ້ອຍນຶ່ງ ຢູ່ເທິງຍອດຫາດຈາຣຶກເປັນອັກສອນຂອມໄວ້ວ່າ" ສັກຣາດໄດ້ 1070 ປີ (ຈຸລສັກຣາດ) ວັນອາທິດຂຶ້ນ 14 ຄ່ຳເດືອນຍີ່ (ພ.ສ. 2251/ຄ.ສ. 1708) ພຣະຄຣູໂພນສະເມັກມີສັດທາສ້າງພຣະເຈດີໄວ້ນະຄອນໂຂງໃຫ້ເປັນທີ່ໄຫວ້ ທີ່ບູຊາແກ່ເທພຍຸດາແລະຄົນທັງຫລາຍ" ແລ້ວຫລໍ່ລະຄັງໃຫຍ່ໄວ້ພ້ອຍນຶ່ງ ປາກກວ້າງສອງສອກ ແລ້ວຈຶ່ງປະຊຸມລູກຫລານລາວເດີມໃຫ້ໄວ້ເປັນຂ້າພຣະມະຫາທາຕຸເຈດີດອນໂຂງ ຕາບເທົ້າ 5000 ວັດສາ ແລ້ວໃຫ້ຈານຫວດຢູ່ຮັກສາອານາເຂດເມືອງໂຂງ ຕໍ່ນັ້ນພຣະຄຣູໂພນສະເມັກກໍ່ຂຶ້ນມາຫົວດອນຊັຍ ເຫັນວ່າ ຖ້າຕັ້ງຢູ່ບ່ອນພື້ນຈະມີຊັຍ ແຕ່ດອນນ້ອຍບໍ່ພໍຈະເປັນເມືອງໄດ້ ຈຶ່ງໃຫ້ຮ້ອງວ່າດອນຊັຍມາຈົນເທົ້າທຸກມື້ນີ້, ແລ້ວພຣະຄຣູໂພນສະເມັກກໍ່ຂຶ້ນມາເຖິງດອນແດງກໍ່ພັກເຊົາຢູ່ ແລ້ວໃຫ້ລູກສິດ 16 ຄົນນຸ່ງຂາວ ຫົ່ມຂາວ ຮັບສິນແລ້ວໄປທ່ຽວນອນເອົານິມິດ ຢູ່ກາງດອນນຶ່ງ ຫົວດອນນຶ່ງ ຜ້າຂາວ 16 ຄົນ ມາເຖິງບ່ອນກາງດອນພັກນອນພ້ອມກັນອະທິຖານເສັດແລ້ວເທພເຈົ້າກໍ່ລົງມາໃຫ້ນິມິດວ່າ ແຫ່ງນີ້ ຈະເປັນສີນະຄອນ ແຕ່ຈະມີປໍຣະປັກມາບຽດບຽນໃນສາສນາ, ຄົນໄດ້ນິມິດແລ້ວ ຜ້າຂາວ 16 ຄົນ ກໍ່ຂຶ້ນໄປນອນຫົວດອນພ້ອມກັນຕັ້ງສັດຍາທິດຖານເສັດແລ້ວ ເທພເຈົ້າລົງມາໃຫ້ນິມິດວ່າ ເຫັນປຸຖຸຊົນທັງປວງມີໃຈກ້າຫານຫຍາບຊ້າ ກໍ່ການວິວາດເປັນປໍຣະປັກແກ່ກັນຢູ່ ຜ້າຂາວ 16 ຄົນ ໄດ້ນິມິດ 2 ແຫ່ງແລ້ວ ກໍ່ເຂົ້າໄປໄຫວ້ເລົ່າຄວາມແດ່ພຣະຄຣູໂພນສະເມັກໆ ເຫັນວ່າ ສະຖານແຫ່ງນີ້ກະສັດອົງໃດມາຄອບຄອງຣາຊສົມບັດໃນນະຄອນນີ້ ສອງພີ່ນ້ອງກໍ່ຈະບໍ່ຖືກຕ້ອງປອງດອງກັນ ປະຊາຣາສດອນກໍ່ຈະເປັນປໍຣະປັກ ສໍ້ລັກບຽດບຽນ ເຊິ່ງກັນແລະກັນ."

"ຝ່າຍວ່າເມືອງນະຄອນກາລະຈັມປາກນາຄບູຣີສຣີ ນາງເພົາເຖິງແກ່ກັມ ນາງແພງ ຜູ້ເປັນທິດາກັບທ້າວພຣະຍາກໍທຳຊາປະນະກິດ(ເຜົາສົບ)ເສັດແລ້ວ, ນາງແພງຜູ້ທິດາ ກັບພຣະຍາຄຳຢາດ ພຣະຍາສອງຮາດ ຈິ່ງຈັດຣາຊການບ້ານເມືອງສືບມາ, ຄັນໄດ້ຊາບກຽດຕິສັບວ່າ ພຣະຄຣູໂພນສະເມັກມາພັກຢູ່ທີ່ດອນແດງມີຄົນນັບຖືຫລາຍ ນາງແພງ ຜູ້ເປັນແມ່ເມືອງ ກໍມີຈິດເຫລື້ອມໃສຈິ່ງປຶກສາກັບທ້າວພຣະຍາຜູ້ໃຫຍ່ ຜູ້ນ້ອຍວ່າ ເຮົາຈະອາຣາທນາພຣະຄຣູໂພນສະເມັກມາ ຈະໄດ້ບຳຣຸງພຣະພຸທສາສນາ ຈະໄດ້ເຈັຽຣະເຫັຽຣະຄາຖາວອນເມືອພ້າ ທ້າວພຣະຍາທັງປວງກໍເຫັນດີດອມ ນາງແພງຈິ່ງໃຫ້ພຣະຍາຄຳຢາດ ພຣະຍາສອງຮາດໄປອາຣາທນາພຣະຄຣູໂພນສະເມັກໆ ກໍພາຍາດໂຍມສິດສານຸສິດ ຂ້າມນ້ຳຂອງມາຕັ້ງຢູ່ຝັ່ງຕາເວັນຕົກ ທີ່ຫ້ວຍສະຫົວ ນາງແພງຈິ່ງປຸກກະດີ ເສນາສະນະຖວາຍພຣະຄຣູໂພນສະເມັກ ໃຫ້ຈຳພັນສາຢູ່ວັດສະຫົວ ຄົນທັງຫລາຍກໍຮ້ອງວ່າ ວັດຫລວງ ແລ້ວນາງແພງກັບທ້າວພຣະຍາທັງປວງກໍມອບພຸທຈັກ– ອານາຈັກ ຖວາຍພຣະຄຣູໂພນສະເມັກທະນຸບຳຣຸງສົມມະພຣາມນາຈານ ທ້າວພຣະຍາອານາປະຊາຣາສດອນ ໃນເມືອງນະຄອນກາລະຈັມປາກນາຄບູຣີສຣີ"

ໃນ (ຈຸລ) ສັກຣາດ 1071 ປີສລູ (ພ.ສ. 2252/ຄ.ສ. 1709) ພຣະຄຣູໂພນສະເມັກໄດ້ຊັກຊວນຊາວເມືອງຫລໍ່ພຣະພຸທຮູບອົງນຶ່ງໜ້າຕັກ 19 ນິ້ວ ສຳເຣັດບໍຣະບວນ ແລ້ວອັງເຊີນພຣະພຸທຮູບອົງນັ້ນໄປປະດິສຖານໄວ້ໃນພຣະວິຫານວັດບາງຊ້າຍ ຍັງຢູ່ເທົ່າທຸກວັນນີ້, ຄັນເຫິງນານມາ ປະຊາຊົນທັງຫລາຍ ກໍເກີດເປັນໂຈນຜູ້ຮ້າຍລັກສົກຈົກທໍ່ເອົາເຄື່ອງຂອງມີຄ່າ ທັງຂອງສົມມະ ແລະຊັບສິນສິ່ງຂອງປະຊາຣາສດອນທັງປວງ ແລ້ວກໍເກີດຂ້າຟັນກັນຂຶ້ນຫລາຍແຫ່ງຫລາຍທີ່, ພຣະຄຣູໂພນສະເມັກຈະຊຳຣະເອົາວ່າ ລົງອາຍາ ກໍຢ້ານຈະຜິດຕໍ່ວິນັຍສິກຂາບົດ ຄັນຈະຢູ່ຊື່ເສີຍບໍ່ປາບປາມໃຫ້ເສັຽສັຽງ ສົມມະພຣາມນາຈານ ແລະຣາສດອນກໍຈະໄດ້ຄວາມຮົມຮ້ອນຮ້າຍແຮງຍິ່ງຂຶ້ນ, ພຣະຄຣູໂພນສະເມັກພິຈາຣະນາເຫັນວ່າເຈົ້າພໍ່ກະສັດ ເຊິ່ງເປັນໂອຣົດພຣະເຈົ້າວຽງຈັນ (5) ຈະປົກຄອງປະຊາຣາສດອນຕໍ່ໄປໄດ້ ພຣະຄຣູໂພນສະເມັກ ຈິ່ງໃຫ້ຈານແກ້ວ ຈານສຽງຊ້າງ ກັບທ້າວເພັຽໄພ່ພົນໄປອັງເຊີນເອົາເຈົ້າພໍ່ກະສັດ ເຊິ່ງຕັ້ງຢູ່ບ້ານງິ້ວພັນລຳສົມສມຸກລົງມາເມືອງນະຄອນກາລະຈັມປາກນາຄບູຣີສຣີ"

ຂໍແຊກຄວາມເຫັນຂັ້ນຈັກໜ້ອຍວ່າ ຍາຄຣູຂີ້ຫອມ ເຖິງວ່າຈະຕັ້ງຢູ່ໃນຖານະເປັນຣາຊປຸໂຣຫິດຫລືເປັນຣາຊຄຣູຢູ່ຫລາຍປີ ກໍຕາມ, ເພິ່ນກໍຄົງຈະໝັ້ນຄົງໃນເພດສົມມະ ແລະໃນພຣະວິນັຍຢ່າງແຂງແຮງ ເພາະຖ້າແມ່ນເພິ່ນເປັນຄົນມັກໂລບໃນອຳນາດຣາຊສັກ ຈະລິກອອກມາປະກາດຕົນເປັນກະສັດກໍຄົງເຮັດໄດ້ ເພາະຣາສດອນກໍເປັນໃຈຢູ່ແລ້ວ ຫລືອາດຈະເປັນເຈົ້າແຜ່ນດິນພຣະ ຄືເປັນເຈົ້າແຜ່ນດິນໃນເພດພຣະ ຢ່າງດະໄລລາມະຂອງທິເບດກໍໄດ້ ແຕ່ເພິ່ນບໍ່ຄິດເຖິງອຳນາດຣາຊສັກດັ່ງກ່າວ ເມື່ອ

ພິຈາຣະນາເຫັນວ່າ ເປັນສົມມະຈະຈັດຣາຊການບ້ານເມືອງໄປບໍ່ຕລອດ ເພາະຂັດກັບວິນັຍຂອງສົງຫລາຍປະການ ຈຶ່ງຫາທາງອອກ ໂດຍແຕ່ງໃຫ້ຄົນໄປເຊີນເອົາເຈົ້າພໍ່ກະສັດ ມາປົກຄອງບ້ານເມືອງແທນຕົນ.

ຄັນເຖິງປີ ພ.ສ. 2257–ຄ.ສ. 1714 (ໃນເຣື່ອງນະຄອນຈຳປາສັກວ່າ ຈ.ສ. 1075 ກົງກັບ ພ.ສ. 2256) ເມື່ອພຣະມານດາ ຂອງເຈົ້າພໍ່ກະສັດສ້ຽງພຣະຊົນແລ້ວ ພຣະຄຣູໂພນສະເມັກຈຶ່ງໃຫ້ຕັ້ງໂຮງຣາຊພິທີເພື່ອທຳຣາຊາພິເສກ ຄັນເຖິງມື້ອັນເປັນມະຫາພິຊັຍຣິກ ກໍອັງເຊີນເອົາເຈົ້າພໍ່ກະສັດມາສູ່ໂຮງຣາຊພິທີແລ້ວກໍຣົດສົງນ້ຳມຸຣະທາພິເສກ ທ້າວພຣະຍາທັງປວງກໍຖວາຍພຣະນາມວ່າ" ພຣະເຈົ້າສ້ອຍສີສຸມຸດພຸດທາງກູນ" ເປັນເຈົ້າເອກຣາດຄອງຣາຊສົມບັດຕາມບູຮານຣາຊປະເພນີ ແລ້ວພຣະເຈົ້າສ້ອຍສີສມຸດ ໆ ກໍຕື່ມສ້າງແປງເມືອງໃຫ້ແຂງແຮງຂຶ້ນທີ່ຣິມຝັ່ງສີສຸມັງ ແລ້ວບ່ຽນນາມເມືອງໃໝ່ວ່າ "ນະຄອນຈຳປາສັກນາຄບຸຣີສຣີ" ສ່ວນນາງແພງນັ້ນ ພຣະເຈົ້າສ້ອຍສີສມຸດ ໆ ກໍທົງຮັບເຂົ້າໄປໄວ້ໃນໂຮງຫລວງ ທັງລ້ຽງລ່ຳທຳນຸບຳຣຸງໂດຍຣົບເປັນອັນດີ ແລ້ວພຣະອົງກໍຈັດແຈ່ງຣາຊການບ້ານເມືອງຕັ້ງເຈົ້ານາຍ ທ້າວພຣະຍາ ເສນາບໍດີ ແລະຕຳແໜ່ງອື່ນໆ ຕາມສົມຄວນແກ່ຣາຊການຢ່າງດຽວກັບໃນກຸງສີສັຕນາຄນະຫຸດ ວຽງຈັນ.

ອາການທີ່ເປັນໄປດັ່ງກ່າວມານີ້ ສະແດງວ່າ ອຳນາດ ອິດທິພົນຂອງພຣະເຈົ້າກຸງສີສັຕນາຄນະຫຸດວຽງຈັນ ຄົງຈະຄອບຄຸມໄປບໍ່ເຖິງ ຫລືໄປເຖິງກໍຄົງອ່ອນເຕັມທີ ອັນນີ້ກໍຍ້ອນວ່າ ນັບແຕ່ພາກັນຢາດຣາຊບັນລັງ, ອຳນາດບໍຣິຫານຝ່າຍການເມືອງກໍອ່ອນລົງ ຫາຜູ້ຈະບັງຄັບບັນຊາກຳສະຖານະການບ້ານເມືອງໃຫ້ສງົບຢ່າງແທ້ຈິງບໍ່ມີ ອຳນາດຝ່າຍທະຫານ ກໍຄົງຈະຖືກຄວບຄຸມຢູ່ຈຸໃຜຈຸລາວ ຄວາມເຂັ້ມແຂງຂອງກອງທັບສ່ວນກາງກໍອ່ອນແອ ໄພ່ພ້ຳຂ້າແຜ່ນດິນເພື່ອຍກາຍ ໜ່າຍໃຈ ເອົາຕົນຫລົບຫລີກຣາຊພັຍເສັຽ ຈົນອຳນາດສູນກາງຂອງນະຄອນຫລວງທີ່ເຄີຍຍິ່ງໃຫຍ່ໄພສານແຕ່ປາງ ພຣະເຈົ້າສຸຣິຍະວົງສາທັມມິກຣາດພຸ້ນ ຕ້ອງແຕກທະລາຍລົງ ບໍ່ແຜ່ຜາຍຄອບຄຸມໄປທົ່ວຣັຖສີມາອານາເຂດ ເປັນເຫດໃຫ້ພຣະຄຣູໂພນສະເມັກ ຜູ້ເປັນສົມມະທີ່ຖືກພຣະຍາເມືອງຈັນ ຜູ້ໄດ້ອຳນາດໃນຣາຊບັນລັງໃນນະຄອນວຽງຈັນປອງຮ້າຍຕ້ອງຫາອຸບາຍເອົາຕົນຫລົບຫລີກຣາຊພັຍ ລ່ອງໄຫລໄປຕາມເສັ້ນທາງຂອງລຳນ້ຳຂອງພ້ອມກັບເຈົ້ານາຍລາງອົງກັບປະຊາຣາສດອນຈຳນວນຫລວງຫລາຍ ເຊິ່ງໃນນັ້ນ ຄົງຈະມີຂ້າຣາຊການທີ່ມີຍົດສັກ ແລະທັງສະຕິປັນຍາແກມຢູ່ນຳບໍ່ໜ້ອຍ ໄດ້ໂອກາດແລະໄຊຍະພູມອັນເໝາະ ຈຶ່ງປະກາດຕົນເປັນຣາຊອານາຈັກເອກຣາດຂຶ້ນອີກເຂດປະເທດນຶ່ງ ໃນດິນແດນຖິ່ນໃຕ້ຂອງອານາຈັກລ້ານຊ້າງໄດ້ຢ່າງສະດວກສະບາຍ ຄວາມເປັນເອກພາບຂອງແຜ່ນດິນລາວສມັຍນັ້ນ ກໍແຕກທະລາຍລົງ.

ຕໍ່ຈາກນັ້ນ ພຣະເຈົ້າສ້ອຍສີສມຸດຯ ໄດ້ທົງສ້າງພຣະອາຣາມຂຶ້ນໃໝ່ອີກແຫ່ງນຶ່ງສຳເຣັດແລ້ວ ຈຶ່ງອາຣາທນາພຣະຄຣູໂພນສະເມັກກັບພຣະສົງບໍຣິວານມາຢູ່ທີ່ອາຣາມໃໝ່ນັ້ນ ຈຶ່ງຮ້ອງວ່າ ວັດຫລວງໃໝ່ ສ່ວນວັດເດີມນັ້ນຮ້ອງວ່າ ວັດຫລວງເກົ່າມາແຕ່ນັ້ນ.

ອັນພຣະຄຣູໂພນສະເມັກນັ້ນ ເຂົ້າໃຈວ່າ ຄົງຈະໄດ້ດຳຣົງຕຳແໜ່ງພຣະສັງຄະຣາດແຫ່ງອານາຈັກຈຳປາສັກ ຈຶ່ງມີຊື່ທີ່ຄົນທັງຫລາຍມັກຮ້ອງກັນວ່າ ພຣະຄຣູຍອດແກ້ວ ວັດໂພນສະເມັກ ແຕ່ຄົນມັກຈະຮ້ອງຕາມຊື່ວັດຂອງເພິ່ນວ່າ ພຣະຄຣູໂພນສະເມັກ ລາງເທື່ອອາດຈະໄດ້ຕຳແໜ່ງພຣະຄຣູຍອດແກ້ວໄປແຕ່ນະຄອນວຽງຈັນແລ້ວກໍເປັນໄດ້ ສ່ວນຄຳວ່າ ຍາຄຣູຂີ້ຫອມນັ້ນຄົນຮ້ອງດ້ວຍຄວາມໂຄຣົບ ແລະຮັກຫອມໃຫ້ເພິ່ນ.

ຄັນເຖິງ ພ.ສ. 2263 –ຄ.ສ. 1720 (ຈ.ສ. 1082) ປີຊວດ ພຣະຄຣູຍອດແກ້ວໂພນສະເມັກ ກໍອາພາດລົງຍ້ອນໂຣກຊະຣາ ແລະເຖິງແກ່ມໍຣະນະພາບໃນວັນພຸດ ຂຶ້ນຫ້າຄ່ຳ ເດືອນເຈັດ ອາຍຸໄດ້ 90 ປີ, ພຣະເຈົ້າສ້ອຍສີສມຸດ ຯ ພ້ອມກັບເສນາອາມາດ ຂ້າຣາຊການ ແລະປະຊາຣາສດອນກໍແຕ່ງຕັ້ງການທຳບຸນໃຫ້ທານ ມີການຫລິ້ນມ່ວນຊື່ນງັນສົບຢູ່ເດືອນນຶ່ງ ຈຶ່ງພາກັນຖວາຍເພີງສົບຂອງເພິ່ນສຸດສ້ຽງແລ້ວ ພຣະເຈົ້າສ້ອຍສີສມຸດໃຫ້ສ້າງອາຣາມຂຶ້ນໃນທີ່ເຜົາສົບນັ້ນວັດນຶ່ງ ແລະ ກໍ່ພຣະເຈດີໃຫຍ່ໜ່ວຍນຶ່ງ ອົງນ້ອຍອີກສາມໜ່ວຍ ບັນຈຸອັງຄານ (ຝຸ່ນດູກກອງຟອນ) ຂອງເພິ່ນໄວ້ໃນອາຣາມນັ້ນ ຮ້ອງວັດນັ້ນວ່າ ວັດທາດມາຈົນບັດນີ້ ສ່ວນອັດຖິທາດອີກສ່ວນນຶ່ງ ພຣະເຈົ້າສ້ອຍສີສມຸດ ຯ ໄດ້ໃຫ້ຂ້າຣາຊການຊັ້ນພຣະຍາ ອັງເຊີນຂຶ້ນມາສ້າງທາດນ້ອຍປະດິສຖານໄວ້ຂ້າງພຣະທາຕຸພະນົມ ຕາມຄຳປາຖນາຂອງເພິ່ນ.

ຕາມປວັດວ່າ ພຣະຄຣູຍອດແກ້ວ ໂພນສະເມັກ ມີຄວາມເຫລື້ອມໃສໃນພຣະທາຕຸພະນົມເປັນຍ່າງຍິ່ງ ເມື່ອເພິ່ນໄປຢູ່ເປັນຫລັກແຫລ່ງທີ່ຈຳປາສັກແລ້ວ ຖາມີໂອກາດກໍມັກຈະຂຶ້ນມາໄຫວ້ ແລະບູຮນະສ້ອມແປງພຣະທາດ ແລະບໍຣິເວນພຣະທາດນັ້ນທຸກປີ ແລະ ເມື່ອຈວນຈະມໍຣະນະພາບນັ້ນ ກໍຍັງໄດ້ສັ່ງໃຫ້ເອົາອັດຖິທາດ (ດູກ) ຂອງເພິ່ນໄປບັນຈຸໄວ້ຂ້າງພຣະທາຕຸພະນົມສ່ວນນຶ່ງ ເຊິ່ງເວລານັ້ນດິນແດນແຖບນັ້ນເປັນຂອງລາວໂດຍເດັດຂາດ ແລະພຣະເຈົ້າສ້ອຍສີສມຸດ ກໍໄດ້ທົງປະຕິບັດໃຫ້ຄວາມປະນິທານຂອງເພິ່ນສຳເຣັດລົງ ຮ້ອງວ່າ ທາດຍາຄຣູຂີ້ຫອມ ຈົນເຖິງບັດນີ້.

ເມື່ອປີ ພ.ສ. 2513– ຄ.ສ. 1970 ພຣະເທພຣັຕນະໂມລີ (ແກ້ວ) ເຈົ້າວັດທາຕຸພະນົມ ໄດ້ຈັດການຫລໍ່ຮູບຂອງພຣະຄຣູຍອດແກ້ວໂພນສະເມັກ ຫລືຍາຄຣູຂີ້ຫອມໄວ້ທີ່ວັດທາຕຸພະນົມດ້ວຍທອງ ແລະວ່າຫລໍ່ຕາມນິມິດຂອງຜູ້ນັ່ງສະມາທິ ທີ່ມີກຳລັງຈິດບອກລັກສນະຮູບຮ່າງຂອງເພິ່ນໃຫ້.

ເຖຣະປວັດຂອງຍາທ່ານຄຣູຂີ້ຫອມກໍສຸດລົງທໍ່ນີ້ກ່ອນແລ

ໝາຍເຫດທ້າຍເຣື່ອງ

1. ເຣື່ອງນະຄອນຈຳປາສັກ ກ່າວວ່າ "(ຈຸລສັກຣາດ 1050 ປີມະໂຣງ ສັມຣິດທິສັກ ພຣະເຈົ້າວຽງຈັນ ເຖິງແກ່ພິລາລັຍ" ໃນຄວາມເປັນມາຂອງລາວ ໂດຍ ອູ່ຄຳ ພົມວົງສາ ວ່າພຣະເຈົ້າສຸຣິຍະວົງສາ ສະເດັດສຸຣະຄົດປີ ພ.ສ. 2237.

2. ເຣື່ອງນະຄອນຈຳປາສັກວ່າ "ພຣະຍາເມືອງແສນ".

3. ໜັງສືເຣື່ອງ ນະຄອນຈຳປາສັກກ່າວວ່າ "ພັກພວກຂອງເຈົ້ານາງສຸມັງຄະລາເອົາເຈົ້າອົງຫລໍ່ໄປຢູ່ເມືອງຍວນ (ແກວ) ໆ ກໍຮັບເຈົ້າອົງຫລໍ່ໄວ້ ແລ້ວໃສ່ຊື່ວ່າ ເຈົ້າອົງວຽດ".

– ໜັງສື ຄວາມເປັນມາຂອງລາວ ກ່າວວ່າ "ອຳມາດທີ່ເປັນພວກຂອງເຈົ້າອົງຫລໍ່ ຈຶ່ງພາເຈົ້າອົງຫລໍ່ໜີໄປເມືອງພານພູຊູນປະເທດວຽດນາມ.

4. ໃນໜັງສືເຣື່ອງ ນະຄອນຈຳປາສັກ ບອກຈຳນວນຄົນວ່າມີ 3333 ຄົນ.

5. ໃນພົງສາວະດານ ເຣື່ອງເມືອງນະຄອນຈຳປາສັກ ຖືວ່າ ເຈົ້ານາງສຸມັງຄະລາເປັນມະເຫສີຂອງພຣະເຈົ້າສຸຣິຍະວົງສາທັມມິກຣາດ, ແຕ່ພົງສາວະດານສະບັບກະຊວງສຶກສາທິການລາວ ຖືວ່າເຈົ້ານາງສຸມັງຄະລາເປັນຣາຊທິດາຂອງພຣະເຈົ້າສຸຣິຍະວົງສາທັມມິກຣາດ.

ພິມທີ່ *ປາກປາສັກ* ການພິມ

9–11 ຖນົນນ້ຳງຸ່ມ ວຽງຈັນ

[ທາງແຄມຂອງ]

2262

ຕຸລາ ຄ.ສ. 1974 1/1000